# ພົງສາວະດານລາວ

## ສະໄໝຕົກເປັນຫົວເມືອງຂຶ້ນ
## ຂອງປະເທດສະຍາມແລະປະເທດຝຣັ່ງ




ຮຽບຮຽງໂດຍ

**ທ້າວຍຸນ ອ່ອນພິມ**

ສງວນລິຂສິດ

# ພົງສາວະດານລາວ

## ສມັຍເປັນຫົວເມືອງຂຶ້ນຂອງ
## ປະເທດສຍາມ ແລະ ປະເທດຝຣັ່ງ

ຮຽບຮຽງໂດຍ ທ້າວ ບຸນ ອ່ອນພົມ

ພິມຄັ້ງທີ ໑ ຈຳນວນ ໑໐໐໐ **ເຫຼັ້ມ**
ວັນທີ ໑໒ ມິຖຸນາ ພ.ສ. ໒໕໑໔

ສງວນລິຂສິດ ຣາ ຄາ ໓໕໐ ກີບ



ພຣະບາດສົມເດັດ ພຣະເຈົ້າມະຫາຊີວິດ ສີສະວ່າງວັທນາ
ອົງພຣະປະມຸກ ຂອງ ປວງປະຊາຊົນລາວ ໃນປັດຈຸບັນ

# ຄ ຳ ນ ຳ

## ຂ ອ ງ

### ພຍາຈຳນົງ ຣາຊກິດ (ຫນູພາດ ຈຸນລະມະນີ)

ທ່ານນັກອ່ານ ທີ່ນັບຖື,

ພວກເຮົາຮັບຊາບທົ່ວກັນວ່າ ເຄື່ອງບໍຣິໂພກ ເປັນອາຫານແກ່ກາຽ ແລະ ຄວາມຮູ້ ເປັນອາຫານແກ່ສມອງ ແລະໃຈ ກ່າວເຖິງຄວາມຮູ້ ກໍຄືກ່າວເຖິງການແຜ່ພາຍປຶ້ມ ສນັ້ນ ຂ້າພະເຈົ້າ ຈິ່ງເຂົ້າໃຈວ່າໃນລາວເຮົາ ແມ່ນແຕ່ຈະມີຜູ້ຂຽນປຶ້ມຂຶ້ນມາຫລາຍເທົ່າໃດກໍຕາມ ຖ້າປ່ຽບໃສ່ປະເທດອື່ນແລ້ວ ເຮົາຍັງບໍ່ມີປຶ້ມຈຳຫນ່າຍຫລາຍເທົ່າທຽມ ຄວາມຕ້ອງການເທື່ອ ເພາະປັດຈຸບັນນີ້ ລາວອ່ານຫນັງສືຫລາຍຂຶ້ນທຸກວັນ. ດ້ວຍເຫດນີ້ ຂ້າພະເຈົ້າ ຈິ່ງມີຄວາມຍິນດີ ຊ່ວຽໃຫ້ທ້າວຍຸມ ອ່ອນພົມ ມີໂອກາດພິມ "ພົງສາວະດານລາວ ສໄມເປັນຫົວເມືອງຂຶ້ນ ປະເທດສຍາມ ແລະ ປະເທດຝຣັ່ງເສດ"

ທ້າວຍຸມ ອ່ອນພົມ ຂຽນປຶ້ມນີ້ຂຶ້ນ ໂດຍມີຈຸດປະສົງສິ່ງດຽວ ຄືເຮັດໃຫ້ລາວເຮົາຮູ້ສຶກຕົວວ່າ ໃນສໄມນຶ່ງ ພົງສາວະດານລາວເຮົາ ເປັນຢ່າງໃດ. ການຂາດຕົກ ບົກພ່ອງກໍຄົງມີແຕ່ ຂໍທ່ານນັກອ່ານທຸກຄົນ ຈົ່ງກະຣຸນາ ຊ່ວຍຕັກເຕືອນ ດັດແປງ ເພື່ອໃຫ້ປຶ້ມເຫລັ້ມນີ້ ໄດ້ເປັນ

ປຶ້ມຂອງ ທ່ານນັກອ່ານທຸກໆຄົນ.

ດ້ວຍຄວາມຫວັງດີ ແລະຄວາມນັບຖື,

ວຽງຈັນ, ວັນທີ ໗ ມິຖຸນາ ໒໕໑໔

ພຍາຈຳນົງ ຣາຊກິດ

(ໜູພາດ ຈູນລະມະນີ)

## ຄຳນຳ

ໃນການຮຽວຮຽງ ໜັງສືນີ້ ກ່ອນອື່ນ ກໍຢາກຈະຂໍທຳຄວາມເຂົ້າໃຈ ຕໍ່ທ່ານຜູ້ອ່ານ ແລະທ່ານນັກປາດອາຈານ ໄວ້ກ່ອນເປັນຂັ້ນຕົ້ນວ່າ ຜູ້ຮຽວຮຽງໜັງສື ພົງສາວະດານລາວເລັ້ມນີ້ ບໍ່ແມ່ນນັກຂຽນ ເທິງບໍ່ເຄີຍຂຽນຫລືຮຽບຮຽງ ໜັງສືຢ່າງໃດ ອັນພໍຈະຖືເປັນຕອນ ເປັນໂຕ ໄວ້ມາແຕ່ກ່ອນເລີຍ. ແຕ່ທີ່ການຮຽບຮຽງໜັງສື ພົງສາວະດານລາວສມັຍຕົກເປັນຫົວເມືອງຂຶ້ນ ຂອງປະເທດສຍາມ ແລະປະເທດຝຣັ່ງ ເລັ່ມນີ້ຂຶ້ນ ພ້ອມທັງພິມ[illegible]ແຜ່ພາຍນັ້ນ ກໍເປັນເພາະ ຂ້າພະເຈົ້າມີຄວາມເຊື່ອວ່າ ໃນປັດຈຸບັນນີ້ ຄົນລາວສ່ວນຫລາຍ ອັນເປັນເພື່ອນຮ່ວມຊາດຂອງ ຂ້າພະເຈົ້ານັ້ນ ຍັງຂາດຄວາມເຂົ້າໃຈ ຕໍ່ການເປັນມາ ທີ່ແທ້ຈິງ ຂອງຊາດຕົນ. ໂດຍຈຳເພາະແລ້ວກໍແມ່ນ ການເປັນມາ ກ່ອນສມັຍທີ່ ຫົວເມືອງລາວຝັ່ງຊ້າຍແມ່ນ້ຳຂອງ ອັນເປັນແຕ່ສ່ວນນຶ່ງ ຂອງຫົວເມືອງລາວ ທີ່ຢູ່ໃນຖານະເປັນຫົວເມືອງຂຶ້ນ ຂອງປະເທດສຍາມ ຈະຕົກມາເປັນຫົວເມືອງຂຶ້ນຂອງປະເທດຝຣັ່ງ ເຊິ່ງຄວາມເຂົ້າໃຈ ຂອງຄົນລາວສ່ວນຫລາຍ ໃນປັດຈຸບັນນີ້ນັ້ນ ເຂົ້າໃຈວ່າ ລາວທີ່ຕົກເປັນຫົວເມືອງຂຶ້ນ ຂອງປະເທດສຍາມນັ້ນ ແມ່ນເປັນເມືອງຂຶ້ນ ແຕ່ຈຳເພາະ ປະເທດລາວ ຫລື ພຣະຣາຊອານາຈັກລາວ ໃນປັດຈຸບັນນີ້ທໍ່ນັ້ນ. ເຊິ່ງຄວາມເຂົ້າໃຈຜິດຂັ້ນເອງ ທີ່ຜູ້ຮຽບຮຽງເຊື່ອໝັ້ນວ່າ ເປັນສາເຫດອັນສຳຄັນທີ່ສຸດ ທີ່ທຳໃຫ້ຊາດລາວ ມີສະພາບການຢ່າງທີ່ເປັນຢູ່ໃນປັດຈຸບັນນີ້ ດ້ວຍຄວາມເຊື່ອຂັ້ນເອງ ທີ່ທຳໃຫ້ ຂ້າພະເຈົ້າ ຕົກລົງໃຈຮຽວຮຽງ ໜັງສືນີ້ຂຶ້ນ ພິມແຜ່ພາຍ. ທັງທີ່ ຂ້າພະເຈົ້າ

ກໍຮູ້ຢູ່ຄ່າ ຄວາມສາມາດຍັງບໍ່ພຽງພໍ ທີ່ຈະຮຽບຮຽງ ຫນັງສືສຳຄັນ ຂນາດນີ້ ເຊິ່ງກໍຫວັງແຕ່ວ່າ ຄວາມຕັ້ງໃຈດີ ຄວາມປາຖນາດີ ຂອງຜູ້ຮຽບຮຽງ ຄົງ ຈະທຳໃຫ້ ທ່ານເມທີ ນັກປາດ ຕລອດທ່ານຜູ້ອ່ານທຸກທ່ານ ໃຫ້ອະພັຍ ໃນ ຄວາມຜິດພາດ ທີ່ຄົງຈະມີຢູ່ຫລາຍຕອນ. ແລະກໍຫວັງທີ່ຈະໄດ້ຮັບການແນບນຳ ທັກທ້ວງໃນຂໍ້ຜິດພາດ ເພື່ອຜູ້ຮຽບຮຽງ ຈະໄດ້ຖືເປັນແນວທາງ ສຳລັບແກ້ ໄຂ ປັບປຸງ ໃຫ້ຫນັງສື ພົງສາວະດານລາວ ເລັ່ມນີ້ ຖືກຕ້ອງສົມບູນ ໃນຂັ້ນ ຕໍ່ໄປ.

ໃນການຈັດພິມຫນັງສືນີ້ ຜູ້ຮຽບຮຽງ ໄດ້ຮັບຄວາມເມດຕາ ຊ່ວຍ ເຫລືອ ຈາກທ່ານ ພຍາຈຳນົງ ຣາຊກິດ (ຫມູພາດ ຈູນລະມະນີ) ໂດຍທ່ານ ໄດ້ຕິດຕໍ່ ຮັບປະກັນຕໍ່ທາງໂຮມພິມໃຫ້. ແລະທ່ານຍັງຊ່ວຍຂຽນ ຄຳນຳ ລົງ ໃນຫນັງສືນີ້ອີກ ດັ່ງທີ່ທ່ານຜູ້ອ່ານ ໄດ້ເຫັນຢູ່ກ່ອນ ຄຳນຳຂອງຂ້າພະເຈົ້າ ແລ້ວນັ້ນ. ເຊິ່ງຖ້າວ່າ ທ່ານພຍາຯບໍ່ໄດ້ຊ່ວຍເຫລືອແລ້ວ ຫນັງສືນີ້ ຈະ ອອກມາສູ່ສາຍຕາທ່ານ ຊ້າໄປຫລາຍເດືອນ. ນອກຈາກນີ້ກໍມີ ຜູ້ທີ່ ຜູ້ຮຽບ ຮຽງ ເຄົາຣົບນັບຖືຫລາຍທ່ານ ຕລອດຈົນຫມູ່ເພື່ອນຫລາຍຄົນ ທີ່ບໍ່ອາດຈະ ນຳເອົາລາຍຊື່ມາລົງພິມໃຫ້ເຫມີດໄດ້ ທີ່ມີສ່ວນຊ່ວຍເຫລືອແນບນຳຕໍ່ຜູ້ຮຽບ ຮຽງ ເຊິ່ງຂ້າພະເຈົ້າກໍຂໍຂອບຄຸນຕໍ່ທ່ານ ແລະຫມູ່ເພື່ອນ ທຸກຄົນໄວ້ໃນໂອ ກາດນີ້ດ້ວຍ.

໑໗ ມິຖຸນາ ໑໙໗໑

ທ້າວຍຸມ ອ່ອນພົມ



ສະເດັດເຈົ້າສຸວັນນະພູມາ (ເຈົ້າກິມມະນາ) ນາຍົກຣັຖມົນຕີ, ຣັຖມົນຕີວ່າການກະຊວງປ້ອງກັນປະເທດ,
ກະຊວງຕ່າງປະເທດ, ນັກຣົບເກົ່າ ແລະ ປົບປຸງທນູບ້ານ ຂອງຣັຖບານປະສົມຊົ່ວຄາວແຫ່ງຊາດ ເປັນຜູ້ທີ່
ຮັບພາຣະໜັກ ແລະ ຍຸ້ງຍາກທີ່ສຸດ ໃນປັດຈຸບັນນີ້.

# ສ າ ຣ ະ ບ າ ນ


ເຫດການກ່ອນເສັຽເອກຣາຊ ໜ້າ ໑

ລາວສມັຍຕົກເປັນຫົວເມືອງຂຶ້ນຂອງສຍາມແລ້ວ " ໑໓

ພຣະເຈົ້າອະນຸວົງ ກອບກູ້ເອກຣາຊ " ໒໑

ເກີດເສິກຫໍ້ (ຮູບ ພຣະເຈົ້າສັກກະຣິນ ກັບແມ່ທັບໄທ ມາປາບເສິກຫໍ່ ທີ່ຫລວງພຣະບາງ) " ໒໓

ສຍາມແບ່ງຫົວເມືອງລາວອອກເປັນ ໔ ກອງໃຫ່ຍ " (map) ໔໓

ສຍາມເສັຽຫົວເມືອງລາວຝັ່ງຊ້າຍແມ່ນ້ຳຂອງໃຫ້ແກ່ຝຣັ່ງ ໔໖

ຄວາມເປັນມາຂອງຫົວເມືອງລາວ ສ່ວນທີ່ຍັງຕົກຄ້າງຢູ່ນຳ

ສຍາມ ໜ້າ ໖໙

ຄຳອະທິບາຍແຜນທີ່ " ໗໒

ສຍາມປະກາດໃຫ້ພົລ ໃຊ້ນາມສກຸນເປັນໄທ " ໑໐໒

ຄວາມເປັນມາຂອງລາວ ສ່ວນທີ່ຕົກມາເປັນຫົວເມືອງຂຶ້ນ

ຂອງຝຣັ່ງ " ໑໐໔

ສັນຍາຣະຫວ່າງປະເທດຝຣັ່ງ ແລະປະເທດອັງກິດກ່ຽວກັບ

ປະເທດສຍາມ " ໑໑໓

ຝຣັ່ງຈັດການປົກຄອງຫົວເມືອງລາວ " ໑໑໔

ລາວສ່ວນທີ່ຕົກມາເປັນຫົວເມືອງຂຶ້ນຂອງຝຣັ່ງ ໄດ້ຮັບເອກຣາຊ ໑໑໖

ຣາຍຊື່ ແລະສະຖານທີ່ຕັ້ງຂອງວັດ ພາຍໃນກຳແພງຊັ້ນໃນສຸດ

ຂອງນະຄອນວຽງຈັນ ໜ້າ ໑໒໗

# ຫຍໍ້ ພົງ ສາ ວະ ດານ ລາວ

------

## ສມັຍເປັນຫົວເມືອງຂຶ້ນ ຂອງປະເທດສຍາມ ແລະ ປະເທດຝຣັ່ງ

### ເຫດການກ່ອນເສັຽເອກຣາຊ ໃຫ້ສຍາມ

ກ່ອນທີ່ປະເທດລາວ ໃນປັດຈຸບັນ ຫລື ປະເທດລ້ານຊ້າງ ໃນອະດີດ ຈະຕົກເປັນຫົວເມືອງຂຶ້ນ ຂອງສຍາມນັ້ນ ປະເທດລາວໄດ້ແຕກແຍກກັນອອກເປັນ ໓ ອານາຈັກ ແຕ່ປີ ຄ.ສ. ໑໗໐໗ ໃນຣັຊການຂອງພຣະເຈົ້າໄຊອົງເວ້ (ພຣະໄຊເສດຖາທິຣາດ ທີ ໔) ໂດຍຄົງໄດ້ແຕກແຍກກັນອອກເປັນ ໔ ອານາຈັກກ່ອນ ຄື ເຈົ້າກິ່ງກິສຣາດ ເຈົ້າອິນທະໂສມ ກັບເຈົ້າອົງນົກ ຫລານຂອງພຣະເຈົ້າ ສຸຣິຍະວົງສາ ທັມມິກະຣາດ ໄດ້ຫລົບພັຍການເມືອງຈາກນະຄອນວຽງຈັນ ຂຶ້ນໄປຢູ່ ເມືອງພົງ ແລະເມືອງແພ່ພາຍລູນມາ ໄດ້ຍົກກອງທະຫານ ລົງມາຍຶດເອົານະຄອນຫລວງພຣະບາງຈາກທ້າວລອງອະນຸຊາ ຂອງພຣະເຈົ້າໄຊອົງເວ້ ເມື່ອປີ ຄ.ສ.໑໗໐໕ ເມື່ອຍຶດໄດ້ນະຄອນຫລວງພຣະບາງແລ້ວ ກໍຍົກກຳລັງລົງມາຕີເອົານະຄອນວຽງຈັນ ສົມເດັດພຣະເຈົ້າໄຊອົງເວ້ ເຫັນວ່າຈະຕ້ານທານກອງທະຫານຂອງເມືອງຫລວງພຣະບາງ ບໍ່ໄດ້ຈຶ່ງແຕ່ງ ຣາຊສານ ໃຫ້ຣາຊທູດ ລົງໄປຂໍກອງທັບ ກຸງສີອາຍຸທສາ ຂຶ້ນມາຊ່ວຍ.

ຝ່າຍພຣະເຈົ້າແຜ່ນດິນ ກຸງສີອາຍຸທຍາ ຄື ພຣະເພດຣາຊາ ເມື່ອຍົກກອງທັບຂຶ້ນມາແລ້ວ ກໍມາເລົ່າໂລມກະສັດທັງສອງນະຄອນ ໃຫ້ຖືກຕ້ອງຄອງກັນ ກະສັດທັງສອງນະຄອນ ຈຶ່ງຕົກລົງແບ່ງປັນເຂດແດນ ເມືອງກັນ ຄື ຕັ້ງແຕ່ຟາກນ້ຳເຫືອງ ຂຶ້ນໄປທາງເໜືອ ເປັນເຂດແດນນະຄອນຫລວງ ພຣະບາງ ×ໃຕນ້ຳເຫືອງລົງມາ ໃຫ້ເປັນເຂດແດນນະຄອນວຽງຈັນ ເມື່ອປີ ຄ.ສ. ໑໗໐໗.

ຕໍ່ມາເຖິງປີ ຄ.ສ. ໑໗໑໔ ທາງນະຄອນຈຳປາສັກ ເສນາອາມາດ ໄດ້ອະພິເສກ ເຈົ້າໜໍ່ກະສັດ ຫລານຂອງພຣະເຈົ້າສຸຣິຍະວົງສາທັມມິກະຣາດ ອີກຜູ້ນຶ່ງ ທີ່ຫລົບໜີການວຸ້ນວາຍ ຈາກນະຄອນວຽງຈັນໄປຢູ່ພູສະງໍ້ ທໍ່ຄຳ ຂຶ້ນເປັນເຈົ້າແຜ່ນດິນ ນະຄອນຈຳປາສັກ ຖວາຍພຣະນາມວ່າ ເຈົ້າສ້ອຍສີສມຸດ ພຸດທາງກູນ.

ເຖິງປີ ຄ.ສ. ໑໗໑໙ ເຈົ້າກິ່ງກິສຣາດ ສເດັດສຸຣະຄົດ ເຈົ້າອົງນົກ ໄດ້ຂຶ້ນສເວີຍຣາດຕໍ່ມາ ທົງພຣະນາມວ່າ ສົມເດັດພຣະບໍຣົມຂັດຕິຍະວົງສາ ຝ່າຍເຈົ້າອິນທະໂສມ ຜູ້ທີ່ໜີໄປຢູ່ເມືອງແພ່ ໄດ້ໄປຂໍກຳລັງເມືອງຫລ້າ ເມືອງພົງ ລົງມາຈະຕີເອົານະຄອນຫລວງພຣະບາງ ເຈົ້າອົງນົກ ທົງເຫັນວ່າ ເປັນພີ່ນ້ອງກັນ ບໍ່ຢາກໃຫ້ເກີດຄວາມວິວາດ ຈຶ່ງແຕ່ງໃຫ້ອາມາດອອກໄປເຊີນເຈົ້າອິນທະໂສມ ເຂົ້າມາປົກຄອງບ້ານເມືອງຮ່ວມກັນ ຊຶ່ງເຈົ້າອິນທະໂສມ ກໍຍິນດີເຂົ້າມາຊ່ວຍ ຣາຊການຢູ່ໃນນະຄອນຫລວງພຣະບາງ.

ເມື່ອເຈົ້າອິນທະໂສມ ເຂົ້າມາຢູ່ໃນນະຄອນຫລວງພຣະບາງ ໄດ້ ໑໐ ປີກໍ ສົມຄົບກັບພຣະຍາເມືອງຊ້າຍຍາດຊິງເອົາຣາຊສົມບັດ ຈາກພຣະບໍຣົມ ອັດຕິຍະວົງສາ ( ເຈົ້າອົງນົກ ) ໂດຍອັດປະຕູເມືອງການໃນເວລາທີ່ເຈົ້າອົງນົກ ອອກໄປຕໍ່ນົກ ເຈົ້າອົງນົກເມື່ອຮູ້ວ່າ ເຈົ້າອິນທະໂສມຍາດຊິງເອົາຣາຊສົມບັດ ຈຶ່ງສເດັດຫນີໄປອາໃສຢູ່ ທີ່ນະຄອນຊຽງໃໝ່ ປະເທດລ້ານນາ ຊຶ່ງພາຍລູນມາ ພຣະອົງໄດ້ເປັນພຣະເຈົ້າແຜ່ນດິນນະຄອນຊຽງໃໝ່ ເຈົ້າອິນທະໂສມ ຈຶ່ງປະກາດຕົວຂຶ້ນເປັນພຣະເຈົ້າແຜ່ນດິນ ໃນປີ ຄ. ສ. ໑໗໔໙ ນັ້ນ.

ຄ.ສ. ໑໗໖໐ ສົມເດັດພຣະເຈົ້າໄຊເສດຖາທິຣາດ ທີ ໔ ພຣະເຈົ້າແຜ່ນດິນ ອານາຈັກລ້ານຊ້າງຮົ່ມຂາວວຽງຈັນ ສເດັດສູຣະຄົດ ເສນາອາມາດຣາຊມູນຕຣີ ຂອງນະຄອນວຽງຈັນ ໄດ້ອຸປພິເສກ ເຈົ້າອົງບູນ ພຣະຣາຊໂອຣົດ ຂອງພຣະອົງຂຶ້ນເປັນພຣະເຈົ້າແຜ່ນດິນ ຖວາຍພຣະນາມວ່າ ພຣະເຈົ້າສິຣິບູນຍະສານ.

ຄ.ສ. ໑໗໓໘ ພຣະເຈົ້າສ້ອຍສີສມຸດພຸດທາງກູນ ເຈົ້າແຜ່ນດິນນະຄອນຈຳປາສັກ ຊິ້ນພຣະຊົນ ເສນາອາມາດ ຈຶ່ງອະພິເສກ ເຈົ້າໄຊຍະກູມມານ ພຣະຣາຊໂອຣົດຂຶ້ນເປັນ ພຣະເຈົ້າແຜ່ນດິນ ເຈົ້າທັມເທວົງ ເປັນມຫາອຸປຣາດ.

ຄ.ສ. ໑໗໔໙ ເຈົ້າອິນທະໂສມ ສເດັດສູຣະຄົດ ເສນາອາມາດຈຶ່ງເຊີນເອົາ ເຈົ້າອິນທະພົມ ໂອຣົດຜູ້ຖ້ວນ ໖ ຂອງເຈົ້າອິນທະໂສມຂຶ້ນເປັນພຣະເຈົ້າແຜ່ນດິນນະຄອນຫລວງພຣະບາງ ເຈົ້າອິນທະພົມ ຄອງເມືອງຢູ່ ໒ ເດືອນ ກໍມອບເວນຣາຊສົມບັດໃຫ້ເຈົ້າ ໂຊຕິກະ ຜູ້ເປັນອ້າຍໃຫຍ່.

ຄ.ສ. ໑໗໗໔ ທ້າວກູ່ແກ້ວ ໄດ້ກໍ່ການວູ້ນວາຍຂຶ້ນ ທີ່ເມືອງນະຄອນ (ເມືອງທ່າແຂກເກົ່າ) ດ້ວຍຍາດກັນເປັນເຈົ້າເມືອງ ນະຄອນກັບອ້າຍເຂີຍ ຄື ທ້າວຄຳສິງ ພຣະເຈົ້າສິຣິບຸນຍະສານ ສົ່ງພຣະຍາຊຽງສາລົງໄປຜາບຈັບໄດ້ ທ້າວກູ່ແກ້ວ ແລະ ທະຫານແກວ ຂອງເຈົ້າພາພູຊຸມແຕ່ ພຼະຍາຊຽງສາ ໄດ້ຕັ້ງ ທ້າວກູ່ແກ້ວ ເປັນເຈົ້າເມືອງນະຄອນແທນທ້າວຄຳສິງ.ສ່ວນທ້າວຄຳສິງ ພ້ອມຄອບຄົວບ່າວໄພ່ ປະມານສາມພັນປາຍໃຫ້ຂຶ້ນມາຢູ່ນະຄອນວຽງຈັນ ເຫດການທາງໃຕ້ ຈຶ່ງສະງົບ.

ຄ.ສ. ໑໗໘໘ ພຣະວໍ ກັບພຣະຕາ ເສນາອາມາດຊັ້ນຜູ້ໃຫຍ່ຂອງນະຄອນວຽງຈັນ ບໍ່ພໍໃຈກັບພຣະເຈົ້າສິຣິບຸນຍະສານ ໄດ້ອົພຍົບຄອບຄົວບ່າວໄພ່ ຂອງຕົນ ຫນີຈາກວຽງຈັນ ລົງໄປຕັ້ງຂັດແຂງ ຕໍ່ພຣະເຈົ້າແຜ່ນດິນວຽງຈັນ ຢູ່ເມືອງຫນອງບົວລຸ່ມພູ ຝ່າຍພຣະເຈົ້າ ສິຣິບຸນຍະສານໄດ້ພະຍາຍາມຜາບຢູ່ ໓ ປີ ຍັງບໍ່ເປັນການສຳເຣັດ ພຣະເຈົ້າສິຣິບຸນຍະສານ ຈຶ່ງແຕ່ງຄົນຖືຫນັງສືລົງໄປ ຂໍກອງທັບພະມ້າ ທີ່ເມືອງຊຽງໃຫມ່.

ມາຊ່ວຽຜາບພຣະວໍ ກັບພຣະຕາ ເສິກເທື່ອນີ້ ພຣະຕາ ຕາຍ.

ສ່ວນພຣະວໍ ແຕກໜີຈາກໜອງບົວລຸ່ມພູ ພາຄອບຄົວບ່າວໄພ່ ລົງໄປຂໍອາໃສຢູ່ ນຳພຣະເຈົ້າໄຊຍະກູມມານ ເຈົ້ານະຄອນຈຳປາສັກເມື່ອ ປີ ຄ.ສ. ໑໗໖໘.

ຄ.ສ. ໑໗໗໐ ພຣະເຈົ້າສິຣິບຸນຍະສານ ແຕ່ງໃຫ້ພຣະຍາອັຄ-ຣາດ ເປັນແມ່ທັບ ລົງໄປຜາບພຣະວໍ ແຕ່ພຣະເຈົ້າໄຊຍະກູມມານ ເຈົ້າແຜ່ນດິນ ນະຄອນຈຳປາສັກ ແຕ່ງກອງທັບຂຶ້ນມາຕ້ານທານໄວ້ ແລ້ວມີໜັງສືຂຶ້ນມາທູນ ຂໍໂທດພຣະວໍ ຕໍ່ພຣະເຈົ້າແຜ່ນດິນນະຄອນວຽງຈັນ ພຣະເຈົ້າສິຣິບຸນຍະສານ ຈຶ່ງສັ່ງໃຫ້ ພຣະຍາອັຄຣາດ ຍົກກອງທັບກັບຄືນວຽງຈັນ.

ຕໍ່ມາ ພຣະວໍ ເສັຽໃຈ ໃຫ້ພຣະເຈົ້າໄຊຍະກູມມານ ຈຶ່ງອົພຍົບຄອບຄົວບ່າວໄພ່ ອອກຈາກນະຄອນຈຳປາສັກ ໜີມາຕັ້ງຢູ່ບ້ານດອນມົດແດງ ( ແຂວງເມືອງອຸບົນ ເວລານີ້ ) ແລ້ວແຕ່ງທ້າວກ່ຳ ບຸດຊາຍ ນຳເອົາເຄື່ອງມຸງຄຸນ ບັນນາການ ລົງໄປຂໍຂຶ້ນຕໍ່ສຍາມ ເມື່ອປີ ຄ.ສ. ໑໗໗໗.

ຄ.ສ. ໑໗໗໑ ເຈົ້າສຸຣິຍະວົງ ອະນຸຊາ ອົງທີ ໒ ຂອງເຈົ້າໂຊຕິກະ ພຣະເຈົ້າແຜ່ນດິນອານາຈັກລ້ານຊ້າງຮົ່ມຂາວ ຫລວງພຣະບາງ ໄດ້ ຊັກຊວນເອົາທະຫານພະມ້າ ຢູ່ເມືອງຊຽງໃໝ່ ລົງມາຕີເອົາເມືອງຫລວງ ພຣະບາງ ເຈົ້າໂຊຕິກະ ຜູ້ອ້າຍສູ້ບໍ່ໄດ້ ຈຶ່ງຈຳເປັນໄດ້ມອບຣາຊສົມບັດ

ໃຫ້ແກ່ເຈົ້າສຸຣິຍະວົງ ກໍໄດ້ຂຶ້ນເປັນພຣະເຈົ້າແຜ່ນດິນຫລວງພຣະບາງຕໍ່ມາ.

ປີ ຄ.ສ. ໑໗໗໔ ເຈົ້າສຸຣິຍະວົງ ໄດ້ຍົກກອງທັບລົງມາຕີນະຄອນວຽງຈັນ ເພື່ອແກ້ແຄ້ນ ຄວາມຂົມຂຽດ ອັນມີມາແຕ່ກ່ອນ ພຣະອົງໄດ້ຕັ້ງທັບລ້ອມນະຄອນວຽງຈັນ ຢູ່ ໓ ເດືອນ ກໍຍັງເຂົ້າຕີເອົາເມືອງບໍ່ໄດ້ - ຝ່າຍພຣະເຈົ້າແຜ່ນດິນວຽງຈັນ ໄດ້ແຕ່ງສານໄປຂໍກອງທັບ ພະມ້າ ນຳພຣະເຈົ້າມັງຣະ ພຣະເຈົ້າມັງຣະ ຈຶ່ງໄດ້ໃຫ້ແມ່ທັບພະມ້າ ຍົກທັບລົງມາ ຕີນະຄອນຫລວງພຣະບາງ ພຣະເຈົ້າສຸຣິຍະວົງ ຈຳເປັນຈຶ່ງຍົກທັບກັບຄືນໄປປ້ອງກັນເມືອງຫລວງພຣະບາງ ກອງທັບຫລວງພຣະບາງ ຂອງເຈົ້າສຸຣິຍະວົງ ຕໍ່ສູ້ກອງທັບຂອງພະມ້າ ຢູ່ ໑໕ ມື້ ພຣະມ້າກໍເຂົ້າປຸ້ນເອົາເມືອງໄດ້ ພຣະເຈົ້າສຸຣິຍະວົງ ໄດ້ຍອມສົ່ງສ່ວຍໃຫ້ພະມ້າ ພະມ້າກໍຍົກກອງທັບກັບໄປ.

ຄ.ສ. ໑໗໗໗ ພຣະເຈົ້າສີຣິບຸນຍະສານ ພຣະເຈົ້າແຜ່ນດິນນະຄອນວຽງຈັນ ໄດ້ຊາບວ່າ ພຣະວໍ ຜິດໃຈກັບພຣະເຈົ້າໄຊຍະກຸມມານ ແລ້ວໜີໄປຕັ້ງຢູ່ດອນມົດແດງ ພຣະອົງທົງຢ້ານວ່າ ພຣະວໍ ຈະມີກຳລັງກ້າແຂງ ເປັນສ້ຽນໜາມຕໍ່ແຜ່ນດິນ ຈຶ່ງແຕ່ງໃຫ້ ພຣະຍາສຸໂພ ຍົກກອງທັບລົງໄປຕີພຣະວໍ ທີ່ດອນມົດແດງ ພຣະຍາສຸໂພ ຈັບພຣະວໍ ໄດ້ແລ້ວກໍຂ້າເສັຽ ທ້າວກ່ຳບຸດຊາຍ ພຣະວໍ ແລະພັກ/ພວກ ຫລົບໜີໄປໄດ້ ຈຶ່ງມີໜັງສືໄປເຖິງ ເຈົ້າເມືອງ ນະຄອນຣາຊສີມາ ເພື່ອຂໍກອງທັບ ນຳພຣະເຈົ້າແຜ່ນດິນສຍາມທີ່

ກຸງທົນບູຣີ.

<u>ໝາຍເຫດ</u> : ເມືອງນະຄອນຣາຊສີມາ ນັ້ນເປັນຫົວເມືອງລາວ ໄດ້ແບ່ງປັນກັບສຍາມ ມາຕັ້ງແຕ່ສມັຍພຣະເຈົ້າຟ້າງຸ່ມ ແຕ່ພາຍລຸນມາ ເມື່ອປະເທດລ້ານຊ້າງ ອ່ອນແອລົງ ເນື່ອງຈາກການແຕກແຍກ ເມືອງນະຄອນຣາຊສີມາ ພວກເຈົ້າເມືອງ ໄດ້ໄປຂໍຂື້ນກັບສຍາມ ໄດ້ສົ່ງຊ່ວຍໃນຖານະຫົວເມືອງຂື້ນ ດັ່ງດຽວກັບຫົວເມືອງລາວອື່ນໆ ທີ່ຂື້ນກັບສຍາມ ແຕ່ພົລເມືອງສ່ວນຫລາຍ ເປັນຄົນລາວ.

ຝ່າຍພຣະເຈົ້າກຣຸງທົນບູຣີ ພຣະເຈົ້າແຜ່ນດິນສຍາມ ເວລານັ້ນຕ້ອງການຈະຂຍາຍອານາເຂດ ມາທາງປະເທດລາວຢູ່ແລ້ວ ພໍໄດ້ຊາບຂ່າວຈາກເຈົ້າເມືອງນະຄອນຣາຊສີມາ ກໍຫາວ່າ ພຣະເຈົ້າສີຣິບຸນຍະສານ ດູໝິ່ນ ຂ້າຂອບຂັນທະສີມາ ຈຶ່ງແຕ່ງໃຫ້ເຈົ້າພຣະຍາມະຫາກະສັດສຶກ (ພາຍລູນມາໄດ້ເປັນພຣະເຈົ້າແຜ່ນດິນສຍາມ ຄື ຕົ້ນຣາຊວົງຂອງກະສັດສຍາມໃນປັດຈຸບັນ) ເປັນແມ່ທັບໃຫຍ່ ແລະ ໃຫ້ເຈົ້າພຣະຍາສຸຣະສີ ຍົກກອງທັບເຮືອຂຶ້ນມາທາງເມືອງຂເມນ ເກນພົນຂເມນ ໑໐.໐໐໐ ຊຸດຄອງອອມຫລີຜີ - ແລ້ວຍົກກອງທັບເຮືອ ຂຶ້ນມາຕາມຮູນ້ຳຂອງ ເມື່ອປີ ຄ.ສ. ໑໗໗๒ ສ່ວນກອງທັບຂອງເຈົ້າພະຍາມະຫາກະສັດສຶກ ໄດ້ຍົກທັບຂຶ້ນມາທາງເມືອງນະຄອນຣາຊສີມາ ເມືອງສຸຣິນ ມາໂຮມກັບກອງທັບເຮືອ ແດນເມືອງຈຳປາສັກ ກອງທັບສຍາມ ຈຶ່ງເຂົ້າຕີເອົານະຄອນຈຳປາສັກໄດ້ງ່າຍ ເຈົ້າໄຊຍະກຸມມານ ບໍ່ກ້າຕໍ່ສູ້.

ເມື່ອສຍາມຕີໄດ້ເມືອງນະຄອນຈຳປາສັກແລ້ວ ກໍຍົກກອງທັບຂຶ້ນມາຕາມຮູແມ່ນ້ຳຂອງ ເຂົ້າຕີເອົາເມືອງມຸກດາຫານ ເມືອງນະຄອນພຣະນົມ ເມືອງໜອງຄາຍ ແລ້ວກໍຍົກຂຶ້ນມາຕີເມືອງພະໂຄ ເມືອງວຽງຄຸກ ເມືອງໜ້າດ່ານ ຂອງນະຄອນວຽງຈັນໄດ້ແລ້ວ ຈຶ່ງຍົກກອງທັບເຂົ້າຕີເມືອງພັນພ້າວ ແຕ່ຍັງເຂົ້າຕີເອົາບໍ່ໄດ້ຈົນເຖິງ ປີ ຄ.ສ. ໑໗໗໙ ຝ່າຍພຣະເຈົ້າສຸຣິຍະວົງ ພຣະເຈົ້າແຜ່ນດິນນະຄອນຫລວງພຣະບາງ ໄດ້ຍົກກອງ

ທັບລົງມາຊ່ວຍກອງທັບສຍາມ ຕີນະຄອນວຽງຈັນທາງດ້ານເໜືອ.

ພຣະເຈົ້າສິຣິບຸນຍະສານ ຈຶ່ງສັ່ງໃຫ້ຖອນກຳລັງຈາກເມືອງພັນພ້າວ ຂ້າມຂອງມາໂຮມກັນຢູ່ເມືອງວຽງຈັນ ບ່ອນດຽວ ກອງທັບສຍາມ ຈຶ່ງຍົກມາລ້ອມເມືອງວຽງຈັນ ພຣະເຈົ້າສິຣິບຸນຍະສານ ໄດ້ຕໍ່ສູ້ປ້ອງກັນເມືອງຢ່າງສາມາດ ແຕ່ພຣະອົງ ເຫັນວ່າຈະສູ້ບໍ່ໄດ້ ກໍພາ ພຣະບໍຣົມວົງສານຸວົງຫລົບໜີ ລົງໄປທາງເມືອງຄຳເກີດ.

ເຈົ້ານັນທະເສນ ພຣະຣາຊໂອຣົດ ຂອງພຣະອົງ ຈຶ່ງໄຂປະຕູເມືອງໃຫ້ກອງທັບສຍາມ ເມື່ອວັນຈັນ ເດືອນ ໑໐ ແຮມ ໓ ຄ່ຳ ຄ.ສ. ໑໗໗໙ ເມື່ອກອງທັບສຍາມເຂົ້າເມືອງໄດ້ແລ້ວ ກໍກວດເກັບເອົາຊັບສິນ - ເງິນຄຳ ອັນມີໃນທ້ອງພຣະຄັງຫລວງ ແລະ ຕາມຫໍໂຮງ ບ້ານເຮືອນ ຂອງຂ້າຣາຊການໝົດທຸກແຫ່ງ ຕລອດຈົນເຄື່ອງສາດຕຣາອາວຸດ ປືນໃຫຍ່ນ້ອຍກັບຄວບຄຸມຕົວ ເຈົ້ານັນທະເສນ ພຣະມຫາອຸປຣາດ ພຣະຣາຊໂອຣົດ ແລະພຣະຣາຊທິດາ ຂອງ ພຣະເຈົ້າສິຣິບຸນຍະສານ ພ້ອມຄອບຄົວຊາວວຽງຈັນແລະ ຄົວລາວຫົວເມືອງຕ່າງໆ ທີ່ສຍາມຕີໄດ້ ພ້ອມທັງເຊີນເອົາພຣະແກ້ວມໍຣະກົດ ພຣະແຊກຄຳ ພຣະຈັນທຼະຣັຕນະ ແລະ ພຣະບາງ ອັນເປັນຂອງມິ່ງເມືອງວຽງຈັນ ໄປພ້ອມກອງທັບສຍາມ ລົງໄປຍັງກຣຸງທົນບູຣີ ເມື່ອເດືອນຍີ່.

ເມື່ອສຍາມຕີໄດ້ ນະຄອນວຽງຈັນແລ້ວ ແມ່ທັບສຍາມກໍເລີຍບັງຄັບໃຫ້ ພຣະເຈົ້າສຸຣິຍະວົງ ເຈົ້າແຜ່ນດິນນະຄອນຫລວງພຣະບາງ ໃຫ້ - ເປັນເມືອງຂຶ້ນຂອງສຍາມ ດັ່ງດຽວກັນ ເມື່ອປີ ຄ.ສ. ໑໗໗໙ ນັ້ນເອງ.

ຄ.ສ. ໑໗໘໐ ສິ້ນເດັດ ພຣະເຈົ້າ[10]ສິຣິບຸນຍະສານ ຈຶ່ງສເດັດກັບຄືນມານະຄອນວຽງຈັນ ແລະ ຂຶ້ນຄອງເມືອງໄດ້ປີດຽວ ກໍຊິ້ນພຣະຊົນ.

<u>ໝ າ ຍ ເ ຫ ດ</u> :

ໃນປະເທດຂເມນ ເວລານັ້ນ ປະມານ ຄ.ສ. ໑໗໘໒ ຄືນໄປຫລັງ ບໍ່ມີກະສັດປົກຄອງ ຈຶ່ງເກີດການວຸ້ນວາຍ ພວກຂຸນນາງ ເສນາອ້າຣາຊການ ຍາດແຍ່ງກັນເປັນໃຫຍ່ ເຈົ້າແຜ່ນດິນສຍາມ ຣັຊການທີ ໑ ໄດ້ທົວລ້ຽງນັກອົງເອັງ ເຊື້ອພຣະວົງ ກະສັດຂເມນ. ເປັນຣາຊບຸດບຸນທັມ ຢູ່ກຣຸງເທພ. ແຕ່ເວລານັ້ນກໍຍັງນ້ອຍຫລາຍ, ເມື່ອເຫດການວຸ້ນວາຍ ເຈົ້າແຜ່ນດິນສຍາມ ຈຶ່ງໃຫ້ ພະຍາອະພັຍພູເບດ (ແບນ) ແມ່ທັບສຍາມ ທີ່ - ເຄີຍຢູ່ທີ່ປະເທດຂເມນ. ໄປເປັນຜູ້ສຳເຣັດຣາຊການ ປະເທດຂເມນ ຢູ່ທີ່ເມືອງ ຊຸດົງລີຊັຍ ຫລື ເມືອງຊຸດົງມີຊັຍ ໃນປັດຈຸບັນ ແຕ່ປີ ຄ.ສ. - ໑໗໘໔ (ພ.ສ. ໒໓໒໗)

ເມື່ອນັກອັງເອັງ ໃຫ່ຍສົມຄວນ ຈະປົກຄອງປະເທດຂເມນໄດ້ແລ້ວ ພຣະເຈົ້າແຜ່ນດິນສຍາມ ຈຶ່ງອະພິເສກ ນັກອັງເອັງ ເປັນສົມເດັດພຣະນາຣາຍ ຣາມາທິບໍດີ ເຈົ້າກຣຸງກັມພູຊາ ເມື່ອ ຄ.ສ. ໑໗໙໖ ແຕ່ເພື່ອຈະຄວບຄຸມຂເມນ ໃຫ້ໃກ້ຊິດ ເພື່ອບໍ່ໃຫ້ພວກຂຸນນາງຂເມນ ກໍ່ການວຸ້ນວາຍ. ແລະເພື່ອຈະທອນກຳລັງຂເມນ ບໍ່ໃຫ້ມີກຳລັງກ້າແຂງ ອັນອາດຈະເປັນສັດຕູຕໍ່ສຍາມ ໃນພາຍພາກໜ້າ. ກັບເພື່ອຕອບແທນ ຄວາມດີຄວາມຊອບ ຂອງເຈົ້າພະຍາອະພັຍພູເບດ (ແບນ) ເຈົ້າແຜ່ນດິນສຍາມຣັຊການທີ່ນຶ່ງ ຈຶ່ງຂໍແບ່ງເອົາເມືອງ ພຣະຕະບອງ ເມືອງສຽມຣາບ ໂຣມທັງ ນະຄອນວັດ ແລະ ນະຄວນທົມ ຈາກສົມເດັດພຣະນາຣາຍຣາມາທິບໍດີ ເຈົ້າແຜ່ນດິນຂເມນ ໃຫ້ເຈົ້າພະຍາອະພັຍພູເບດ ປົກຄອງ ຂຶ້ນຕົງຕໍ່ກຣຸງເທພ ຂເມນຈຶ່ງຖືກແບ່ງແຍກອອກເປັນສອງສ່ວນ. ແຕ່ສມັຍນັ້ນມາດີ ສ່ວນທີ່ສຍາມແຍກມາ ຂຶ້ນກັບກຣຸງເທພໂດຍກົງ ສຍາມຮຽກວ່າ -"ຂເມນສ່ວນໃນ" ສ່ວນທີ່ພຣະເຈົ້າແຜ່ນດິນຂເມນປົກຄອງ ໃນຖານະເມືອງປະເທດຣາຊ ຂອງສຍາມຮຽກວ່າ "ຂເມນສ່ວນນອກ" ການແບ່ງແຍກນີ້ ມີຜົນສືບເນື່ອງມາຈົນຮອດສມັຍທີ່ຂເມນ ຍອມຢູ່ໃນອາຣັກຂາຂອງຝຣັ່ງເມື່ອ ຄ.ສ. ໑໘໖໓ ຈາກນັ້ນອີກ ໔໓ ປີ ຂເມນຈຶ່ງໄດ້ "ຂເມນສ່ວນໃນ" ຈາກສຍາມ ເມື່ອ ຄ.ສ. ໑໙໐໖ ໂດຍຝຣັ່ງເສດ ເອົາເມືອງ

ດ່ານຊ້າຍ ຂອງລາວໄປຍົກໃຫ້ສຍາມ ເພື່ອປ່ຽນເອົາ"ຂເມນສ່ວນໃນ" ວັນນິເມືອງ ພຣະຕະບອງ ສຽມຣາບ ສີໂສພົນ ໄປໂຮມກັບປະເທດ - ຂເມນ ທີ່ຟຣັ່ງ ໄດ້ເປັນຫົວເມືອງຂຶ້ນແຕ່ກ່ອນແລ້ວ.

## ລາວສມັຍຕົກເປັນຫົວເມືອງ ຂຶ້ນ ຂອງ ສຍາມແລ້ວ

-----------

ຄ.ສ. ໑໗໘໑ ພຣະເຈົ້າແຜ່ນດິນສຍາມ ຈຶ່ງໃຫ້ເຈົ້ານັນທະເສນ ຂຶ້ນມາເປັນ ພຣະເຈົ້າແຜ່ນດິນນະຄອນວຽງຈັນ ເມື່ອເດືອນອ້າຍອອກໃໝ່ ຖວາຍພຣະນາມວ່າ ພຣະເຈົ້ານັນທະເສນພົມມະລາວ ໃຫ້ເຈົ້າອິນທະວົງ ເປັນມະຫາອຸປຣາດ ແລະ ໃນປີດຽວກັນນີ້ ພຣະເຈົ້າແຜ່ນດິນສຍາມ ກໍໄດ້ໃຫ້ເຈົ້າໄຊຍະກຸມານ ຂຶ້ນມາເປັນເຈົ້າແຜ່ນດິນນະຄອນຈຳປາສັກ ແລະ ໃຫ້ເຈົ້າສຸຣິຍະວົງ ຄືນມາເປັນເຈົ້ານະຄອນຫລວງພຣະບາງ ດັ່ງເກົ່າ.

ຄ.ສ. ໑໗໘໗ ພຣະເຈົ້ານັນທະເສນ ພົມມະລາວ ໄດ້ຍົກທັບໄປຕີເມືອງຊຽງຂວາງ ເພາະເຈົ້າໄກເຊິນ ພຣະເຈົ້າແຜ່ນດິນແກວຕົງແກງ ໄດ້ແຕ່ງທະຫານແກວມາຄວບຄຸມ ເອົາເມືອງຊຽງຂວາງ ເຈົ້າເມືອງຊຽງຂວາງ ກໍຍິນຍອມສົ່ງບັນນາການ ໃຫ້ແກ່ແກວ ເຈົ້ານັນທະເສນ ຄຸມເຈົ້າເມືອງຊຽງຂວາງ ລົງມາໄວ້ນະຄອນວຽງຈັນ.

ຄ.ສ. ໑໗໘໘ ພຣະເຈົ້າແຜ່ນດິນແກວ ໄດ້ແຕ່ງແມ່ທັບຄຸມທະຫານ

ແກວ ແລະ ທະຫານເມືອງຊຽງຂວາງ ມີພົນປະມານ ໓.໐໐໐ ຄົນ ລົງມາຕີນະຄອນວຽງຈັນ ພຣະເຈົ້ານັນທະເສນ ຕ້ອງການຜູກສັມພັນທະໄມຕຣີກັບແກວ ເພື່ອໄວ້ຕໍ່ສູ້ກັບສຍາມ ຈື່ງຍອມສົ່ງຕົວເຈົ້າຊຸມພູ ເຈົ້າຊຽງຂວາງ ແຕ່ໃຫ້ເຈົ້າຊຽງຂວາງ ສົ່ງຊ່ວຍໃຫ້ວຽງຈັນເຄິ່ງນຶ່ງ ດັ່ງຄອກັບສົ່ງໃຫ້ແກວ ກອງທັບແກວ ກໍເລີກທັບກັບຄືນໄປ.

ຄ.ສ. ໑໗໙໑ ຢູ່ທີ່ເຂດນະຄອນຈຳປາສັກຊຽງແກ້ວ ບ້ານເຂົາໂອງ ເປັນກະບົດຕໍ່ເຈົ້າ ນະຄອນຈຳປາສັກ ຍົກກຳລັງເຂົ້າຕີເອົານະຄອນຈຳປາສັກ ຝ່າຍເຈົ້າໄຊຍະກຸມມານ ເວລານັ້ນ ພຣະຊົນ ໄດ້ ໘໑ ປີແລ້ວ ພໍໄດ້ຍິນຂ່າວເສິກ ກໍຕົກໃຈ ເຖິງແກ່ກັມພວກກະບົດຈື່ງເຂົ້າເມືອງໄດ້. ເວລານັ້ນ ທ້າວຝ່າຍໜ້າ ບຸຕພະຕາ ທີ່ຢູ່ບ້ານສົ່ງທ່າ (ຄືອຳເພີຍະໂສທອນ ເວລານີ້ ) ກັບພຣະປະທຸສຸຣະຣາ (ຄຳຜົງ) ນາຍກອງ ບ້ານຫ້ວຍແຈະລະແມ ພາທະຫານໄປຕີພວກກະບົດ ທ້າວຝ່າຍໜ້າ ຈັບອ້າຍຊຽງແກ້ວ ຫົວໜ້າພວກກະບົດ ໄດ້ກໍຂ້າເສັຽ.

ເມື່ອເຈົ້າແຜ່ນດິນສຍາມ ຊາບວ່າ ທ້າວຝ່າຍໜ້າ ເປັນຜູ້ຜາບພວກກະບົດໄດ້ ຈື່ງຕັ້ງໃຫ້ເປັນເຈົ້າ ນະຄອນຈຳປາສັກ ຂນານນາມວ່າ "ເຈົ້າພຣະວິໄຊຍະຣາຊຂັດຕິຍະວົງສາ" ເຈົ້ານະຄອນຈຳປາສັກ ຜູ້ນີ້ໄດ້ຍ້າຍເມືອງຂຶ້ນມາຕັ້ງຢູ່ທາງເໜືອ ຄື ເມືອງເກົ່າລັນເກົ່າ ໃນປັດຈຸບັນນີ້.

ຄ.ສ. ໑໗໙໑ ພຣະເຈົ້າສຸຣິຍະວົງ ເຈົ້າແຜ່ນດິນນະຄອນຫລວງພຣະບາງ ສ້ຽງພຣະຊົນ ສຍາມຈຶ່ງຕັ້ງເຈົ້າອະນຸຣຸດທະ ໂອຣົດພຣະເຈົ້າອິນທະໂສມ ຂຶ້ນເປັນ ພຣະເຈົ້າແຜ່ນດິນນະຄອນຫລວງພຣະບາງ.

ຄ.ສ. ໑໗໙໘ ພຣະເຈົ້າແຜ່ນດິນສຍາມ ສັ່ງໃຫ້ພຣະເຈົ້ານັນທະເສນ ຂຶ້ນໄປຕີນະຄອນຫລວງພຣະບາງ ເພາະພຣະເຈົ້າແຜ່ນດິນຫລວງພຣະບາງ ໄດ້ຕິດຕໍ່ກັບ ພະມ້າ ແລະ ເຈົ້າຊຽງຮຸ້ງ ຈະແຂງເມືອງແຍກເປັນເອກະຣາດ ຈາກສຍາມ. ພຣະເຈົ້ານັນທະເສນ ລ້ອມເມືອງຫລວງພຣະບາງຢູ່ ໑໕ ວັນ ກໍເຂົ້າເມືອງໄດ້ ຈຶ່ງຈັບເອົາເຈົ້າອະນຸຣຸດທະ ເຈົ້ານາກ ເຈົ້າມັນທາຕຸຣາດ ພຣະບໍຣົມວົງສານຸວົງ ສົ່ງລົງໄປກຣຸງເທພ ພຣະເຈົ້າອະນຸຣຸດທະ ຖືກກັກຢູ່ກຣຸງເທພ ເຖິງ ໔ ປີ ຈຶ່ງໄດ້ກັບຄືນມາຄອງເມືອງຫລວງພຣະບາງ ຕາມເດີມ.

ຄ.ສ. ໑໗໙໕ ພຣະເຈົ້ານັນທະເສນ ເຈົ້າແຜ່ນດິນນະຄອນວຽງຈັນ ຖືກເຈົ້າແຜ່ນດິນນະຄອນຫລວງພຣະບາງ ຟ້ອງຕໍ່ກະສັດສຍາມວ່າ ຄົບຄິດກັບພຣະບໍຣົມຣາຊາ ເຈົ້າເມືອງ ນະຄອນພຣະນົມ ທຳການຕິດຕໍ່ກັບແກວ ຈະແຂງເມືອງ ບໍ່ຍອມຂຶ້ນຕໍ່ກຣຸງເທພ ພຣະເຈົ້າແຜ່ນດິນສຍາມ ຈຶ່ງສັ່ງໃຫ້ ພຣະເຈົ້ານັນທະເສນ ກັບ ພຣະບໍຣົມຣາຊາ ລົງໄປ

ກຣຸງເທພ ໄດ້ຕໍ່ສູ້ແກ້ຄະດີ ຢູ່ເຖິງ ໔ ປີ ກໍສ້ຽງພຣະຊົນຢູ່ກຣຸງເທພນັ້ນເອງ.

ຄ.ສ. ໑໗໙໕ ພຣະເຈົ້າແຜ່ນດິນສຍາມ ໄດ້ຕັ້ງ ເຈົ້າອິນທະວົງ ອະນຸຊາ ຂອງ ພຣະເຈົ້ານັນທະເສນ ເປັນພຣະເຈົ້າແຜ່ນດິນນະຄອນວຽງຈັນ ຕັ້ງເຈົ້າອະນຸວົງ ຜູ້ນ້ອງຫລ້າ ເປັນ ມຫາອຸປຣາດ.

ຄ.ສ. ໑໗໙໗ - ໑໗໙໘ ພຣະເຈົ້າອິນທະວົງ ທົງໂຜດໃຫ້ເຈົ້າອະນຸວົງ ມຫາອຸປຣາດ ເປັນແມ່ທັບວຽງຈັນ ໄປຣົບພະມ້າ ທີ່ເມືອງຊຽງໃໝ່ ຊ່ວຍສຍາມ.

ຄ.ສ. ໑໘໐໓ ພຣະອົງທົງໂຜດໃຫ້ ເຈົ້າອະນຸວົງ ມຫາອຸປຣາດ ເປັນແມ່ທັບວຽງຈັນ ໄປຣົບພະມ້າ ຢູ່ເມືອງຊຽງແສນ ຊ່ວຍສຍາມ ເຈົ້າອະນຸ ຕີເມືອງຊຽງແສນໄດ້ໃນປີ ຄ.ສ. ໑໘໐໔ ແລະ ພຣະເຈົ້າອິນທະວົງ ກໍສ້ຽງພຣະຊົນໃນປີນີ້.

ເມື່ອພຣະເຈົ້າອິນທະວົງ ເຈົ້າແຜ່ນດິນນະຄອນວຽງຈັນ ສ້ຽງພຣະຊົນແລ້ວ ເຈົ້າອະນຸວົງ ກໍໄດ້ຂຶ້ນຄອງຣາຊສົມບັດແທນ ເມື່ອປີ ຄ.ສ: - ໑໘໐໔ ນັ້ນເອງ ພຣະເຈົ້າອະນຸວົງ ຈຶ່ງທຳການຟື້ນຟູປະເທດລາວ ໃຫ້ຈເຣີນ ແລະເຂັ້ມແຂງທຸກຢ່າງ ຄື :

ຄ.ສ. ໑໘໐໗ ພຣະເຈົ້າອະນຸ ໂຜດໃຫ້ສ້າງພຣະຣາຊວັງຂຶ້ນ ໃນນະຄອນວຽງຈັນ.

ຄ.ສ. ໑໘໐໗ ເຈົ້າພຣະວິໄຊຍະຣາດ ອັດຕິຍະວົງສາ ເຈົ້າ ນະຄອນຈຳປາສັກ ເຖິງແກ່ກັມ ພຣະເຈົ້າແຜ່ນດິນສຍາມ ຈຶ່ງຕັ້ງ ເຈົ້າ ໜໍ່ເມືອງ (ໂອຣົດເຈົ້າໄຊຍະກຸມມາ) ໃຫ້ເປັນເຈົ້ານະຄອນຈຳປາສັກ ແຕ່ເຈົ້າໜໍ່ເມືອງ ເປັນໄດ້ ໓ ວັນກໍຕາຍ.

ຄ.ສ. ໑໘໐໘ ຂ້າຫລວງສຍາມ ທີ່ຂຶ້ນມາເຜົາສົບ ເຈົ້າພຣະ ວິໄຊຍະຣາດ ອັດຕິຍະວົງສາ ເວລາກັບໄປກຣຸງເທພ ໄດ້ເຊີນເອົາພຣະ ແກ້ວຜລຶກ ທີ່ເຈົ້າສ້ອຍສີສມຸດ ພຸດທາງກູນ ໄດ້ມາຈາກຂ້າບ້ານສົ້ມປ່ອຍ ນາຍອນ ລົງໄປກຣຸງເທພ ພຣະພຸທຮູບນີ້ ສູງ ໑໔ ນີ້ວ ໜ້າຕັກກ້ວາງ ໙ ນີ້ວ ເປັນພຣະພຸທຮູບທີ່ສວຍງາມຫລາຍ ເວລານີ້ຢູ່ໃນພຣະຣາຊວັງ ກຣຸງເທພ.

ຄ.ສ. ໑໘໐໘ ພຣະເຈົ້າອະນຸວົງ ໄດ້ສເດັດໄປສລອງຂົວຢູ່ທາດ ພຣະນົມ ແລະ ທົງສ້າງວັດສີບຸນເຮືອງ ຂຶ້ນທີ່ເມືອງໜອງຄາຍ.

ຄ.ສ. ໑໘໑໐ ພຣະເຈົ້າອະນຸ ທົງສ້າງຂົວຂ້າມນ້ຳຂອງ ທີ່ວຽງ ຈັນ ບ່ອນຊື່ວັດຊຸບມຸງ ຂ້າມໄປໃສ່ທ່າວັດຊາງເຜືອກ ບ້ານຊີຊຽງໃໝ່ ( ອຳເພີສີຊຽງໃໝ່ ເວລານີ້ )

ຄ.ສ. ໑໘໑໑ ພຣະເຈົ້າແຜ່ນດິນສຍາມ ຈຶ່ງຕັ້ງເຈົ້າໜານ້ອຍ (ຫລານເຈົ້າສ້ອຍສີສມຸດ ພຸດທາງກູນ) ບຸດເຈົ້າຣາຊວົງສຸຣິໂຍ ເປັນເຈົ້ານະຄອນຈຳປາສັກ ໃຫ້ເຈົ້າທັມກິດຕິກາ ເປັນມຫາອຸປຣາດ ແຕ່ເຈົ້າໜານ້ອຍ ກັບ ເຈົ້າທັມກິດຕິກາ ບໍ່ຖືກຕ້ອງກັນ ສຍາມຈຶ່ງ ເອົາເຈົ້າທັມກິດຕິກາ ລົງໄປ ໄວ້ກຣຸງເທພ ປີ ຄ.ສ. ໑໘໑໙ ເກີດກະບົດ ສາຂຽດໂງ້ງ ຢູ່ໃນເຂດປົກຄອງ ຂອງນະຄອນຈຳປາສັກ ພວກກະບົດ ອັນມີ ສາຂຽດໂງ້ງ ເປັນຫົວໜ້າໄດ້ຍົກພວກເຂົ້າຕີເມືອງນະຄອນຈຳປາສັກ ເຈົ້າໜານ້ອຍ ສູ້ບໍ່ໄດ້ ກໍແຕກໜີເຂົ້າປ່າ ພວກກະບົດ ເມື່ອຍຶດເມືອງໄດ້ ກໍເອົາໄຟເຜົາເມືອງ ທາງການສຍາມໄດ້ແຕ່ງໃຫ້ ພຣະຍາມຫາອຳມາດ ກັບ ພຣະຍາ-ສອນສຳແດງ ຍົກທັບມາຜາບພວກກະບົດ ສາຂຽດໂງ້ງ ແລະ ພັກພວກຈຶ່ງຫລົບໜີໄປຢູ່ພູຍ່າປູ່ ແຂວງອັຕປື. ແມ່ທັບສຍາມຈຶ່ງຄຸມເອົາເຈົ້າໜານ້ອຍລົງໄປກຣຸງເທພ. ເຈົ້າໜານ້ອຍ ເລີຍເຖິງແກ່ກັມຢູ່ກຣຸງເທພນັ້ນເອງ.

ຄ.ສ. ໑໘໑໖ ພຣະເຈົ້າອະນຸຣຸດທະ ເຈົ້າແຜ່ນດິນນະຄອນຫລວງພຣະບາງ ຊຸ້ມພຣະຊົນ ເຈົ້າມັນທາຕຸຣາດ ພຣະຣາຊໂອຣົດ ໄດ້ຂຶ້ນຄອງຣາຊສົມບັດ ແລະໃນປີດຽວກັນນີ້ ພຣະເຈົ້າອະນຸວົງ ໄດ້ທຳບຸນສລອງຫໍພຣະແກ້ວ ແລະ ຫໍໄຕຣ ຢູ່ທີ່ນະຄອນວຽງຈັນ.

ຄ.ສ. ໑໘໑໘ ພຣະເຈົ້າອະນຸວົງ ທົງໂຜດໃຫ້ ເຈົ້າຣາຊບຸດ ( ໂຍ້ ) ເປັນແມ່ທັບອຽງຈັນ ລົງໄປຜາບກະບົດ ສາຂຽດໂງ້ງ ທີ່ເຂດເມືອງນະຄອນຈຳປາສັກ ຈັບຫົວໜ້າກະບົດ ສາຂຽດໂງ້ງ ໄດ້ສົ່ງລົງໄປກຣຸງເທພ.

ຄ.ສ. ໑໘໑໙ ສົມເດັດພຣະເຈົ້າອະນຸວົງ ຈຶ່ງຂໍຕໍ່ເຈົ້າແຜ່ນດິນສຍາມ ຕັ້ງເຈົ້າຣາຊບຸດ ( ໂຍ້ ) ໄປເປັນເຈົ້ານະຄອນຈຳປາສັກ ແທນເຈົ້າໜານ້ອຍ ແລະ ໃຫ້ເຈົ້າຄຳປ້ອງ ໄປເປັນເຈົ້າອຸປຣາດ ເມື່ອເຈົ້າຣາຊບຸດ ( ໂຍ້ ) ໄດ້ເປັນເຈົ້ານະຄອນຈຳປາສັກ ແລ້ວກໍໄດ້ສ້າງກຳແພງເມືອງຈຳປາສັກ ໃຫ້ຂຸດຄູອ້ອມເມືອງ ແລະ ສ້າງກຳແພງວັງຂຶ້ນ- ໃໝ່ - ສ້າງຫໍພຣະແກ້ວ ຂຶ້ນໃຫ້ເປັນບ່ອນຖືນ້ຳ ທົງໃຫ້ສ້າງເມືອງຄັນເກີງ ເປັນປ້ອມສຳຫລັບປ້ອງກັນສັດຕູ.

ຄ.ສ. ໑໘໒໕ ພຣະພຸທເລີດຫລ້ານະພາລັຍ ພຣະເຈົ້າແຜ່ນດິນ - ສຍາມ ຣັຊການທີ ໒ ໄດ້ສເດັດສູ່ຣະຄົດ ພຣະນັ່ງເກົ້າເຈົ້າຢູ່ຫົວ ໄດ້ຂຶ້ນສເວີຍຣາຊແທນ ເມື່ອງໃນງານປົງສົບນີ້ ພຣະເຈົ້າອະນຸວົງ ໄດ້ລົງໄປກຣຸງເທພ ພຣະອົງພາບ່າວໄພ່ເສນາ ຂ້າຣາຊການຂອງພຣະອົງ ລົງໄປນຳເປັນອັນມາກ ເພື່ອຢາກໃຫ້ພວກ ທ້າວພຣະຍາເສນາອາມາດ ຂອງພຣະອົງ ໄດ້ໄປເຫັນການເປັນໄປຂອງບ້ານເມືອງສຍາມເວລານັ້ນ.

ພຣະເຈົ້າແຜ່ນດິນສຍາມ ອົງໃຫມ່ ໄດ້ໃຫ້ຄົນລາວ ໄປຕັດຕົ້ນຕານທີ່ເມືອງສຸພົນບຸຣີ ແກ່ລົງໄປໄວ້ເມືອງສມຸດປຣາການ ເປັນອັນມາກ ສ່ວນພຣະເຈົ້າມັນທາຕຸຣາດ ເຈົ້າແຜ່ນດິນນະຄອນຫລວງພຣະບາງ ພຣະອົງໄດ້ມອບວນບ້ານເມືອງ ໃຫ້ພວກເສນາອາມາດ ຢູ່ຮັກສາ ແລ້ວພຣະອົງກໍຕົກແຕ່ງ **ດອກໄມ້ເງິນ** ຄຳ ລົງໄປຄຳນັບສົບ ພຣະເຈົ້າແຜ່ນດິນສຍາມອົງທີ ໒ ທີ່ບາງກອກ ແລ້ວຂໍອະນຸຍາດ ບວດຕໍ່ຫນ້າສົບ ຈົນອອກວັດສາແລ້ວ ຈຶ່ງສິກ ປີ ຄ.ສ. ໑໘໒໖ ຈຶ່ງສະເດັດກັບຄືນມາຄອງເມືອງຕາມເດີມ ໃນເວລາ ທີ່ພຣະເຈົ້າອະນຸ ປະທັບຢູ່ບາງກອກນັ້ນ ຕາມຈົດຫມາຍເຫດ ຂອງທູດອັງກິສ ທີ່ມາຢ່າມບາງກອກ ເວລານັ້ນ ບັນທຶກໄວ້ວ່າ "ພຣະເຈົ້າອະນຸ ໄດ້ໄປຫາທູດອັງກິສ ເຖິງທີ່ພັກ ພຣະອົງຄົງຈະຢາກຊາບຄວາມປະສົງຂອງອັງກິສ ວ່າອັງກິສຈະເຂົ້າຍຶດເອົາພາກໃຕ້ຂອງສຍາມຫລືບໍ່ ຫລາຍກ່ອນມີຄວາມປະສົງຢ່າງອື່ນ".

ເມື່ອພຣະເຈົ້າອະນຸ ຈະສະເດັດຈາກກຣຸງເທພ ກັບຄືນສູ່ນະຄອນວຽງຈັນນັ້ນ ພຣະອົງໄດ້ຂໍ :

ພຣະແກ້ວມໍຣະກົດ ໑ -
ພວກລະຄອນຜູ້ຍິງທີ່ຢູ່ໃນວັງ ໑ -
ເຈົ້າຍິງດວງຄຳ ເຊິ່ງເປັນເຈົ້າລາວ ໑-

ແລະຂໍຄອບຄົວລາວວຽງຈັນ ທີ່ຖືກກວດໄປຢູ່ເມືອງສະຣະບູຣີ ເພື່ອເອົາຂຶ້ນມາໄວ້ວຽງຈັນ ພຣະອົງໄດ້ຂໍຕໍ່ ພຣະເຈົ້າແຜ່ນດິນສຍາມ ແຕ່ບໍ່ສົມຫວັງຈັກຢ່າງ ທຳໃຫ້ພຣະເຈົ້າອະນຸ ຂົມຄຽດ ໃຫ້ສຍາມຕື່ມທະວີຂຶ້ນອີກ.

ຄ.ສ. ໑໘໒໗ ພຣະເຈົ້າອະນຸວົງ ຕົກລົງພຣະທັຍ ຈະທຳການກູ້ເອກຣາດ ຫລັງຈາກພຣະອົງ ສເດັດກັບຈາກງານປົງສົບ ພຣະເຈົ້າແຜ່ນດິນສຍາມ ທີ່ບາງກອກ ພຣະອົງໄດ້ແຕ່ງຣາຊທູດ ຄື ພຣະຣາຊສານ ໄ ຖວາຍພຣະເຈົ້າມັນທາຕຸຣາດ ເຈົ້າແຜ່ນດິນນະຄອນຫລວງພຣະບາງ ຊັກຊວນໃຫ້ຮ່ວມມືທຳການກູ້ຊາດ ພຣະເຈົ້າມັນທາຕຸຣາດ ກໍສແດງອາການ - ເໝືອນ ຈັກຮ່ວມມື ແຕ່ພໍຣາຊທູດກັບແລ້ວ ພຣະເຈົ້າແຜ່ນດິນເມືອງຫລວງພຣະບາງ ກໍແຕ່ງໃຫ້ເຈົ້າ ສຸກຂະເສີມ ພຣະຣາຊໂອຣົດລົງໄປກຣຸງເທພ ທູນເຫດການໃຫ້ພຣະເຈົ້າແຜ່ນດິນສຍາມຊາບ ທາງສຍາມຈຶ່ງຮູ້ຕົວ ແລະປ້ອງກັນທັນ ຝ່າຍສົມເດັດພຣະເຈົ້າອະນຸວົງ ໄດ້ຈັດກອງທັບໃຫຍ່ ໔ ກອງ ໃຫ້ໄປຊຸມນຸມພົນ ທີ່ເມືອງນະຄອນຣາຊສີມາ ຄື ກອງທັບຂອງເຈົ້າມຫາອຸປຣາດຕິສະ ໃຫ້ຍົກໄປກ້ຽວກ່ອມ ຫົວເມືອງລາວຕ່າງໆ ທີ່ແຕກແຍກອອກໄປ ຈາກອານາຈັກລ້ານຊ້າງຮີ່ມຂາວວຽງຈັນ ແຕ່ຄາວທີ່ເກີດການວຸ້ນວາຍຢູ່ນັ້ນ ຫົວເມືອງພວກນີ້ ໄດ້ໄປຂໍສມັກຂຶ້ນກັບສຍາມ ເພື່ອໂຮມກຳລັງກັນຕໍ່ສູ້ເອົາເອກຣາດ ໃນບັນດາຫົວເມືອງທັງຫມົດ ມີເຈົ້າເມືອງ ກາລະສິນ ເມືອງຄຽວ ທີ່

ບໍ່ຍອມຮ່ວມມື ເຈົ້າອຸປຣາດຕິສະ ຈຶ່ງຂ້າເສັຽ ພາຍລູນມາ ເຈົ້າອຸປຣາດຕິສະ ໄດ້ທັກຫລັງພຣະເຈົ້າອະນຸ ໂດຽເຜີຍຄວາມລະຫັດໃຫ້ຂ້າຫລວງສຍາມທີ່ຂຶ້ນມາຣາຊການ ຢູ່ຫົວເມືອງລາວຟັງ ເພາະຫວັງຈະໄດ້ເປັນພຣະເຈົ້າແຜ່ນດິນ ນະຄອນວຽງຈັນເມື່ອແລ້ວເສິກ.

ກອງທັບຂອງເຈົ້າຣາຊບຸດ (ໂຍ້) ເຈົ້ານະຄອນຈຳປາສັກ ນັ້ນ ພຣະເຈົ້າອະນຸ ຫົງໃຫ້ໄປກວດຄົວຫົວເມືອງລາວຕ່າງໆ ທາງທິດຕາເວັນຕົກ ຂອງນະຄອນຈຳປາສັກ ມີເມືອງອຸບົນ ເມືອງສີສະເກດ ແລະ ຫົວເມືອງອື່ນໆ ແລ້ວຍົກກອງທັບລົງໄປໂຮມກັນທີ່ເມືອງນະຄອນຣາຊສີມາ.

ສ່ວນກອງທັບຂອງເຈົ້າຣາຊວົງ (ເຫງົ້າ) ນັ້ນຫົງໃຫ້ເປັນກອງທັບໜ້າ ຍົກກາຍເມືອງນະຄອນຣາຊສີມາ ລົງໄປຮອດເມືອງສະຣະບູຣີ ເຈົ້າຣາຊວົງຕົວະ ກົມການເມືອງນະຄອນຣາຊສີມາວ່າ "ຈະລົງໄປຊ່ອຍທາງກຣຸງເທພ ຕີກອງທັບອັງກິສ" ເມື່ອກອງທັບຂອງເຈົ້າຣາຊວົງ ລົງໄປຮອດເມືອງສະຣະບູຣີ ກໍໄດ້ຮັບເອົາຄົວລາວ ຊາວເມືອງສະຣະບູຣີ ທີ່ - ສຍາມ ກວດລົງໄປໄວ້ແຕ່ຄາວຍົກກອງທັບຂຶ້ນມາຕີເມືອງ ລາວຄັ້ງກ່ອນຂຶ້ນມາທາງເມືອງນະຄອນຣາຊສີມາ.

ກອງທັບຫລວງຂອງສົມເດັດພຣະເຈົ້າອະນຸ ໄດ້ເດີນທັບເຂົ້າຍຶດເອົາເມືອງນະຄອນຣາຊສີມາ ຢ່າງສດວກ ພຣະອົງສັ່ງໃຫ້ເອົາຄົວເມືອງນະຄອນຣາຊສີມາ ຂຶ້ນມາໄວ້ ນະຄອນວຽງຈັນ ໃຫ້ໝົດ ເພື່ອຈະບໍໃຫ້ມີການເປັນຫ່ວງທາງຫລັງ.

ເນື່ອງຈາກ ເຈົ້າຊຸປຣາດຕິສະ ໄດ້ເພີຍຄວາມລັບຕໍຂ້າຫລວງສຍາມ ໃນເຣື້ອງທີ່ພຣະເຈົ້າອະນຸ ຈະຍົກກອງທັບລົງໄປຕີກຣຸງເທພ ສຍາມຈຶ່ງໄຫວທັນ ແລະ ຕຽມປ້ອງກັນເມືອງຢ່າງສາມາດ ພ້ອມກັບເກນກອງທັບຫົວເມືອງປະເທດຣາດຕ່າງໆ ເພື່ອຂຶ້ນມາຕີ ກອງກັບພຣະເຈົ້າອະນຸ.

ກ່າວເຖິງຄົວເມືອງນະຄອນຣາຊສີມາ ທີ່ກອງທະຫານລາວວຽງຈັນ ອັນມີເພັຽຣາມພິຊັຍ ເປັນແມ່ກອງຄຸມຄົວຊາວເມືອງ ຂຶ້ນມາວຽງຈັນນັ້ນພໍເດີນທາງມາເຖິງທົ່ງສຳຣິດ ເມືອງພິມາຍ ກໍຕັ້ງຄົວພັກແຮມຄືນ ພວກຫົວໜ້າຄົວຊາວເມືອງນະຄອນຣາຊສີມາ ໄດ້ອອກອຸບາຍເກືອເຫລົ້າພວກນາຍຄຸມ ຈົນເມົາຫລັບໄຫລ ແລ້ວເຂົ້າຍາດແຍ່ງເອົາອາວຸດ ຂ້າພວກນາຍຄຸມຕາຍລົງເກືອບໝົດ ໂຣມທັງເພັຽຣາມພິຊັຍ ຫົວໜ້າແມ່ກອງຄຸມຄົວນຳ - ພຣະເຈົ້າອະນຸ ໄດ້ສົ່ງກອງທະຫານໄປຜາບ ແຕ່ພວກຄົວເມືອງນະຄອນຣາຊສີມາ ຕັ້ງຄ້າຍໄດ້ແລ້ວ ຈຶ່ງຕໍ່ສູ້ຢ່າງ ແຂງແຮງ ກອງທະຫານບໍສາມາດຈະຜາບໄດ້ ກໍຖອຍໄປຫາກອງທັບໃຫຍ່.

ຝ່າຍເຈົ້າຣາຊວົງ ທີ່ພາຄົວລາວຊາວເມືອງ ສະຣະບູຣີ ຂຶ້ນມາຮອດເມືອງນະຄອນຣາຊສີມາ ກໍໄດ້ເຂົ້າເຝົ້າພຣະເຈົ້າອະນຸ ທູນເຖິງເຣື່ອງທີ່ສຍາມ ກຳລັງຍົກກອງທັບໃຫຍ່ ຂຶ້ນມາຕາມສາຍທາງຕ່າງໆ.

ສົມເດັດພຣະເຈົ້າອະນຸ ຈຶ່ງສັ່ງຊຸຍທັບຕາມຍຸທວິຖີການຕັ້ງຮັບຂ້າເສິກ ພຣະອົງທົງເລືອກເອົາເມືອງຫນອງບົວລຸ່ມພູ ເປັນບ່ອນຕັ້ງຮັບຂ້າເສິກ ສ່ວນກອງທັບເຈົ້າຣາຊວົງ ເມື່ອປ່ອຍຄົວລາວເມືອງສະຣະບູຣີໄວ້ແລ້ວ ກໍຍົກໄປຕັ້ງຮັບຢູ່ເມືອງລົ່ມ ພຣະເຈົ້າອະນຸ ທົງໃຫ້ພຣະຍາສູໂພ ແລະພຣະຍາຊານົມ ຕັ້ງຄ້າຍຢູ່ພູເຂົ້າສານ ບ່ອນນຶ່ງ ພຣະຍານະຣິນ ຕັ້ງຄ້າຍຢູ່ຫນອງບົວບ່ອນນຶ່ງ ທົງໃຫ້ພຣະຍາຊຽງສາ ຕັ້ງຄ້າຍຢູ່ສະຫນົມ ແລະໃຫ້ພຣະຍາກອງຄຳ ຕັ້ງຄ້າຍຢູ່ຊ່ອງວົວແຕກ ສ່ວນພຣະອົງ ຕັ້ງທັບຢູ່ເທິງພູເຂົ້າສານ ເວລານັ້ນກອງທັບຂອງເຈົ້າຊຸປຣາດຕິສະ ຕັ້ງຢູ່ເມືອງສູວັນນະພູມ.

ກ່າວເຖິງກອງທັບສຍາມ ເມື່ອສຍາມເກນກອງທັບ ທົວເມືອງຝ່າຍໃຕ້ ຝ່າຍເຫນືອ ໄດ້ພ້ອມແລ້ວ ກົມພຣະຣາຊວົງບໍວອນ ແມ່ທັບໃຫຍ່ສຍາມ ກໍຍົກຂຶ້ນມາທາງເມືອງສະຣະບູຣີ ດົງພຣະຍາໄຟ ເພື່ອເຂົ້າຕີທັບພຣະເຈົ້າອະນຸ.

ກອງທັບມອນ ແມ່ທັບຊື່ ພຣະຍາ ມຫາໂຍທາ ຍົກຂຶ້ນມາ ທາງດົງພຣະຍາກາງທັບສຍາມອີກກອງນຶ່ງ ຍົກມາທາງເມືອງພິສນຸໂລກ ເພື່ອເຂົ້າຕີກອງທັບເຈົ້າຣາຊວົງ ທາງເມືອງລົ່ມ ທັບສຍາມອີກທັບນຶ່ງຍົກ ຂຶ້ນມາທາງເມືອງປຣາຈີນ ເມືອງປະຈັນຕະຄາມ ຂຶ້ນມາທາງເມືອງສຸຣິນ ກອງນຶ່ງ ຍົກມາທາງເມືອງພັດຕຳບອງກອງນຶ່ງ ເປັນ໔ ທັບເພື່ອເຂົ້າຕີ ກອງທັບເຈົ້າອຸປຣາດຕິສະ ທີ່ຕັ້ງຢູ່ເມືອງສຸວັນນະພູມ.

ເດືອນ ໕ ແຮມ ຄ.ສ. ໑໘໒໗ ກອງທັບຫລວງສຍາມ ຍົກຂຶ້ນມາເຖິງເມືອງ ນະຄອນຣາຊສີມາ ແມ່ທັບໃຫຍ່ສຍາມ ຈຶ່ງໃຫ້ພຣະ ຍາຣາດສຸພາວະດີ ເປັນແມ່ທັບ ຍົກທັບແຍກໄປທາງເມືອງຈຳປາສັກ ທັບ ສຍາມ ກອງນີ້ໄດ້ປະທະກອງທັບລາວ ຂອງເຈົ້າໂຖງ ຢູ່ເຂດເມືອງພິມາຍ ເຈົ້າໂຖງ ໄດ້ພາທະຫານຕໍ່ສູ້ຂ້າເສິກຢູ່ຫລາຍວັນ ແຕ່ເນື່ອງຈາກຂ້າເສິກ ມີກຳລັງຫລາຍກວ່າ ຈຶ່ງຖອນກອງທັບມາທາງເມືອງ ສຸວັນນະພູມ ຫາເຈົ້າ ອຸປຣາດຕິສະ ກອງທັບສຍາມຈຶ່ງຕິດຕາມມາທາງເມືອງຂອນແກ່ນ.

ຝ່າຍທາງເມືອງໜອງບົວລຸ່ມພູ ແມ່ທັບໃຫຍ່ຂອງສຍາມໄດ້ ແຕ່ງແມ່ທັບ ຄຸມຄົນໂທດ ເປັນກອງໂຈນມີກຳລັງປະມານ ໘.໔໐໐ ຄົນ ເຂົ້າຕີຄ້າຍພຣະຍານະຣິນ ພຣະຍານະຣິນ ແມ່ທັບລາວ ມີທະຫານແຕ່ -

໓.໐໐໐ ຄົນ ແຕ່ເຖິງຢ່າງນັ້ນ ກໍພາທະຫານຕໍ່ສູ້ຂ້າເສິກຢູ່ໄດ້ເຖິງ ໔ ວັນ ແມ່ທັບຊັ້ນຜູ້ໃຫ່ຍ ຂອງຂ້າເສິກ ຖືກຂ້າຕາຍໄປຫລາຍຄົນ ໃນທີ່ສຸດ ນ້ຳນ້ອຍ ຍ່ອມບໍ່ແພ້ໄຟ ກອງທັບພຣະຍານະຣິນ ກໍແຕກ ຕົວພຣະຍານະຣິນ ຖືກສຍາມ ຈັບໄດ້ ຄັ້ງແຣກແມ່ທັບໃຫ່ຍຂອງສຍາມ ຈະຊູບລ້ຽງພຣະຍານະຣິນ ໄວ້ໃນ ກອງທັບສຍາມ ເພາະແມ່ທັບສຍາມເຫັນວ່າ ພຣະຍານະຣິນ ເປັນແມ່ທັບທີ່ ເຂັ້ມແຂງ ແລະ ກ້າຫານໃນການເສິກສົງຄາມ ແຕ່ພຣະຍານະຣິນເປັນຊາຍ ຊາດທະຫານແທ້ ຈຶ່ງບໍ່ຍອມເອົາກຽດ ແລະສັກສີ ຂອງທະຫານລາວໄປແລກ ກັບຊີວິດ ແລະ ລາບຍົດຂອງໂຕເອງ ພຣະຍານະຣິນ ໄດ້ອໍຕາຍຢ່າງຊາຍ ຊາດທະຫານ ແມ່ທັບໃຫ່ຍ ຂອງສຍາມ ຈຶ່ງໄດ້ເອົາຊ້າງແທງພຣະຍານະຣິນ ຕາຍ.

ເມື່ອກອງທັບສຍາມ ຕີຄ້າຍພຣະຍານະຣິນໄດ້ແລ້ວ ຈຶ່ງຍົກກອງ ທັບຂຶ້ນມາຕັ້ງຢູ່ທົ່ງສົ້ມປ່ອຍ ໄກຈາກຊ່ອງເຂົ້າສານປະມານ ໑໐ ຫລັກກິໂລ ແມດ ສ່ວນກອງທັບຂອງເຈົ້າຣາຊວົງ ທີ່ຕັ້ງຢູ່ເມືອງລົ່ມ ໄດ້ຖືກກອງທັບຂ້າ ເສິກ ໓ ທັບ ຍົກເຂົ້າມາຕີພ້ອມກັນ ເຈົ້າຣາຊວົງ ໄດ້ພາທະຫານລາວລ້ານ ຊ້າງ ຕ້ານຢັນກັບຂ້າເສິກ ຢູ່ຫລາຍວັນ ແຕ່ເນື່ອງຈາກກຳລັງພົນນ້ອຍກວ່າ ຂ້າເສິກຫລາຍທົບ ເຈົ້າຣາຊວົງ ຈຶ່ງຖອຍທັບມາຫາພຣະເຈົ້າອະນຸ ທາງຊ່ອງ ເຂົ້າສານເມືອງໜອງບົວລຸ່ມພູ.

ເມື່ອສົມເດັດ ພຣະເຈົ້າອະນຸ ທົງຊາບວ່າ ຄ້າຍພຣະຍານະຣິນເສັຽແກ່ຂ້າເສິກແລ້ວ ຈຶ່ງແຕ່ງໃຫ້ພຣະຍາສຸໂພ ແລະ ພຣະຍາຊານົມ ຢູ່ຮັກສາຄ້າຍ ສ່ວນພຣະອົງ ພ້ອມດ້ວຍເຈົ້າຣາຊວົງ ເຈົ້າສຸດທິສານ ຟ້າວຄືນມາວຽງຈັນ ເພື່ອປ້ອງກັນພຣະນະຄອນ.

ຝ່າຍກອງທັບຂ້າເສິກ ທີ່ຕັ້ງຢູ່ທົ່ງສົມປ່ອຍ ໄດ້ຖືກກອງທັບລາວ ໔ ກອງທັບ ຄື ກອງທັບຂອງພຣະຍາຊຽງສາ ແລະ ກອງທັບຂອງພຣະຍາກອງຄຳ ຍົກເຂົ້າອັດລ້ອມໄວ້ ສ່ວນກອງທັບຂອງພຣະຍາສຸໂພ ແລະ ພຣະຍາຊານົມ ກໍຍົກເຂົ້າລ້ອມໄວ້ອີກດ້ານນຶ່ງ ເປັນ ໓ ດ້ານ ທະຫານຝ່າຍສຍາມ ບໍ່ກ້າອອກຕໍ່ສູ້ກັບທະຫານລາວ ຖືກທະຫານລາວ ລ້ອມໄວ້ອົດເຂົ້າລົ້ມຕາຍ ຄ້າຍຂ້າເສິກ ເກືອບຈະແຕກຢູ່ແລ້ວ ກອງທັບຂ້າເສິກອີກກອງນຶ່ງຍົກຂຶ້ນມາສົມທົບ ກໍຖືກກອງທັບລາວ ລ້ອມໄວ້ໄດ້ອີກ ພໍດີມີກອງທັບຝ່າຍ - ສຍາມກອງນຶ່ງ ແມ່ທັບຊື່ກົມຫມື່ນເສນີບໍຣິຣັກ ຍົກທະຫານເຂົ້າຕີກອງທັບລາວດ້ານຫລັງ ກອງທັບຂ້າເສິກທີ່ຖືກອັດລ້ອມ ຈຶ່ງຕີແຫກອອກໄດ້ ກອງທັບລາວຖືກຕີຂນາບ ຈຶ່ງແຕກແຍກໄປຄົນລະທາງ ພຣະຍາຊຽງສາ ພາທະຫານຖອຍໄປຕັ້ງຢູ່ໂພນຊຽງຫວັງ ແຄມຫ້ວຍຫລວງແຂວງເມືອງໂພນພິສັຍ.

ເນື່ອງຈາກວ່າ ເວລານັ້ນ ກຳລັງທະຫານຝ່າຍລາວເຮົາ ທີ່ຢູ່ນະຄອນວຽງຈັນ ມີນ້ອຍ ທະຫານສ່ວນຫລາຍ ຖືກສົ່ງໄປຕັ້ງຮັບຢູ່ ຕາມຈຸດ

ຍຸທສາດຕ່າງໆ ດັ່ງກ່າວແລ້ວ ເມື່ອພຣະເຈົ້າອະນຸ ທົງຊາບວ່າ ຄ້າຍທະຫານລາວ ທີ່ຕັ້ງຮັບຂ້າເສິກ ຢູ່ພູເຂົ້າສານແຕກແລ້ວ ພຣະອົງພ້ອມທັງແມ່ທັບຊັ້ນຜູ້ໃຫຍ່ ມີເຈົ້າຣາຊວົງເປັນຕົ້ນ ຈຶ່ງພາພຣະບໍຣິມວົງສານຸວົງ ສເດັດໄປຂໍຄວາມຊ່ວຍເຫລືອຈາກ ພຣະເຈົ້າແຜ່ນດິນແກວ ທີ່ເມືອງແງອານ.

ສົມເດັດພຣະເຈົ້າອະນຸ ສເດັດອອກຈາກວຽງຈັນໄປແລ້ວໄດ້ ໕ ວັນກອງທັບສຍາມ ຈຶ່ງຂຶ້ນມາເຖິງ ເມືອງພັນພ້າວ ທີ່ຢູ່ຄົນລະຝັ່ງຂອງກັບ ນະຄອນວຽງຈັນ ສ່ວນກອງທະຫານລາວ ທີ່ຫນີບໍ່ທັນ ເຫັນວ່າເປັນການຈວນຕົວແລ້ວ ກໍເຂົ້າອ່ອນຍອມຕໍ່ກອງທັບສຍາມ ພ້ອມທັງຖິ້ມຄວາມຮ້າຍໃຫ້ແກ່ເຈົ້າອະນຸ ຫາວ່າ ພຣະເຈົ້າອະນຸ ບັງຄັບໃຫ້ຕໍ່ສູ້ກັບກອງທັບສຍາມ ດັ່ງປາກົດໃນລາຍງານ ຂອງແມ່ທັບໃຫຍ່ສຍາມ ຕອນນຶ່ງກ່າວໄວ້ວ່າ "ຕີບ້ານເມືອງຄອບຄົວ ໄດ້ສັກເທົ່າໃດໆ ກໍໄມ່ມີກຳໄຣ ທຳກັບບ້ານເມືອງໄພ່ພົນຂອງເຮົາເອງທັງນັ້ນ" ແມ່ທັບສຍາມ ໔ ຄົນຄື , ກຣົມຫມື່ນນະເຣດໂຍທີ ແລະ ກຣົມຫມື່ນເສນີບໍຣິຣັກ ໄດ້ພາທະຫານຂ້າມຂອງ ມານະຄອນວຽງຈັນ ເມື່ອເກັບກວດເອົາຊັບສົມບັດ ໃນທ້ອງພຣະຄັງຫລວງ ແລະ ຕາມພຣະຣາຊວັງ ຫໍໂຮງ ຂອງເຈົ້ານາຍ ຕລອດຈົນຕາມບ້ານເຮືອນ ຂອງຣາສດອນຈົນຫມົດສ້ຽງແລ້ວ ກໍສັ່ງທະຫານໃຫ້ຕັດຕົ້ນໄມ້ ທີ່ຫມາກຜົນກິນໄດ້ຖິ້ມຫມົດແລ້ວເຜົາເມືອງ ບັງຄັບໃຫ້ຄົນລາວ ທີ່ຍັງຕົກຄ້າງຢູ່ ນະຄອນວຽງຈັນ ນັ້ນໃຫ້

ມ້າງເພກຳແພງເມືອງລົງຈົນໝົດ ນະຄອນວຽງຈັນ ຈຶ່ງເຫລືອແຕ່ຊາກ ຫໍໂຮງ ຂອງພຣະເຈົ້າແຜ່ນດິນ ແລະ ຊາກວັງຮ້າງຕັ້ງແຕ່ນັ້ນມາ.

<u>ຫ ມ າ ຍ ເ ຫ ດ</u> : ຕາມບັນທຶກຂອງທ່ານ ວັນວຸດທອບ ຣາຊທູດຂອງປະເທດໂຮນລັງ ທີ່ຂົ້ນມາຈເຣີນສັມພັນທະໄມຕຣີ ກັບພຣະເຈົ້າແຜ່ນດິນປະເທດລາວ ໃນສມັຍພຣະເຈົ້າສຸຣິຍະວົງສາ ທັມມິກະຣາດ ອັນເປັນສມັຍທີ່ນະຄອນວຽງຈັນ ກຳລັງຈເຣີນຮຸ່ງເຮືອງ ຢ່າງສູງສຸດ ໃນທຸກດ້ານນັ້ນ ປາກົດໃນບັນທຶກ ຂອງທ່ານຣາຊທູດ ວັນວຸດທອບ ຕອນນຶ່ງ ທີ່ກ່າວເຖິງເຣື້ອງຄວາມສວຍງາມ ຂອງນະຄອນວຽງຈັນໄວ້ວ່າ "ຖ້າຈະພັນລະນາເຖິງຄວາມສວຍງາມ ຂອງພຣະຣາຊວັງ ຫໍຜາສາດ ແລະ ວັດວາອາຣາມ ທີ່ມີຈຳນວນນັບຮ້ອຍວັດ ໃນນະຄອນວຽງຈັນແລ້ວ ຈະຕ້ອງຂຽນເປັນປຶ້ມຫົວນຶ່ງໃຫ່ຍໆ".

ກ່າວເຖິງກອງທັບອື່ນໆ ຂອງຝ່າຍລາວເຮົາ ແມ່ທັບໄດ້ພາທະຫານເຂົ້າອ່ອນຍອມ ຕໍ່ກອງທັບສຍາມ ເປັນສ່ວນຫລາຍ ເຊັ່ນກອງທັຍຂອງເຈົ້າອຸປຣາດຕິດສະ, ກອງທັບຂອງພະຍາຊຽງສາ, ເປັນຕົ້ນ. ຝ່າຍກອງທັບຫົວເມືອງຕ່າງໆ ຂອງລາວລ້ານນາ ທີ່ຕົກເປັນຫົວເມືອງຂຶ້ນ ຂອງສຍາມ ດັ່ງດຽວກັນ ລາວລ້ານຊ້າງ ມີກອງທັບເມືອງຊຽງໃໝ່,ກອງທັບເມືອງນ່ານ ປາກົດຕາມບັນທຶກຂອງແມ່ທັບ ສຍາມວ່າ "ກອງທັບຂອງຫົວເມືອງເຫຼົ່ານີ້ ບໍ່ໄດ້ເຕັມໃຈທີ່ຈະຊ່ວຍກອງທັບສຍາມເລີຍ ແຕ່ນັ້ນເຖິງຄາວທີ່ປະເທດລາວເຮົາ ຈັກຫລົ້ມຈົມ ພວກແມ່ທັບຫົວເມືອງເຫຼົ່ານີ້ ຈຶ່ງບໍ່ກ້າເຂົ້າຊ່ວຍ ກອງທັບຂອງພຣະເຈົ້າອະນຸ ຕໍ່ສູ້ກັບກອງທັບສຍາມ.

ກ່າວເຖິງເຫດການ ທາງນະຄອນຈຳປາສັກ ພອນເວລາທີ່ກອງທັບສຍາມຍົກທັບ ຂຶ້ນມາຮອດນະຄອນຣາຊສີມານັ້ນ ເຈົ້າຣາຊບຸດ (ໂຍ້) ເຈົ້າ ນະຄອນຈຳປາສັກ ເວລານັ້ນ ຕັ້ງທັບຢູ່ເມືອງສີສະເກດ ກໍສົ່ງຖອຍທັບຂຶ້ນມາທາງເມືອງອຸບົນ ແຕ່ພວກຊາວເມືອງອຸບົນ ໄດ້ກໍ່ການວຸ້ນວາຍຂຶ້ນ ເຈົ້າຣາຊບຸດ ຈຶ່ງຖອຍທັບໄປຍັງ ນະຄອນຈຳປາສັກ ສ່ວນເຈົ້າຮຸຍ ທີ່ຢູ່ນະຄອນຈຳປາສັກ ເວລານັ້ນ ໄດ້ຍົວະເຍົ້າໃຫ້ຣາສດອນຊາວເມືອງ ກໍ່ການຈະຣາຈົນ ເອົາໄຟເຜົາເມືອງ ເມື່ອເຈົ້າຣາຊບຸດ ຖອຍທັບມາຮອດ ຈຳປາສັກ ເຫັນວ່າຈະເຂົ້າເມືອງບໍ່ໄດ້ ຈຶ່ງພາທະຫານຄືນສມິດຂ້າມຂອງໄປ

ທາງຕາເວັນອອກ ເມື່ອກອງທັບສຍາມເຂົ້າເມືອງຈຳປາສັກໄດ້ແລ້ວ ເຈົ້າ
ຣູບ ຈຶ່ງແຕ່ງທະຫານ ນຳຈັບເຈົ້າຣາຊບຸດ ແລະ ພັກພວກມາໃຫ້ແກ່ແມ່ທັບ
ສຍາມ ເມື່ອກອງທັບສຍາມ ຍົກຂຶ້ນມາຮອດເມືອງພັນພ້າວແລ້ວ ກໍໄດ້ສົ່ງ
ເຈົ້າຣາຊບຸດ ແລະ ພັກພວກລົງໄປໄວ້ກຣຸງເທພ.

ກ່າວເຖິງກອງທັບສຍາມ ເມື່ອເກັບກວດເອົາຊັບສົມບັດ ຊ້າງ
ມ້າ ແລະ ຣິບໂຮມເອົາຄົວລາວ ໄດ້ຫລາຍແລ້ວ ກໍສັ່ງໃຫ້ກໍ່ເຈດີ ບັນຈຸພຣະ
ເສີມ ໄວ້ທີ່ເມືອງພັນພ້າວ ທາດນີ້ຖານກວ້າງ ៥ ວາ ສູງ ๒ ວາ ៨ ສອກ
ແລ້ວຈາຣຶກໄວ້ທີ່ເຈດີວ່າ "ເຈດີປາບວຽງ" ແລ້ວແມ່ທັບໃຫຍ່ສຍາມ ຈຶ່ງ
ແຕ່ງໃຫ້ ພຣະຍາຣາດສູພາວະດີ ກັບ ພວກລາວທີ່ເຂົ້າອ່ອນຍອມຕໍ່ ກອງ
ທັບສຍາມນັ້ນ ໃຫ້ຢູ່ເກັບກວດຣິບໂຮມ ເອົາຄົວລາວຕື່ມ ກຣົມພຣະຣາຊວັງ
ບໍວອນ ແມ່ທັບໃຫຍ່ສຍາມ ກໍເລີກທັບກັບຄືນ ເມື່ອເດືອນ ๒ ຄ.ສ. ໑๒໘ກ.

ເມື່ອພຣະຍາຣາດ ສູພາວະດີ ແມ່ທັບສຍາມ ເກັບກວດຣິບໂຮມ
ເອົາຄົວລາວໄດ້ຫລາຍແລ້ວ ກໍແບ່ງໄວ້ວຽງຈັນ ແຕ່ເລັກນ້ອຍ ນອກນັ້ນກໍ
ກວດຕ້ອນລົງໄປໄວ້ດິນສຍາມໝົດ ຄົນລາວທີ່ຖືກກອງທັບສຍາມກວດຕ້ອນ
ໄປເປັນຊະເລີຍ ໃນຄາວນີ້ບໍ່ຕ່ຳກວ່າແສນຄົນ ເມື່ອພຣະຍາຣາດສູພາວະດີ
ແມ່ທັບສຍາມເດີນທາງເຖິງກຣຸງເທພ ຈຶ່ງເຂົ້າເຝົ້າພຣະເຈົ້າແຜ່ນດິນສຍາມ

ພຣະເຈົ້າແຜ່ນດິນສຍາມ ຈຶ່ງຕັດສິ່ງວ່າ "ຕົວພຣະເຈົ້າອະນຸ ກໍຍັງຈັບບໍ່ໄດ້ ຈະກັບຄືນມາຕັ້ງບ້ານເມືອງອີກປະການໃດ ກໍຍັງບໍ່ແຈ້ງ ເມືອງວຽງຈັນນີ້ ບໍ່ຄວນເອົາໄວ້ ເປັນບ້ານ ເປັນເມືອງຕໍ່ໄປ ໃຫ້ກັບຄືນໄປມ້າງເພ ທຳລາຍ ເສັຽໃຫ້ກ້ຽງ ຢ່າໃຫ້ຕັ້ງເປັນບ້ານ, ເປັນເມືອງໄດ້."

ພຣະຍາຣາດສຸພາວະດີ ແມ່ທັບສຍາມ ຈຶ່ງນຳທະຫານຄືນມາອີກ ໃນເດືອນ ໘ ຄ.ສ. ໑໘໒໘ ແມ່ທັບສຍາມຂຶ້ນມາຮອດເມືອງໜອງບົວລຸ່ມພູ ຈຶ່ງແຕ່ງທະຫານສຍາມ ກອງນຶ່ງ ມີຄົນປະມານ ໕໐໐ ຂຶ້ນມາຕັ້ງຢູ່ເມືອງພັນພ້າວກ່ອນ ແລະ ມີທະຫານກອງນຶ່ງ ຂ້າມຂອງມາຕັ້ງຄ້າຍຢູ່ວັດກາງ (ຄືບ່ອນເພິ່ນປຸກ ໂຮງແຮມລ້ານຊ້າງໃສ່ເວລານີ້) ມີພົນປະມານ - ໓໐໐ ຄົນ.

ສົມເດັດພຣະເຈົ້າອະນຸ ປະທັບຢູ່ເມືອງແງ່ອານ ປະເທດແກວໄດ້ປະມານ ໑ ປີ ພຣະເຈົ້າແຜ່ນດິນວຽດນາມ ທົງໃຫ້ຄຳໝັ້ນສັນຍາ ກັບພຣະອົງວ່າ ຈະສົ່ງທູກ ຖືພຣະຣາຊສານ ພຣະເຈົ້າວຽດນາມ ໄປຂໍໂທດຕໍ່ກະສັດສຍາມ ທາງເຮືອໃຫ ພຣະອົງຈຶ່ງສເດັດກັບຄືນມາປະເທດລາວ.

ຄັນເມືອເດືອນ ໘ ແຮມ ເຈົ້າຣາຊວົງ ໄດ້ມີໜັງສືມາເຖິງພຣະຍາເມືອງຈັນ ພຣະຍາເມືອງຊ້າຍ ທີ່ແມ່ທັບສຍາມ ໃຫ້ຮັກສາວຽງຈັນວ່າ ພຣະເຈົ້າວຽດນາມໃຫ້ທະຫານແກວ ພາສົມເດັດພຣະເຈົ້າອະນຸ ແລະ

ເຈົ້າຣາຊວົງ ພ້ອມພຣະບໍຣົມວົງສານຸວົງ ມາສົ່ງທີ່ນະຄອນວຽງຈັນ ຍັງທາງອີກ ໔ ຄືນ ຈະມາເຖິງ ພຣະຍາລາວທັງ ໘ ຈຶ່ງສົ່ງໜັງສືໃຫ້ແມ່ທັບສຍາມ ເມື່ອພຣະຍາຣາດສຸພາວະດີ ໄດ້ຊາບດັ່ງນັ້ນ ກໍຟ້າວຍົກກອງທັບຂຶ້ນມາເມືອງພັນພ້າວ.

ເດືອນ ໗ ອອກໃໝ່ ສົມເດັດພຣະເຈົ້າອະນຸ ພ້ອມເຈົ້າຣາຊວົງກໍມາເຖິງເມືອງວຽງຈັນ ມີຄົນມານຳປະມານພັນປາຍ ທະຫານແກວ ໓໐ ຄົນ ພຣະເຈົ້າອະນຸ ໄດ້ໄປພັກຢູ່ທີ່ພຣະແກ້ວ.

ເດືອນ ໗ ອອກໃໝ່ ໒ ຄ່ຳ ພຣະຍາຣາດສຸພາວະດີຍົກທັບຂຶ້ນມາເຖິງເມືອງພັນພ້າວ ເວລານັ້ນກອງທະຫານຂອງພຣະເຈົ້າອະນຸ ໄດ້ຍົກກຳລັງເຂົ້າລ້ອມທະຫານສຍາມ ທີ່ຕັ້ງຄ້າຍຢູ່ວັດກາງ ສາຍເຫດມີຢູ່ວ່າ ພວກທະຫານລາວ ໄດ້ໄປຂໍເຂົ້ານຳພວກທະຫານໄທ ເພາະທະຫານໄທໄດ້ເກັບເຂົ້າໄປກັກ ໄວ້ໝົດ ແຕ່ທະຫານສຍາມສແດງການດູໝິ່ນຢຽບຢາມລາວ ແລະບໍ່ໃຫ້ເຂົ້າ ທະຫານໄທ ໓໐໐ ທີ່ຢູ່ວັດກາງຖືກຂ້າຕາຍ ທັນໄດ້ລອຍຂ້າມຂອງໜີໄປແຕ່ ໔໕ ຄົນ.

ພຣະຍາຣາດສຸພາວະດີ ແມ່ທັບໃຫຍ່ສຍາມໄດ້ພາທະຫານຫລົບໜີຈາກຄ້າຍພັນພ້າວ ລັດໄປເມືອງຍະໂສທອນ ໃນເວລາກາງຄືນໂດຍມີພຣະຍາຊຽງສາເປັນຜູ້ນຳທາງ ສົມເດັດພຣະເຈົ້າອະນຸ ໄດ້ໃຫ້ຄົນ

ໄປມ້າງເຈດີປາບອຽງເສັຽ ແລ້ວເອົາພຣະເສີມຄືນມາໄວ້ວຽງຈັນດັ່ງເກົ່າ.

ສ່ວນເຈົ້າຣາຊວົງ ໄດ້ພາທະຫານຕິດຕາມກອງທັບ ພຣະຍາຣາຊສຸພາວະດີ ໄປທັນຢູ່ບ້ານບົກຫວານນາຣີ ໄດ້ສູ້ຣົບກັນຈົນເຖິງອາວຸດສັ້ນ ແມ່ທັບຂອງທັງ ໒ ຝ່າຍ ໄດ້ຕໍ່ສູ້ກັນຕົວຕໍ່ຕົວ ເຈົ້າຣາຊວົງ ຈັດທອກແທງຖືກທ້ອງ ແມ່ທັບສຍາມບັດຕາຍໄປ ຫລວງພິພິດ ນ້ອງຊາຍແມ່ທັບສຍາມແລ່ນເຂົ້າມາ ແກ້ ເຈົ້າຣາຊວົງຟັນຫລວງພິພິດຕາຍຄາທີ່ ພໍດີທະຫານໄທ ຍິງປືນສູນມາໃສ່ ລູກປືນຖືກຫົວເຂົ່າເຈົ້າຣາຊວົງ ລົ້ມລົງ ທະຫານຝ່າຍລາວ ຈຶ່ງຫູ້ມເຂົ້າອູ້ມເອົາເຈົ້າຣາຊວົງ ຂຶ້ນແຄ່ຫາມຖອຍຄືນມາວຽງຈັນ.

ເມື່ອແມ່ທັບສຍາມ ພຣະຍາຣາດສຸພາວະດີ ຮູ້ເມື່ອຄວາມຄືນ ໄດ້ກວດເບິ່ງບາດແຜ ເຫັນວ່າບໍ່ເຂົ້າເລິກ ຈຶ່ງໃສ່ຢາ ແລ້ວໃຫ້ທະຫານຫາມ ຕິດຕາມເຈົ້າຣາຊວົງມາວຽງຈັນ ເຈົ້າຣາຊວົງ ຈຶ່ງປຶກສາກັບ ສົມເດັດ ພຣະເຈົ້າອະນຸ ຈະໜີໄປປະເທດແກວອີກ ເພາະເຫັນວ່າໄພ່ພົນລາວເຣົາ ເຫລືອນ້ອຍ ເມື່ອຕົກລົງກັນແລ້ວ ພຣະເຈົ້າອະນຸກໍສເດັດ ອອກຈາກວຽງຈັນ ໂດຍລັດໄປທາງນາຂົມນາງາ ເຂົ້າເຂດເມືອງຊຽງຂວາງ ສ່ວນເຈົ້າຣາຊວົງຂີ່ເຮືອ ລ່ອງຂອງໄປທາງເມືອງ ມຫາໄຊກອງແກ້ວ.

ຕົກເດືອນ ໑໔ ແຮມ ເຈົ້ານ້ອຍເມືອງຊຽງຂວາງ ແຈ້ງຄວາມມາເຖິງແມ່ທັບສຍາມ ທີ່ຢູ່ວຽງຈັນວ່າ ເຈົ້ານ້ອຍໄດ້ແຕ່ງທະຫານອອກຣາດຕາເວັນ ດ່ານທາງເຖິງກັນທຸກເຂດຕາແສງ ຖ້າເຫັນພຣະເຈົ້າອະນຸ ຂຶ້ນໄປຈະຈັບສົ່ງໃຫ້ ບໍ່ທັນໃຫ້ໜີໄປໄດ້ ຕໍ່ມາເຈົ້ານ້ອຍ ໄດ້ແຕ່ງໃຫ້ຄົນມາແຈ້ງແກ່ແມ່ທັບສຍາມ ທີ່ຢູ່ວຽງຈັນວ່າ ພໍ້ສົມເດັດພຣະເຈົ້າອະນຸ ແລະ ພຣະບໍຣົມວົງສານຸວົງ ຢູ່ນ້ຳໄຮ່ ເຂົາໄກ່. ໃຫ້ທະຫານ ໕໐ ຄົນຄູມໄວ້ ໃຫ້ແມ່ທັບສຍາມແຕ່ງຄົນຂຶ້ນໄປຈັບເອົາ ແມ່ທັບສຍາມ ຈຶ່ງໃຫ້ ພຣະຍາອິນທະເດດ ພຣະສຸພັນຊຽງສາ ຍົກກອງທະຫານ ໓໐໐ ຄົນ ຂຶ້ນໄປຈັບ ເມື່ອເດີນທາງໄປເຖິງຫາດເດືອຍ ພໍ້ກັບພຣະລັບ ແລະ ຫມານຂັດຕິຍະ ເມືອງນ່ານ ກັບທ້າວພົມມາ ເມືອງຫລວງພຣະບາງ ຄູມພຣະເຈົ້າອະນຸ ພຣະມະເຫສີ ພ້ອມໂອຣົດແລະທິດາ ພວມເດີນທາງມາ ຈຶ່ງພາກັນຄູມຕົວ ພຣະເຈົ້າອະນຸ ພຣະມະເຫສີ ໂອຣົດ ແລະ ທິດາ ລົງໄປກຣຸງເທພ ສຍາມໄດ້ທໍຣະມານ ພຣະເຈົ້າອະນຸ ຢ່າງແສນສາຫັດ ແລະ ພຣະອົງໄດ້ສ້ຽງພຣະຊົນ ຫລັງຈາກໄປເຖິງບາງກອກ ປະມານ ໗ - ໘ ວັນ ພຣະເຈົ້າອະນຸ ສ້ຽງພຣະຊົນເມື່ອເດືອນ ຍີ່ປີ ຄ.ສ. ໑໘໔໔ ອາຍຸພຣະອົງໄດ້ ໖໔ ປີ ເຊື້ອກະສັດວຽງຈັນ

ແລະ ສຍາມກໍໄດ້ຍຸບເລີກປະເທດຣາດ ວຽງຈັນໃນປີນີ້ເຫມືອນກັນ ບັນດາຫົວເມືອງຂຶ້ນຕ່າງໆ ອັນເຄີຍໂຮມຂຶ້ນກັບ ອານາຈັກ

ລ້ານຊ້າງຮົ່ມຂາວວຽງຈັນ ສຍາມກໍແຍກແຕ່ລະເມືອງໄປຂຶ້ນກັບກຣຸງເທບໂດຍຕົງຈົນຫມົດ ສ່ວນເມືອງວຽງຈັນອັນເປັນເມືອງຮ້າງແລ້ວນັ້ນ ສຍາມໄດ້ຕັ້ງໃຫ້ເພັຽສີ ເປັນຜູ້ຮັກສາເມືອງວຽງຈັນ ໂດຍຂຶ້ນກັບເມືອງຫນອງຄາຍ.

ຝ່າຍອານາຈັກຈຳປາສັກ ເມື່ອເຫດການທາງວຽງຈັນສງົບແລ້ວ ພຣະເຈົ້າແຜ່ນດິນສຍາມ ໄດ້ຕັ້ງເຈົ້າຮູຍ ເປັນເຈົ້ານະຄອນຈຳປາສັກ ເພາະເຈົ້າຮູຍ ໄດ້ຊ່ວຍແມ່ທັບສຍາມຈັບເຈົ້າຣາຊບຸດໂຍ້ ໄດ້ໃຫ້ເຈົ້ານາກເປັນເຈົ້າອຸປຣາດ ສຍາມໃຫ້ເຈົ້າຮູຍເສັຽສ່ວຍໃຫ້ສຍາມ ປີລະ ໑໐໐ ຊັ່ງ (໗.໐໐໐ ບາດສມັຍນັ້ນ.) ໂດຍໃຫ້ເກັບສ່ວຍຈາກຊາຍສະກັນ ຄົນລະ ໔ ບາດສະຫຼຶງ ສ່ວນຄົນຊະຣາຫຼືພິການເກັບສ່ວຍຄົນລະ ໒ ບາດສະຫຼຶງ ສ່ວນເຂົ້າເປືອກສ່ວຍເກັບຄືເກົ່າ ໃນສມັຍເຈົ້ານະຄອນຈຳປາສັກ ຮູຍນີ້ ສຍາມໃຫ້ນະຄອນຈຳປາສັກໄປຂຶ້ນຕໍ່ກຣຸງເທບໂດຍຕົງ ນອກຈາກນີ້ ຫົວເມືອງທີ່ຂຶ້ນຕໍ່ນະຄອນຈຳປາສັກ ສຍາມຍັງແຍກໃຫ້ໄປຂຶ້ນກັບກຣຸງເທບ ເຊັ່ນ :

໑.- ເມືອງໂຂງ ຕັ້ງເປັນເມືອງສີທັນດອນ ໃຫ້ພຣະສີຊຽງໄທ່ມ ເປັນພຣະອະພັຍ ຣາຊວົງສາ ປັນເຂດແດນຕໍ່ກັບເຂດນະຄອນຈຳປາສັກ ຄືທາງທິດຕາເວັນອອກ ແຕ່ບ້ານນ່ວງທາງນາ ຝັ່ງນ້ຳຂອງຕະເວັນຕົກ ແຕ່ບ້ານນາໂດນຂຶ້ນໄປເຖິງພູປະອາວ ຕັ້ງແຕ່ທາງດອນໄຊຂຶ້ນມາ ເປັນເຂດແດນນະຄອນຈຳປາສັກ.

໒.- ຕັ້ງເມືອງຄຳທອງໃຫ່ຍ ເປັນເມືອງຄຳທອງຫຼວງ ຕັ້ງທ້າວເຫົ້າເປັນພຣະສຸວັນ ຣາຊວົງສາ ເຈົ້າເມືອງຄຳທອງຫຼວງ ແຍກເອົາເມືອງດົງ ເມືອງສະພາດ ທີ່ຂຶ້ນຕໍ່ເມືອງຈຳປາສັກ ໃຫ້ໄປຂຶ້ນຕໍ່ເມືອງຄຳທອງຫຼວງ.

໓.- ໃຫ້ຕັ້ງເມືອງໜັ້ນ ເປັນເມືອງສາຣະວັນ ຕັ້ງໃຫ້ເພັຍເອກຣາຊາ ເປັນ ພຣະເອກຣາຊາ ເຈົ້າເມືອງສາຣະວັນ.

໔.- ຕັ້ງໃຫ້ທ້າວບຸນຈັນ ບຸດພຣະເທບວົງສາ (ກ່ຳ) ເຈົ້າເມືອງເຂັມຣາດ ເປັນພຣະເທບວົງສາ ເຈົ້າເມືອງເຂັມຣາດແທນພໍ່ ແຍກເອົາເມືອງໂຂງຈຽງ ເມືອງສະເມັຽະ ມາຂຶ້ນຕໍ່ເມືອງເຂັມຣາດ.

ປີ ຄ.ສ. ໑໘໓໔ ພຣະເຈົ້າແຜ່ນດິນສຍາມແຕ່ງໃຫ້ເຈົ້າພຣະຍາທັມມາທິບໍດີເປັນແມ່ທັບ ຍົກຂຶ້ນມາສົມທົບກັບກອງທັບເມືອງຫຼວງພຣະບາງ ອັນມີເຈົ້າອຸປຣາດ ອາໄພຍະຣາດເປັນແມ່ທັບ ຂຶ້ນໄປຕີແກວຢູ່ເມືອງຊຽງຂວາງ ຕີຊຽງຂວາງໄດ້ແລ້ວ ແມ່ທັບສຍາມແຕ່ງໃຫ້ເຈົ້າອຸ່ນແກ້ວເປັນແມ່ທັບ ເມືອງຫຼວງພຣະບາງຂຶ້ນໄປ ຕີເມືອງແຖງແລະ ເມືອງໄລໄດ້ທັງ ໒ ເມືອງ ແລ້ວຈຶ່ງຍົກທັບກັບຄືນນະຄອນຫຼວງພຣະບາງ.

ຄ.ສ. ໑໘໓໕ **ພຣະເຈົ້າມັນທາຕຸຣາດ ເຈົ້າແຜ່ນດິນນະຄອນຫຼວງ** ພຣະບາງສ້ຽງພຣະຊົນ ສຍາມຕັ້ງເຈົ້າອຸ່ນແກ້ວພຣະອະນຸຊາ ພຣະເຈົ້າມັນທາຕຸຣາດ ໃຫ້ເປັນຜູ້ຮັກສາການແຜ່ນດິນ ນະຄອນຫຼວງພຣະບາງ.

ຄ.ສ. ໑໘໓໗ ເກີດໄຟໄໝ້ນະຄອນຈຳປາສັກ ເຈົ້າຮູຍຈຶ່ງພາຣາສດອນອົພຍົບ ມາຕັ້ງເມືອງໃໝ່ຢູ່ບ້ານຫີນຮອດ,

ຄ.ສ. ໑໘໓໘ ເຈົ້າສຸກຂະເສີມ ໄດ້ຮັບອະພິເສກຂຶ້ນເປັນເຈົ້າແຜ່ນດິນເມືອງຫຼວງພຣະບາງ ເຈົ້າອຸ່ນແກ້ວ ເປັນເຈົ້າອຸປຣາດ ເຈົ້າຈັນທະຣາດເປັນເຈົ້າຣາຊວົງ ເຈົ້າແທ່ນຄຳເປັນເຈົ້າຣາຊບຸດ ແລະໃຫ້ເຈົ້າຣາຊພັຍ ເປັນເຈົ້າອະພັຍສຸຣິຍະວົງສາ ຕໍ່ມາເຈົ້າອະພັຍສຸຣິຍະວົງສາ ມີເຣື່ອງຕິດຕໍ່ກັບແກວ ພຣະເຈົ້າສຸກຂະເສີມ ຈຶ່ງຈັບສົ່ງລົງໄປກຸງເທບເລີຍ ເຖິງແກ່ກັມຢູ່ກຸງເທບນັ້ນເອງ.

ຄ.ສ. ໑໘໔໑ ເຈົ້າຮູຍ ເຈົ້ານະຄອນຈຳປາສັກ ເຖິງແກ່ກັມ ສຍາມໄດ້ຕັ້ງເຈົ້າອຸປຣາດ ນາກ ເປັນເຈົ້ານະຄອນຈຳປາສັກ ເຈົ້ານາກ ຈຶ່ງຕັ້ງ ເຈົ້າເສືອ ເປັນເຈົ້າອຸປຣາດ ໃຫ້ເຈົ້າເສັນ ເປັນເຈົ້າຣາຊວົງ ໃຫ້ ເຈົ້າສາ ເປັນເຈົ້າຣາຊບຸດ.

ຄ.ສ. ໑໘໔໗ ເກີດການວຸ້ນວາຍ ທາງເມືອງຊຽງຮຸ່ງ ເມືອງ ພົງ ເມືອງລາ ພຣະເຈົ້າສຸກຂະເສີມ ເຈົ້າແຜ່ນດິນ ນະຄອນຫລວງພຣະ - ບາງ ໃຫ້ກອງທະຫານຂຶ້ນໄປຜາບ ແລະ ໄດ້ຮັບເຈົ້າອຸປຣາດ ເມືອງຊຽງ ຮຸ່ງ ກັບຄອບຄົວມາໄວ້ ເມືອງຫລວງພຣະບາງ.

ຄ.ສ. ໑໘໕໐ ພຣະເຈົ້າສຸກຂະເສີມ ໄດ້ສເດັດສູຣະຄົດ ພຣະ ຊົນໄດ້ ໕໖ ປີ ຢູ່ໃນຣາຊສົມບັດ ໑໔ ປີ.

ຄ.ສ. ໑໘໕໑ ເຈົ້ານາກ ເຈົ້ານະຄອນຈຳປາສັກ ລົງໄປກຣຸງເທພ ເລີຍປ່ວຍເປັນພະຍາດ ອະຫິວາ ເຖິງແກ່ກັມຢູ່ກຣຸງເທພນັ້ນເອງ.

ຄ.ສ. ໑໘໕໔ ພຣະເຈົ້າແຜ່ນດິນສຍາມ ຕັ້ງເຈົ້າຈັນທະຣາດ (ໂອຣົດຂອງເຈົ້າມັນທາຕຸຣາດ ອົງທີ ໔ ) ໃຫ້ຂຶ້ນເປັນພຣະເຈົ້າແຜ່ນດິນ ນະຄອນຫລວງພຣະບາງ.

ພຣະເຈົ້າຈັນທະຣາດ ຈຶ່ງຕັ້ງ ເຈົ້າອຸ່ນຄຳ (ພຣະອະນຸຊາຂອງ ພຣະອົງເອງ) ໃຫ້ເປັນເຈົ້າອຸປຣາດໃຫ້ເຈົ້າຄຳບົວ ເປັນເຈົ້າຣາຊວົງ.

ຄ.ສ. ໑໘໕໓ ພຣະເຈົ້າແຜ່ນດິນສຍາມ ຈິ່ງຕັ້ງເຈົ້າບົວ ໃຫ້ເປັນເຈົ້ານະຄອນຈຳປາສັກ ແຕ່ເຈົ້າບົວ ບໍ່ໄດ້ມາຄອງເມືອງ ເກີດອາພາດເຖິງແກ່ກັມຢູ່ກຣຸງເທພນັ້ນເອງ ແລະໃນປີດຽວກັນນີ້ເອງ ສຍາມໄດ້ເກນກອງທັບເມືອງຫລວງພຣະບາງ ສົມທົບກັບກອງທັບສຍາມຂຶ້ນ ໄປຕີເມືອງຊຽງຕູງ ພຣະເຈົ້າຈັນທະຣາດ ແຕ່ງໃຫ້ ເຈົ້າສີຣິສາ ເປັນແມ່ທັບ ກັບເຈົ້າຄຳມ້າວ ມີພົນ ໓.໐໐໐ ຄົນ ເຈົ້າສີຣິສາ ເສັຽຊີວິດ ໃນສນາມຣົບເຈົ້າຄຳມ້າວ ຫາຍສາບສູນໄປ ໃນຣັຊການຂອງພຣະເຈົ້າ ຈັນທະຣາດນີ້ໄດ້ເກີດເຫດການວຸ້ນວາຍ ຢູ່ເມືອງຊຽງຮຸ່ງ ປະມານ ໕ ປີ ເຫດການຈຶ່ງສງົບ.

ຄ.ສ. ໑໘໕໕ ພຣະເຈົ້າແຜ່ນດິນສຍາມ ຈິ່ງຕັ້ງເຈົ້າຄຳໃຫຍ່ (ບຸດເຈົ້າຮູຍ) ເປັນເຈົ້ານະຄອນຈຳປາສັກ ຂນານ ນາມວ່າ ເຈົ້າຍຸຕິທັມທອນເຈົ້າ ນະຄອນຈຳປາສັກ ອົງນີ້ໃຫ້ເຈົ້າອູ ເປັນເຈົ້າອຸປຣາດ ເຈົ້າຫມີ -ເປັນເຈົ້າຣາຊວົງ ໃຫ້ເຈົ້າອິນທະຊິດ ເປັນເຈົ້າຣາຊບຸດ ໃຫ້ເຈົ້າສຸຣິຍະເປັນເຈົ້າສີສຸຣາດ ເຈົ້າຍຸຕິທັມທອນ ຄອງເມືອງໄດ້ ໔ ປີກໍເຖິງແກ່ກັມ.

ເຖິງປີ ຄ.ສ. ໑໘໖໔ ພຣະເຈົ້າແຜ່ນດິນສຍາມ ຈິ່ງຕັ້ງເຈົ້າຄຳສຸກ(ບຸດຂອງເຈົ້າຮູຍ) ຂຶ້ນເປັນເຈົ້ານະຄອນຈຳປາສັກ ຂນານນາມວ່າ ເຈົ້າຍຸຕິທັມທອນ ຕັ້ງເຈົ້າແສງ ເປັນເຈົ້າອຸປຣາດ ໃຫ້ເຈົ້າຫນໍ່ຄຳ (ຫລານພຣະເຈົ້າອະນຸ) ເປັນເຈົ້າຣາຊວົງ.

ເຖິງ ຄ.ສ. ໑໘໖໓ ເຈົ້າຍຸຕິທັມທອນ (ຄຳສຸກ) ຈຶ່ງຍ້າຍເມືອງ ຈາກເມືອງເກົ່າຫີນຮອດ ໄປຕັ້ງເມືອງຢູ່ຣະຫວ່າງໂພນປີກ ແລະວັດລະຄອນ ຣິມຝັ່ງຂອງທາງຕາວັນຕົກ ໃຫ້ເປັນນະຄອນຈຳປາສັກ ຕໍ່ມາຈົນເຖິງປັດຈຸບັນ.

<u>ໝ າ ຍ ເ ຫ ດ</u>(໑)ຄ.ສ. ໑໘໖໔ ຝຣັ່ງໄດ້ແກວໄຕ້ເປັນຫົວເມືອງຂຶ້ນ ໂດຍພຣະເຈົ້າຕືດຶກ ພຣະເຈົ້າແຜ່ນດິນແກວໃຕ ໄດ້ລົງພຣະນາມສັນຍາກັບນາຍພົລເຮືອ ຊາແນ ຂອງຝຣັ່ງ.

<u>ໝ າ ຍ ເ ຫ ດ</u> ( ໔ ) ຄ.ສ. ໑໘໖໓ ອົງພຣະນະໂຣດົມ ພຣະເຈົ້າແຜ່ນດິນປະເທດຂເມນ ໄດ້ເຊັນສັນຍາຍອມ ຢູ່ໃນອາຣັກຂາຂອງຝຣັ່ງ ສັນຍາໄດ້ລົງນາມເມື່ອ ວັນທີ ໑໑ ສິງຫາ ຄ.ສ. ໑໘໖໓.

ຄ.ສ. ໑໘໖໖ ພຣະເຈົ້າຈັນທະຣາດ ເຈົ້າແຜ່ນດິນນະຄອນຫລວງພຣະບາງ ໄດ້ຂໍພຣະບາງຄືນມາຈາກສຍາມ ມາໄວ້ທີ່ນະຄອນຫລວງພຣະບາງ.

ຄ.ສ. ໑໘໖໗ ສຍາມ ໄດ້ລົງລາຍເຊັນ ຍອມຮັບຮູ້ການອາຣັກຂາ ຂອງຝຣັ່ງຕໍ່ ປະເທດສຂເມນ ສ່ວນຫົວເມືອງ ຂເມນຊັ້ນໃນ ຄືເມືອງພຣະຕະບອງ (ພັດຕັມບອງ) ເມືອງສຽມຣາບ ແລະເມືອງສີໂສພົນ ໂຮມເທິງ ນະຄອນວັດ ແລະນະຄອນທົມ ຍັງຢູ່ໃຕ້ການປົກຄອງຂອງສຍາມຕໍ່ມາ. ແລະໃນປີດຽວກັນນີ້ (ຄືປີ ໑໘໖໗) ລຸນຫລັງຈາກນະຄອນວຽງຈັນ ຖືກກອງທັບສຍາມ ທຳລາຍມ້າງເພ ຈົນເປັນເມືອງຮ້າງມາໄດ້ ໓໙ ປີ ຄນະກອງສຳຣວດແມ່ນ້ຳຂອງຊາດຝຣັ່ງ ອັນມີ ທ່ານດູດຣາ ເດຣາເກຣ ເປັນຫົວຫນ້າຄນະ ນັກສຳຣວດ ໄດ້ເດີນທາງຂຶ້ນມາເຖິງ ນະຄອນວຽງຈັນ (ສຳລັບທ່ານ ທີ່ສົນໃຈ ກ່ຽວກັບ ເມືອງວຽງຈັນ ຫລືສະພາບຂອງນະຄອນວຽງຈັນ ໃນສມັຍເປັນເມືອງຮ້າງແລ້ວ ເຊີນຊອກອ່ານຈາກຣາຍງານບັນທຶກ ຂອງນັກສຳຣວດ ຄນະນີ້ )

ຄ.ສ. ໑໘໗໔ ພຣະເຈົ້າຈັນທະຣາດ ເຈົ້າແຜ່ນດິນນະຄອນຫລວງພຣະບາງສ້ຽງພຣະຊົນ ພຣະເຈົ້າແຜ່ນດິນສຍາມ ໂຜດໃຫ້ເຈົ້າອຸ່ນຄຳ ຂຶ້ນສເວີຍຣາດ ເປັນພຣະເຈົ້າແຜ່ນດິນ ເມືອງຫລວງພຣະບາງ ເມື່ອ ຄ.ສ. ໑໘໗໔ ນັ້ນເອງ ຖວາຍພຣະນາມວ່າ ພຣະເຈົ້າມະຫິນທອນເທບນິພາພອນ ພຣະເຈົ້າມະຫິນຯ ທົງໃຫ້ເຈົ້າຄຳບົວ ເປັນເຈົ້າອຸປຣາດ -

ເຈົ້າສຸວັນ-ພິມມາ ເປັນເຈົ້າຣາດສັມພັນທະວົງ ໃຫ້ເຈົ້າຄຳສຸກ ເປັນ ເຈົ້າຣາຊບຸດ.



<u>ເກີດ ເສືອ ຫໍ້</u>

ຄຳວ່າຫໍ້ ຄວາມນີ້ ເປັນນາມຊຶ່ງຄົນລາວໃຊ້ຮຽກ ຄົນຈີນເຜົ່ານຶ່ງທາງມົນທົນຍູນານ ກວາງຕຸ້ງກວາງໄສ ແລະເສສວນ ແຕ່ກ່ອນເຄົ້ານັ້ນພວກນີ້ໄດ້ໂຮມກັນເປັນກະບົດຕໍ່ພຣະເຈົ້າແຜ່ນດິນຈີນ ຣາຊວົງແມນຈູ (ຫລືໄຕ-ເຊັ້ງ) ຫົວໜ້າໃຫຍ່ຊື່ ໂຫງວອາຈົ່ງ (ຫລືຊຸງວັງ) ໂດຍມີຈຸດປະສົງຈະລົ້ມຣາຊວົງ ແມນຈູ ແລ້ວຕັ້ງຣາຊວົງເໜັງຂຶ້ນແທນ.

ເມື່ອປະມານ ຄ.ສ. ໑໘໕໔ ໃນຣັຊການພຣະເຈົ້າ ຮຽນຟຸງ ກະສັດຣາຊວົງແມນຈູ ໂຫງວອາຈົ່ງ ຫົວໜ້າກະບົດ ໄດ້ຍົກກຳລັງພົນເຂົ້າຍຶດເອົານະຄອນນານ ຈິ່ງໄດ້ຕລອດຫົວເມືອງສຳຄັນ ທັງສອງຝັ່ງຂອງແມ່ນ້ຳ ແຍງຊີ ແລ້ວໂຫງວອາຈົ່ງ ຈິ່ງຕັ້ງຕົວເປັນອ໋ອງ (ຄືເຈົ້າ) ຮຽກວ່າໄຕ້ເຜັງອ໋ອງ ພຣະເຈົ້າແຜ່ນດິນຈີນ ບໍ່ທັງສາມາດ ຈະພາບພວກກະບົດໄດ້ຈິ່ງໄດ້ຈ້າງ ພັນເອກກໍດອນ ຄົນຊາດອັງກິດ ໃຫ້ຊ່ວຍພາບ ຈິ່ງສະງົບລົງໄດ້ ໃນຄ.ສ. ໑໘໖໔ ໂຫງວອາຈົ່ງ ຕາຍທີ່ເມືອງຍູນານ. ພວກກະບົດແຕກກະຈັດກະຈາຍ ໄປໂຮມສະມັກພັກພວກອີກໃໝ່ ຢູ່ເມືອງຂອງພວກແມ້ວແລະຢ້າວ ຕັ້ງຕົວເປັນອິສຣະຢູ່ເທິງພູ ແລ້ວພາກັນຍົກ ປວງມັນຊີ(ຫລືໂຫງວພັນລັນຊີ) ນ້ອງຊາຍໂຫງວອາຈົ່ງ ຂຶ້ນເປັນຫົວໜ້າ ມີພົລກຳລັງປະມານ ໕໐໐໐ ຄົນ. ແລ້ວຊຸມສະມັກພັກພວກ ເຂົ້າຕີປຸ້ນ ບ້ານເລັກເມືອງນ້ອຍ ໃນແດນແກວອີກ. ຈີນແລະແກວ ຍົກທັບສົມທົບກັນພາບຫໍ້ ອີກເທື່ອນຶ່ງ ປວງມັນຊີແຕກ ແຕ່ແລ້ວກັບໄປຍຶດໄດ້ເມືອງລາວກາຍ. ຕໍ່ມາປວງມັນຊີ ເກີດຜິດໃຈຕໍ່ສູ້ກັນເອງ ກັບແມ່ທັບຄົນສຳຄັນ.ໃນພວກຫໍ້ນຳກັນ ຊື່ລິວຕາຍັນ ປວງມັນ

ວິຕາຍໃນການຕໍ່ສູ້. ລິວຕາຍັນ ເຊິ່ງເປັນຈີນແທ້ ຈຶ່ງໄດ້ຄອງເມືອງລາວກາຍ.
ພັກພວກຊອງ
×ປວງມັນຊຶ ຈຶ່ງໄດ້ແຕກແຍກກັນອອກເປັນ ໔ ກົກ ເປັນໂຈນ ໔ ພວກ ຫືວ ໜ້າທັງສີ່ ຕ່າງກໍເຄີຍໄດ້ເປັນນາຍທະຫານຈີນມາແລ້ວ ຄື.

໑-/ ຍິບມັນໄຕ ໃຊ້ທຸງເຫລືອງ ນຳທັບ, ມີໄພ່ພົນສະມັກເຂົ້າຢູ່ນຳຫລາຍ ເພາະທຸງເຫລືອງ ເປັນທຸງແບບເກົ່າແຕ່ບັ້ນພະບຸຣຸດຫໍ້ ເຊິ່ງໂຫງວອາຈິງ ຫືວໜ້າໃຫ່ຍ ໃຊ້ນຳທັບຂອງຕົນມາແຕ່ເດີມ. ໃນເວລາຕໍ່ມາ ຫໍ້ພວກນີ້ ຊຸມພັກພວກຢູ່ເມືອງລາ ແຄວນສິບສອງຈຸໄທ ແລະຫົວພັນທັງຫ້າ ທັງໝົດ.

໒-/ ລິວຕາຍັນ ໃຊ້ທຸງດຳ ເປັນເຄື່ອງໝາຍ. ຫໍ້ພວກນີ້ ຕັ້ງຊຸມພວກຢູ່ທີ່ເມືອງລາວກາຍ ຫໍ້ພວກນີ້ແກວໄດ້ມາກ່ຽວກ່ອມ ເອົາໄວ້ເປັນພັກພວກ ເພາະຣະຫວ່າງນີ້ ແກວເກີດການພິພາດກັບຝຣັ່ງ ແລະໄດ້ເສັຽແກວໄຕ້ໄປໃຫ້ຝຣັ່ງແລ້ວ ແກວຈຶ່ງຕິດຕໍ່ກັບຫໍ້ ພວກນີ້ໄວ້ເປັນກຳລັງ.

໓-/ ອາເຈືອງ ໃຊ້ທຸງແດງ ເປັນເຄື່ອງໝາຍ ຫໍ້ພວກນີ້ໄປຕັ້ງຊຸມພັກພວກຢູ່ແຂວງເມືອງພວນ.

໔-/ ໄກວຊິງ ໃຊ້ທຸງລາຍ ເປັນເຄື່ອງໝາຍ. ຫໍ້ພວກນີ້ຊຸມພັກພວກ ຢູ່ທີ່ທົ່ງຊຽງຄຳ.

ຫໍ້ທັງ ໔ ພວກນີ້ ໄດ້ຍົກພວກເຂົ້າມາຢູ່ ໃນເຂດແຂວງຂອງແກວແລະລາວ ເມື່ອໄປເຖິງບ້ານໃດ ເມືອງໃດ ກໍເຂົ້າຕີປຸ້ນ ເອົາເຂົ້າປາອາຫານ. ຖ້າໃຜຕໍ່ສູ້ ຫລືຂັດຂວາງກໍຂ້າເສັຽ ເດັກນ້ອຍອາຍຸ ໑໔-໑໕ ປີ ກໍຈັບມາຖັກພົມເປັຽ ແປງເປັນຫໍ້ ສ່ວນຫລາຍ ຂ້າທັງພໍ່ ແລະແມ່ ຖ້າເປັນ

ຊາຍສະກັນກໍ່ຈັບເອົາໄປລ້ຽງມ້າ-ລໍ ເປັນຄົນໃຊ້ຕັກນ້ຳ ຕຳເຂົ້າ ແລະໃຫ້ຖັກໝຶ້ມເປີຍ ແປງຕົວເປັນທໍ້ ພວກທໍ້ທັງ ໔ ຈຳພວກນີ້ ບໍ່ແມ່ນວ່າຈະຣົບເລວແຕ່ກັບພວກອື່ນທໍ່ນັ້ນ. ເຖິງເປັນພວກທໍ້ນຳກັນ ເມື່ອແຕກແຍກກັນໄປຢູ່ຄົນລະພວກແລ້ວ ກໍຍາດແຍ່ງດິນແດນ ແລະອຳນາດ ມີການຣົບເລວຂ້າຟັນກັນລົ້ມຕາຍຢູ່ສເມີ.

ພວກທໍ້ ໄດ້ບຸກຣຸກເຂົ້າມາປຸ້ນຂ້າຣາວີ ໃນອານາເຂດຂອງລາວພາກເຫນືອ ແຕ່ເມື່ອ ຄ.ສ. ໑໘໗໔ ຄືໃນຕົ້ນຣັຊການ ຂອງພຣະເຈົ້າມະຫິນ ເຈົ້າແຜ່ນດິນ ນະຄອນຫລວງພຣະບາງ.

ຄ.ສ. ໑໘໗໖ ທໍ້ລຸມໄພ່ພົນ ປະມານ ໔໐໐໐ ຄົນ ຍົກເຂົ້າຕີເມືອງແຖງ ເມືອງສິບແອດ ຈົນມາເຖິງທົ່ງຊຽງຄຳ ແມ່ທັບທໍ້ຕາຍໃນສນາມຣົບ.

ຄ.ສ. ໑໘໗໘ ພຣະພະນົມສານນໍຣິນ ກັບອຸປຣາດ ເມືອງຊຽງຂວາງ ຍົກກອງທັບໄປຕີທໍ້ ທີ່ທົ່ງຊຽງຄຳ ອຸປຣາດເມືອງຊຽງຂວາງຕາຍ ໃນທີ່ຣົບ ພອະພະນົມສານນໍຣິນ ຈຶ່ງຖອນເຂົ້າມາຕັ້ງທັບຢູ່ໃນເມືອງຊຽງຂວາງ ເຈົ້າເມືອງຊຽງຂວາງ ໄດ້ສົ່ງຄົນໄປຂໍກອງທັບ ນຳພຣະເຈົ້າວຽດນາມ ແລະມີໃບບອກໄປເຖິງ ພຣະເຈົ້າແຜ່ນດິນສຍາມນຳ.

ພຣະເຈົ້າວຽດນາມ ໄດ້ແຕ່ງໃຫ້ ອົງເດີ໊ກ ຍົກທັບແກວປະມານ ໔໐໐໐ ຄົນ ຂຶ້ນມາສົມທົບກັບກອງທັບ ເຈົ້າເມືອງຊຽງຂວາງແລະພຣະພະນົມສານນໍຣິນ ຍົກໄປຕີທໍ້ ຢູ່ທົ່ງຊຽງຄຳອີກເທື່ອນຶ່ງ ເຈົ້າເມືອງ

ຊຽງຂວາງຕາຍໃນທີ່ຮົບ. ກອງທັບແກວແຕກພ່າຍຄືນໄປເມືອງແກວ ພວກຫໍ້ ຈຶ່ງເຂົ້າເມືອງຊຽງຂວາງໄດ້ ພຣະພະນົມສານນໍຣິນ ໄດ້ພາຄອບຄົວແລະຣາສດອນ ເມືອງຊຽງຂວາງ ຫນີລົງໄປຢູ່ແຂວງເມືອງໂພນພິສັຍ. ເພັຽພົງ ກົມການເມືອງ ທີ່ຢູ່ຮັກສາເມືອງຊຽງຂວາງ ສູ້ຫໍ້ບໍ່ໄດ້ ກໍຈຳໃຈຂໍອ່ອນຍອມຕໍ່ຫໍ້ໄວ້ກ່ອນ ໂດຍຍອມໃຫ້ພວກຫໍ້ເຂົ້າໄປຕັ້ງຢູ່ໃນເມືອງ ພວກຫໍ້ໄດ້ຂ້າຟັນຊາວເມືອງຊຽງຂວາງ ລົ້ມຕາຍລົງຫລາຍ ຕໍ່ມາ ທ້າວເພັຽພົງໄດ້ຫລົບຫນີໄປ ຈາກເມືອງຊຽງຂວາງ. ເມື່ອພວກຫໍ້ໄດ້ເກັບກວາດເອົາຊັບສິນເງິນຄຳໄດ້ຫມົດແລ້ວ ກໍຍົກພວກ. ອອກຈາກເມືອງຊຽງຂວາງໄປຕັ້ງຄ້າຍຢູ່ທີ່ທົ່ງຊຽງຄຳອີກ ແລະທ້າງທັບຈະໄປຕີເຖິງເມືອງຫລວງພຣະບາງ ວຽງຈັນ ແລະ ຫນອງຄາຍ. ໃນປີດຽວກັນນັ້ນ ພຣະເຈົ້າມະຫິນຯ ກົງແຕ່ງໃຫ້ ເຈົ້າຣາຊວົງ ເປັນແມ່ທັບ ຍົກໄປຕີຫໍ້ ທາງເມືອງແຖງ ແຕກພວກຫໍ້ພ່າຍຫນີລົງມາ ທາງເມືອງຊ່ອນ ຖືກກອງທັບຂອງທ້າວເມົ້າ ຕີແຕກອີກພວກຫໍ້ ຈຶ່ງຫນີລົງມາໂຮມກັນຢູ່ທົ່ງຊຽງຄຳ ພຣະເຈົ້າແຜ່ນດິນສຍາມ ກົງແຕ່ງໃຫ້ ແມ່ທັບສຍາມ ສອງຄົນ ມີກຳລັງພົນທັບລະ ໑໕໐໐ ຄົນ ຂຶ້ນມາຊ່ວຍເມືອງຫລວງພຣະບາງ ຕີຫໍ້.

ຕົກປີ ຄ.ສ. ໑໘໗໕ ແມ່ທັບໃຫ່ຍຂອງຫໍ້ ທີ່ຕັ້ງຄ້າຍຢູ່ທົ່ງຊຽງຄຳ ໄດ້ແຕ່ງກອງທັບລົງມາຕີວຽງຈັນ. ເມືອງວຽງຈັນເວລານັ້ນ ເປັນເມືອງຮ້າງ ບໍ່ມີເຈົ້ານາຍປົກຄອງ ທາງການສຍາມ ແຕ່ງໃຫ້ພວກກົມການເມືອງເປັນຜູ້ຮັກສາເມືອງວຽງຈັນ ໂດຍຂຶ້ນຕໍ່ເມືອງຫນອງຄາຍ. ເມື່ອ

ພວກທີ່ຍົກກຳລັງລົງມາ ຣາສດອນຈຶ່ງພາກັນແຕກຕື່ນ ປະເຣືອນຊານ ເຂົ້າ
ຂອງໜີພ່າຍທີ່ ອ້ານນ້ຳຂອງເໜືດ ຜູ້ທີ່ໜີບໍ່ທັນກໍຍອມເຂົ້າຫູ ຄືເສັຽສ່ວຍ
ແລ້ວແຕ່ນັ້ນຈະຣຽກເອົາ ພວກທີ່ໄດ້ທ່ຽວເກັບເອົາເຄື່ອງຂອງຣາສດອນ
ມ້າງເພພຣະທາດເຈດີ ວິຫານ ໂດຍຈຳເພາະແລ້ວ ກໍແມ່ນພຣະທາດຫລວງ
ທີ່ໄດ້ມ້າງເພລົງ ເພື່ອຂຸດເອົາເຄື່ອງຂອງອັນມີຄ່າ ຈົນພຣະທາດຫລວງ
ເຫລືອແຕ່ຖານລຸ່ມ ພວກທີ່ໄດ້ຂຸດຄົ້ນເອົາເງິນຄຳ ເຄື່ອງຂອງຢູ່ໃນນະ
ຄອນວຽງຈັນ ເຖິງ ໔ ເດືອນ.

ເວລານັ້ນ ອ້າຫລວງສຍາມ ທີ່ຂຶ້ນມາຣາຊການຢູ່ທີ່ເມືອງ ຊຸບົນ
(ພຣະຍາມະຫາອຳມາດຍາທິບໍດີ ຈື່ນ ກັນລະຍານມິດ) ເຊິ່ງເປັນອ້າ
ຫລວງ ທີ່ຂຶ້ນມາ ເລື້ງ ເກັບສ່ວຍສາອາກອນ ໄດ້ຮັບຄຳສັ່ງໃຫ້ເກນພົນ
ກຳລັງ ທົ່ວເມືອງລາວ ຂຶ້ນໄປຕີທີ່ຢູ່ທີ່ວຽງຈັນ ອ້າຫລວງສຍາມ ຈຶ່ງແຕ່ງ
ໃຫ້ ເຈົ້າໜໍ່ຄຳ (ເຈົ້າພົມເທວານຸ ຄະ ວົງ) ເຈົ້າເມືອງຊຸບົນເປັນແມ່
ກອງໃຫຍ່ ກັບຣາຊວົງ ທ້າວສິດທິສານ (ບຸນຊູ ພົມວົງສານົນ) ເປັນປະ
ຫລັດກອງ ທ້າວຈູມມະນີ ສຸວັນນະກູດ, ທ້າວຄຳພູນ ສຸວັນນະກູດ ເປັນ
ນາຍກອງ ຕລອດທົ່ວເມືອງ ຮ້ອຍເອັດ ມະຫາສາຣະຄາມ ກາລະສິນ
ເກນກຳລັງເມືອງນະຄອນຣາຊສີມາ ເປັນກອງຫນູນ ຍົກຂຶ້ນມາທາງເມືອງ
ໜອງຄາຍ. ຮອດເມືອງໜອງຄາຍ ເດືອນສິງຫາ ຄ.ສ. ໑໘໗໕ ພຣະ
ຍາປະທຸມເທວາພິບາລ ເຈົ້າເມືອງໜອງຄາຍ ເກນກຳລັງພົນເຂົ້າສົມທົບ
ອີກ ໕໐໐໐ ຄົນ. ກັບກອງທັບຂອງ ພຣະຍາຣາຊວະຣານຸກູລ ແມ່ທັບທີ່ຍົກ
ລົງມາຈາກຫລວງພຣະບາງ ເຂົ້າຕີທີ່ ທີ່ຕັ້ງຄ້າຍຢູ່ວຽງຈັນ. ຕ່າງກໍເຂົ້າ

ຣົບກັນເປັນສາມາດ ຝ່າຍຫໍ້ມີ ລິວສີໂກ໊ະ ເປັນແມ່ທັບໃຫຍ່ ລີສີໂປ ເປັນແມ່ທັບຮອງ ໄດ້ເສັຽຊີວິດໃນເວລາທີ່ຣົບ ຢູ່ ຄ້າຍວັດຈັນ, ຄ້າຍບ້ານສີຖານຂອງຫໍ້ແຕກ ພວກຫໍ້ຈຶ່ງມາໂຮມກັນຢູ່ທີ່ຄ້າຍວັດຈັນ ຫົວໜ້າຫໍ້ ຊື່ ຊິນຊິເຢັຽສີບໂກ໊ະ ແລະຊິນຊິເຢັຽເລງໂກ໊ະ ເປັນຜູ້ຮັກສາຄ້າຍ, ສ່ວນອີກຄ້າຍນຶ່ງຢູ່ທີ່ໂພນທານາເລົາ ນາຍຄ່າຍຊື່ ມຶກສີໂກ໊ະ ກໍຖືກປືນຕາຍ ພວກຫໍ້ສູ້ບໍ່ໄດ້ກໍແຕກພ່າຍໜີໄປທາງທົ່ງຊຽງຄຳ ເລີຍເຂົ້າໄປໃນແດນແກວ.

ພວກຫໍ້ທີ່ພ່າຍໜີອອກຈາກເຂດລາວເໜືອ ໄປແລ້ວນີ້ ກໍຍັງບໍ່ຫລາບຍັງພາກັນໄປທ່ຽວປຸ້ນ ໃນແດນແກວອີກ. ຕໍ່ມາຈີນ ແລະແກວໄດ້ສົມທົບກັນຜາບຫໍ້ ຫໍ້ສູ້ບໍ່ໄດ້ກໍແຕກເປັນພວກເລັກ ພວກນ້ອຍ ມີຈຳນວນຫລຸດນ້ຽລົງໄປກ່ອນເກົ່າຫລາຍ.

ຍິບມັນໄຕ (ຫລືຍິບໄຕ) ຫົວໜ້າຫໍ້ທຸງເຫລືອງ ທີ່ສືບຕໍ່ມາຈາກປວງມັນຊີ ໄດ້ຍົກພວກເຂົ້າໄປຕັ້ງຢູ່ທີ່ເມືອງລາ ແຂວງສິບສອງຈຸໄທ ພວກທີ່ບໍ່ມີນາຍຄຸມ ກໍແຕກກະຈັດກະຈາຍ ບາງພວກກໍກັບຕົວເປັນຄົນດີ ປ່ຽນນິສັຍມາປະກອບອາຊີບ ຄື ຣາສດອນ ທີ່ດີທັງຫລາຍ.

ຕໍ່ມາ ເຈົ້າເມືອງໄລ່ ໄດ້ໄປຈ້າງເອົາ ພວກຫໍ້ທຸງດຳ ທີ່ຢູ່ເມືອງລາວກາຍ ໄດ້ປະມານ ໑໐໐໐ ຄົນ ລົງມາຕີຫໍ້ຢູ່ເມືອງລາ ໄດ້ຕໍ່ສູ້ກັນຢູ່ປີປາຍຍັງບໍ່ທັນແພ້ກັນ.

ເຈົ້າເມືອງໄລ່ ຈຶ່ງມີໜັງສື ໄປຂໍກອງທັບເມືອງລາວກາຍ ມາຊ່ອຍ. ເຈົ້າເມືອງລາວກາຍໄດ້ສົ່ງທະຫານປະມານ ໑໐໐ ຄົນ ລົງມາຕີທໍ່ຢູ່ເມືອງລາ ແມ່ທັບເມືອງລາວກາຍ ແຈ້ງຕໍ່ທໍ່ຍິບໄຕວ່າ ພຣະເຈົ້າແຜ່ນດິນຈີນ ມີໜັງສືມາໃຫ້ເຈົ້າເມືອງລາວກາຍ ຈັບເອົາພວກທໍ່ ທີ່ເຂົ້າມາຕີປຸ້ນ ຢູ່ທົ່ວເມືອງລາວໃຫ້ໝົດ ຖ້າບໍ່ໄດ້ເຈົ້າເມືອງລາວກາຍ ຈະມີໂທດ ທໍ່ຍິບໄຕ ກໍຍອມໃຫ້ແມ່ທັບເມືອງລາວກາຍ ຄຸມຕົວໄປ ສ່ວນຫົວໜ້າທໍ່ ອື່ນໆອັນເປັນລູກນ້ອງ ຂອງທໍ່ຍິບໄຕນັ້ນ ໄດ້ພາພັກພວກປະມານ ៤໐໐ ຄົນ ລັກໜີໄປຢູ່ນຳພຣະຍາອາເຈືອງ ເມືອງເປີນ ໃນປີ ຄ.ສ. ໑໘໗໘ ແລະ ທໍ່ພວກນີ້ໄດ້ຍົວະເຍົ້າພຣະຍາອາເຈືອງໃຫ້ຊ່ອຍຕີເອົາເມືອງ ສິບແອດ ຈຶ່ງເກີດເປັນອາເຈືອງກະບົດອີກ ເຈົ້າ - ເມືອງສິບແອດ ພ້ອມຣາສດອນຣ້ອຍປາຍ ແຕກຟ່າຍໜີເຂົ້າມາຢູ່ໃນນະຄອນຫລວງພຣະບາງ ຊາວເມືອງ ສິບແອດເຫລືອນັ້ນ ໄດ້ຍອມເສັຽສ່ວຍໃຫ້ທໍ່.

ທໍ່ອີກພວກນຶ່ງ ຊຶ່ງເຄີຍຢູ່ກັບ ທໍ່ຍິບໄຕ ມີຈຳນວນປະມານ ໑໐໐ ຄົນ ໄດ້ພາກັນລັກໜີ ຈາກເມືອງລາວກາຍ ມາຕັ້ງຄ້າຍຢູ່ເມືອງສິບຊົບ ເຈົ້າເມືອງລາວກາຍ ຈຶ່ງແຕ່ງໃຫ້ທະຫານນຳມາຈັບ ພວກທໍ່ຈຶ່ງໜີລົງມາ ທາງຫ້ວຍສູຍ ແລະເຂົ້າຕີປຸ້ນເມືອງຊອນ ທະຫານເມືອງລາວກາຍ ນຳລົງມາຕີອີກ ພວກທໍ່ເລີຍແຕກລົງມາທາງທົ່ງຊຽງຄຳ ພວກທີ່ແຕກໜີ ລົງມານີ້ພາຍລູນມາບໍ່ຖືກກັນກັບກວນຫລວງ (ຫົວໜ້າທໍ່ພວກ

ສາມກໍປີວ) ຈຶ່ງໜີໄປຕັ້ງຄ້າຍຢູ່ທາງບ້ານຫ້ວຍຊາຍ ແລ້ວອອກຕີປຸ້ນບ້ານ
ເມືອງໄປທຸກແຫ່ງ.

ຝ່າຍແມ່ທັບສຍາມ ພຣະຍາພິຊັຍ (ດິສ) ຊາບວ່າກອງທັບຫໍ້ມາ
ຕັ້ງຢູ່ແຂວງພວນ ກໍຟ້າວຍົກກອງທັບຈາກເມືອງພິຊັຍ ຂຶ້ນມາເມືອງຫລວງ
ພຣະບາງ ສົມທົບກັບກອງທັບ ເມືອງຫລວງພຣະບາງ ຂອງເຈົ້າອຸປຣາດ
(ເຈົ້າຄຳບົວ) ຍົກອອກຈາກຫລວງພຣະບາງ ທາງບ້ານສຽວ ທ່າໂພ ສືບ
ວິ ຮອດເມືອງຢູ ແມ່ທັບຫລວງພຣະບາງ ປ່ອຍໄດ້ກັບຄືນຫລວງພຣະບາງ
ກອງທັບສຍາມ ຍົກໄປຮອດບ້ານສູດ ຫໍ້ຍົກມາຕັ້ງຄ້າຍອັດຕົ້ນທາງ ໂອບ
ລ້ອມຄ້າຍພຣະຍາພິຊັຍ ຄ້າຍເມືອງຫລວງພຣະບາງ ແລະ ຄ້າຍເມືອງ
ນ່ານໄວ້ ໕ ແຫ່ງ ທັງ ໒ ຝ່າຍໄດ້ສູ້ຮົບກັນຢູ່ ໑໘ ວັນ ກາງຄືນຫໍ້ຍົກມາ
ປຸ້ນຄ້າຍພຣະຍາພິຊັຍ ຄ້າຍເມືອງຫລວງພຣະບາງບໍ່ແຕກ ແຕ່ຄ້າຍເມືອງ
ນ່ານແຕກ ເຈົ້າອຸປຣາດ ນ້ອຍອຸ່ຍ ເມືອງນ່ານ ຖືກປືນຕາຍ ພຣະຍາພິຊັຍ
ແມ່ທັບສຍາມ ຖອຍທັບມາຕັ້ງຢູ່ບ້ານສອຍ ອັນເປັນທາງທີ່ພວກຫໍ້ຈະຍົກລົງ
ມາຕີ ເມືອງຫລວງພຣະບາງ.

ພຣະຍາພິຊັຍ ຈຶ່ງຂໍກອງທັບຈາກເຈົ້າພຣະຍາ ພຸທຣາພັຍ ເຊິ່ງຕັ້ງ
ກອງທັບໃຫຍ່ຢູ່ເມືອງພິຊັຍ (ອຳເພີພິຊັຍ ຈັງຫວັດອຸຕຣະດິດ) ແມ່ທັບໃຫຍ່
ສຍາມ ຈຶ່ງແຕ່ງໃຫ້ ພຣະສຸຣິຍະພັກດີ (ເອກບຸນຍະຣັຕນະພັນ) ຍົກທັບຂຶ້ນ
ມາເມືອງຫລວງພຣະບາງ ໄປຊ່ວຍພຣະຍາພິຊັຍ ເຖິງບ້ານສອດ ປະມານ
ເດືອນ ໓ ແຮມ.

ຝ່າຍພຣະເຈົ້າມະຫິນຯ ເຈົ້າແຜ່ນດິນນະຄອນຫລວງພຣະບາງ ຈຶ່ງໂຜດໃຫ້ເຈົ້າຣາຊວົງ ເຊິ່ງຕັ້ງທັບຢູ່ເມືອງຊຶມ ນັ້ນໃຫ້ຟ້າວຍົກຂຶ້ນໄປ ຊ່ວຍພຣະຍາພິຊັຍ ກອງທັບຫລວງພຣະບາງ ຍົກໄປຮອດບ້ານສອດກ່ອນ ກອງທັບ ຂອງພຣະສຸຣິຍະພັກດີ ມີພົນ ໘໐໐ ຄົນ ກອງທັບເມືອງນ່ານມີ ໘໐໐ ຄົນ ແລະພຣະຍາພິຊັຍ ມີພົນ ໗໐໐ ຄົນ ກອງທັບ ໔ ກອງນີ້ໄດ້ ຍົກອອກຈາກບ້ານສອດ ເຂົ້າຕີທັບຫໍ້ແຕກຍັບເຍີນ ແລະຍົກຕິດຕາມພວກ ຫໍ້ ຈົນຮອດ ທົ່ງຊຽງຄຳ ພວກຫໍ້ກໍອົພຍົບ ຫລົບຫນີໄປຈາກເມືອງພວນ ເດືອນ ໔ ແມ່ທັບສຍາມ ໄດ້ກວດເອົາຄົວລາວ ເມືອງຊຽງຂວາງ ລົງ ໄປເມືອງຫລວງພຣະບາງ ວ່າຈະເອົາໄປບາງກອກ ແຕ່ໄດ້ປ່ວຍເປັນອະຫິວາ ຄົນຕາຍເປັນສ່ວນຫລາຍ. ເວລານັ້ນ ມີຄົນຄ້າງຢູ່ຊຽງຂວາງປະມານ ໑.໐໐໐ ຄົນເທົ່ານັ້ນ ເພາະວ່າເຈົ້າກ່ຳ ແລະ ເຈົ້າອິນໂສມ ໄດ້ ຄັດຄ້ານ ບໍ່ໃຫ້ແມ່ທັບສຍາມ ກວດເອົາຄົວຊຽງຂວາງໄປ ຊ້ຳຍັງໄດ້ລົງ ໄປບາງກອກ ຂໍເອົາຄົວຊຽງຂວາງ ຄືນມາ ແຕ່ບໍ່ໄດ້ ເມື່ອກອງທັບສຍາມ ແລະ ກອງທັບເມືອງຫລວງພຣະບາງ ຍົກຄືນໄປຫມົດແລ້ວ ພວກຫໍ້ກໍໄດ້ ຍົກກັບຄືນມາເມືອງຊຽງຂວາງອີກ ພວກຣາສດອນ ແລະເຈົ້ານາຍເມືອງ ຊຽງຂວາງ ໄດ້ພາກັນອົພຍົບ ເຂົ້າລີ້ຊ່ອນຢູ່ໃນປ່າ.

ປີ ຄ.ສ. ໑໘໘໔ ພຣະເຈົ້າມະຫິນຯ ທົງແຕ່ງໃຫ້ເຈົ້າມຫາອຸປຣາດ ເປັນແມ່ທັບເມືອງຫລວງພຣະບາງ ສົມທົບກັບກອງທະຫານສຍາມ ຂອງພຣະຍາຣາດວະຣານຸກູນ ຍົກກອງທັບ ຕິດຕາມພວກຫໍ້ ຂຶ້ນໄປຈົນເຖິງ

ທົ່ງຊຽງຄຳ ເຂົ້າລ້ອມຄ້າຍຫໍ້ໄວ້ ແຕ່ພວກຫໍ້ ໄດ້ຕັ້ງຄ້າຍມາໄດ້ ໗ ປີແລ້ວ ຈົນເຖິງກັບປູກກົກໄຜ່ ບັງເປັນພະນຽດ ອ້ອມແຫນ້ນຫິບ ປືນໃຫຍ່ບໍ່ສາມາດ ຍິງລ້າງກົກໄຜ່ໄດ້ ກອງທັບສຍາມ ແລະລາວ ໄດ້ຍົກເຂົ້າຕີຄ້າຍຫໍ້ຫລາຍຄັ້ງ ແຕ່ເຂົ້າຄ້າຍບໍ່ໄດ້ ຕໍ່ມາແມ່ທັບໃຫຍ່ສຍາມ ຖືກປືນຫໍ້ ເຈັບປ່ວຍ ຈຶ່ງໃຫ້ລ້ອມ ຄ້າຍຫໍ້ໄວ້ ຈົນເຖິງ ໔ ເດືອນ ທະຫານເກີດປ່ວຍເຈັບ ເມື່ອຂັດສົນສບຽງ ອາຫານ ແມ່ທັບສຍາມ ຈຶ່ງເລີກທັບກັບລົງມາ ທາງວຽງຈັນ ສ່ວນກອງທັບ ຫລວງພຣະບາງ ກໍເລີກທັບກັບຄືນ ທາງເມືອງຫລວງພຣະບາງ.

ໃນປີ ຄ.ສ. ໑໘໘໔ ນີ້ ພຣະເຈົ້າແຜ່ນດິນສຍາມ ທົງໂຜດໃຫ້ ພຣະຍາມຫາອຳມາດ ຍາທິບໍດີ (ຫລຸ່ມສີເພັນ) ຂຶ້ນມາເປັນຂ້າຫລວງສຍາມ ປະຈຳຫົວເມືອງລາວ ຕາເວັນອອກ. ໂດຍຕັ້ງກອງການປົກຄອງຢູ່ທີ່ເມືອງ ນະຄອນຈຳປາສັກ.

<u>ຫ ມ າ ຍ ເ ຫ ດ</u> : ຄ.ສ. ໑໘໘໓ ຝຣັ່ງໄດ້ແກວເຫນືອ (ຕົງແກງ) ເປັນຫົວເມືອງຂຶ້ນ ແລະແກວກາງ (ອານາມ) ຍອມຢູ່ໃນອາຣັກຂາ ຂອງ ຝຣັ່ງ.

: ປີ ຄ.ສ. ໑໘໘໕ ພວກຫໍ້ທີ່ຕັ້ງຄ້າຍຢູ່ ທົ່ງຊຽງຄຳ ໄດ້ຍົກລົງມາຕີວຽງຈັນອີກ ແຕ່ໄດ້ຖືກກອງທັບ ຂອງກົມຫມື່ນປຣະຈັກ ສີລປະ. ຄົມ ແມ່ທັບສຍາມຝ່າຍໃຕ້ ທີ່ຍົກທັບຂຶ້ນມາທາງເມືອງຫນອງຄາຍ ຕີແຕກຄືນ ໄປ ແລະຕິດຕາມຂຶ້ນໄປຈົນຮອດຊຽງຂວາງ.

ປີ ຄ.ສ. ໑໘໒៧ ກົມຫມື່ນປູ່ະຈັກ ສີລປະຄົມ ໄດ້ແຕ່ງໃຫ້ ພຣະຣາດສູຣິນ ຄຸມກອງທະຫານຕັ້ງຢູ່ຈຸຣຽງຂວາງ ແລະໃຫ້ພຣະຍາຫລີ່ມ ເປັນຂ້າຫລວງສຍາມ ປະຈຳເມືອງຈຸຣຽງຂວາງ.

ໃນປີດຽວກັນນີ້ ຄື ປີ ຄ.ສ. ໑໘໒៨ ເດືອນ ៨ ພຣະເຈົ້າມະຫິນ໑ ທົ່ງໂຜດໃຫ້ ກອງທັບເມືອງຫລວງພຣະບາງ ສົມທົບກັບກອງທັບສຍາມ ຂອງເຈົ້າຫມື່ນ ໄວວໍຣະນາດ ຂຶ້ນໄປຕີທົ້ ແລະພາບຂ້າກະບົດເຈືອງ ທາງເມືອງຈ່ອນ ໄດ້ຕີທັ້ງທາງເມືອງສົບແອດ ບ້ານດ້າຍ ບ້ານນາປາ ທີ່ແຕກຫນີ ກໍປີ່ວຫົວຫນ້າດ້າຍຖືກປືນໄປບໍ່ທັນ ຂ້າຕົວຕາຍ ກອງທັບສຍາມ ແລະ ລາວ ຈຶ່ງຕັ້ງກອງຮັກສາການ ເມື່ອພວກທີ່ທີ່ຢູ່ດ້າຍບ້ານນາປາ ຮູ້ວ່າດ້າຍບ້ານດ້ານແຕກແລ້ວ ກໍຫນີເຂົ້າປ່າ ເຂົ້າພູໄປຫມົດ.

ປີ ຄ.ສ. ໑໘໒៧ ພໍຕົກເດືອນ ៧ ກອງທະຫານສຍາມ ແລະລາວ ເກີດໄຂ້ປ່າ ເຈັບປ່ວຍ ລົງເປັນອັນມາກ ເມື່ອພວກທີ່ທີ່ແຕກຫນີຈາກບ້ານນາປາ ແລະ ດ້າຍບ້ານດ້າຍ ໄດ້ຊາບວ່າເກີດໄຂ້ປ່າ ໃນກອງທັບສຍາມ ແລະລາວ ກໍທ້ອນໂຮມກັນຍົກລົງມາຕັ້ງດ້າຍຢູ່ ຕິດດ້າຍບ້ານດ້າຍໄກກັນປະມານ ៥໐ ວາ ແຕ່ບໍ່ກ້າເຂົ້າຕີດ້າຍ ເພາະຢ້ານລູກແຕກ ມີແຕ່ແຕ່ງກອງກຳລັງໄປທ່ຽວລັດທາງ ແລະລ້ອມໄວ້ໃຫ້ອຶດສະບຽງອາຫານຝ່າຍກອງທັບລາວ ແລະ ສຍາມ ເປັນເວລາທະຫານເຈັບປ່ວຍຢູ່ ທະຫານ ບໍ່ມີກຳລັງ ຈະອອກໄປລົບກັບທີ່ໄດ້ ຈຶ່ງພຽງ ແຕ່ຍິງປືນອອກໄປໃສ່ທີ່ ເຈົ້າຣາດພະຄີນັຍ ແມ່ທັບຫລວງພຣະບາງ ຈຶ່ງອອກກົນອຸບາຍໃຫ້ທະ

ທານເປົ່າແກເພງປະຈັນປານຂົ້ນ ພວກທັ້ເຂົ້າໃຈວ່າມີກອງໜູນຍົກມາຊ່ວຍ ເມື່ອເດືອນ ໘ ແຮມ ກວານກໍຢື ຫົວໜ້າ ກໍຖືທູງຂາວອອກມາຂໍອ່ອນຍອມ ເຈົ້າຣາດພະຄິນັຍ ຈຶ່ງພາແມ່ທັບທັ້ ແລະ ພັກພວກທີ່ມາຍອມສວາມີພັກນັ້ນ ໄປຫາແມ່ທັບໃຫຍ່ ສຍາມທາງເມືອງແຖງ ສ່ວຍຄ້າຍທໍ້ບ້ານດ້າຍ ໄດ້ຖືກ ທຳລາຍລົງໝົດ.

ຝ່າຍເຈົ້າເມືອງໄລ່ ກໍ່ການວຸ້ນວາຍ ຢາກຈະແຍກອອກຈາກອານາຈັກຫລວງພຣະບາງ (ເມືອງໄລຂຶ້ນຕໍ່ເມືອງຫລວງພຣະບາງ) ໄດ້ແຕ່ງໃຫ້ລູກຊາຍ ມີຄຳຫລ້າ ຄຳສາມ ແລະ ບາງບຣົມ ຄຸມທະຫານໄທ-ເມືອງໄລ່ ຍົກເຂົ້າມາຕີປຸ້ນບັງຄັບ ເອົາສິ່ງຂອງ ເງິນຄຳ ແລະສະບຽງອາຫານຈາກຊາວເມືອງແຖງ ສົ່ງໄປໄວ້ເມືອງໄລ່ ສ່ວນຜູ້ຂັດຂືນ ກໍຂ້າ ແລະຫ້າງຕໍ່ສູ້ກັບກອງທັບສຍາມ ແລະ ກອງທັບເມືອງຫລວງພຣະບາງ ແມ່ທັບສຍາມຈຶ່ງແຕ່ງຄົນໄປກຽວກ່ອມ ຈັບໄດ້ ຄຳຫລ້າ ຄຳສາມ ແລະ ບາງບຣົມ ບຸດເຈົ້າເມືອງໄລ່ ເອົາລົງມານຳກອງທັບສຍາມ ຮອດເມືອງຫລວງພຣະບາງ ເມື່ອເດືອນ ໕ ແມ່ທັບສຍາມໄດ້ເລີກກັບກຣຸງເທພ ເມື່ອເດືອນ ໖ ອອກໃຫມ່ ຄ.ສ. ໑໘໘໗ ພ້ອມກັບນຳເອົາລູກຊາຍເຈົ້າເມືອງໄລທັງ ໓ ລົງໄປກຣຸງເທພນຳ.

ຝ່າຍເຈົ້າເມືອງໄລ່ ມີຄວາມເຈັບແຄ້ນ ໃຫ້ແມ່ທັບສຍາມ ແລະແມ່ທັບເມືອງຫລວງພຣະບາງ ທີ່ຈັບເອົາບຸດ ໓ ຄົນ ລົງໄປກຣຸງເທພ ຈຶ່ງເອົາທະຫານໄທເມືອງໄລ່ ສົມທົບກັບພວກຫໍ້ ແລະຜູ້ໄທຄຳ ຍົກລົງມາ - ເມືອງຫລວງພຣະບາງ ໂດຍໃຫ້ລູກຊາຍກົກ ຄື ຄຳຮຸ່ມ ເປັນແມ່ທັບລົງມາເຖິງເມືອງຫລວງພຣະບາງ ປະມານເດືອນ ໗ ແຮມ ພຣະເຈົ້າມະຫິນຯ ແລະ ເຈົ້າມຫາອຸປຣາດ ບໍ່ໄດ້ຄິດວ່າ ພວກເມືອງໄລ່ ຈະເຂົ້າຕີປຸ້ນເມືອງຫລວງພຣະບາງ ຄົງຄິດແຕ່ວ່າ ຄຳຮຸ່ມ ມານຳສືບຂ່າວນ້ອງຊາຍທີ່ນັ້ນ ຈຶ່ງບໍ່ໄດ້ຄິດປ້ອງກັນເມືອງໃຫ້ແຂງແຮງ.

ຄຳຮູ່ມ ໄດ້ພາທະຫານໄທເມືອງໄລ່ ແລະຫໍ້ ເຂົ້າຕີປຸ້ນເມືອງຫລວງພຣະບາງ ເມື່ອເດືອນ ໗ ແຮມ ໓ ຄ່ຳ ໄດ້ສູ້ກັນກັບທະຫານຮັກສາວັງຂອງພຣະເຈົ້າມະຫິນ຺ ເຖິງອາວຸດສັ້ນ ພວກຫໍ້ ແລະໄທເມືອງໄລ່ ໄດ້ຈູດວັງເຈົ້າ ວັງນາຍ ບ້ານເຮືອນ ຂອງທ້າວພຣະຍາ ແລະ ຣາສດອນ ພຣະເຈົ້າມະຫິນ຺ ໄດ້ພ່າຍຫໍ້ຫນີລົງໄປ ທາງເມືອງປາກລາຍ ສ່ວນເຈົ້າມຫາອຸປຣາດ ນັ້ນຖືກຂ້າຕາຍ ພວກຫໍ້ ແລະທະຫານເມືອງໄລ່ ພັກຢູ່ນະຄອນຫລວງພຣະບາງ ໓ ວັນ ຈຶ່ງຫນີອອກຈາກເມືອງ ຂຶ້ນຕາມລຳນ້ຳອູ ລັດໄປເມືອງໄລ່.

ເມື່ອພຣະເຈົ້າແຜ່ນດິນສຍາມ ຫົງຊາບເຫດ ທີ່ເກີດຂຶ້ນຢູ່ເມືອງຫລວງພຣະບາງ ຈຶ່ງໄດ້ໂຜດໃຫ້ພຣະຍາສູຣະສັກມົນຕຣີ ເປັນແມ່ທັບ ຍົກກອງທັບອອກຈາກກຣຸງເທພ ຂຶ້ນມາເມືອງຫລວງພຣະບາງ ເຖິງເມື່ອເດືອນ ໑໐ ສົມທົບກັບກອງທະຫານເມືອງຫລວງພຣະບາງ ຕິດຕາມກອງທະຫານເມືອງໄລ່ ແລະ ຫໍ້ ໄປຮອດເມືອງແຖງ ເມື່ອເຫດການສງົບແລ້ວ ແມ່ທັບສຍາມ ຈຶ່ງຍົກກອງທັບກັບກຣຸງເທພ.

ເມື່ອວັນທີ ໒໗ ມີນາ ຄ.ສ. ໑໘໘໘ ຝຣັ່ງໄດ້ທຳອະນຸສັນຍາ ກັບຂ້າຫລວງສຍາມ ປະຈຳ**ເມືອງ**ຫລວງພຣະບາງ ຕັ້ງສະຖານກົງສູນຝຣັ່ງ ທີ່ເມືອງຫລວງພຣະບາງ ໂດຍມີ ມ.ປາວີ ເປັນຫົວຫນ້າກົງສູນ.

ເມື່ອເສິກຫໍ້ສງົບແລ້ວ ພຣະເຈົ້າແຜ່ນດິນສຍາມ ໄດ້ປົດພຣະເຈົ້າມະຫິນ຺ ລົງເປັນພຣະເຈົ້າແຜ່ນດິນຈາງວາງ ແລ້ວອະພິເສກເຈົ້າຄຳສຸກ

ພຣະຣາຊໂອຣົດຂອງພຣະເຈົ້າມະຫິນ ຂຶ້ນເປັນພຣະເຈົ້າແຜ່ນດິນ ຖວາຍ
ພຣະນາມວ່າ ພຣະເຈົ້າສັກຣິນ ເມື່ອ :.ຄ.ສ. ໑໘໘໙.

<u>ຫ ມ າ ຍ ເ ຫ ດ</u> : ຄ.ສ. ໑໘໘໘ ຝຣັ່ງຍົກທະຫານ ຈາກຕົງ ແກງ ເຂົ້າຍຶດເອົາແຄວນ ໑໘ ຈຸໄທ ແລະ ເມືອງຊ່ອນ ທີ່ໂຮມຢູ່ກັບ ອານາຈັກຫລວງພຣະບາງ ນັ້ນໄປໂຮມເຂົ້າກັບ ອານາເຂດແກວເຫນືອ ທີ່ຕົກເປັນຫົວເມືອງຂຶ້ນ ຂອງຝຣັ່ງ ແລ້ວການທີ່ຝຣັ່ງ ຍຶດເອົາແຄວນ ໑໘ ຈຸໄທນີ້ ບໍ່ໄດ້ມີສັນຍາ ຣະຫວ່າງສຍາມ ແລະ ຝຣັ່ງ ເປັນຫລັກ ຖານແຕ່ຢ່າງໃດ ແຕ່ໄດ້ມາມີສັນຍາ ເມື່ອ ຄ.ສ. ໑໘໙໓ ຣະຫວ່າງ ປະເທດສຍາມ ແລະ ປະເທດຝຣັ່ງ ໂດຍຝຣັ່ງ ບັງຄັບໃຫ້ສຍາມ ຍົກ ດິນລາວຝັ່ງຊ້າຍ ແມ່ນ້ຳຂອງ ໃຫ້ແກ່ຝຣັ່ງ.

## ສຍາມ ແບ່ງ ຫົວເມືອງລາວ ອອກເປັນ ໔ ກອງໃຫຍ່

ຫລັງຈາກເສິກທີ່ ສງົບລົງແລ້ວປີນຶ່ງ ສຍາມຈຶ່ງແບ່ງແຍກຫົວເມືອງ ລາວ ທີ່ເປັນຫົວເມືອງຂຶ້ນ ຂອງສຍາມນັ້ນ ອອກເປັນກອງໆ ມີ ໔ ກອງ ໃຫຍ່ ສາຍເຫດທີ່ສຍາມແບ່ງແຍກລາວອອກເປັນກອງໆ ນັ້ນກໍເພື່ອຈະໄດ້ ຄວບຄຸມຫົວເມືອງລາວຕ່າງໆ ໃຫ້ໃຫ້ຊິດຍິ່ງຂຶ້ນ ດ້ວຍວ່າເວລານັ້ນ ຝຣັ່ງ ໄດ້ແກວໃຕ້ (ໂກແຊງຊີນ) ແກວເໜືອ (ຕັງແກງ) ເປັນຫົວເມືອງຂຶ້ນ ແລ້ວ ສ່ວນ ອານາມ ຫລື ແກວກາງ ເປັນຣັຖໃນຄວາມອາຣັກຂາ ຂເມນ ອັນເປັນຫົວເມືອງຂຶ້ນຂອງສຍາມ ກໍຍອມຢູ່ໃນອາຣັກຂາ ຂອງຝຣັ່ງ ໂດຍບໍ່ ໄດ້ບອກໃຫ້ ປະເທດສຍາມຮູ້ ອີກປະການ-ນຶ່ງ ອັງກິດ ກໍໄດ້ປະເທດພະມ້າ ຢ່າງສົມບູນແລ້ວ (ໄດ້ແຕ່ ຄ.ສ. ໑໘໘໕) ທາງທິດໃຕ້ຂອງສຍາມແຫລມ ມະລາຍູ ກໍຕົກເປັນຫົວເມືອງຂຶ້ນຂອງອັງກິດ ແລະ ອັງກິດ ຍັງຍຶດເອົາຫົວ ເມືອງຂຶ້ນ ບາງເມືອງ ຂອງສຍາມທີ່ຢູ່ຕິດຊາຍແດນ ພາກໃຕ້ ໄປເປັນຫົວ ເມືອງຂຶ້ນ ອັງກິດຕື່ມອີກ ສຍາມຈຶ່ງຢ້ານອັງກິດ ແລະຝຣັ່ງ ຈະເຂົ້າແຊກແຊງ ຍຶດເອົາຫົວເມືອງລາວຕ່າງໆ ທີ່ຕົກເປັນຫົວເມືອງຂຶ້ນ ຂອງສຍາມຢູ່ນັ້ນ ໄປ ຈາກສຍາມ ເຊິ່ງການທີ່ ສຍາມຢ້ານກົວນີ້ ຕໍ່ມາບໍ່ທໍ່ໃດປີ ກໍປາກົດເປັນ - ຄວາມຈິງ ດັ່ງເຮົາໄດ້ຮູ້ຢູ່ແລ້ວ.

ສຍາມແບ່ງຫົວເມືອງລາວ ທີ່ເປັນຫົວເມືອງຂຶ້ນຂອງສຍາມ ອອກເປັນ ໔ ກອງໃຫຍ່ ຄື :

໑-/ ຫົວເມືອງລາວຝ່າຍຕາເວັນອອກ.

໒-/ ຫົວເມືອງລາວຝ່າຍຕາເວັນອອກກ້ຳເໜືອ (ໄທວ່າຕາເວັນອອກສຽງເໜືອ)

໓-/ ຫົວເມືອງລາວຝ່າຍເໜືອ

໔-/ ຫົວເມືອງລາວຝ່າຍກາງ

ກ.- ຫົວເມືອງລາວຝ່າຍຕາເວັນອອກ ສຍາມໂຮມເອົາຫົວເມືອງເອກໄວ້ ໑໑ ເມືອງ ຄື :

໑-/ ເມືອງນະຄອນຈຳປາສັກ

໒-/ ເມືອງຊຽງແຕງ (ຝຣັ່ງຍົກໄປຂຶ້ນກັບຂເມນແຕ່ປີ ຄ.ສ. ໑໙໐໔ ຄື ລຸນຫລັງຈາກປະເທດລາວ ເຮົາໃນປັດຈຸບັນນີ້ ຕົກມາເປັນຫົວເມືອງຂຶ້ນຂອງຝຣັ່ງ ໄດ້ ໑໑ ປີ)

໓-/ ເມືອງແສນປາງ (ຝຣັ່ງຍົກໄປໃຫ້ຂເມນ ພ້ອມເມືອງຊຽງແຕງ ເວລານີ້ ຢູ່ໃນແຂວງ ຣັຕນະຄີຣີປະເທດຂເມນ)

໔-/ ເມືອງສີທັນດອນ

໕-/ ເມືອງອັຕປື

໖-/ ເມືອງສາຣະວັນ

໗-/ ເມືອງຄຳທອງໃຫຍ່ (ຢູ່ໃນເຂດແຂວງວາປີຄຳທອງພາກໃຕ້ຂອງລາວໃນເວລານີ້)

໘-/ ເມືອງສຸຣິນ (ຄືຈັງຫວັດສຸຣິນ ໃນເວລານີ້ )

໙-/ ເມືອງຂຸຂັນ (ຄືອຳເພີຂຸຂັນຂຶ້ນຈັງຫວັດສີສະເກດໃນເວລານີ້)

໑໐-/ ເມືອງສັງຂະ (ຄືອຳເພີສັງຂະ ຢູ່ເຂດຈັງຫວັດສຸຣິນເວລານີ້)

໑໑-/ ເມືອງເດດອຸດົມ (ຄືອຳເພີເດດອຸດົມ ຂຶ້ນສັງກັດຈັງຫວັດອຸບົນເວລານີ້)

ຫົວເມືອງເອກ ໑໑ ເມືອງນີ້ ແຕ່ລະເມືອງ ສຍາມໃຫ້ແຍກ ໄປຂຶ້ນກັບກຣຸງເທພ ຫົວເມືອງເອກແຕ່ລະເມືອງຍັງມີຫົວເມືອງໂທ ຫົວເມືອງຕຣີ ຫົວເມືອງຈັດຕວາ ຂຶ້ນສັງກັດຢູ່ກັບ ຫົວເມືອງເອກ ຄື :

໑-/ ຫົວເມືອງເອກ ເມືອງນະຄອນຈຳປາສັກ ມີເມືອງທີ່ຂຶ້ນຕໍ່ ໑໘ ເມືອງຄື :

໑-/ ເມືອງຄຳທອງນ້ອຍ(ຢູ່ໃນເຂດແຂວງວາປີຄຳທອງ ພາກໃຕ້ຂອງລາວເວລານີ້)

໒-/ ເມືອງເຊລຳເພົາ (ຢູ່ໃນເຂດແຂວງສີທັນດອນ ພາກໃຕ້ຂອງລາວເວລານີ້)

໓-/ ເມືອງໂພນທອງ (ຢູ່ໃນເຂດແຂວງຈຳປາສັກ ພາກໃຕ້ຂອງລາວເວລານີ້ )

໔-/ ເມືອງມະຄອນເພັງ (ຢູ່ໃນເຂດແຂວງວາປີຄຳທອງ ພາກໃຕ້ຂອງລາວ ເວລານີ້)

໕-/ ເມືອງກູສຸມານຄີຣີ (ຢູ່ໃນເຂດແຂວງຈຳປາສັກ ໃນ ປັດຈຸບັນນີ້)

໖-/ ເມືອງວາປີໄພບູນ (ຢູ່ໃນເຂດແຂວງວາປີຄຳທອງເວລານີ້)

໗-/ ເມືອງມະທຸຣະສາພົນ (ຍັງບໍ່ຮູ້ວ່າຢູ່ແຂວງໃດແຕ່ຢູ່ທາງພາກໃຕ້ຂອງລາວ)

໘-/ ເມືອງສະພັງພູຜາ (ຢູ່ໃນເຂດແຂວງສີທັນດອນ ເວລານີ້ເປັນບ້ານ)

໙-/ ເມືອງອຸທຸມທາຣາ (ຢູ່ໃນແຂວງຈຳປາສັກທຸກວັນນີ້)

໑໐-/ ເມືອງໂຄນປຣະຄິດ ຢູ່ໃນເຂດອຳເພີບູນທຣິກ ຈັງຫວັດອຸບົນເວລານີ້)

໑໑-/ ເມືອງສຸດວາຣີ (ເປັນບໍ່ຮູ້ວ່າເວລານີ້ຊື່ຈັ່ງໃດ ແຕ່ຄົງຈະຢູ່ໃນເຂດແຂວງ ສາຣະວັນ)

໑໒-/ ເມືອງສຸວັນຄີຣີ (ຢູ່ໃນເຂດແຂວງເຊໂດນ ພາກໃຕ້ຂອງລາວເວລານີ້)

໑໓-/ ເມືອງສູດນະຄອນ (ຍັງບໍ່ຮູ້ວ່າເປັນເມືອງໃດ ແຕ່ຄົງຈະຢູ່ໃນເຂດແຂວງຣັຕນະຄີຣີຂອງຂເມນເວລານີ້ ແຕ່ກ່ອນຊື່ວ່າ ບ້ານດອນສະແບງ)

໑໔-/ ເມືອງວາຣິນຊຳຣາບ (ຄືອຳເພີວາຣິນຊຳຣາຍຂຶ້ນຈັງຫວັດອຸບົນ ວລານີ້)

໑໕-/ ເມືອງບົວບຸນທຣິກ (ຄືອຳເພີບຸນທຣິດ ຂຶ້ນຈັງຫວັດອຸບົນ ວລານີ້)

໔-/ ຫົວເມືອງເອກ ເມືອງສີທັນດອນ ເມືອງທີ່ຂຶ້ນຕໍ່ ຄື ເມືອງມູລປາໂມກ (ຢູ່ໃນເຂດແຂວງ ສີທັນດອນ ວລານີ້)

໖-/ ຫົວເມືອງເອກ ເມືອງຄຳທອງໃຫຍ່ ເມືອງທີ່ຂຶ້ນຕໍ່ ຄືເມືອງສະພາດ (ຍັງບໍ່ຮູ້ວ່າ ຢູ່ແຂວງໃດ ແຕ່ຢູ່ທາງພາກໃຕ້ຂອງລາວ)

໕-/ ຫົວເມືອງເອກ ເມືອງສຸຣິນ ມີເມືອງໃນສັງກັດຢູ່ ໒ ເມືອງໄດ້ແກ່:

໑-/ ເມືອງສຸຣະພິນນິຄົມ (ຕໍ່ມາຍຸບໂຮມເຂົ້າເປັນອຳເພີເມືອງສຸຣິນ ໃນປັດຈຸບັນນີ້)

໒-/ ເມືອງຊຸມພົນບູນີ (ຄືອຳເພີຊຸມພົນບູຣີ ຂຶ້ນກັບຈັງຫວັດສຸຣິນ ໃນປັດຈຸບັນ)

໕-/ ຫົວເມືອງເອກ ເມືອງສັງຂະ ມີເມືອງທີ່ຂຶ້ນຕໍ່ຢູ່ ໓ ເມືອງ ຄື :

໑-/ ເມືອງພົມຂັນ ຫລື ຈົງກັນ (ວລານີ້ຕົກໄປເປັນຂອງຂເມນຢູ່ທາງທິດໃຕ້ຂອງຈັງຫວັດສຸຣິນ)

໒-/ ເມືອງສີຂໍຣະພູມພິສັຍ (ຄືອຳເພີສີຂໍຣະພູມ ຂຶ້ນຕໍ່ຈັງຫວັດສຸຣິນ ໃນປັດຈຸບັນນີ້)

໓-/ ເມືອງກັນທຣາຣົມ (ໄດ້ແກ່ອຳເພີກັນທຣາຣົມ ຂຶ້ນກັບ
ຈັງຫວັດ ສີສະເກດ ເວລານີ້)

໗-/ ຫົວເມືອງເອກ ເມືອງຊຸຣັນ ມີເມືອງຂຶ້ນຕໍ່ຢູ່ ໔ ເມືອງຄື :

໑-/ ເມືອງມະໂນໄພຣ (ຍັງບໍ່ຮູ້ວ່າເປັນເມືອງໃດເວລານີ້)
໒-/ ເມືອງກັນທຣະລັກ (ຄືອຳເພີກັນທຣະລັກ ຂຶ້ນກັບຈັງຫວັດ
ສີສະເກດ ໃນປັດຈຸບັນ)
໓-/ ເມືອງຊຸຫູມພອນພິສັຍ (ຄືອຳເພີຊຸຫູມພອນພິສັຍ ຂຶ້ນກັບ
ຈັງຫວັດ ສີສະເກດ ປັດຈຸບັນນີ້)
໔-/ ເມືອງພູວະດົນສະອາງ (ບໍ່ຮູ້ວ່າປ່ຽນເປັນຊື່ໃດ ຄົງຈະ
ຢູ່ໃນຈັງຫວັດ ສີສະເກດປັດຈຸບັນ)

ສ່ວນຫົວເມືອງເອກ ເມືອງຊຽງແຕງ, ເມືອງແສນປາງ, ເມືອງອັຕະປື, ເມືອງສາຣະວັນ, ເມືອງເດດຊຸດົມ ບໍ່ປາກົດວ່າມີເມືອງໃດ ຂຶ້ນຕໍ່ ແລະ ສຍາມກໍໄດ້ແຍກຫົວເມືອງດັ່ງກ່າວ ໄປຂຶ້ນກັບກຣຸງເທພ ໂດຍກົງ.

ຫົວເມືອງລາວ ຝ່າຍຕາເວັນອອກ ທີ່ໂຮມເອົາຫົວເມືອງເອກໄວ້ ໑໑ ເມືອງ, ແລະ ຫົວເມືອງໂທ, ຫົວເມືອງຕຣີ, ຫົວເມືອງຈັຕວາ ທີ່ຂຶ້ນຕໍ່ຫົວເມືອງເອກອີກ ໒໗ ເມືອງ ສຍາມໄດ້ແຕ່ງຕັ້ງ ຂ້າຫລວງຂຶ້ນມາປົກຄອງປະຈຳ ຮຽກຕຳແໜ່ງຂ້າຫລວງວ່າ "ຂ້າຫລວງປະຈຳຫົວເມືອງລາວ ຝ່າຍຕາເວັນອອກ" ເວລານັ້ນຂ້າຫລວງ ຄື :ພຣະຍາ ມຫາອຳມາດຍາທິບໍດີ ພຣະພິສນຸເທບ (ຊວງ) ພ້ອມທັງຂ້າຫລວງຮອງ ອີກຫລາຍທ່ານ

ໄດ້ຕັ້ງກອງວ່າຣາຊການ ປົກຄອງ ຢູ່ທີ່ນະຄອນຈຳປາສັກ.

໒-/ ຫົວເມືອງລາວຝ່າຍ ຕາເວັນອອກກ້ຳເໜືອ (ໄທວ່າຕາເວັນອອກສຽງເໜືອ) ໂຮມເອົາຫົວເມືອງເອກໄວ້ ໑໔ ເມືອງຄື :

໑-/ ເມືອງອຸບົນຣາຊທານີ (ຄືຈັງຫວັດອຸບົນຣາຊທານີໃນປັດຈຸບັນນີ້)

໔-/ ເມືອງຍະໂສທອນ (ຄືອຳເພີຍະໂສທອນ ຂຶ້ນສັງກັດຈັງຫວັດອຸບົນ ໃນເວລານີ້)

໓-/ ເມືອງຮ້ອຍເອັດ (ຄືຈັງຫວັດຮ້ອຍເອັດ ໃນປັດຈຸບັນນີ້)

໔-/ ເມືອງສຸວັນນະພູມ(ຄືອຳເພີສຸວັນນະພູມ ຂຶ້ນສັງກັດຈັງຫວັດຮ້ອຍເອັດ ໃນປັດຈຸບັນນີ້)

໕-/ ເມືອງກາລະສິນ (ຄືຈັງຫວັດກາລະສິນ ໃນປັດຈຸບັນນີ້)

໖-/ ເມືອງມະຫາສາຣະຄາມ (ຄືຈັງຫວັດມຫາສາຣະຄາມ ໃນປັດຈຸບັນນີ້)

໗-/ ເມືອງພູແລ່ນຊ້າງ (ຄືອຳເພີຍາງຕລາດ ຂຶ້ນສັງກັດຈັງຫວັດກາລະສິນ ໃນປັດຈຸບັນນີ້)

໘-/ ເມືອງກົມລາສັຍ (ຄືອຳເພີກົມລາສັຍ ຂຶ້ນສັງກັດຈັງຫວັດກາລະສິນ ໃນປັດຈຸບັນນີ້)

໙-/ເມືອງສີສະເກດ (ໄດ້ແກ່ຈັງຫວັດສີສະເກດ ໃນປັດຈຸບັນນີ້)

໑໐-/ ເມືອງເຂັມມະຣາດ (ໄດ້ແກ່ອຳເພີເຂັມມະຣາດຂຶ້ນ ຈັງຫວັດອຸບົນໃນປັດຈຸບັນ)

໑໑-/ ເມືອງສອງຄອນ ດອນດົງ (ຄືເມືອງສອງຄອນໃນ ແຂວງສວັນນະເຂດ ໃນປັດຈຸບັນ)

໑໒-/ ເມືອງນອງ (ຢູ່ໃນແຂວງສວັນນະເຂດ ໃນປັດຈຸບັນນີ້)

ຫົວເມືອງເອກ ໑໒ ເມືອງນີ້ ແຕ່ລະເມືອງ ສຍາມໄດ້ໃຫ້ແຍກ ໄປຂຶ້ນກັບກຣຸງເທບ ນອກຈາກນັ້ນ ຫົວເມືອງເອກ ແຕ່ລະເມືອງ ຍັງມີຫົວເມືອງໂທ, ຫົວເມືອງຕຣີ, ຫົວເມືອງຈັຕວາ ທີ່ຂຶ້ນກັບຫົວເມືອງເອກ ອີກ ຄື :

໑-/ ຫົວເມືອງເອກ ເມືອງອຸບົນຣາຊທານີ ມີເມືອງທີ່ຂຶ້ນຕໍ່ຢູ່ ໗ ເມືອງຄື :

໑-/ ເມືອງເສມາງຄະນິຄົມ (ເວລານີ້ຍຸບເປັນຕາແສງ ຢູ່ໃນເຂດອຳເພີ ອຳນາດຈະເຣີນ ອຸບົນ

໒-/ ເມືອງພິມູນມັງສາຫານ (ຄືອຳເພີພິບູນມັງສາຫານ ໃນປັດຈຸບັນນີ້)

໓-/ ເມືອງຕຣະການພືດຜົນ (ໄດ້ແກ່ອຳເພີຕຣະການ ພືດຜົນ ທີ່ຂຶ້ນຕໍ່ຈັງຫວັດ ອຸບົນເວລານີ້)

໔-/ ເມືອງມຫາຊນະຊັຍ (ຄືອຳເພີມຫາຊນະຊັຍ ຂຶ້ນ ຈັງຫວັດອຸບົນເວລານີ້)

໕-/ ເມືອງຊານູມານມົນທົນ (ໄດ້ແກ່ອຳເພີ ຊານູມານ ຂຶ້ນຕໍ່ຈັງຫວັດອຸບົນ ເວລານີ້)

໖-/ ເມືອງພະນານິຄົມ (ຄືອຳເພີພະນາ ຂຶ້ນຕໍ່ຈັງຫວັດອຸບົນເວລານີ້)

໗-/ ເມືອງກະເສມສີມາ (ເວລານີ້ຍຸບເປັນຕາແສງ ຂຶ້ນຕໍ່ອຳເພີ ຕຣະການພືດຜົນ ອຸບົນ)

໘-/ ຫົວເມືອງເອກ ເມືອງຮ້ອຍເອັດ ມີເມືອງຂຶ້ນຕໍ່ເມືອງດຽວ ຄື ເມືອງ ທະວັດບູຣີ (ຄືອຳເພີທະວັດບູຣີ ເວລານີ້)

໙-/ ຫົວເມືອງເອກ ເມືອງສຸວັນນະພູມ ມີເມືອງທີ່ຂຶ້ນຕໍ່ຢູ່ ໔ ເມືອງຄື :

໑-/ ເມືອງກະເສດວິສັຍ (ຄືອຳເພີກະເສດວິສັຍ ຂຶ້ນສັງກັດຈັງຫວັດຮ້ອຍເອັດ ເວລານີ້)

໒-/ ເມືອງພຣະນົມໄພຣ ແດນມະລິກ (ຄືອຳເພີພຣະນົມໄພຣ ຂຶ້ນຕໍ່ຈັງຫວັດຮ້ອຍເອັດ ເວລານີ້)

໓-/ ເມືອງຈະຕຸຣະພັກພິມານ (ຄືອຳເພີຈະຕຸຣະພັກພິມານ ຂຶ້ນຕໍ່ຈັງຫວັດຮ້ອຍເອັດ ເວລານີ້)

໔-/ ເມືອງພະຍັກຄະພູມພິສັຍ (ຄືອຳເພີພະຍັກຄະພູມພິສັຍ ຂຶ້ນຕໍ່ຈັງຫວັດ ມຫາສາຣະຄາມ ເວລານີ້)

໔-/ ຫົວເມືອງເອກ ເມືອງກາລະສິນ ມີເມືອງທ້ອນຕໍ່ ໕ ເມືອງຄື :

໑-/ ເມືອງແຊງບາດານ (ບໍ່ຮູ້ວ່າແມ່ນເມືອງໃດ ໃນປັດຈຸບັນ ແຕ່ກ່ອນ ຊື່ວ່າບ້ານກະດານ)

໒-/ ເມືອງກຸສິນາຣາຍ (ເວລານີ້ເປັນອຳເພີ ຢູ່ໃນເຂດຈັງຫວັດກາລະສິນ)

໓-/ ເມືອງທ່າຂອນຍາງ (ຍຸບໄປໂຮມກັບເມືອງ ພູແລ່ນຊ້າງ ຕັ້ງເປັນອຳເພີ ຍາງຕລາດ ຂຶ້ນຕໍ່ຈັງຫວັດກາລະສິນ ເວລານີ້)

໔-/ ເມືອງກັນທຣະວິຊັຍ (ເວລານີ້ເປັນອຳເພີ ຢູ່ໃນເຂດຈັງຫວັດມຫາ ສາຣະຄາມ)

໕-/ ເມືອງສະຫັດສະຂັນ (ເວລານີ້ເປັນອຳເພີ ຂຶ້ນຢູ່ກັບຈັງຫວັດກາລະສິນ)

໕-/ ຫົວເມືອງເອກ ເມືອງມຫາສາຣະຄາມ ມີເມືອງທ້ອນຕໍ່ ໒ ເມືອງຄື :

໑-/ ເມືອງວາປີປະທຸມ (ເວລານີ້ເປັນອຳເພີ ຢູ່ໃນຈັງຫວັດ ມຫາສາຣະຄາມ)

໒-/ ເມືອງໂກສຸມພິສັຍ (ເວລານີ້ ເປັນອຳເພີ ຢູ່ໃນຈັງຫວັດ ມະຫາສາຣະຄາມ)

໖-/ ຫົວເມືອງເອກ ເມືອງກົມລາສັຍ ມີເມືອງທີ່ຂຶ້ນຕໍ່ເມືອງດຽວ ຄືເມືອງ ເສລະພູມ (ເວລານີ້ ເປັນອຳເພີ ຂຶ້ນຕໍ່ຈັງຫວັດຮ້ອຍເອັດ)

໗-/ ຫົວເມືອງເອກ ເມືອງສີສະເກດ ມີເມືອງທີ່ຂຶ້ນຕໍ່ເມືອງດຽວ ຄືເມືອງ ຣາສີສະໄຫລ ເວລານີ້ເປັນອຳເພີ ຢູ່ໃນເຂດຈັງຫວັດສີສະເກດ)

໘-/ ຫົວເມືອງເອກ ເມືອງເຂມມະຣາດ ມີເມືອງຂຶ້ນຕໍ່ຢູ່ ໔ ເມືອງ ຄື:

໑-/ ເມືອງໂຂງຈຽມ (ເວລານີ້ເປັນອຳເພີ ຂຶ້ນຕໍ່ຈັງຫວັດອຸບົນ)

໒-/ ເມືອງສະເມັຽະ ( ແຕ່ກ່ອນຊື່ວ່າບ້ານຊ່າງຕູ ຢູ່ທາງຝັ່ງຊ້າຍ ແມ່ນ້ຳຂອງ ໃກ້ເມືອງຄຳທອງໃຫຍ່)

໓-/ ເມືອງຄຳເຂື່ອນແກ້ວ (ຕໍ່ມາຍຸບເມືອງຄຳເຂື່ອນແກ້ວລົງເປັນ ຕາແສງ ເອົາຊື່ໄປຮຽກ ຄຳເພີລຸມພຸກ ເປັນອຳເພີຄຳເຂື່ອນແກ້ວ ຈົນເຖິງປັດຈຸບັນນີ້ ດັ່ງນັ້ນອຳເພີຄຳເຂື່ອນແກ້ວ ໃນຈັງຫວັດອຸບົນ ເວລານີ້ ຈຶ່ງມາຈາກ ອຳເພີລຸມພຸກ ບໍ່ແມ່ນເມືອງຄຳເຂື່ອນແກ້ວເກົ່າ)

໔-/ ເມືອງອຳນາດຈະເຣີນ (ເວລານີ້ເປັນອຳເພີ ຢູ່ໃນເຂດຈັງຫວັດອຸບົນ)

໙-/ ຫົວເມືອງເອກ ເມືອງສອງຄອນດອນດົງ ມີເມືອງທີ່ຂຶ້ນຕໍ່ຢູ່ ໓ ເມືອງ ຄື :

໑-/ເມືອງພະລານ (ຢູ່ໃນເຂດແຂວງສວັນນະເຂດປັດຈຸບັນ)

໒-/ເມືອລຳເນົາ ຫນອງປຣື (ປັດຈຸບັນບໍ່ຮູ້ວ່າແມ່ນເມືອງໃດ ແຕ່ຄົງຈະຢູ່ໃນແຂວງ ສວັນນະເຂດ ປະເທດລາວ ເວລານີ້)

໓-/ເມືອງພອງ (ຢູ່ໃນເຂດແຂວງສວັນນະເຂດ ໃນປັດຈຸບັນນີ້)

໑໐-/ ຫົວເມືອງເອກ ເມືອງມອງ ມີເມືອງຫ້ອມຕໍ່ ໒ ເມືອງຄື :

໑-/ ເມືອງພິນ (ຄືເມືອງພິນ ໃນແຂວງສວັນນະເຂດ ເວລານີ້)

໒-/ ເມືອງຕະໂປນ (ໄດ້ແກ່ເມືອງເຊໂປນ ແຂວງສວັນນະເຂດໃນປັດຈຸບັນນີ້)

ສ່ວນຫົວເມືອງເອກ ຍະໂສທອນ ແລະ ເມືອງພູແລ່ນຊ້າງ ບໍ່ປາກົດວ່າມີຫົວເມືອງໃດຂຶ້ນຕໍ່ ແລະ ສຍາມກໍໄດ້ແຍກໄປຂຶ້ນກັບກຣຸງເທບໂດຍກົງ.

ຫົວເມືອງລາວ ຝ່າຍກາວັນອອກກ້ຳເຫນືອ ອັນມີຫົວເມືອງເອກໂຮມຢູ່ ໑໒ ເມືອງ ຫົວເມືອງໂທ, ຫົວເມືອງຕຣີ ແລະ ຫົວເມືອງຈັຕວາຂຶ້ນຕໍ່ຫົວເມືອງເອກ ອີກ ໓໐ ເມືອງນີ້ ສຍາມໄດ້ແຕ່ງຕັ້ງຂ້າຫລວງ ມາປົກຄອງປະຈຳ ຮຽກຕຳແຫນ່ງຂ້າຫລວງວ່າ "ຂ້າຫລວງປະຈຳຫົວເມືອງລາວຝ່າຍຕາວັນອອກກ້ຳເຫນືອ" ເວລານັ້ນ ຂ້າຫລວງ ຄື : ພຣະຍາຣາດເສນາ (ທັດໄກຣເລີກ) ກອງການປົກຄອງ ຫົວເມືອງລາວຝ່າຍຕາວັນອອກກ້ຳເຫນືອ ຕັ້ງຢູ່ທີ່ເມືອງອຸບົນ ສ່ວນຂ້າຫລວງປະຈຳເມືອງອຸບົນ ແມ່ນ

ພຣະຍາພັກດີນະຣົງ (ສິນໄກຣເລີກ).

໓. ຫົວເມືອງລາວຝ່າຍເໜືອ ສຍາມໂຮມເອົາຫົວເມືອງເອກໄວ້ ໑໖ ເມືອງ ຄື :

໑-/ ເມືອງໜອງຄາຍ (ຄືຈັງຫວັດໜອງຄາຍ ເວລານີ້)

໒-/ ເມືອງຊຽງຂວາງ

໓-/ ເມືອງບໍຣິຄັນທະນິຄົມ

໔-/ ເມືອງຄຳເກີດ (ຢູ່ໃນເຂດແຂວງຄຳມ່ວນ ເວລານີ້)

໕-/ ເມືອງຄຳມ່ວນ

໖-/ ເມືອງມຸກດາຫານ (ເວລານີ້ເປັນອຳເພີຂຶ້ນຕໍ່ຈັງຫວັດນະຄອນ ພຣະນົມ)

໗-/ ເມືອງນະຄອນພຣະນົມ (ຄືຈັງຫວັດນະຄອນພຣະນົມເວລານີ້)

໘-/ ເມືອງທ່າອຸເທນ (ຄືອຳເພີທ່າອຸເທນ ຂຶ້ນຈັງຫວັດນະຄອນພຣະ ນົມ ປັດຈຸບັນນີ້)

໙-/ ເມືອງຊັຍບຸຣີ (ເວລານີ້ເປັນຕາແສງ ຢູ່ໃນເຂດອຳເພີທ່າອຸເທນ)

໑໐-/ ເມືອງໂພນພີສັນ (ຄືອຳເພີໂພນພີສັຍ ຂຶ້ນຕໍ່ຈັງຫວັດໜອງຄາຍ ໃນປັດຈຸບັນ)

໑໑-/ ເມືອງສະກົນນະຄອນ (ຄືຈັງຫວັດສະກົນນະຄອນ ປັດຈຸບັນນີ້)

໑໒-/ ເມືອງກະມຸດທາສັຍ (ຄືອຳເພີໜອງບົວລຳພູ ຂຶ້ນຢູ່ໃນຈັງຫວັດ ອຸດອນປັດຈຸບັນນີ້)

໑៧-/ ເມືອງໜອງຫານໃຫ່ຍ (ຄຳອຳເພີໜອງຫານ ຈັງ ຫວັດອຸດອນ ວເລານີ້)

໑໘-/ ເມືອງຂອນແກ່ນ (ຄືຈັງຫວັດຂອນແກ່ນ ໃນປັດຈຸບັນນີ້)

໑៩-/ ເມືອງລົ່ມສັກ (ຄືອຳເພີລົ່ມສັກ ຢູ່ໃນເຂດຈັງຫວັດເພັດ ຊະບູນວເລານີ້)

໑៦-/ ເມືອງບູຣີຣັມ (ຄືຈັງຫວັດບູຣີຣັມ ໃນປັດຈຸບັນນີ້)

ຫົວເມືອງເອກ ໑៦ ເມືອງນີ້ ແຕ່ລະເມືອງສຍາມໃຫ້ແຍກ ໄປ ຂຶ້ນກັບກຣຸງເທບ ນອກຈາກນັ້ນຫົວເມືອງເອກແຕ່ລະເມືອງ ຍັງມີຫົວເມືອງ ໂທ, ຫົວເມືອງຕຣີ, ແລະຫົວເມືອງຈັດວາ ທີ່ຂຶ້ນກັບຫົວເມືອງເອກ ອີກ ៦៦ ເມືອງຄື :

໑-/ ຫົວເມືອງເອກ ເມືອງໜອງຄາຍມີເມືອງທີ່ຂຶ້ນຕໍ່ຢູ່ ៦ ເມືອງ ຄື :

໑-/ ເມືອງວຽງຈັນ (ວເລານັ້ນເປັນເມືອງຮ້າງ ມີຖານະ ເປັນຫົວເມືອງຈັດວາ ຂຶ້ນຕໍ່ສູນກາງການປົກຄອງ ຫົວ ເມືອງລາວຝ່າຍເໜືອ ຂອງ ສຍາມ ທີ່ເມືອງໜອງ ຄາຍ)

໒-/ ເມືອງເມືອງພານພ້າວ (ວເລານີ້ເປັນຕາແສງ ຢູ່ໃນ ເຂດອຳເພີສີຊຽງໃໝ່ ຄືນລະຝັ່ງຂອງກັບນະຄອນວຽງ ຈັນ)

໓-/ ເມືອງຊຽງຄານ (ເວລານີ້ເປັນອຳເພີ ຢູ່ໃນເຂດຈັງຫວັດເລີຍ)

໔-/ ເມືອງກຸມພະວາປີ (ເວລານີ້ເປັນອຳເພີ ຂຶ້ນຕໍ່ຈັງຫວັດອຸດອນ)

໕-/ ເມືອງຣັຕນະວາປີ (ເວລານີ້ເປັນຕາແສງ ຢູ່ໃນເຂດອຳເພີ ໂພນພິສັຍ)

໖-/ ເມືອງທຸຣະຄົມຫົງສຖິດ (ຄືເມືອງທຸຣະຄົມ ຫລື ບ້ານເກີນໃນ ແຂວງວຽງຈັນ ເວລານີ້)

໒-/ ຫົວເມືອງເອກ ເມືອງຊຽງຂວາງ ມີເມືອງທີ່ຂຶ້ນຕໍ່ ຢູ່ ໕ ເມືອງຄື :

໑-/ ເມືອງແສນ

໒-/ ເມືອງວັນ

໓-/ ເມືອງຊຸຍ

໔-/ ເມືອງຈິມ

໕-/ ເມືອງພານ

໓-/ ຫົວເມືອງເອກ ເມືອງບໍຣິຄັນ-ທະນິຄົມ ມີເມືອງຂຶ້ນຕໍ່ເມືອງດຽວ ຄື ເມືອງປຣະຊຸມ (ເວລານີ້ເປັນບ້ານຢູ່ໃກ້ເມືອງປາກຊັນ)

໔-/ ຫົວເມືອງເອກ ເມືອງຄຳມ່ວນ ຄື ເມືອງທີ່ຂຶ້ນຕໍ່ຢູ່ ໔ ເມືອງ ຄື :

໑-/ ເມືອງມຫາຊັຍກອງແກ້ວ (ຄືເມືອງມຫາຊັຍ ເວລານີ້)

໒-/ ເມືອງຊຸມພອນ (ແກ້ງກອກ)

໓-/ ເມືອງວັງມົນ (ຍັງບໍ່ຮູ້ວ່າແມ່ນເມືອງໃດ ແຕ່ຄົງຈະຢູ່ໃນ

ເຂດແຂວງຄຳມ່ວນ)

໔-/ ເມືອງທາງ (ສິງໃສ່ວ່າ ຈະເປັນເມືອງໄກ ໃນປັດຈຸບັນ ເມືອງນີ້ຢູ່ທາງທິດຕາເວັນອອກກ້ຳເໜືອ ຂອງເມືອງປາກ ເຊບັ້ງໄຟ ແຂວງຄຳມ່ວນ)

໕-/ ຫົວເມືອງເອກ ເມືອງມຸກດາຫານ ມີເມືອງຂຶ້ນຕໍ່ຢູ່ ໒ ເມືອງຄື :

໑-/ ເມືອງພາລຸ-ກາກອນພູມ (ເວລານີ້ຍຸບແລ້ວບໍ່ຮູ້ວ່າແມ່ນເມືອງໃດ ແຕ່ກ່ອນຊື້ບ້ານທ່າຊາຍ ອາດຈະຢູ່ໃນເຂດ ອຳເພີມຸກດາຫານ ໃນປັດຈຸບັນນີ້)

໒-/ເມືອງໜອງສູງ (ເວລານີ້ເປັນຕາແສງ ຂຶ້ນຕໍ່ອຳເພີຄຳຊະອີ ຈັງຫວັດນະຄອນພຣະນົມ)

໖-/ ຫົວເມືອງເອກ ເມືອງນະຄອນພຣະນົມ ມີເມືອງທີ່ຂຶ້ນຕໍ່ຢູ່ ໕ ເມືອງຄື :

໑-/ ເມືອງວັງ (ບໍ່ຮູ້ວ່າແມ່ນເມືອງໃດ ໃນປັດຈຸບັນນີ້)

໒-/ ເມືອງເຣນູນະຄອນ ຂຶ້ນຈັງຫວັດນະຄອນພຣະນົມໃນປັດຈຸບັນ

໓-/ ເມືອງຣາມຣາດ (ເວລານີ້ເປັນຕາແສງ ຢູ່ໃນເຂດອຳເພີ ທ່າອຸເທນ)

໔-/ ເມືອງອາດສາມາດ (ເວລານີ້ຍຸບເປັນຕາແສງ ຢູ່ໃນເຂດອຳເພີເມືອງນະຄອນພຣະນົມ)

໕-/ ເມືອງອາກາດອຳນວຍ (ວເລານີ້ເປັນອຳເພີອົ້ນຢູ່ ໃນຂເດຈັງ ຫວັດສະກົນນະຄອນ)

໗-/ ຫົວເມືອງເອກ ເມືອງສະກົນນະຄອນ ມີເມືອງທີ່ອົ້ນຕໍ່ຢູ່ ໗ ເມືອງ ຄື :

໑-/ ເມືອງກຸສຸມານມົນທົນ (ຄືອຳເພີກຸສຸມານ ຈັງຫວັດສະກົນນະ ຄອນເວລານີ້)

໒-/ ເມືອງພັນຣະນານິຄົມ (ເວລານີ້ເປັນອຳເພີ ຢູ່ໃນເຂດຈັງຫວັດ ສະກົນ)

໓-/ ເມືອງວາຣິດພູມ (ເວລານີ້ເປັນອຳເພີ ອົ້ນຢູ່ໃນເຂດຈັງຫວັດ ສະກົນ)

໔-/ ເມືອງສວ່າງດິນແດນ (ຄືອຳເພີສວ່າງແດນດິນ ອົ້ນຕໍ່ຈັງຫວັດ ສະກົນໃນປັດຈຸບັນ)

໕-/ ເມືອງໂພທິໄພຣສານ (ເວລານີ້ເປັນຕາແສງ ຢູ່ໃນເຂດອຳ ເພີ ເມືອງສະກົນ)

໖-/ ເມືອງຈຳປາຊົນນະບົດ (ເວລານີ້ເປັນຕາແສງຣຽກວ່າ ຕາ ແສງພັງໂຄນ)

໗-/ ເມືອງວານອນວິນາດ (ຄືອຳເພີວານອນວິນາດ ອົ້ນຕໍ່ຈັງຫວັດ ສະກົນ ໃນປັດຈຸບັນນີ້)

໘-/ ຫົວເມືອງເອກ ເມືອງຂອນແກ່ນ ມີເມືອງຂຶ້ນຢູ່ໃນສັງກັດ ໔ ເມືອງ ໄດ້ແກ່ :

໑-/ ເມືອງພົນ (ເວລານີ້ເປັນອຳເພີ ຢູ່ໃນເຂດຈັງຫວັດຂອນແກ່ນ)

໒-/ ເມືອງພູວຽງ (ເວລານີ້ເປັນອຳເພີ ຢູ່ໃນເຂດຈັງຫວັດຂອນ ແກ່ນ)

໓-/ ເມືອງມັນຈາຄີຣີ (ເວລານີ້ເປັນອຳເພີ ຢູ່ໃນເຂດຈັງຫວັດຂອນ ແກ່ນ)

໘-/ ເມືອງຄຳພອງນ້ອຍ (ຄືອຳເພີນ້ອຍ (ຄືອຳເພີນ້ຳພອງຂຶ້ນຕໍ່ຈັງຫວັດຂອນແກນ ວເລານີ້)

໙-/ **ຫົວເມືອງເອກ** ເມືອງລົ່ມສັກ ມີເມືອງຂຶ້ນຕໍ່ເມືອງດຽວ ຄືເມືອງເລີຍ (ຄືຈັງຫວັດເລີຍ ໃນເວລານີ້)

໑໐-/ ຫົວເມືອງເອກ ເມືອງບຸຣີຣັມ ມີເມືອງໃນສັງກັດເມືອງດຽວ ຄື ເມືອງ ນາງຮອງ (ຄືອຳເພີນາງຮອງ ຂຶ້ນຕໍ່ຈັງຫວັດບຸຣີຣັມ ເວລານີ້)

ຫົວເມືອງເອກ ບາງເມືອງ ເຊັ່ນ : ເມືອງຄຳເກີດ, ເມືອງທ່າອຸເທນ, ເມືອງຊັຍບູຣີ, ເມືອງໂພນພີສັຍ, ເມືອງກະມຸດທາສັຍ, ເມືອງໜອງຫານໃຫຍ ບໍ່ປາກົດວ່າມີຫົວເມືອງໃດຂຶ້ນຕໍ່ ແລະ ຫົວເມືອງເອກເຫລົ່ານີ້ ສຍາມກໍໄດໃຫ້ໄປຂຶ້ນກັບ ກຸຮູງເທບ ໂດຍກົງ.

ຫົວເມືອງລາວຝ່າຍເໜືອ ທີ່ໂຮມຫົວເມືອງເອກໄວ້ ໑໖ ເມືອງ ຫົວເມືອງໂທ ຫົວເມືອງຕຣີ ແລະ ຫົວເມືອງຈັດຕວາ ທີ່ຂຶ້ນຢູ່ໃນສັງກັດ ກັບຫົວເມືອງເອກອີກ ໓໖ ເມືອງໂຮມເປັນ ໔໖ ເມືອງນີ້ ສຍາມໄດແຕ່ງຕັ້ງຂ້າຫລວງ ຂຶ້ນມາປົກຄອງປະຈຳຮຽກຕຳແໜ່ງຂ້າຫລວງວ່າ "ຂ້າຫລວງປະຈຳຫົວເມືອງລາວຝ່າຍເໜືອ" ເວລານັ້ນ ຂ້າຫລວງ ຄື ພຣະຍາສຸຣິຍະເດດ ວິເສດລິດ (ຈັນ ອິນທຣະກຳແຫງ) ຂ້າຫລວງສຍາມໄດຕັ້ງກອງວ່າ ຣາຊການປົກຄອງ ຢູ່ທີ່ ເມືອງໜອງຄາຍ.

໗.-/ ຫົວເມືອງລາວຝ່າຍກາງ ສຍາມໂຮມເອົາຫົວເມືອງເອກໄວ້ ມີ ເມືອງຄື :

໑-/ ເມືອງນະຄອນຣາຊສີມາ (ຄືຈັງຫວັດນະຄອນຣາຊສີມາ ຫລື ໂຄຣາດໃນເວລານີ້)

໒-/ ເມືອງຊົນນະບົດ (ເວລານີ້ເປັນອຳເພີ ຢູ່ໃນເຂດຈັງຫວັດຂອນແກນ)

໓-/ ເມືອງພູຂຽວ (ເວລານີ້ເປັນອຳເພີ ຢູ່ໃນເຂດຈັງຫວັດຊັຍຍະພູມ)

ຫົວເມືອງເອກ ໓ ເມືອງນີ້ ແຕ່ລະເມືອງ ສຍາມແຍກໃຫ້ໄປຂຶ້ນກັບກຣຸງເທບ ນອກຈາກນັ້ນຫົວເມືອງເອກບາງເມືອງ ຍັງມີຫົວເມືອງໂທ,ຫົວເມືອງຕຣີ, ແລະຫົວເມືອງຈັຕວາ ທີ່ໂຮມຂຶ້ນກັບ ຫົວເມືອງເອກ ອີກດີ :

໑-/ ຫົວເມືອງເອກ ເມືອງນະຄອນຣາຊສີມາ ມີເມືອງທີ່ຂຶ້ນຕໍ່ຢູ່ ໙ ເມືອງໄດ້ແກ່ :

໑-/ ເມືອງພິມາຍ (ເວລານີ້ເປັນອຳເພີ ຢູ່ໃນເຂດຈັງຫວັດນະຄອນຣາຊສີມາ)

໒-/ ເມືອງຣັຕນະບູຣີ (ເວລານີ້ເປັນອຳເພີ ຢູ່ໃນເຂດຈັງຫວັດສຸຣິນ)

໓-/ ເມືອງນະຄອນຈັນທຶກ (ເວລານີ້ເປັນຕາແສງ ຢູ່ໃນເຂດອຳເພີສີ່ຄິ້ວ ຈັງຫວັດ ນະຄອນຣາຊສີມາ)

໔-/ ເມືອງປັກທົງໄຊ (ເວລານີ້ເປັນອຳເພີ ຢູ່ໃນເຂດຈັງຫວັດນະຄອນຣາຊສີມາ)

໕-/ ເມືອງພຸດໄທສົງ (ເວລານີ້ເປັນອຳເພີ ຢູ່ໃນເຂດຈັງຫວັດບູຣີຣັມ)

໖-/ ເມືອງຕະລຸງ (ຄືອຳເພີປຣະໂຄນຊັຍ ຂຶ້ນຕໍ່ຈັງຫວັດບູຣີຣັມເວລານີ້)

໗-/ ເມືອງສູງເນີນ (ຄືອຳເພີສູງເນີນ ຢູ່ໃນເຂດຈັງຫວັດນະຄອນຣາຊສີມາເວລານີ້)

໘-/ ເມືອງກະໂທກ (ຄືອຳເພີໂຊກຊັຍ ຢູ່ໃນເຂດຈັງຫວັດນະຄອນ

ຣາຊສີມາເວລານີ້)

໒-/ ຫົວເມືອງເອກ ເມືອງຈຳປາສັກ ມີເມືອງຂຶ້ນຕໍ່ ໔ ເມືອງຄື :

໑-/ ເມືອງຊັຍຍະພູມ (ຄືຈັງຫວັດຊັຍຍະພູມ ໃນປັດຈຸບັນ)

໒-/ ເມືອງໂພນລາວ (ຄືອຳເພີໂພນໄທ ຢູ່ໃນເຂດຈັງຫວັດ ນະຄອນຣາຊສີມາ ເວລານີ້)

໓-/ ເມືອງກະເສດສົມບູນ (ເວລານີ້ເປັນອຳເພີ ຂຶ້ນຢູ່ໃນ ເຂດຈັງຫວັດຊັຍຍະພູມ)

໔-/ ເມືອງຈັດຕຸຣັດ (ເວລານີ້ເປັນອຳເພີ ຢູ່ໃນເຂດຈັງ ຫວັດຊັຍຍະພູມ)

ສ່ວນຫົວເມືອງເອກ ເມືອງພູຂຽວນັ້ນ ບໍ່ປາກົດວ່າມີຫົວເມືອງໃດ ຂຶ້ນຕໍ່ ແລະ ສຍາມກໍໃຫ້ໄປຂຶ້ນກັບກຣຸງເທບໂດຍກົງ.

ຫົວເມືອງລາວຝ່າຍກາງ ອັນມີຫົວເມືອງເອກ ໓ ເມືອງ ແລະ ເມືອງຂຶ້ນຕໍ່ຫົວເມືອງເອກອີກ ໑໒ ເມືອງນີ້ ສຍາມໄດ້ແຕ່ງຕັ້ງຂ້າຫລວງ ຂຶ້ນມາປົກຄອງປະຈຳ ຮຽກຕຳແໜ່ງຂ້າຫລວງວ່າ "ຂ້າຫລວງປະຈຳຫົວ ເມືອງລາວຝ່າຍກາງ" ຄນະຂ້າຫລວງສຍາມ ໄດ້ຕັ້ງກອງວ່າຣາຊການ ປົກຄອງ ຢູ່ທີ່ ເມືອງນະຄອນຣາຊສີມາ ຂ້າຫລວງໃຫຍ່ສຍາມ ເວລານັ້ນ ຄື ພຣະພິເຣນທຳຣະເທບ.

ຂ້າຫລວງ ຫຼື.ສຍາມ ແຕ່ງຕັ້ງມາປົກຄອງ ຫົວເມືອງລາວທັງ ໔ ກອງ ໂດຍໃຫ້ປະຈຳກອງລະ ໑ ຄົນນັ້ນ (ຂ້າຫລວງໃຫ່ຍມີປະຈຳກອງລະ ໑ ຄົນ) ມີອຳນາດຍັງຄັບ ບັນຊາຣາຊການທັງປວງ ແລະລັດເລົ່ງສ່ວຍສາອາກອນ ຕລອດຈົນຕັດສິນຄະດີຄວາມ ຫລື ຊຸທອນ.

ລາວລ້ານຊ້າງ ທີ່ສຍາມແບ່ງອອກເປັນ ໔ ກອງ ແລະແຕ່ງຕັ້ງຂ້າ ຫລວງໃຫ່ຍມາປົກຄອງປະຈຳກອງລະ ໑ ຄົນນີ້ ສຍາມໄດ້ຕັ້ງ ຂ້າຫລວງໃຫ່ຍ ສູງສຸດ ບັງຄັບບັນຊາ ຕລອດຫົວເມືອງລາວທັງ ໔ ກອງ ໃຫ້ຂ້າຫລວງທີ່ປະຈຳ ຢູ່ ຫົວເມືອງລາວທັງ ໔ ກອງນີ້ ຂຶ້ນຕົງຕໍ່ ຂ້າຫລວງໃຫ່ຍ ຂ້າຫລວງໃຫ່ຍ - ສຍາມເວລານັ້ນ ຄື "ພຣະຍາມຫາອຳມາດຢ່າທິບໍດີ (ຫລຸ່ນສີເພັນ) ຂ້າຫລວງ ໃຫ່ຍ ໄດ້ຕັ້ງກອງ ວ່າຣາຊການປົກຄອງ ຢູ່ທີ່ນະຄອນຈຳປາສັກ (ພຣະຍາມຫາ ອຳມາດຢາທິບໍດີ (ຫລຸ່ນສີເພັນ) ໄດ້ມາເປັນຂ້າຫລວງສຍາມປະຈຳຫົວເມືອງ ລາວຕາເວັນອອກ ໂດຍຕັ້ງກອງການປົກຄອງ ຢູ່ທີ່ເມືອງນະຄອນຈຳປາສັກ ແຕ່ ປີ ຄ.ສ. ໑໘໘໒ .

ຫ ມ າ ຍ ເ ຫ ດ :(໑) ຫົວເມືອງລາວ ທີ່ສຍາມແບ່ງອອກ ເປັນ ໔ ກອງ ແລະໂຮມທັງອານາຈັກ ລ້ານຊ້າງຮົ່ມຂາວ ຫລວງພຣະບາງນັ້ນ ສຍາມຖືວ່າ ເປັນ "ຫົວເມືອງລາວຊັ້ນນອກ" ສ່ວນຄົນລາວ ທີ່ສຍາມກວາດຕ້ອນໄປເປັນຊະເລີຍ ໃນຄາວທີ່ສຍາມຍົກກອງທັບຂຶ້ນມາ ຕີປະເທດລາວ ເມື່ອ ຄ.ສ. ໑໗໗໘ - ໑໗໗໙ ແລະ ໑໘໒໙ (ເທື່ອລຸນແມ່ນສມັຍ ທີ່ພຣະເຈົ້າອະນຸວົງ ກອບກູ້ເອກ ຣາດ ແຕ່ບໍ່ສຳເຣັດ) ແລ້ວກວາດຕ້ອນຄອບຄົວລາວ ລົງໄປໄວ້ເມືອງລົບບູຣີ

ເມືອງສະຣະບູຣີ, ເມືອງປຣາຈີນບູຣີ (ກວດໄປຈາກເມືອງສະກົນນະຄອນ) ເມືອງເພັດບູຣີ, ເມືອງສຸພັນບູຣີ, ເມືອງນະຄອນຊັຍສີ,ເມືອງຣາຊບູຣີ, ເມືອງພະນັດນິຄົມ (ກວດຕ້ອນໄປຈາກນະຄອນພຣະນົມ ) ເມືອງສມຸດປຣາການ (ຈຳເພາະລາວທີ່ໄປຢູ່ ຈັງຫວັດສມຸດປຣາການນັ້ນ ແມ່ນໄປແຕ່ສມັຍ ພຣະເຈົ້າອະນຸວົງ ຍັງບໍ່ທັນກອບກູ້ເອກຣາດ ກົງກັບຣັຊການທີ ໘ ຂອງພຣະເຈົ້າແຜ່ນດິນສຍາມ ຕາມພົງສາວະດານໄທຂອງ ເຈົ້າພຣະຍາທິພາກອນວົງ ກ່າວໄວ້ວ່າ ແມ່ນອຸປຣາດ ເມືອງນະຄອນພຣະນົມ ພາຄອບຄົວບ່າວໄພ່ ອົພຍົບໄປເອງ ເພາະອຸປຣາດເມືອງນະຄອນພຣະນົມ ບໍ່ຖືກຕ້ອງກັນ ກັບ ເຈົ້າເມືອງນະຄອນພຣະນົມຈົນເຖິງກັບ ຍົກພວກເຂົ້າລົບເລວກັນ ແຕ່ພວກຂອງອຸປຣາດ ສູ້ພວກເຈົ້າເມືອງນະຄອນພຣະນົມບໍ່ໄດ້ ອຸປຣາດ ຈຶ່ງພາຄອບຄົວບ່າວໄພ່ ອົພຍົບລົງໄປກຣຸງເທບ ໃນຣັຊການທີ ໘ ຄື ຣັຊການພຣະພຸດທະເລີດຫລ້ານະພາລັຍ ການອົພຍົບໄປເທື່ອນັ້ນ ມີປະມານ ສອງພັນປາຍຄົນ ພຣະເຈົ້າແຜ່ນດິນສຍາມ ໃຫ້ລາວກຸ່ມນີ້ ໄປຕັ້ງບ້ານເຮືອນຢູ່ຈັງຫວັດສມຸດປຣາການສືບມາຈົນບັດນີ້ ແລະ ຈຳເພາະລາວພວກທີ່ສມັກໃຈ ອໍຂຶ້ນສ່ວຍສຍາມໂດຍ ທີ່ສຍາມບໍ່ໄດ້ລົບເລວເອົານີ້ ສຍາມຮຽກວ່າ "ລາວອາສາ" ເວລາມີເສິກສົງຄາມ ສຍາມຈະເກນເອົາລາວພວກນີ້ເຂົ້າໃນກອງທັບ ໃນຕອນທີ່ສຍາມຍົກກອງທັບ ຂຶ້ນມາຕີລາວເທື່ອທີ ໘ ຄື ໃນສມັຍພຣະເຈົ້າອະນຸ ນັ້ນກໍປາກົດວ່າ ມີ"ລາວອາສາ" ນີ້ຖືກເກນສົມທົບກັບກອງທັບ -

ສຍາມມາຫລາຍຄືກັນ ຫົວເມືອງລາວທຸກເມືອງ ທີ່ຖືກສຍາມກວດຕ້ອນໄປເປັນຊເລີຍ ຫລື ອົພຍົບໄປເອງ ແລະໄດ້ຕັ້ງບ້ານເຮືອນຢູ່ຕາມເມືອງດັ່ງກ່າວນັ້ນ ສຍາມຮຽກວ່າ "ຫົວເມືອງລາວຊັ້ນໃນ" ແລະສຍາມໄດ້ຈັດການປົກຄອງຕ່າງຫາກ ຫົວເມືອງລາວຊັ້ນໃນນີ້ ສມັຍກ່ອນໆ ກໍປາກົດວ່າມີເຈົ້ານາຍລາວ ປົກຄອງສືບເຊື້ອສາຍຕໍ່ໆມາ ພາຍລຸນຈຶ່ງມີການປ່ຽນແປງ ລົບລ້າງໄປໃນທີ່ສຸດ.

ຫ ມ າ ຍ ເ ຫ ດ (໔) ຕໍ່ມາ ຂ້າຫລວງໃຫ່ຍຂອງສຍາມ ທີ່ບັງຄັບບັນຊາຕລອດຫົວເມືອງລາວທັງ ໔ ກອງນີ້ ຄື ພຣະຍາມຫາອຳມາດຍາທິບໍດີ(ຫລຸ່ມສີເພັນ) ຖືກຍ້າຍທາງການສຍາມ ໄດ້ແຕ່ງໃຫ້ ພຣະພິດສະນຸເທພ (ຊວງ) ຂຶ້ນມາເປັນຂ້າຫລວງໃຫ່ຍ ຕໍ່ມາ ແລະມີ ຫລວງສຸເທພນຸຣັກ, ຫລວງເທເພນທໍຣະເທພ, ຫລວງບຸຣິນທຣາມາດ, ຫລວງເທພມະເຣນ, ຂຸນມະຫາໄຊ, ແລະ ຂຸນວິຈິດຈິນທານ, ເປັນຂ້າຫລວງຜູ້ຊ່ວຍ ຄນະຂ້າຫລວງສຍາມຊຸດນີ້ ເດີນທາງມາເຖິງນະຄອນຈຳປາສັກ ເມື່ອເດືອນ ມິຖຸນາ ໑໘໙໐.

ຂ້າຫລວງໃຫ່ຍສຍາມ ໄດ້ໃຫ້ຫລວງສຸເທພນຸຣັກ ໄປເປັນຂ້າຫລວງປະຈຳຢູ່ເມືອງແສນປາງ, ໃຫ້ຫລວງບຸຣິນທຣາມາດ ໄປເປັນຂ້າຫລວງສຍາມກຳກັບຣາຊການຢູ່ເມືອງຊຽງແຕງ, ໃຫ້ຫລວງເທພມະເຣນ ໄປເປັນຂ້າຫລວງສຍາມຢູ່ເມືອງ ຄຳທອງໃຫ່ຍ, ໃຫ້ ຣ.ທ.ພຸ້ມ ໄປເປັນຂ້າຫລວງສຍາມ ກຳກັບຣາຊການຢູ່ເມືອງ ສາຣະວັນ ໃຫ້ຫລວງເທເພນທໍຣະເທພ, ຫລວງເສນີພິທັກ, ຂຸນມະຫາໄຊ ໄປເປັນຂ້າຫລວງສຍາມ ກຳກັບຣາຊການຢູ່ເມືອງສີທັນດອນ.

ຕໍ່ມາອີກປີນຶ່ງ ຫລັງຈາກທີ່ສຍາມ ໄດ້ແບ່ງແຍກຫົວເມືອງລາວອອກເປັນ ៤ ກອງແລ້ວ ຄື : ຄ.ສ. ໑໘໙໑ (ພ.ສ.໒໔໓໔) ພຣະເຈົ້າແຜ່ນດິນສຍາມ ຈຶ່ງໂຜດໃຫ້ ໂຮມ "ຫົວເມືອງລາວຝ່າຍຕາເວັນອອກ" ແລະ "ຫົວເມືອງລາວຝ່າຍຕາເວັນອອກກ້ຳເໜືອ" ທີ່ໄດ້ໃຫ້ແບ່ງໄວ້ ເມື່ອປີ ຄ.ສ. ໑໘໙໐ ນັ້ນ ໂຮມເຂົ້າເປັນພາກດຽວກັນ ຮຽກວ່າ "ຫົວເມືອງລາວກາວ".

<u>ຫົວເມືອງລາວກາວ</u> ປະກອບໄປດ້ວຍ ຫົວເມືອງເອກ ໔໓ ເມືອງ ໄດ້ແກ່ ເມືອງ ນະຄອນຈຳປາສັກ, ເມືອງຊຽງແຕງ (ຕົກໄປຢູ່ໃນປົກຄອງຂອງຂເມນ) ເມືອງແສນປາງ (ຢູ່ໃນເຂດຂອງຂເມນ) ເມືອງສີທັນດອນ, ເມືອງສາຣະວັນ, ເມືອງອັຕປື, ເມືອງຄຳທອງໃຫຍ່, ເມືອງສຸຣິນ, ເມືອງສັງຂະ, ເມືອງຂຸຂັນ, ເມືອງເດດຊຸດົມ, ເມືອງສີສະເກດ, ເມືອງອຸບົນຣາຊທານີ, ເມືອງຍະໂສທອນ, ເມືອງເຂມມະຣາດທານີ, ເມືອງກົມມະລາສັຍ, ເມືອງກາລະສິນ, ເມືອງພູແລ່ນຊ້າງ, (ອຳເພີຍາງຕລາດ ວລານີ້) ເມືອງສູວັນນະພູມ, ເມືອງຣ້ອຍເອັດ, ເມືອງມຫາສາຣະຄາມ, ເມືອງສອງຄອນດອນດົງ, (ຢູ່ໃນເຂດແຂວງສວັນນະເຂດເວລານີ້) ເມືອງມອງ, (ຢູ່ໃນເຂດແຂວງສວັນນະເຂດເວລານີ້) ແລະມີຫົວເມືອງ ທີ່ຂຶ້ນກັບຫົວເມືອງເອກອີກ ໕໕ ເມືອງ ໂຮມເປັນ ໗໘ ເມືອງ.

ຫົວເມືອງລາວກາວນີ້ ພຣະເຈົ້າແຜ່ນດິນສຍາມ ໂຜດໃຫ້ພຣະ

ອະນຸຊາ (ນ້ອງ) ຂອງພຣະອົງເອງ ມາເປັນຂ້າຫລວງໃຫຍ່"ຫົວເມືອງລາວກາວ" ຄື ພຣະເຈົ້ານ້ອງຍາເທີ ກຣົມຫລວງພິຊິດປຣີຊາກອນ ໃຫ້ຄນະຂ້າຫລວງໃຫຍ່ ຂຶ້ນມາປະຈຳການ ຢູ່ທີ່ນະຄອນຈຳປາສັກ ແຕ່ຄນະຂ້າຫລວງໃຫຍ່ ບໍ່ໄດ້ມາຢູ່ທີ່ນະຄອນຈຳປາສັກ ພໍຄນະຂ້າຫລວງສຍາມເດີນທາງມາເຖິງເມືອງອຸບົນ ເຫັນເປັນທຳເລເໝາະສົມ ເລີຍຕັ້ງສຳນັກ ວ່າຣາຊການປົກຄອງ ຢູ່ທີ່ເມືອງອຸບົນນັ້ນເອງ ຄນະຂ້າຫລວງສຍາມ ມີທັງພະນັກງານ ທະຫານ ແລະພົລເຣືອນ ປະມານສອງຮ້ອຍປາຍຄົນ ຜູ້ທີ່ສຳຄັນນອກຈາກຂ້າຫລວງໃຫຍ່ ມີພຣະຍາປຣະຊາກິດກໍຣະຈັກ, ພຣະທິບຈັກສຸສາດທັມຣົງ (ທ່ານໝໍ) ຫລວງທນະສານສູດທາຣັກ, ຫລວງພິທິດສຸນທອນ, (ທອງອິນ) ຂຸນຣາດພັດຖຸພິດພານ, ຂຸນຜະໄທໄທຍພິທັກ(ເງືອນ) ຂຸນກຳພູດພາຈາ (ນາຍພາສາ) ນາຍຮ້ອຍຕຣີຖົມຢາ, ໝື່ນພາສາມີລັກຊຸ,ນາຍພາສາ)ແລະນາຍຜາດ.

ສ່ວນຫົວເມືອງລາວຝ່າຍເໜືອ ສຍາມປ່ຽນຊື່ເປັນ "ຫົວເມືອງລາວພວນ"ພຣະເຈົ້າແຜ່ນດິນສຍາມ ໂຜດໃຫ້ພຣະອະນຸຊາ (ນ້ອງ) ຂອງພຣະອົງເອງ ມາເປັນຂ້າຫລວງໃຫຍ່ ສຳເຣັດຣາຊການ ຫົວເມືອງລາວພວນ ຄືພຣະເຈົ້ານ້ອງຍາເທີ ກຣົມມະໝື່ນປຣະຈັກສິລປາຄົມ ພ້ອມດ້ວຍຂ້າຣາຊການທະຫານ ແລະພົລເຣືອນ ຄນະຂ້າຫລວງສຍາມ ຕັ້ງສຖານທີ່ວ່າຣາຊການປົກຄອງ ຢູ່ທີ່ເມືອງໜອງຄາຍ.

ຫົວເມືອງລາວພວນ ປະກອບໄປດ້ວຍຫົວເມືອງເອກ ໑໖ ເມືອງ

ມີ : ເມືອງໜອງຄາຍ, ເມືອງໂພນພິສັຍ, ເມືອງຊັຍບູຣີ, (ເວລານີ້ເປັນຕາແສງຢູ່ໃນເຂດອຳເພີທ່າອຸເທນ) ເມືອງທ່າອຸເທນ, ເມືອງນະຄອນພຣະນົມ, ເມືອງມຸກດາຫານ, ເມືອງຄຳເກີດ, ເມືອງຄຳມ່ວນ, ເມືອງບໍຣິຄັນທະນິຄົມ, ເມືອງຊຽງຂວາງ, ເມືອງສະກົນນະຄອນ, ເມືອງໜອງຫານໃຫຍ່, ເມືອງຂອນແກ່ນ, ເມືອງບູຣີຣັມ, ເມືອງກະມຸດທາສັຍ, (ອຳເພີໜອງບົວລຳພູເວລານີ້) ແລະເມືອງລື່ມສັກ, ກັບມີຫົວເມືອງທີ່ຂື້ນຕໍ່ຫົວເມືອງເອກອີກ ๓๖ ເມືອງ ໂຮມເປັນ ๕໔ ຫົວເມືອງ ຂື້ນຢູ່ໃນບັງຄັບບັນຊາ ຂອງຂ້າຫລວງໃຫຍ່"ຫົວເມືອງລາວພວນ".

ຫົວເມືອລາວພຸງຂາວ ໂດຽສຍາມໂຮມເອົານະຄອນຫລວງພຣະບາງ, ສິບສອງພັນນາລື້, ສິບສອງຈຸໄທ, ຫົວພັນທັງຫ້າ ທັງຫົກ ກັບຫົວເມືອງ ຂື້ນຂອງເມືອງເຫລົ່ານີ້ ໂຮມເຂົ້າກັນຮຽກວ່າ"ຫົວເມືອງລາວພຸງຂາວ" ຕັ້ງກອງຮັກສາການຢູ່ທີ່ນະຄອນຫລວງພຣະບາງ ພຣະເຈົ້າແຜ່ນດິນສຍາມ ໂຜດໃຫ້ ພຣະຍາຣິດທີຮົງ ຣົນເສດ (ສຸກ ຊູໂຕ) ເປັນຂ້າຫລວງສຳເຣັດຣາຊການຢູ່ທີ່ນະຄອນຫລວງພຣະບາງ (ຄັ້ງແຣກພຣະເຈົ້າແຜ່ນດິນສຍາມ ໂຜດແຕ່ງຕັ້ງໃຫ້ພຣະອະນຸຊາ (ນ້ອງ) ພຣະອົງເອງມາເປັນຂ້າຫລວງໃຫຍ່ ປະຈຳຫົວເມືອງລາວພຸງຂາວ ຄື ພຣະເຈົ້ານ້ອງຍາເທີ ກຣົມມະໝື່ນ ສັນພະສິດທິປຣະສົງ ແຕ່ຂ້າຫລວງໃຫຍ່ ຫົວເມືອງລາວພຸງຂາວ ຍັງບໍ່ທັນໄດ້ມາປະຈຳຢູ່ ທີ່ນະຄອນຫລວງພຣະບາງ ເລີຍ

ໃຫ້ປ່ຽນໄປເປັນຂ້າຫລວງໃຫ່ຍ ຫົວເມືອງລາວກາງ ຢູ່ທີ່ນະຄອນຣາຊສີມາ. ທີ່ນະຄອນຫລວງພຣະບາງ ຄົງມີແຕ່ພຣະຍາຣິດທິຣົງ ຣົນເສດ ເປັນຂ້າຫລວງ ສຍາມ ປະຈຳຢູ່ຕໍ່ມາ.

ຫົວເມືອງລາວກາງ ໂດຽປ່ຽນຊື່ຈາກ ຫົວເມືອງລາວຝ່າຍກາງ ມາ ເປັນຫົວເມືອງລາວກາງ ສຍາມຕັ້ງກອງຮັກສາການຢູ່ທີ່ ນະຄອນຣາຊສີມາ ມີພຣະເຈົ້ານ້ອງຍາເທີ ກຣົມມະຫມື່ນ ສັນພຣະສິດທິປຣະສົງ ເປັນຂ້າຫລວງ ໃຫ່ຍ ຫົວເມືອງລາວກາງ.

ຫົວເມືອງລາວກາງ ສຍາມໂຮມເອົາຫົວເມືອງເອກໄວ້ ໓ ເມືອງ ຄື ເມືອງນະຄອນຣາຊສີມາ, ເມືອງຊົນນະບົດ (ແຕ່ກ່ອນຮຽກເມືອງຊົນລະ ບົດ) ເມືອງພູຂຽວ ແລະ ມີຫົວເມືອງທີ່ຂື້ນຕໍ່ ຫົວເມືອງເອກອີກ ໑໔ ເມືອງ ໂຮມເປັນ ໑໗ ຫົວເມືອງ ຂື້ນຢູ່ໃນບັງຄັບບັນຊາ ຂ້າຫລວງໃຫ່ຍສຍາມປະຈຳ ຫົວເມືອງລາວກາງ.

ທ່ານຜູ້ອ່ານ ຈະໄດ້ເຫັນ ຈາກ 'ລັກ ‹ານ ການປົກຄອງຫົວເມືອງ ລາວ ທີ່ຕົກເປັນຫົວເມືອງຂື້ນ ຂອງປະເທດສຍາມ ນື້ວ່າ ຫົວເມືອງທີ່ສຍາມ ຖືວ່າ ເປັນຫົວເມືອງລາວ ແລະ ຖືວ່າເປັນຫົວເມືອງຂື້ນນັ້ນ ບໍ່ໄດ້ມີແຕ່ຫົວ ເມືອງຕ່າງໆ ອັນໂຮມຢູ່ໃນເຂດປະເທດລາວ ໃນເວລານີ້ເທົ່ານັ້ນ ແຕ່ສຍາມ ຖືວ່າຫົວເມືອງ ທີ່ຢູ່ຝັ່ງນ້ຳຂອງກ້ຳຕາເວັນຕົກ ຂອງປະເທດລາວ ຕລອດໄປ ຈົນຮອດເມືອງ ນະຄອນຣາຊສີມາ ຫລື ສ່ວນທີ່ເປັນພາກຕາເວັນອອກກ້ຳເໜືອ (ພາກອີສານ) ຂອງໄທ ສຍາມກໍຖືວ່າເປັນຫົວເມືອງລາວ ແລະຖືວ່າເປັນຫົວ


ແຜນທີ່ສແດງການປົກຄອງ
ຫົວເມືອງລາວຂອງສຍາມ.
ຫົວເມືອງລາວຖືກແບ່ງແຍກ
ອອກເປັນ ໔ ກອງ ເມື່ອ ຄ.ສ. ໑໘໙໑
໑. ຫົວເມືອງລາວກາວ
໒. ຫົວເມືອງລາວພວນ
໓. ຫົວເມືອງລາວພຸງຂາວ
໔. ຫົວເມືອງລາວກາງ
ເສັ້ນແບ່ງເຂດປະເທດ
ເສັ້ນແບ່ງເຂດຫົວເມືອງ
ຈີນ
ສິບສອງປັນນາ
ສິບສອງຈຸໄທ
ພະມ້າ
ລາວພຸງຂາວ
ລາວພຸງດຳ
ລາວລ້ານນາ
ລາວພວນ
ລາວກາງ
ລາວ
ກາວ
ໄທ
ຂແມນ
ອ່າວໄທ

ເມືອງຂຶ້ນ. ແບບດຽວກັບສ່ວນທີ່ເປັນປະເທດລາວ ໃນເວລານີ້. ດັ່ງຫລັກຖານທີ່ ທ່ານຜູ້ອ່ານໄດ້ ອ່ານຜ່ານກາຍມາແລ້ວນັ້ນ ແລະເປັນທີ່ຄວນຈະສັງເກດໄວ້ວ່າ ລາວລ້ານນາ ຫລື ທີ່ສຍາມຮຽກວ່າ "ລາວພູງດຳ" ນັ້ນ ສຍາມກໍຖືວ່າເປັນຫົວເມືອງຂຶ້ນ ໂດຍມີຂ້າຫລວງສຍາມຂຶ້ນໄປປົກຄອງ ຄືກັນກັບຫົວເມືອງລາວ ລ້ານຊ້າງ ຄື ປະເທດລາວ ໃນເວລານີ້.

ເວລານີ້ຄົນລາວ ທັງລາວທີ່ໄດ້ຮັບເອກຣາຊ ຈາກຝຣັ່ງແລ້ວ ໃນເວລານີ້ ແລະ ລາວທີ່ຍັງຢູ່ນຳໄທ. ໄດ້ເຂົ້າໃຈຜິດຕໍ່ກັນຢ່າງໃຫຍ່ຫລວງ ຍ້ອນວ່າຄົນລາວ ໄດ້ເຂົ້າໃຈຜິດຕໍ່ກັນນີ້ແລ້ວ ທີ່ເປັນສາເຫດອັນສຳຄັນທີ່ສຸດ ທີ່ນຳພາໃຫ້ລາວມີຖານະ ແລະສະພາບການ ຢ່າງທີ່ເປັນຢູ່ໃນປັດຈຸບັນນີ້.

ແຕ່ເປັນການແນ່ນອນວ່າ ການທີ່ຄົນລາວ ເຂົ້າໃຈຜິດຕໍ່ກັນນີ້ ນອກຈາກສາເຫດ ຈະເປັນຍ້ອນຄົນລາວເອງແລ້ວ ສາເຫດທີ່ສຳຄັນທີ່ສຸດນັ້ນ ມາຈາກຕ່າງຊາດ ທີ່ມີແຜນການແບ່ງແຍກລາວ. ຍຸແຍ່ໃຫ້ລາວເຂົ້າໃຈຜິດຕໍ່ກັນ ບໍ່ໃຫ້ລາວທ້ອນໂຮມກັນໄດ້ ເພື່ອທີ່ພວກເຂົາ ຈະໄດ້ຄອບຄອງລາວໄວ້ ໄດ້ຕລອດໄປ. ແລະເພື່ອທີ່ພວກເຂົາ ຈະໄດ້ກືນຊາດລາວໃນທີ່ສຸດ. ອັນເປັນຄວາມຕ້ອງການອັນສູງສຸດ ຂອງພວກເຂົາ.

## ສຍາມເສັຽຫົວເມືອງລາວຝັ່ງຊ້າຍແມ່ນ້ຳຂອງໃຫ້ແກ່ຝຣັ່ງ

ເນື່ອງຈາກວ່າ ເວລານັ້ນ, ປະເທດວຽດນາມທັງໝົດ ຄືທັງວຽດນາມເໜືອ ແລະ ວຽດນາມໃຕ້ ໃນເວລານີ້ ຕລອດຈົນປະເທດຂແມນ ຕ່າງກໍຕົກເປັນຫົວເມືອງຂຶ້ນຂອງປະເທດຝຣັ່ງ ແລ້ວຕາມແຜນການ ຂອງຝຣັ່ງໃນສມັຍນັ້ນ. ຝຣັ່ງມີແຜນການ ທີ່ຈະແບ່ງ ອານາຈັກສຍາມ ກັນກັບປະເທດອັງກິດ ໂດຍເອົາແມ່ນ້ຳເຈົ້າພຣະຍາ ເປັນເສັ້ນປັນເຂດແດນກັນ. ຄື ຝັ່ງນ້ຳເຈົ້າພຣະຍາ ຟາກຕາເວັນອອກ. ຝຣັ່ງຈະເອົາມາໂຮມເຂົ້າກັນກັບແກວຂແມນ ອັນເປັນຫົວເມືອງຂຶ້ນຂອງຝຣັ່ງ ຢູ່ແລ້ວ. ສ່ວນຝັ່ງນ້ຳເຈົ້າພຣະຍາຟາກຕາເວັນຕົກ. ຝຣັ່ງຈະປ່ອຍໃຫ້ຢູ່ພາຍໃຕ້ອິດທິພົນຂອງ ປະເທດອັງກິດເພາະເວລານັ້ນ ອັງກິດ ໄດ້ປະເທດພະມ້າ ທີ່ຢູ່ທາງທິດຕາເວັນຕົກຂອງສຍາມ, ເປັນຫົວເມືອງຂຶ້ນແລ້ວ ປະເທດມາລາຢູ (ຄືມາເລເຊັຽໃນເວລານີ້) ອັນຢູ່ຕໍ່ແດນກັບປະເທດ ສຍາມ ທາງທິດໃຕ້ ກໍຕົກເປັນຫົວເມືອງຂຶ້ນ ຂອງອັງກິດແລ້ວ. ຕາມແຜນນີ້ຝຣັ່ງມີໂຄງການຈະດຳເນີນການໄປເທື່ອລະຂັ້ນ.

ດັ່ງນັ້ນ ຝຣັ່ງຈຶ່ງອ້າງ ຕໍ່ສຍາມວ່າ ຫົວເມືອງລາວ ເຄີຍເປັນຫົວເມືອງຂຶ້ນຂອງແກວ ແລະຂແມນ ມາແຕ່ກ່ອນ. (ແກວອາດຈະຖືເອົາຕອນທີ່ພຣະເຈົ້າອະນຸວົງ ທັງສົ່ງທູດໄປຜູກສັມພັນທະໄມຕຣີ ກັບ ພຣະເຈົ້າແຜ່ນດິນແກວ ໃນຣັຊການຂອງພຣະອົງ ເພື່ອຫ້າງຫາ ການກູ້ເອກຣາຊ

ໃຫ້ແກ່ລາວ ສ່ວນແກວ ກັບເຂົ້າໃຈວ່າ ລາວໄປຂໍເປັນຫົວເມືອງຂຶ້ນຄວາມຈິງເວລານັ້ນ ທັງແກວ ແລະ ລາວ ຕ່າງກໍຕົກເປັນຫົວເມືອງຂຶ້ນ ຂອງສຍາມຄືກັນ ແຕ່ຕ່າງກັນທາງຖານະ ທາງການເມືອງ. ຄືລາວເປັນຫົວເມືອງຂຶ້ນ ຂອງສຍາມຍ້ອນເສັຽໄຊ ໃຫ້ແກ່ກອງທັບສຍາມ ໃນຣັຊການຂອງພຣະເຈົ້າສີຣິບຸນຍະສານ. ສ່ວນແກວເປັນຫົວເມືອງຂຶ້ນ ຂອງສຍາມເພຣະພຣະເຈົ້າແຜ່ນດິນສຍາມ ສົ່ງກອງທັບໄປຊ່ວຍພຣະເຈົ້າແຜ່ນດິນແກວຜາບພວກກະບົດ (ເຊີນສຶກສາຈາກພົງສາວະດານແກວ ແລະ ພົງສາວະດານໄທ. ຜູ້ຮຽງຮຽງ)

ສ່ວນຂເມນ ໄປອ້າງຕໍ່ຝຣັ່ງວ່າ ລາວ ເຄີຍເປັນຫົວເມືອງຂຶ້ນນັ້ນ ບໍ່ຮູ້ວ່າ ຂເມນ ໄປຍົກເອົາສມັຍໃດ ມາອ້າງ ຖ້າ ຂເມນຈະອ້າງເອົາແຕ່ສມັຍ ທີ່ພຣະເຈົ້າຟ້າງຸ່ມ ມະຫາຣາຊ ທີ່ເປັນພຣະຣາຊບຸດເຂີຍຂອງພຣະເຈົ້າແຜ່ນດິນ ຂເມນ. ເວລາກໍຫ່າງໄກກັນເຖິງ ຫ້າຮ້ອຍປາຍປີ (ຄືແຕ່ປີ ຄ.ສ. ໑໓໔໙) ບໍ່ມີເຫດຜົນສົມຄວນ ທີ່ຂເມນ ຈະເອົາມາອ້າງເລີຍ.

ເມື່ອຝຣັ່ງ ຖືວ່າ ຫົວເມືອງລາວ ເຄີຍເປັນຫົວເມືອງຂຶ້ນຂອງແກວແລະຂເມນ ຝຣັ່ງຈຶ່ງຂໍໃຫ້ສຍາມ ຄືນສິດ ໃຫ້ແກ່ແກວ ແລະຂເມນນີ້ເປັນກົນອຸບາຍຂອງຝຣັ່ງ ທີ່ຍົວະເຍົ້າ ໃຊ້ແກວ ແລະຂເມນ ໃຫ້ຕໍ່ສູ້ກັບກັບກອງທັບສຍາມ ແຕ່ສຍາມໄດ້ປະຕິເສດ ຄຳຮຽກຮ້ອງຂອງຝຣັ່ງ.

ເຖິງປີ ຄ.ສ. ໑໘໙໓ ຝຣັ່ງຈຶ່ງເອົາທະຫານແກວ ແລະ ຂເມນ ຂຶ້ນມາຕາມລຳແມ່ນ້ຳຂອງ ລ່ວງເຂົ້າເຂດປົກຄອງ ຂອງສຍາມ. ຈຶ່ງເກີດການປະທະກັນ ຣະຫວ່າງກອງທະຫານ ໃນບັງຄັບບັນຊາຂອງຝຣັ່ງ. ກັບກອງທະຫານຂອງສຍາມ ທີ່ຕັ້ງຢູ່ຕາມດ່ານຕ່າງໆ ( ໃນກອງທະຫານສຍາມມີຄົນລາວ ຖືກເກນມາສົມທົບກັບທະຫານສຍາມ ເປັນສ່ວນຫລາຍ ຜູ້ຮຽບຮຽງ ຈຶ່ງເກີດເປັນກໍຣະນີພິພາດກັນຂຶ້ນ.

ທາງອ່າວສຍາມ (ຄືອ່າວໄທ ເວລານີ້) ຝຣັ່ງໄດ້ເອົາເຮືອຮົບ ໓ ລຳ ແລ່ນບຸກເຂົ້າໄປ. ໃນແມ່ນ້ຳເຈົ້າພຣະຍາ ຈົນເຖິງກຣຸງເທພ ຝຣັ່ງໄດ້ຍື່ນຄຳຂາດ ໃຫ້ສຍາມ ຮັບຮູ້ອຳນາດ ຂອງຝຣັ່ງໃນດິນແດນ ຫົວເມືອງລາວຝັ່ງຊ້າຍແມ່ນ້ຳຂອງ ຄື ປະເທດລາວ ໃນເວລານີ້ ໂຮມທັງເກາະດອນຕ່າງໆ ໃນແມ່ນ້ຳນັ້ນນຳ. ພ້ອມທັງບັງຄັບໃຫ້ສຍາມໃຊ້ຄ່າເສັຽຫາຍຕ່າງໆ ທີ່ກອງທະຫານສຍາມ ຫລື ເຈົ້າໜ້າທີ່ສຍາມ ໄດ້ກະທຳຕໍ່ກອງທະຫານຂອງຝຣັ່ງ ແລະ ຄົນໃນບັງຄັບຂອງຝຣັ່ງອີກ.

ເມື່ອສຍາມ ເຫັນວ່າບໍ່ມີກຳລັງພຽງພໍ ທີ່ຕໍ່ສູ້ກັບຝຣັ່ງໄດ້ແລ້ວ ສຍາມຈຶ່ງຈຳໃຈ ຍົກຫົວເມືອງລາວ ຝັ່ງຊ້າຍແມ່ນ້ຳຂອງໂຮມທັງ ເກາະດອນຕ່າງໆ ໃນແມ່ນ້ຳນັ້ນ ໃຫ້ແກ່ຝຣັ່ງ ຕາມໜັງສືສັນຍາ ຣະຫວ່າງສຍາມ ແລະ ຝຣັ່ງ ທີ່ໄດ້ລົງນາມ ກັນຢູ່ທີ່ກຣຸງເທບ ເມື່ອວັນທີ ໓ ຕຸລາ ໑໘໙໓ ນອກຈາກນັ້ນ ສຍາມ ຍັງໄດ້ເສັຽເງິນ ເພື່ອໃຊ້ຄ່າເສັຽຫາຍ ໃຫ້ແກ່ຝຣັ່ງອີກ. ເປັນເງິນ ໔ ລ້ານຝຣັ່ງ ແລະເງິນບາດອີກ ໓ ລ້ານບາດໃນສມັຍນັ້ນ.

ທ່ານຜູ້ອ່ານ ຈະເຫັນໄດ້ວ່າ ສຍາມບໍ່ໄດ້ເສັຽຫົວເມືອງລາວ.ທັງເຫນືດ ໃຫ້ແກ່ຝຣັ່ງ ເພາະຫົວເມືອງລາວ ທີ່ເປັນຫົວເມືອງຂຶ້ນຂອງສຍາມນັ້ນ. ບໍ່ໄດ້ມີແຕ່ຈຳເພາະ ຫົວເມືອງລາວ ທີ່ສຍາມເສັຽໃຫ້ແກ່ຝຣັ່ງຕາມຫນັງສືສັນຍາສບັບນີ້ເທົ່ານັ້ນ.

ເຖິງວ່າສຍາມ ຈະເສັຽຫົວເມືອງລາວ ໃຫ້ແກ່ຝຣັ່ງອີກ ໃນ ໑໐ ປີຕໍ່ມາ ລຸນຫລັງຈາກເສັຽຄັ້ງແຮກແລ້ວ ຄືສຍາມ ເສັຽຫົວເມືອງລາວ ໃຫ້ແກ່ຝຣັ່ງອີກ ໃນປີ ຄ.ສ. ໑໙໐໓ ຕາມຫນັງສືສັນຍາຣະຫວ່າງ ສຍາມ ແລະຝຣັ່ງ ສບັບລົງວັນທີ ໓ ຕຸລາ ໑໙໐໔ ແລະ ຫນັງສືສັນຍາສະບັບລົງວັນທີ ໑໓ **ກຸມພາ** ໑໙໐໓ ໂດຽແກ້ໄຂເພີ້ມເຕີມ ຈາກສັນຍາສບັບກ່ອນກໍຕາມ ສຍາມກໍບໍ່ໄດ້ເສັຽຫົວເມືອງລາວ ທັ້ງເຫນືດ ໃຫ້ແກ່ຝຣັ່ງຢູ່ດີເກົ່າ ຫົວເມືອງລາວ ສ່ວນຫລາຍ ທັງຢູ່ກ້ອງການປົກຄອງ ໃນຖານະຫົວເມືອງຂຶ້ນ ຂອງສຍາມຕໍ່ມາ ໂຮມທັງລາວລ້ານນາ ທີ່ສຍາມຮຽກວ່າ ລາວພູງດຳ ທີ່ເຄີຍເປັນຣັຖເອກຣາຊ ກໍຍັງຢູ່ພາຍໃຕ້ການປົກຄອງ ຂອງສຍາມທັງເຫນືດ ດັ່ງຈະໄດ້ຍົກເອົາຫລັກຖານ ການປົກຄອງ ຫົວເມືອງລາວ ທີ່ຍັງຕົກຄ້າງຢູ່ ນຳສຍາມ ໃນຖານະຫົວເມືອງຂຶ້ນນັ້ນ ມາໃຫ້ທ່ານຜູ້ອ່ານເຫັນໃນຂັ້ນຕໍ່ໄປ.

ຍ້ອນວ່າໄທ ບໍ່ໄດ້ເສັຽຫົວເມືອງລາວ ທັງເຫນື**ອ** ໃຫ້ແກ່ຝຣັ່ງ ຫລືຍ້ອນວ່າ ຫົວເມືອງລາວສ່ວນຫລາຍ ຍັງຕົກຄ້າງຢູ່ນຳໄທ ນີ້ແລ້ວທີ່

ເປັນສາເຫດອັນສຳຄັນທີ່ສຸດ. ທີ່ນຳພາໃຫ້ປະເທດໄທ ມີສະພາບການຢ່າງທີ່ເປັນຢູ່ ໃນປັດຈຸບັນນີ້.

ສຳລັບສະພາບການ ທີ່ເປັນຢູ່ໃນປະເທດໄທ ປັດຈຸບັນນີ້ນັ້ນ ທ່ານຣັຖມົນຕຣີໄທ ໃນຄນະຣັຖບານຊຸດນີ້(ຄ.ສ. ໑໙໗໑) ໄດ້ເຄີຍອອກປາກວ່າ ມັນເປັນ "**ກົນຂອງຍຸກ**"

<u>ໝ າ ຍ ເ ຫ ດ</u>: (໑) ເຣື່ອງຝັ່ງຂວາ ຝັ່ງຊ້າຍ ແມ່ນ້ຳຂອງ ຫລືແມ່ນ້ຳຕ່າງໆນັ້ນ ອາດຈະມີບາງຄົນບໍ່ເຂົ້າໃຈ ວ່າເພິ່ນຖືເອົາຫລັກເກນຢ່າງໃດ ຫລັກເກນງ່າຍໆ ມີຢູ່ວ່າ ຖ້າເຮົາຢາກຮູ້ວ່າ ຝັ່ງໃດຂອງແມ່ນ້ຳຂອງ ຫລື ແມ່ນ້ຳອື່ນໆ ເປັນຝັ່ງຂວາ ຫລື ຝັ່ງຊ້າຍ ໃຫ້ເຮົາຢືນປິ່ນໜ້າໄປນຳທາງນ້ຳໄຫລໄປ ຝັ່ງຂວາຂອງແມ່ນ້ຳ ຈະຢູ່ທາງຂວາມືຂອງເຮົາ ສ່ວນຝັ່ງກົງກັນຂ້າມ ກໍເປັນຝັ່ງຊ້າຍ.

<u>ໝ າ ຍ ເ ຫ ດ</u>:(໔) ໜັງສືສັນຍາຣະຫວ່າງສຍາມ ແລະຝຣັ່ງ ສະບັບລົງວັນທີ ໓ ຕຸລາ ໑໙໐໔ ແລະໜັງສືສັນຍາສບັບລົງວັນທີ ໑໓ ກຸມພາ ໑໙໐໓ ເປັນໜັງສືສັນຍາ ທີ່ຝຣັ່ງບັງຄັບເອົາແຂວງໄຊຍະບູຣີ ແຂວງຈຳປາສັກ ແລະ ແຂວງເຊໂດນ ຂອງລາວໃນເວລານີ້ ຈາກສຍາມ.

<u>ໝ າ ຍ ເ ຫ ດ</u>: (໓)ສຳລັບລາວພູງຂາວນັ້ນ. ສຍາມຣຽກຊື່ລາວໃນເຂດນີ້ມາແຕ່ສມັຍໂບຮານແລ້ວ ພູງກໍຄືທອງ ລາວພູງຂາວກໍຄືລາວທອງຂາວ ອັນເປັນຊື່ຄົນ ລະຊື່ກັບລາວພູງດຳ. ທີ່ສຍາມໃຊ້ຣຽກ ລາວລ້ານ


ແຜນທີ່ສັງເຂບ
ສະແດງປວັດການເສັຽຫົວເມືອງລາວ
ໃຫ້ແກ່ຝຣັ່ງຂອງປະເທສສຍາມ
ມີຄຳອະທິບາຍໜ້າ 102.
+-+-+- ເສັ້ນແບ່ງເຂດປະເທດ
-·-·-·- ເສັ້ນແບ່ງເຂດຫົວເມືອງ
ຈີນ
ສິບສອງປັນນາ
ຕັງແກງ
ພະມ້າ
ລາວພຸງຂາວ
ສິບສອງຈຸໄທ
ລາວພຸງດຳ
ລາວລ້ານນາ
ລາວພວນ
ລາວ
ລາວກາງ
ໄທ
ຂະແມນ
ອ່າວໄທ

ມາ. ຫລືລາວ**ຍວນ** ເພາະລາວເຜົ່ານັ້ນ ນິຍົມສັກລາຍ ແຕ່ທ້ອງລົງໄປ ຈົນເຖິງ ຫົວເຂົ່າ ທ້ອງຫລືພຸງ ຈຶ່ງດຳ ແຕ່ລາວລ້ານຊ້າງ ນິຍົມສັກລາຍ ແຕ່ກົກຂາ ລົງໄປດັ່ງນັ້ນ ຫນັງທ້ອງຈຶ່ງບໍ່ດຳ ຄື ລາວລ້ານ**ນາ.**

24/VII
ຫ້າມຈຳໜ່າຍ

## ຄວາມເປັນມາ ຂອງຫົວເມືອງລາວ ສ່ວນ ທີ່ຍັງຕົກ ຄ້າງຢູ່ນຳສຍາມ

-----------

ສຍາມໄດ້ເສັຽຫົວເມືອງລາວ ຝັ່ງຊ້າຍແມ່ນ້ຳຂອງ ໃຫ້ແກ່ຝຣັ່ງ ລຸນຫລັງຈາກສຍາມ ໄດ້ແບ່ງແຍກ ຫົວເມືອງລາວ ອອກເປັນກອງໃຫ່ຍ ໆ ໄດ້ ໓ ປີ ສ່ວນຫົວເມືອງລາວ ຝັ່ງຂວາ ແມ່ນ້ຳຂອງ ທີ່ຍັງຕົກຄ້າງຢູ່ນຳ - ສຍາມນັ້ນ, ສຍາມກໍຍັງຖືວ່າ ເປັນຫົວເມືອງລາວ ແລະ ຢູ່ໃນຖານະຫົວ ເມືອງຂຶ້ນ, ຂອງສຍາມຕໍ່ມາ. ດັ່ງທ່ານຜູ້ອ່ານຈະໄດ້ເຫັນ ຈາກຫລັກຖານ ການປົກຄອງ ຫົວເມືອງລາວ ທີ່ຍັງຕົກຄ້າງຢູ່ນຳ ສຍາມ ດັ່ງຕໍ່ລົງໄປນີ້.

ໃນປີ ຄ.ສ. ໑໙໐໗ (ພ.ສ.໔໔໔໐) ຄືລຸນຫລັງຈາກສຍາມ ເສັຽເມືອງລາວ ຝັ່ງຊ້າຍແມ່ນ້ຳ ຄື ປະເທດລາວ ໃນເວລານີ້ ໃຫ້ແກ່ຝຣັ່ງ ໄດ້ ໔ ປີ ສຍາມໄດ້ຈັດຣະບຽບການປົກຄອງປະເທດຂຶ້ນໃຫມ່ ໂດຍແບ່ງຫົວ ເມືອງຕ່າງໆ ໃນອານາຈັກສຍາມ ທັງໝົດອອກເປັນມົນທົນ. ແລະຫົວເມືອງ ລາວ ທັງລາວລ້ານຊ້າງ (ຄືລາວທີ່ຢູ່ຝັ່ງຂວາແມ່ນ້ຳຂອງ ກົງກັນຂ້າມ ກັບ ປະເທດລາວໃນເວລານີ້) ແລະລາວລ້ານນາ ຕລອດຈົນ ຫົວເມືອງຂເມນ ຈຶ່ງໃນ. ທີ່ຍັງເຫລືອຕົກຄ້າງ ຢູ່ນຳສຍາມ ໃນຖານະເປັນຫົວເມືອງຂຶ້ນນັ້ນ ກໍຖືກຈັດຕັ້ງເປັນມົນທົນ ຄື ກັນດັ່ງນີ້ :

໑- ຫົວເມືອງລາວພູງດຳ ຕັ້ງເປັນມົນທົນລາວສຽງ ຫລືຊຽງ (ຫົວເມືອງລາວພູງດຳ ຄື ລາວລ້ານນາ ເວລານັ້ນມີ ໕ ຫົວເມືອງໃຫ່ຍ ຄື ນະຄອນຊຽງໃຫມ່, ນະຄອນລຳພູນ,

ນະຄອນນ່ານ, ເມືອງແພ່ຣ ແລະເມືອງເຖີນ)

໔- ຫົວເມືອງລາວພວນ ຕັ້ງເປັນມົນທົນລາວພວນ (ຫົວເມືອງລາວພວນ ທີ່ຢູ່ຝັ່ງຊ້າຍແມ່ນ້ຳຂອງ ຄື ແຂວງວຽງຈັນ, ແຂວງຊຽງຂວາງ, ແຂວງບໍຣິຄັນ, ແຂວງຄຳມ່ວນ, ຂອງລາວໃນເວລານີ້ ໄດ້ຕົກມາເປັນຫົວເມືອງຂື້ນຂອງຝຣັ່ງແລ້ວ.)

໕- ຫົວເມືອງລາວກາວ ຕັ້ງເປັນມົນທົນລາວກາວ (ຫົວເມືອງລາວກາວ ທີ່ຢູ່ຝັ່ງຊ້າຍແມ່ນ້ຳຂອງ ໄດ້ແກ່ແຂວງສວັນນະເຂດ ແຂວງສາຣະວັນ, ແຂວງອັຕະປື, ແຂວງວາປີຄຳທອງ, ແຂວງເຊໂດນ, ຂອງລາວ ຕລອດຈົນຮອດເຂດແດນເມືອງຊຽງແຕງ ເມືອງແສນປາງ ອັນຕົກໄປຢູ່ໃນອຳນາດຂອງຂເມນໃນເວລານີ້ ໄດ້ຕົກມາເປັນຫົວເມືອງຂື້ນ ຂອງຝຣັ່ງແລ້ວ).

໖- ຫົວເມືອງລາວກາງ ຕັ້ງເປັນມົນທົນລາວກາງ

໗- ຫົວເມືອງຂເມນ ທີ່ຍັງເຫລືອຕົກຂ້າງຢູ່ນຳສຍາມ ທີ່ສຍາມຮຽກວ່າ ຫົວເມືອງຂເມນຊັ້ນໃນ ມີຫົວເມືອງສຳຄັນ ຄືເມືອງພັດຕັມບອງ, ເມືອງສຽມຣຽບ, ເມືອງສີໂສພົນ, ເມືອງພະນົມສົກ, ແລະຫົວເມືອງທີ່ຂຶ້ນຕໍ່ນັ້ນ ສຍາມຕັ້ງເປັນ "ມົນທົນຂເມນ"

ເຫດການທີ່ສຳຄັນອີກຢ່າງນຶ່ງ ທີ່ເກີດຂຶ້ນໃນປີນີ້ ອັນກ່ຽວພັນເຖິງດິນລາວ ສ່ວນທີ່ຕົກຄ້າງຢູ່ ໃນປົກຄອງຂອງສຍາມ ກໍຄືຂ້າຫລວງສຍາມ ປ່ຽນແປງຣະບຽບການປົກຄອງ ຫົວເມືອງລາວ ສ່ວນທີ່ຍັງຢູ່ນຳສຍາມໃໝ່ ໂດຍປ່ຽນຕຳແໜ່ງ ເຈົ້າເມືອງ,ອຸປຣາດ,ຣາຊວົງ,ຣາຊບຸດ ອັນເປັນທັມນຽມການປົກຄອງຂອງລາວ ທີ່ສືບຕໍ່ເປັນປະເພນີ ມາແຕ່ສມັຍໂບຮານ. ໂດຍຂ້າຫລວງສຍາມ ປ່ຽນເປັນ ຜູ້ວ່າຣາຊການເມືອງ, ຍົກກຣະບັດເມືອງ,ປະຫລັດເມືອງ ແລະຜູ້ຊ່ວຍຣາຊການເມືອງ.

ຄ.ສ. ໑໘໙໙ (ພ.ສ. ໒໔໔໒) ສຍາມຍຸບເລີກ ຫົວເມືອງຂຶ້ນ ຫົວເມືອງລາວຝັ່ງຂວາແມ່ນ້ຳຂອງ ທີ່ຍັງຕົກຄ້າງຢູ່ນຳສຍາມ ໄດ້ຕົກຢູ່ໃນຖານະເປັນຫົວເມືອງຂຶ້ນ ຕໍ່ມາອີກ ໖ ປີ ລຸນຫລັງຈາກສຍາມ ເສັຽຫົວເມືອງລາວຝັ່ງຊ້າຍແມ່ນ້ຳຂອງ ໃຫ້ແກ່ຝຣັ່ງແລ້ວ ຄືສຍາມໄດ້ໂຮມເອົາເຂດທີ່ແຜນດິນຂອງບັນດາ ຫົວເມືອງຂຶ້ນ ອັນມີຫົວເມືອງລາວ ຫົວເມືອງຂເມນ ໂຮມເຂົ້າເປັນ "ພຣະຣາຊອານາເຂດປະເທດສຍາມ" ການຖວາຍຕົ້ນໄມ້ເງິນ ຕົ້ນໄມ້ຄຳ ແລະເຄື່ອງມຸງຄຸນບັນນາການ. ເປັນສິ່ງຂອງອັນມີຄ່າ ຂອງເຈົ້າຫົວເມືອງຂຶ້ນ ກໍຍຸບເລີກໃນປີນັ້ນຄືກັນ. ເພາະສຍາມຢ້ານວ່າ ປະເທດມຫາອຳນາດ ນັກລ່າຫົວເມືອງຂຶ້ນ ຫນີໃນສມັຍນັ້ນ ຈະຖືເອົາເປັນຂໍ້ອ້າງເຂົ້າແຊກແຊງ ຍຶດເອົາຫົວເມືອງຂຶ້ນຕ່າງໆໄປຈາກສຍາມອີກ.

ດັ່ງຜູ້ຮຽບຮຽງ ຈະຍົກເອົາ ພຣະບໍຣົມຣາຊໂອງການ ຂອງພຣະເຈົ້າແຜ່ນດິນ ສຍາມຣັຊການທີ ໕ ທີ່ໄດ້ໂຜດຄຳຣັດໄວ້ ກ່ຽວກັບຫົວເມືອງລາວ ຫົວເມືອງຂເມນ ທີ່ຍັງຕົກຄ້າງຢູ່ນຳສຍາມ ມາສເນີຕໍ່ທ່ານຜູ້ອ່ານ ເພື່ອຈະໄດ້ເຂົ້າໃຈ ໃນນະໂຍບາຍຂອງໄທ ແລະຄວາມເປັນມາຂອງລາວ ທີ່ຢູ່ນຳໄທໄດ້ດີຕົ້ນຂຶ້ນ.

ພຣະຈຸລຈອມເກົ້າ ເຈົ້າຢູ່ຫົວ ພຣະເຈົ້າມະຫາຊີວິດ ຂອງສຍາມຣັຊການທີ່ ໕ ໄດ້ອອກຄຳຣັດວ່າ "ລັກສນະການປົກຄອງ ແຜ່ນດິນທີ່ນິຍົມໃຫ້ເປັນແບບປະເທດຣາຊາທິປະໄຕ" ( MONARCHY ) " ໂດຍການ

ປົກຄອງແບບ"ໃຫ້ຄົນຕ່າງຊາດ ຕ່າງພາສາ ເປັນຫົວເມືອງຂຶ້ນ" ໂຜດສັງເກດ ດຳຣັດນີ້ວ່າ ພຣະເຈົ້າມະຫາຊີວິດ ສຍາມເອງ ກໍທົງຮັບວ່າ ລາວ-ຂເມນ ຫລື ຊາດອື່ນ ທີ່ພຣະອົງທົງປົກຄອງຢູ່ນັ້ນ ເປັນຄົນຕ່າງຊາດ ຕ່າງພາສາ(ຜູ້ຣຽບຣຽງ) ຈຶ່ງຖືຫົວເມືອງມົນທົນຊັ້ນນອກ ໔ ມົນທົນນັ້ນເປັນ - ເມືອງລາວ ເນື່ອງຈາກການປົກຄອງ ລັກສນະດັ່ງກ່າວນີ້ ເປັນອັນວ່າຫມົດສມັຍແລ້ວ ຫາກປະໄວ້ ຈະກັບໃຫ້ໂທດແກ່ບ້ານເມືອງ. ຈຶ່ງທົງດຳຣິໃຫ້ແກ້ການປົກຄອງປ່ຽນເປັນ " ພຣະຣາຊອານາເຂດປະເທດສຍາມ" ເລີກປະເພນີ ທີ່ຖືເປັນເມືອງ ປະເທດຣາຊ (ຄືເຊົາຖືວ່າເປັນຫົວເມືອງຂຶ້ນ) ແລະການຖວາຍຕົ້ນໄມ້ເງິນ ຕົ້ນໄມ້ຄຳ ແລະເຄື່ອງມຸງຄຸນປັນຍາການດັ່ງແຕ່ກ່ອນ".

ນອກຈາກນີ້ ເຈົ້າຊີວິດ ສຍາມພຣະອົງນີ້ ຍັງທົງມີພຣະບໍຣົມຣາຊໂອງການດຳຣັດສັ່ງວ່າ ຫົວເມືອງຊັ້ນໃນ ທີ່ໄດ້ໂຮມເມືອງເຂົ້າເປັນມົນທົນ ( ໂຮມທັງຫົວເມືອງລາວຊັ້ນໃນ ດັ່ງກ່າວແລ້ວ) ຈັດການປົກຄອງແບບເທສາພິບາລນັ້ນ (ເທສາພິບາລ ເປັນການປົກຄອງຢ່າງນຶ່ງ ຂອງສຍາມໃນສມັຍນັ້ນ) ໄດ້ໂຜດໃຫ້ຣຽກຊື່ ມົນທົນ ຕາມພື້ນທີ່ແລ້ວ ແຕ່ມົນທົນຊັ້ນນອກຄືມົນທົນ ລາວສຽງ (ຄືລາວລ້ານນາ) ມົນທົນລາວກາວ ມົນທົນລາວພວນ, ມົນທົນຂເມນ, (ຫມາຍເຖິງຫົວເມືອງຂເມນຊັ້ນໃນ. ເຊິ່ງເວລານັ້ນ ຍັງບໍ່ທັນໄດ້ຕົກໄປເປັນຫົວເມືອງຂຶ້ນຂອງຝຣັ່ງ ມີເມືອງພັດຕົມບອງ ເມືອງສຽມຣຽບ, ເມືອງສີໂສພົນ ເປັນຫົວເມືອງສຳຄັນ)ຍັງບໍ່ທັນໄດ້ຣຽກຊື່ ຕາມພື້ນທີ່ ໃຫ້ເປັນຣະບຽບດຽວກັນ ຈຶ່ງໂຜດປະກາດໃຫ້ຊາບທົ່ວກັນວ່າ.

໑- ເມືອງນະຄອນຊຽງໃຫມ່ ເມືອງລຳພູນ ເມືອງນ່ານ ເມືອງແພ່ຣ ເມືອງເຖີນ (ອຳເພີເຖີນ ຈັງຫວັດລຳປາງ) ແລະຫົວເມືອງຂຶ້ນຕໍ່ເມືອງດັ່ງກ່າວນີ້. ເຊິ່ງແຕ່ກ່ອນໂຣມຣຽກວ່າ "ມົນທົນລາວສຽງ" ນັ້ນຕໍ່ແຕ່ນີ້ສືບໄປ ໃຫ້ຣຽກວ່າ "ມົນທົນຝ່າຍຕາເວັນຕົກກ້ຳເຫນືອ"

໒- ເມືອງຫນອງຄາຍ, ເມືອງໂພນພິສັຍ, ເມືອງຊັຍບຸຣີ, (ເວລານີ້ ເປັນຕາແສງຂຶ້ນຕໍ່ອຳເພີ ທ່າອຸເທນ )ເມືອງທ່າອຸເທນ, ເມືອງນະຄອນພຣະນົມ, ເມືອງມຸກດາຫານ, ເມືອງສະກົນນະຄອນ, ເມືອງຫນອງຫານ, ເມືອງກະມຸດທາສັຍ(ອຳເພີຫນອງບົວລຳພູ ເວລານີ້) ເມືອງຂອນແກ່ນ, ເມືອງຊົນນະບົດ, ເມືອງລົ່ມສັກ, (ອຳເພີລົ່ມສັກ ຈັງຫວັດເພຊບູນ) ໂຣມ ໑໒ ຫົວເມືອງ ແລະເມືອງຂຶ້ນຕໍ່ເມືອງດັ່ງກ່າວນີ້ ເຊິ່ງແຕ່ກ່ອນໂຣມຣຽກວ່າ "ມົນທົນລາວພວນ" ນັ້ນຕໍ່ແຕ່ນີ້ສືບໄປ ໃຫ້ຣຽກວ່າ "ມົນທົນຝ່າຍເຫນືອ".

໓- ເມືອງນະຄອນຈຳປາສັກ, (ເວລານັ້ນຍັງບໍ່ທັນຕົກມາເປັນຫົວເມືອງຂຶ້ນຂອງຝຣັ່ງເທື່ອ) ເມືອງອຸບົນຣາຊທານີ, ເມືອງເຂມຣາຊທານີ, ເມືອງຍະໂສທອນ, ເມືອງສຸວັນນະພູມ, ເມືອງສີສະເກດ, ເມືອງສຸຣິນ, ເມືອງສັງຂະ, ເມືອງຊຸຂັນ, ເມືອງກົມລາສັຍ, ເມືອງກາລະສິນ, ເມືອງພູແລ່ນຊ້າງ, (ອຳເພີຍາງຕລາດ ຈັງຫວັດກາລະສິນ ເວລານີ້) ເມືອງມະຫາສາຣະຄາມ ໂຣມຫົວເມືອງເອກ ໑໔ ຫົວເມືອງ ແລະ ເມືອງຂຶ້ນຕໍ່ ເຊິ່ງແຕ່ກ່ອນ ໂຣມຣຽກວ່າ "ມົນທົນລາວກາວ" ນັ້ນຕໍ່

ແຕ່ນັ້ນສືບໄປ ໃຫ້ຮຽກວ່າ "ມົນທົນຕາເວັນອອກກ້ຳເໜືອ" (ໄທຮຽກວ່າຕາເວັນອອກສຽງເໜືອ)

໔- ເມືອງພັດຕັມບອງ, ເມືອງສຽມຣຽບ, ເມືອງສີໂສພົນ, ເມືອງພະນົມສົກ, ແລະເມືອງທີ່ຂຶ້ນຕໍ່ເມືອງດັ່ງກ່າວນີ້ ເຊິ່ງແຕ່ກ່ອນໂຮມຮຽກວ່າ ມົນທົນຂະເມນ"ນັ້ນ ແຕ່ນັ້ນສືບໄປ ໃຫ້ຮຽກວ່າ "ມົນທົນຕາເວັນອອກ"

໕- ທົ່ວເມືອງໃນມົນທົນ ນະຄອນຣາຊສີມາ(ສຍາມປ່ຽນຊື່ຈາກມົນທົນລາວກາງ) ທີ່ແບ່ງໄວ້ ມີ ບໍຣິເວນຄື ເມືອງນະຄອນຣາຊສີມາ ເມືອງພິມາຍ, ເມືອງປັກທູງໄຊ ແລະເມືອງນະຄອນຈັນທຶກ ເຊິ່ງໂຮມຮຽກວ່າ"ບໍຣິເວນນະຄອນຣາຊສີມາ" ນັ້ນແຕ່ນັ້ນສືບໄປ ໃຫ້ໂຮມຮຽກວ່າ "ເມືອງນະຄອນຣາຊສີມາ"

໖- ເມືອງນາງຮອງ, ເມືອງບູຣີຣັມ, ເມືອງປຣະໂຄນຊັຍ, ເມືອງພູດໄທສົງ ແລະເມືອງຣັຕນະບູຣີ ເຊິ່ງໂຮມເຂົ້າກັນຮຽກວ່າ "ບໍຣິເວນນາງຮອງ"ນັ້ນ ແຕ່ນັ້ນສືບໄປ ໃຫ້ໂຮມຮຽກວ່າ"ເມືອງນາງຮອງ"ຍົກຖານະຂຶ້ນເປັນເມືອງຈັຕວາ.

໗- ເມືອງຊັຍພູມ, ເມືອງພູຂຽວ, ເມືອງກະເສດສົມບູນ, ເມືອງຈັຕູຣັດ ແລະເມືອງບຳເນັດນະຣົງເຊິ່ງໂຮມຮຽກວ່າ "ບໍຣິເວນຊັຍພູມ"ນັ້ນ ແຕ່ນັ້ນສືບໄປ ໃຫ້ໂຮມຮຽກວ່າ "ເມືອງຊັຍພູມ" ຍົກຂຶ້ນເປັນເມືອງ ຈັຕວາເມືອງນຶ່ງ.

ນັ້ນຄືດຳຣັດ ຂອງພຣະເຈົ້າແຜ່ນດິນສຍາມ ທີ່ທົ່ງປະກາດ ໃຫ້ໂຮມແປງຖານະທົ່ວເມືອງຂຶ້ນ ໃນປີ ຄ.ສ. ໑໘໙໙.

ເພື່ອເປັນການເຫມາະສົມ ກັບພຣະບໍຣົມຣາຊໂອງການ ຄຳຣັດຂອງ ພຣະເຈົ້າແຜ່ນດິນສຍາມ ທີ່ໃຫ້ປ່ຽນຊື່ຫົວເມືອງຂຶ້ນດັ່ງກ່າວນັ້ນ ຂ້າຫລວງສຍາມ ປະຈຳເມືອງນະຄອນຣາຊສີມາ ເວລານັ້ນ (ຄືພຣະເຈົ້ານ້ອງຍາເທີ ກຣົມ ຫລວງສັນພະສິດ ທິປະສົງ) ຈຶ່ງອອກປະກາດ ຄຳສັ່ງໄປຍັງຫົວເມືອງໃຫຍ່ ນ້ອຍ ໂດຍທົ່ວໄປວ່າ "ແຕ່ນີ້ສືບໄປ ໃຫ້ເຈົ້າຫນ້າທີ່ ແຕ່ລະພແນກປະຈຳ ຫົວເມືອງໃຫຍ່ນ້ອຍ ເວລາຣາສດອນມາຕິດຕໍ່ ອັນຈະຕ້ອງໃຊ້ແບບພິມຂອງ ທາງຣາຊການ. ໃຫ້ປະຕິບັດໃຫມ່ ໂດຍຂຽນໃນຊ່ອງສັນຊາດນັ້ນວ່າ"ຊາດ ໄທ" ໃນບັງຄັບສຍາມທັງສິ້ນ. ຫ້າມລົງ ຫລືຂຽນໃນຊ່ອງສັນຊາດວ່າ "ຊາດລາວ"", ຊາດຂເມນ" ສ່ວຍຜູ້ໄທ, ດັ່ງທີ່ເຄີຍໄດ້ປະຕິບັດມາແຕ່ ກ່ອນເປັນອັນຂາດ "ເພາະເປັນຊາດໄທສືບເນື່ອງກັນມາ ແຕ່ດຶກດຳບັນທັງ ນັ້ນ" ກໍເປັນອັນວ່າ ດິນລາວ ສ່ວນທີ່ຍັງຕົກຄ້າງຢູ່ນຳສຍາມ ກໍໄດ້ສັນຊາດ ຕາມທີ່ຂ້າຫລວງສຍາມ ປະຈຳເມືອງນະຄອນຣາຊສີມາ ຕັ້ງໃຫ້ໃຫມ່ວ່າ "ຊາດໄທ" ແຕ່ນັ້ນມາ.

ຫ ມ າ ຍ ເ ຫ ດ : ທ່ານຜູ້ອ່ານຄວນຈະສັງເກດວ່າ ຂ້າຫລວງສຍາມ ເຖິງວ່າຈະປ່ຽນເຊື້ອຊາດ ໃຫ້ຊົນຊາດຕ່າງໆ ເຊັ່ນ ລາວ, ຂເມນ; ຜູ້ໄທ, ໃຫ້ເປັນຊາດໄທ ກໍຕາມແຕ່ກໍຍັງກ່າວໄວ້ວ່າ"ໃນບັງຄັບສຍາມທັງສິ້ນ"ເວົ້າ ງ່າຍໆ ກໍວ່າ ຂ້າຫລວງສຍາມຍັງຖືວ່າ ເປັນດິນທີ່ຢູ່ໃນປົກຄອງ ຫລືໃນບັງ ຄັບນັ້ນເອງ (ຜູ້ຮຽບຮຽງ)

ຄ.ສ. ໑໙໐໑ ເຈົ້າຍຸຕິທັມທອນ ເຈົ້ານະຄອນຈຳປາສັກ ເຖິງແກ່ພິລາລັຍ ພຣະຊົນໄດ້ ໕໙ ປີ. ຄອງເມືອງຢູ່ ໓໙ ປີ ເຈົ້າຣາຊະດານຸຍ ບົວຣະພັນ ເປັນຜູ້ຮັກສາການ, ນະຄອນຈຳປາສັກສືບຕໍ່ມາ ເພາະທາງກຣຸງເທບ ຍັງບໍ່ທັນໄດ້ຕັ້ງໃຫ້ຜູ້ໃດ ເປັນເຈົ້ານະຄອນຈຳປາສັກ.

ຄ.ສ. ໑໙໐໓ ສຍາມຍົກເອົາ ຫົວເມືອງລາວຝັ່ງຂວາ ແມ່ນ້ຳຂອງ ທັງທົ່ງຂ້າມ ຊື່ໆ ປາກເຊ ຄື ແຂວງຈຳປາສັກ ແລະ ແຂວງເຊໂດນຕອນນຶ່ງ ກັບແຂວງໄຊຍະບູຣີ ຕອນນຶ່ງ ໃຫ້ແກ່ຝຣັ່ງ ຕາມໜັງສືສັນຍາ ຣະຫວ່າງສຍາມ ແລະ ຝຣັ່ງ ທີ່ທຳສັນຍາກັນສອງສບັບ ສັນຍາສບັບທີ ໑ ລົງວັນທີ ໗ ຕຸລາ ໑໙໐໒ ສັນຍາສບັບທີ ໒ ລົງວັນທີ ໑໗ ກຸມພາ ໑໙໐໓ ໂດຍແກ້ໄຂຕື່ມຈາກສັນຍາ ສບັບທີ ໑.

ຝ່າຍເຈົ້າຣາຊະດານຸຍ ນະຄອນຈຳປາສັກ ຄື ເຈົ້າບົວຣະພັນ, ເມື່ອສຍາມຍົກນະຄອນຈຳປາສັກ ໃຫ້ແກ່ຝຣັ່ງ ກໍອົພຍົບຄອບຄົວ ໄປຢູ່ໃນເຂດປົກຄອງຂອງສຍາມ ທີ່ອຳເພີໂຂງຈຽມ, ຈັງຫວັດອຸບົນ ເລີຍເຖິງແກ່ກັມທີ່ເມືອງນັ້ນ. ຍັງເຫລືອຢູ່ ທີ່ນະຄອນຈຳປາສັກແຕ່ເຈົ້າຣາຊະດະນັຍ (ຫຍຸຍ) ທາງການຝຣັ່ງຈຶ່ງຕັ້ງ ເຈົ້າຣາຊະດະນັຍ ຂຶ້ນເປັນເຈົ້າຄອງນະຄອນຈຳປາສັກ ຢູ່ໃນຄວາມປົກຄອງຂອງຝຣັ່ງຕໍ່ມາ.

<u>ໝ າ ຍ ເ ຫ ດ</u> : ຈຳເພາະແຂວງຝັ່ງຂວາ ທົ່ງຂ້າມຫລວງພຣະບາງ ຄື ແຂວງໄຊຍະບູຣີ ນັ້ນເຈົ້າຣາຊະດານຸຍ (ບຸນຄົງ) ນະຄອນຫລວງພຣະບາງ ໄດ້ ນຳກຳລັງທະຫານຫລວງພຣະບາງ ໄປຂັບໄລ່ ເຈົ້າໜ້າທີ່ສຍາມອອກຈາກ ເຂດແຂວງດັ່ງກ່າວນີ້ ແຕ່ປີ ຄ.ສ. ໑໘໙໔ ພ້ອມກັນນັ້ນ

ເຈົ້າອຸປຣາດ ກໍທົງຕັ້ງເຈົ້າໜ້າທີ່ຂອງລາວ ປົກຄອງແຂວງດັ່ງກ່າວນີ້ ແຕ່ປີນັ້ນເປັນຕົ້ນມາ. ແລະ ກໍບໍ່ປາກົດວ່າ ທາງຝ່າຍສຍາມ ໄດ້ເອົາ ກຳລັງທະຫານ ມາຍາດຊິງເອົາຄືນໄປແຕ່ຢ່າງໃດ. ດັ່ງນັ້ນ ສັນຍາ ທີ່ລົງລາຍເຊັນກັນ ຣະຫວ່າງສຍາມ ແລະ ຝຣັ່ງ ເມື່ອປີດັ່ງກ່າວ ທີ່ ກ່ຽວກັບແຂວງນີ້ ຈຶ່ງພຽງແຕ່ມີຄວາມໝາຍວ່າ ສຍາມຍອມຣັບຮູ້ ອຳ ນາດສິດ ຂອງຝຣັ່ງ ໃນພື້ນທີ່ເຂດແຂວງດັ່ງກ່າວນີ້ທໍ່ນັ້ນ. ເພາະເຈົ້າ ອຸປຣາດ ຫລວງພຣະບາງ ໄດ້ນຳກຳລັງທະຫານລາວ ເຂົ້າຍຶດເອົາ ເຂດແຂວງນີ້ ມາໂຮມກັບເມືອງຫລວງພຣະບາງ ກ່ອນທີ່ຝຣັ່ງແລະສຍາມ ຈະລົງລາຍເຊັນກັນກ່ຽວກັບແຂວງນີ້.

247/VII
ຫ້າມຈຳໜ່າຍ

ຄ.ສ. ໑໙໐໗ ຝຣັ່ງຍົກເອົາ ເມືອງດ່ານຊ້າຍຂອງລາວ ທີ່ໂຮມ ຢູ່ກັບແຂວງໄຊຍະບູຣີ ເວລານັ້ນ ໄປໃຫ້ແກ່ສຍາມ. ໂດຍຝຣັ່ງເອົາເມືອງ ດ່ານຊ້າຍ ໄປປ່ຽນກັບຫົວເມືອງຂເມນ ທີ່ສຍາມຮຽກວ່າ "ມົນທົນຕາເວັນ ອອກ" ເວລານັ້ນ ຕາມຫນັງສືສັນຍາ ຣະຫວ່າງຝຣັ່ງ ແລະ ສຍາມ ສບັບ ລົງວັນທີ ໒໓ ມິນາ ໑໙໐໗.

## ຄຳອະທິບາຍແຜນທີ່

## ປະວັດການເສັຽຫົວເມືອງລາວ ໃຫ້ແກ່ຝຣັ່ງ ຂອງປະເທດສຍາມ

ໝ າ ຍ ເ ລ ກ (໑) ແຄວ້ນສິບສອງຈຸໄທ ຝຣັ່ງໄດ້ເອົາກອງທະຫານ ຈາກແກວເຫນືອ ເຂົ້າມາຍຶດເອົາໄປໂຮມກັບແກວເຫນືອ ແຕ່ປີ ຄ.ສ. ໑໘໘໘ ທາງຝ່າຍສຍາມບໍ່ກ້າເຂົ້າຕໍ່ສູ້ ຫລືຂັດຂວາງ ເພາະຍ້ານເກີດເສິກກັບ ຝຣັ່ງ ການເສັຽດິນຕອນນີ້ ບໍ່ໄດ້ມີຫນັງສືສັນຍາ ຣະຫວ່າງສຍາມ ແລະຝຣັ່ງ ເປັນຫລັກຖານ ແຕ່ມາມີສັນຍາໂຮມກັບ ຕອນສຍາມເສັຽດິນຝັ່ງຊ້າຍແມ່ນ້ຳ ຂອງທັງຫມົດ ໃຫ້ແກ່ຝຣັ່ງ.

ໝ າ ຍ ເ ລ ກ (໔) ດິນຫົວເມືອງລາວພຸງຂາວ, ຫົວເມືອງລາວພວນ ແລະຫົວເມືອງລາວກາວ ຕອນຝັ່ງຊ້າຍແມ່ນ້ຳຂອງ ຕລອດໄປຈົນຮອດເຂດ ແດນເມືອງຊຽງແຕງ ເມືອງແສນປາງ ທີ່ໂຮມຢູ່ກັບຫົວເມືອງລາວກາວແລະ ຂຶ້ນຕໍ່ສູນກາງການປົກຄອງ ຂອງສຍາມ ທີ່ເມືອງອຸບົນ ສຍາມເສັຽດິນລາວ ສ່ວນນີ້ ໃຫ້ແກ່ຝຣັ່ງ ເມື່ອປີ ຄ.ສ. ໑໘໙໓ ຕາມຫນັງສືສັນຍາຣະຫວ່າງ ສຍາມ ແລະຝຣັ່ງ ສບັບລົງວັນທີ ໓ ຕຸລາ ໑໘໙໓.

ຫ ມ າ ຍ ເ ລ ຂ (໓) ສຍາມເສັຽດິນລາວສ່ວນນີ້ ເມື່ອປີ ຄ.ສ. ໑໙໐໓ ຕາມໜັງສືສັນຍາຣະຫວ່າງ ສຍາມ ແລະຝຣັ່ງ ສບັບລົງວັນທີ ໑໓ ກຸມພາ ໑໙໐໓.

ຫ ມ າ ຍ ເ ລ ຂ (໔) ສຍາມເສັຽດິນລາວ ສ່ວນນີ້ໃຫ້ແກ່ຝຣັ່ງອັນໝາຍຄວາມໂຮມເຖິງ ເຂດແດນເມືອງດ່ານຊ້າຍ. ຕາມໜັງສືສັນຍາຣະຫວ່າງສຍາມ ແລະຝຣັ່ງ ສບັບລົງວັນທີ ໗ ຕຸລາ ໑໙໐໔.

ຫ ມ າ ຍ ເ ລ ຂ (໕) ໄດ້ແກ່ເມືອງດ່ານຊ້າຍ ເຊິ່ງເວລານັ້ນໂຮມຢູ່ກັບອານາຈັກຫລວງພຣະບາງ ຝຣັ່ງໄດ້ເອົາເມືອງດ່ານຊ້າຍໃຫ້ສຍາມ ເພື່ອເອົາໄປແລກປ່ຽນກັບຫົວເມືອງຂເມນ ພັດຕັມບອງ ເມືອງສຽມຣຽບ ແລະສີໂສພົນ ຕາມໜັງສືສັນຍາຣະຫວ່າງ ສຍາມ ແລະຝຣັ່ງ ສບັບລົງວັນທີ ໒໓ ມີນາ ໑໙໐໖.

ຫ ມ າ ຍ ເ ລ ຂ (໒)ກ.- ຄືຫົວເມືອງລາວພວນ ຝັ່ງຂວາແມ່ນ້ຳຂອງ ສ່ວນທີ່ຍັງຕົກຄ້າງຢູ່ນຳສຍາມ ເຊິ່ງຕໍ່ມາສຍາມຮຽກຊື່ວ່າ <u>ມົນທົນລາວພວນ</u>

ຫ ມ າ ຍ ເ ລ ຂ (໒)ຂ.- ຄືຫົວ<u>ເມືອງລາວກາວ</u> ຝັ່ງຂວາແມ່ນ້ຳຂອງ ສ່ວນທີ່ຍັງຕົກຄ້າງຢູ່ນຳສຍາມ.ຕໍ່ມາສຍາມຮຽກວ່າ <u>ມົນທົນລາວກາວ</u>

## ສຍາມປ່ຽນຊື່ນົມທົນລາວ ສ່ວນທີ່ຍັງຕົກຄ້າງຢູ່ນຳສຍາມໃໝ່ອີກ

ຄ.ສ. ໑໙໐໗ (ພ.ສ. ໒໔໕໐)ສຍາມປ່ຽນຊື່ ມົນທົນລາວອີກເນື່ອງຈາກວ່າຫົວເມືອງລາວ ສ່ວນທີ່ຍັງຢູ່ນຳສຍາມ ນັ້ນບາງຫົວເມືອງ ສຍາມໄດ້ເສັຽມາໃຫ້ຝຣັ່ງອີກ ເຊັ່ນ ຫົວເມືອງໃນມົນທົນ ຕາເວັນອອກກ້ຳເໜືອ (ມົນທົນລາວກາວເກົ່າ) ບາງເມືອງຂອງມົນທົນຝ່າຍເໜືອ (ມົນທົນລາວພວນເກົ່າ) ທາງການສຍາມ ຈຶ່ງປ່ຽນຊື່ ມົນທົນອີກໃນປີນີ້ ປ່ຽນ ໔ ມົນທົນ ຄື.

ມົນທົນຕາເວັນອອກກ້ຳເໜືອ * ປ່ຽນເປັນມົນທົນອີສານ

ມົນທົນຝ່າຍເໜືອ (ມົນທົນລາວພວນເກົ່າ)* ປ່ຽນເປັນມົນທົນອຸດອນ.

ມົນທົນຕາເວັນຕົກກ້ຳເໜືອ(ມົນທົນລາວສຽງເກົ່າ ຫລືລາວພຸງດຳ * ປ່ຽນເປັນມົນທົນພາຍັບ.

ບໍຣິເວນ ນະຄອນຣາຊສີມາ ເມືອງນາງຮອງ,ເມືອງຊັຍພູມ, ໂຮມກັນເຂົ້າເປັນມົນທົນ ນະຄອນຣາຊສີມາ.

ຕໍ່ມາເມື່ອປີ ຄ.ສ. ໑໙໑໒ (ພ.ສ.໒໔໕໕) ໃນມົນທົນອິສານ, ມົນທົນອຸດອນ, ມົນທົນນະຄອນຣາຊສີມາ ທາງການສຍາມ ໄດ້ແບ່ງມົນທົນອິສານ ອອກເປັນ ໒ ມົນທົນ ຄື ມົນທົນ ອຸບົນຣາຊທານີ ແລະມົນທົນຮ້ອຍເອັດ.

ພາຍລຸນມາ ສຍາມໄດ້ໂຮມມົນທົນອຸບົນຣາຊທານີ ກັບມົນທົນ ຮ້ອຍເອັດ ເຂົ້າກັບມົນທົນ ນະຄອນຣາຊສີມາ.

ທາງການສຍາມ ປະກາດໃຫ້ພົລເມືອງ ໃຊ້ນາມສກູນເປັນໄທ

ເມື່ອ ຄ.ສ. ໑໙໑໓ (ພ.ສ.໒໔໕໖) ມີເຫດການອັນສຳຄັນຢູ່ຢ່າງນຶ່ງ ທີ່ເກີດຂຶ້ນ ໃນພຣະຣາຊອານາເຂດ ປະເທດສຍາມ ອັນສົມຄວນທີ່ຄົນລາວຈະຮູ້ ເພາະເຫດການນັ້ນໄດ້ກ່ຽວພັນມາເຖິງຄົນລາວ ອັນຍັງຢູ່ໃຕ້ການປົກຄອງຂອງສຍາມ ເພາະລາວບໍ່ໄດ້ມາຕົກ ມາເປັນຫົວເມືອງຂຶ້ນຂອງຝຣັ່ງທັງໝົດ ດັ່ງກ່າວແລ້ວ ເຣື່ອງສຳຄັນກໍຄື ພຣະມົງກຸດເກົ້າເຈົ້າຢູ່ຫົວ ພຣະເຈົ້າແຜ່ນດິນສຍາມ ຣັຊການທີ ໖ ທົງຕຣາພຣະຣາຊບັນຍັດສຍາມສກູນຂຶ້ນ ແລະປະກາດໃຫ້ໃຊ້ໃນປີນີ້.

ຈຸດປະສົງ ທີ່ພຣະເຈົ້າແຜ່ນດິນສຍາມ ທົງປະກາດໃຊ້ສຍາມກູນນັ້ນ ກໍເພື່ອທີ່ຈະໃຫ້ບັນດາຄົນເຊື້ອຊາດຕ່າງໆ ທີ່ຢູ່ໃຕ້ການປົກຄອງຂອງສຍາມນັ້ນ ມີຄວາມຮູ້ສຶກເປັນຊາວສຍາມ ເພາະໃນສມັຍດັ່ງກ່າວນີ້ ພົລເມືອງໃນປະເທດສຍາມ ມັກຈະມີ ໒ ສັນຊາດຄືສັນຊາດຕາມບັນພະບຸຣຸດ

ແລະສັນຊາດຕາມສະຖານທີ່ເກີດ ເຊັ່ນລູກ ຫລານ ຊາວຈີນ ຄົງຖືເປັນເຊື້ອ ຊາດຈີນ ແຕ່ເປັນຄົນສຍາມ ເພາະເກີດໃນປະເທດສຍາມ ໃນສມັຍນັ້ນ ຈະ ຫາຄົນທີ່ອ້າງໂຕວ່າເປັນຄົນສຍາມ ແຕ່ ໑໐% ກໍເຫັງຍາກອີກ ໙໐% ລ້ວນ ແຕ່ສແດງຕົວເປັນຄົນຕ່າງດ້າວ ຫລື ລູກຫລານ ຂອງຊາດອື່ນທັງນັ້ນ ຖ້າ ເປັນເຊື້ອຊາດຈີນ ກໍໃຊ້ແສ່ຫ້ອຍທ້າຍນາມສກຸນ ຖ້າເປັນລູກຫລານຊາວຢູ- ໂຣບ ກໍໃຊ້ນາມສກຸນພໍ່ ທັງນີ້ໂຮມທັງພວກລາວທີ່ຖືກກວາດຕ້ອນໄປເປັນຊເລີຍ ພ້ອມທັງລາວ ທີ່ຍັງຕົກຄ້າງຢູ່ນໍາສຍາມນັ້ນ ແລະກໍຍັງຖືຕົວວ່າເປັນລາວຢູ່ ແລະສມັຍນັ້ນ ຂ້າຣາຊການ ສຍາມຊັ້ນຜູ້ໃຫຍ່ກໍມີແສ່ (ຖ້າເປັນຊາວຈີນ) ຫລືນາມສກຸນໃນພາສາອື່ນໆ ອັນບໍ່ແມ່ນພາສາ ສຍາມເກືອບທັງນັ້ນ ແລະ ເປັນທີ່ນິຍົມກັນຢູ່ທົ່ວໄປ.

ເຫດທີ່ມີຊາວຕ່າງດ້າວ ຢ່າງຫລວງຫລາຍ ເຖິງກວ່າ ໙໐% ໃນປະເທດສຍາມ ກໍເພາະນະໂຍບາຍການຂຍາຍ ອານາເຂດດ້ວຍການທໍາ ສົງຄາມ ຂອງພຣະເຈົ້າແຜ່ນດິນສຍາມ ອົງກ່ອນໆ ເມື່ອໄປທໍາສົງຄາມ - ຂຍາຍອານາເຂດ ຫລືວ່າໄປປາບປາມ ການອັດແຂງ ຢາກຈະແຍກອອກ ເປັນປະເທດເອກຣາດ ຂອງບັນດາປະເທດຫົວເມືອງຂຶ້ນ ຂອງສຍາມເຊັ່ນສມັຍ ພຣະເຈົ້າອະນຸ ກະສັດລ້ານຊ້າງຣົ່ມຂາວວຽງຈັນກໍດີ ກອງທັບສຍາມມັກຈະ ກວາດຕ້ອນເອົາພົລເມືອງ ຂອງປະເທດນັ້ນ ເຂົ້າໄປໄວ້ໃນອານາເຂດ ຊັ້ນ ໃນຂອງປະເທດສຍາມ ເພື່ອຈະບໍ່ໃຫ້ປະຊາຊົນຂອງປະເທດເຫລົ່ານັ້ນ ມີ ກໍາລັງກ້າແຂງ ອັນອາຈຫ້ອມໂຮມກັນເຂົ້າເປັນສັດຕູ ຕໍ່ສຍາມໃນພາຍຫລັງ ເຊັ່ນວ່າ ກອງທັບສຍາມ ໄດ້ກວາດຄົວລາວ ໄປຢູ່ເມືອງລົບບູຣີ, ເມືອງພະ-

ບັນດິດ,ເມືອງປຣາຈີນບູຣີ, ເມືອງນະຄອນໄຊສີ ແລະເອົາເຂົ້າໄປໄວ້ ກຮຸງເທບ ກໍມີເປັນຕົ້ນ ນອກຈາກນີ້ ກໍມີຫຼາກຊາດທີ່ມີອານາເຂດຕິດຕໍ່ກັບ ອານາຈັກສຍາມ ເຊັ່ນຊາວຈີນ ພວກມອນ,ພວກແກວ,ຂເມນ; ພວກແຂກ ທັງນີ້ ຍັງບໍ່ນັບຄົນກຸ່ມນ້ອຍຕ່າງໆ ເຊັ່ນພວກກະລ່ຽງ ພວກໄທລເ ທາງ ພາກໃຕ້ເປັນຕົ້ນ.

ຄວາມສຳຄັນ ຂອງການແຜ່ພາຍ ເຊື້ອແນວຂອງຄົນຕ່າງດ້າວ ໃນອານາເຂດ ປະເທດສຍາມ ອີກຢ່າງນຶ່ງກໍຄື ດິນແດນທາງທິດໃຕ້ ຂອງ ສຍາມ ຢູ່ຕິດທະເລ ເປັນບ່ອນຊຸມນຸມຂອງພໍ່ຄ້າຫລາຍຊາດ ທີ່ໄປມາຄ້າ ຂາຍຣະຫວ່າງກັນ ເປັນເຫດໃກ້ຄົນຕ່າງຊາດເຫລົ່ານັ້ນ ສມົດ ສມົນກັບ ຄົນພື້ນເມືອງ ແລະ ຍອມແຕ່ງດອງຣະຫວ່າງກັນ ແລະກັນ ຈົນເປັນທີ່ນິ ຍົມກັນຢ່າງແຜ່ຫລາຍ ແມ່ນແຕ່ພຣະເຈົ້າແຜ່ນດິນ ຂອງປະເທດສຍາມເອງ ກໍມີນາງສນົມ (ເມັຽນ້ອຍ) ເປັນຄົນຕ່າງດ້າວ ຢູ່ຫຼາກພຣະອົງ ທຳໃຫ້ພົລ ເມືອງ ສ່ວນໃຫຍ່ເປັນເລືອດປະສົມ ແບບດຽວກັບພົລເມືອງປະເທດສຫະ ຣັຖອະເມຣິກາ.

ນອກຈາກນັ້ນ ຍັງມີສາຍເຫດອັນສຳຄັນອີກຢ່າງນຶ່ງ ທີ່ຄົນຕ່າງ ດ້າວໂດຍສະເພາະຈີນ ໄດ້ຫລູຫລັ່ງທົ່ງເທ ເຂົ້າມາຢູ່ປະເທດສຍາມ ກໍ ເນື່ອງຈາກວ່າ ປະເທດສຍາມ ໃນສມັຍກ່ອນນັ້ນ ຂາດເຂີນແຮງງານ ເພາະຊາວສຍາມ ກໍເປັນເຊັ່ນດຽວກັບຊາວລາວ,ຫລືຊາດອື່ນໆ ເປັນ ສ່ວນຫລາຍ ຂອງທະວີປເອເຊັຽ ຄືບໍ່ມັກທຳງານທີ່ໃຊ້ກຳລັງ ໃຊ້ແຮງ ເຊັ່ນ : ກຸລີ,ກັມມະກອນ, ຫລືຮັບຈ້າງທຳການຕ່າງໆ ອັນເປັນເຫດໃຫ້

ປະເທດສຍາມຂາດເຂີນແຮງງານ ພວກຊາວຈີນ ທີ່ເປັນກັມມະກອນຢູ່ຕາມທ່າກຳປັ່ນໃຫ່ຍ ແລະ ຫົວເມືອງຊາຍທະເລ ພາກໃຕ້ຂອງຈີນ ໄດ້ຫລັ່ງໄຫລເຂົ້າມາປະກອບອາຊີບ ຢູ່ທີ່ປະເທດສຍາມ ແບບດຽວກັບຊາວຈີນໄດ້ຫລັ່ງໄຫລເຂົ້າໄປຢູ່ທີ່ແຫລມມາລາຍູ ເກາະສິງຄະໂປ ທີ່ໝູ່ເກາະຟີລິບປິນ ຕລອດຈົນໝູ່ເກາະປະເທດອິນໂດນີເຊັຽ. ພຣະເຈົ້າແຜ່ນດິນສຍາມ ອົງກ່ອນໆ ກໍຍັງບໍ່ຫລິງເຫັນພັຍຈາກຄົນຕ່າງດ້າວເຫລົ່ານີ້ ຈຶ່ງໄດ້ປ່ອຍໃຫ້ເຂົ້າມາເປັນຈຳນວນຫລາຍໝື່ນ ຫລາຍແສນຄົນ ແລະໄດ້ແຜ່ພາຍລູກຫລານອອກໄປ ເປັນຫລາຍລ້ານຄົນ ຕໍ່ມາໃນພາຍລູນ ພວກຕ່າງດ້າວເຫລົ່ານີ້ ໂຮມທັງລາວໃນສມັຍນັ້ນວົງວານເຊື້ອແນວ ກໍຍັງຖືວ່າຕົນເປັນຄົນຕ່າງດ້າວ ,ຕາມເຊື້ອຊາດເກົ່າ - ຂອງບັນພະບູຣຸດ ຢູ່ນັ້ນເອງ.

ຕໍ່ມາປະເທດຈີນ ໄດ້ເກີດການປະຕິວັດ ພວກປະຕິວັດໄດ້ລົ້ມຣາຊວົງແມນຈູ ທີ່ປົກຄອງປະເທດຈີນໃນເວລານັ້ນລົງໄດ້ ໂດຍມີ ດ໊ອກເຕີ ຊູນປັດເຊັນ ເປັນຫົວໜ້າປະຕິວັດ ພວກຊາວຈີນທົ່ວໂລກ ພາກັນຊົມຊື່ນຍິນດີປະຖິ້ມຮີດຄອງປະເພນີເກົ່າ ຫັນເຂົ້າມາແບບແຜນຂອງຊາວທະວີບຢູໂຣບໂດຍຈຳເພາະແມ່ນຈີນຊັ້ນຫົວໜ້າໃນປະເທດສຍາມ ເວລານັ້ນຊຶ່ງມີສ່ວນຢ່າງສຳຄັນ ໃນການສນັບສນູນ ດ໊ອກເຕີ ຊູນຍັດເຊັນ ທາງດ້ານການເງິນຢ່າງຫລວງຫລາຍ ໄດ້ນຳເອົາລັດທິຊາດນິຍົມ ແຜນໃໝ່ ເຂົ້າມາແຜ່ພາຍໃນເມືອງສຍາມບຳຣູງສົ່ງເສີມລັດທິໃໝ່ນີ້ ໃຫ້ເກີດແຜ່ພາຍໄປຢ່າງວ່ອງໄວ ພາຍໃນປີດຽວເທົ່ານັ້ນ ທຳໃຫ້ຊາວຈີນ ຕິຕົນອອກຫ່າງຈາກຊາວສຍາມໃນຣະຍະຫົວລ້ຽວ ຫົວຕໍ່ນີ້ເອງ ໂຮງຮຽນຈີນໄດ້ສອນນັກຮຽນ ໃນລັດທິໃໝ່

ອັນເປັນສັດຕູ ກັບຣະບອບການປົກຄອງ ຂອງສຍາມເວລານັ້ນ ເມື່ອທາງການສຍາມ ເພິ່ງເລີ່ງຄວບຄຸມຊາວຈີນ ຊາດນິຍົມ ກໍພາກັນອັດອົ້ນ ໂດຍສົ່ງລູກຫລານໄປຮຽນຢູ່ເມືອງຈີນ.

ຣັຊການທີ ຜ ຂອງສຍາມໄດ້ຫລີງເຫັນພັຍ ຈາກການປ່ຽນແປງຂອງຈີນ ຈຶ່ງໂຜດໃຫ້ປະກາດໃຊ້ນາມສກູນຂຶ້ນ ເພື່ອທອນໂຮມເອົາພວກລູກຫລານ ຂອງຊາວຕ່າງດ້າວຕ່າງໆ ໂຮມທັງລາວນຳໃຫ້ກາຍຊາດເປັນສຍາມ ໃຫ້ຫມົດໂດຍລົງ ທະບຽນໄວ້ທີ່ກະຊວງມະຫາດໄທ ສ່ວນບັນດາເຈົ້ານະຄອນ ຫລື ເຈົ້າເມືອງຕ່າງໆ ຂອງລາວ ອັນຕົກຄ້າງຢູ່ນຳ - ສຍາມນັ້ນ ພຣະເຈົ້າແຜ່ນດິນສຍາມ ກໍໂຜດຕັ້ງນາມສກູນໃຫ້ ມີຊື່ເມືອງນັ້ນຕໍ່ທ້າຍ ເຊັ່ນວ່າ ເຈົ້ານະຄອນຊຽງໃຫມ່ ກໍຕັ້ງນາມສກູນ ນະຊຽງໃຫມ່ ເຈົ້າເມືອງນະຄອນລຳປາງ ກໍຕັ້ງນາມສກູນ ເປັນ ນະລຳປາງ ເຈົ້າເມືອງຊຸບົນ ກໍຕັ້ງນາມສກູນ ເປັນ ນະຊຸບົນ ເຈົ້າເມືອງຫນອງຄາຍ ກໍຕັ້ງນາມສກູນເປັນ ນະຫນອງຄາຍ ເຈົ້າເມືອງນະຄອນພຣະນົມ ກໍຕັ້ງນາມສກູນເປັນ-ນະ ນະຄອນພຣະນົມ ຕັ້ງແຕ່ນັ້ນມາ.

ຄ.ສ. ໑໙໓໒ (ພ.ສ. ໒໔໗໕) ປະເທດສຍາມໄດ້ປ່ຽນແປງການປົກຄອງ ຈາກຣະບອບຣາຊາທິປະໄຕ ( MONARCHY ) ເປັນການປົກຄອງຣະບອບປະຊາທິປະໄຕ ( DEMOCRACY )

ຄ.ສ. ໑໙໓໓ ຣັຖບານສຍາມ ຈຶ່ງຍົກເລີກ ການປົກຄອງແບບມົນທົນ ໃຫ້ແຍກເມືອງ ຕັ້ງເປັນຈັງຫວັດ ແຕ່ລະຈັງຫວັດ ຂຶ້ນກົງຕໍ່ກະຊວງມະຫາດໄທ. ຕຳແຫນ່ງ ຜູ້ວ່າຣາຊການເມືອງ ກໍເລີຍປ່ຽນ

ເປັນຜູ້ວ່າຣາຊການຈັງຫວັດ ປະຫລັດເມືອງ ປ່ຽນຊື່ເປັນ ປະຫລັດຈັງຫວັດ ຕັ້ງແຕ່ປີນັ້ນ ເປັນຕົ້ນມາ.

ຄ.ສ. ໑໙໓໙ (ພ.ສ. ໒໔໘໒) ຣັຖບານສຍາມ ຈຶ່ງໄດ້ປ່ຽນຊື່ປະເທດໃໝ່ ຈາກປະເທດສຍາມ ( SIAM ) ປ່ຽນເປັນປະເທດໄທ ( THAILAND ) ດັ່ງນັ້ນເຫດການທີ່ເກີດຂຶ້ນ ກ່ອນປີດັ່ງກ່າວໃນໜັງສືນີ້ ຜູ້ຮຽບຮຽງ ພົງສາວະດານຫຍໍ້ນີ້ ຈຶ່ງຮຽກຊື່ ປະເທດໄທ ໃນປັດຈຸບັນນີ້ວ່າ ປະເທດສຍາມ. ສ່ວນເຫດການທີ່ເກີດຂຶ້ນ ພາຍລຸນປີດັ່ງກ່າວ ຈຶ່ງໃຊ້ຕາມຊື່ທີ່ຣັຖບານໄທ ປ່ຽນໃໝ່ ຄື ປະເທດໄທ.

ຄ.ສ. ໑໙໔໑ ຣັຖບານໄທ. ໄດ້ສວາຍໂອກາດ ພວມເວລາທີ່ປະເທດຝຣັ່ງເສັຽເສິກ ໃຫ້ແກ່ປະເທດເຢີຣະມັນ ນັ້ນຮຽກຮ້ອງເອົາ ຫົວເມືອງລາວ ທີ່ຝຣັ່ງໄດ້ຈາກສຍາມ. ຕາມໜັງສືສັນຍາ ສບັບລົງວັນທີ ໑໓ ກຸມພາ ຄ.ສ. ໑໙໐໓ ຄືນຈາກຝຣັ່ງ ເມື່ອຝຣັ່ງບໍ່ຄືນໃຫ້ ສຍາມຈຶ່ງໃຊ້ກຳລັງທະຫານ ເຂົ້າຍຶດເອົາ ຈຶ່ງເກີດເປັນເສິກກັນຂຶ້ນ ແຕ່ຣັຖບານຍີ່ປຸ່ນ ໄດ້ເຂົ້າໄກ່ເກັ່ຽເສິກ ຈຶ່ງສງົບລົງ ໂດຍຝຣັ່ງໄດ້ຍອມຄືນ ຫົວເມືອງລາວ ທີ່ຝຣັ່ງໄດ້ຈາກປະເທດສຍາມ ແຕ່ປີ ຄ.ສ. ໑໙໐໓ ຄືນໃຫ້ແກ່ໄທ ຕາມໜັງສືສັນຍາຣະຫວ່າງ**ຝຣັ່ງ** ແລະ ໄທ ທີ່ໄດ້ລົງນາມກັນເມື່ອ ວັນທີ ໙ ພຶສພາ ໑໙໔໑ ທີ່ນະຄອນໂຕກຽວ ເມືອງຫລວງຂອງ ປະເທດຍີ່ປຸ່ນ.

ຄ.ສ. ໑໙໔໖ (ພ.ສ. ໒໔໘໙) ຣັຖບານໄທ ຈຶ່ງຍອມຄືນຫົວເມືອງລາວ ຝັ່ງຂວາແມ່ນ້ຳຂອງ ທີ່ໄທໄດ້ຈາກຝຣັ່ງ ແຕ່ປີ ຄ.ສ.໑໙໔໑ ຄືແຂວງໄຊຍະບູຣີ ແຂວງຈຳປາສັກ, ແລະແຂວງເຊໂດນ ຂອງລາວເວລາ

ນີ້. ຕາມຫນັງສືສັນຍາຣະຫວ່າງ ຣັຖບານໄທ ແລະ ຣັຖບານຝຣັ່ງ ທີ່ໄດ້ລົງນາມກັນຢູ່ ທີ່ນະຄອນຫລວງ ວໍຊິງຕັນ ເມືອງຫລວງຂອງສຫະຣັຖອະເມຣິກາ ເມື່ອວັນທີ ໔໗ ພຶສຈິກາ ໑໙໔໖.

ນີ້ຄື ຄວາມເປັນມາ ຂອງຫົວເມືອງລາວ ສ່ວນທີ່ປະເທດສຍາມ ຫລື ປະເທດໄທ ໃນປັດຈຸບັນ ບໍ່ໄດ້ເສັຽໃຫ້ແກ່ຝຣັ່ງ. ຫລືເວົ້າອີກຢ່າງນຶ່ງ ວ່າຄວາມເປັນມາຂອງຫົວເມືອງລາວ ສ່ວນທີ່ຍັງຕົກຄ້າງຢູ່ນຳໄທ.

ເຊິ່ງຖ້າຫາກວ່າ ຝຣັ່ງຈະບັງຄັບເອົາ ຫົວເມືອງລາວ ທັງຫມົດຈາກສຍາມແລ້ວ ລາວຄົງຈະບໍ່ມີສະພາບ ດັ່ງທຸກວັນນີ້ ເພາະລາວສ່ວນທີ່ຕົກມາເປັນຫົວເມືອງຂຶ້ນຂອງຝຣັ່ງ, ຝຣັ່ງໄດ້ໃຫ້ເອກຣາຊແລ້ວ.

<u>ຫ ມ າ ຍ ເ ຫ ດ</u> : ໃນປັດຈຸບັນນີ້ ນອກຈາກຫົວເມືອງຕ່າງໆ ທາງຝັ່ງຂວາແມ່ນ້ຳຂອງ ກົງກັນຂາມກັບປະເທດລາວ ນັບແຕ່ຈັງຫວັດນະຄອນຣາຊສີມາ ຂຶ້ນມາອັນເປັນເຂດແດນ ຂອງປະເທດລ້ານຊ້າງ ມາແຕ່ສມັຍໂບຮານ ແລະມີປະຊາຊົນເຜົ່າລາວ ເປັນສ່ວນຫລາຍ. ເຊິ່ງຄົນທົ່ວໂລກຍ່ອມຮູ້ເຫັນເປັນພະຍານຢູ່ແລ້ວ ກໍຍັງມີຄົນລາວ ທີ່ຖືກກວາດຕ້ອນໄປເປັນຊເລີຍ ຢູ່ໃນຈັງຫວັດລົບບູຣີ, ສະຣະບູຣີ, ນະຄອນນາຍົກ, ຈັງຫວັດປຣາຈີນບູຣີ, ຈັງຫວັດຊົນບູຣີ, ຈັງຫວັດສຸພັນບູຣີ, ຈັງຫວັດເພັຊບູຣີ, ຈັງຫວັດຣາຊບູຣີ, ຈັງຫວັດນະຄອນປະຖົມ, ຈັງຫວັດເພັຊບູນ, ຈັງຫວັດນະຄອນສວັນ, ຈັງຫວັດກຳແພງເພັດ.

ສ່ວນລາວລ້ານນາ ຫລື ລາວພຸງດຳ/ນັ້ນ ມີຢູ່ເປັນບາງອຳເພີ ຂອງຈັງຫວັດສະຣະບູຣີ ເຊັ່ນ ອຳເພີພຣະພຸທບາດ, ອຳເພີແກ່ງຄອຍ, ອຳເພີບ້ານໝໍ, ອຳເພີເສົາໃຫ້, ລາວລ້ານນາ ພວກທີ່ກຳລັງກ່າວເຖິງນີ້ຖືກກວາດຕ້ອນໄປເປັນຊະເລີຍແຕ່ປະມານ ພ.ສ. ໒໓໑໓ - ໒໓໑໗ ກົງກັບຣັຊການ ພຣະເຈົ້າຕາກສິນ ຂອງສຍາມ. ຄວາມຈິງແລ້ວ ລາວລ້ານນາ ຖືກກວາດຕ້ອນລົງໄປເປັນຊະເລີຍ ຫລາຍຄັ້ງຫລາຍຄາວ. ບາງຄັ້ງຖືກກວາດຕ້ອນໄປເປັນແສນໆຄົນ.

ເວລານີ້ ທັງລາວລ້ານຊ້າງ ແລະລາວລ້ານນາ ທີ່ບັ້ນພະບຸຣຸດຂອງຄົນເຫຼົ່ານີ້ ຖືກກອງທັບສຍາມ ກວາດຕ້ອນໄປໃນຖານະເປັນຊະເລີຍເສິກ ຍັງປາກພາສາລາວຢູ່ບໍ່ປ່ຽນແປງ ຈຶ່ງຂໍອັນເຊີນ ຄົນລາວຜູ້ທີ່ໄປທ່ຽວໃຊ້ເງິນຢູ່ເມືອງໄທ ຖ້າວ່າມີເງິນເຫລືອຈາກທ່ຽວບາຣ໌ແລ້ວ ກໍຢາກຂໍເຊີນ ທ່ານໄປຢ້ຽມຢາມ ເພື່ອນຮ່ວມເຊື້ອຊາດແດ່.

ໃນປັດຈຸບັນນີ້ ເວົ້າໄດ້ວ່າ ບໍ່ມີຫົວເມືອງ ແລະຕາແສງໃດ ໃນປະເທດໄທ ທີ່ຈະບໍ່ມີຄົນລາວ ແມ່ນແຕ່ໃນຕົວນະຄອນຫລວງຂອງໄທເອງ ຄືກຣຸງເທບ ແລະ ທົນບຸຣີທີ່ມີຄົນໂຮມກັນປະມານ ໖ ລ້ານຄົນ ອາດມີຄົນລາວເຖິງ ໒ ສ່ວນ ໕ ຂອງພົລເມືອງ ໃນກຣຸງເທບ ແລະທົນບຸຣີ.

## ລາວສ່ວນທີ່ຕົກມາເປັນຫົວເມືອງຂຶ້ນຂອງຝຣັ່ງ

ເປັນເວລາຍາວນານ ເຖິງ ໑໑໔ ປີ ນັບຕັ້ງແຕ່ປະເທດລ້ານຊ້າງ ເສັຽເອກຣາຊໃຫ້ແກ່ສຍາມ ຫົວເມືອງລາວບາງສ່ວນ ຈຶ່ງຫລຸດຈາກອຳນາດຂອງສຍາມ ຕົກມາເປັນອານານິຄົມຂອງຝຣັ່ງ. ແລະລາວສ່ວນທີ່ຕົກມາເປັນ ອານານິຄົມ ຂອງຝຣັ່ງນີ້ ກໍເປັນແຕ່ບາງສ່ວນຂອງຫົວເມືອງລາວ ທີ່ຢູ່ໃນຖານະເປັນຫົວເມືອງຂຶ້ນຂອງສຍາມທໍ່ນັ້ນ ດັ່ງຫລັກຖານການປົກຄອງ ຫົວເມືອງຂຶ້ນຂອງປະເທດສຍາມ ທີ່ຜູ້ຮຽບຮຽງ ໄດ້ເອົາມາບັນຣະຍາຍໄວ້ ແຕ່ບັ້ນກ່ອນນັ້ນແລ້ວ.

ຝ່າຍເຈົ້າມຫາ ອຸປຣາດ ເມືອງຫລວງພຣະບາງ (ເຈົ້າບຸນຄົງ) ເມື່ອສຍາມ ເຊັນສັນຍາມອບຫົວເມືອງລາວຝັ່ງຊ້າຍແມ່ນ້ຳຂອງໃຫ້ແກ່ຝຣັ່ງແລ້ວ. ເຈົ້າມຫາອຸປຣາດ ກົງເຫັນວ່າ ເມືອງປາກລາຍ ເມືອງໄຊຍະບຸຣີ ແລະເມືອງຫົງສາ ເຊິ່ງຕັ້ງຢູ່ຝັ່ງຂວາແມ່ນ້ຳຂອງ ກົງຂ້າມຫລວງພຣະບາງນັ້ນ ກໍເປັນຫົວເມືອງລາວ ອັນເປັນເຂດແດນເມືອງຫລວງພຣະບາງແຕ່ໂບຮານມາ ພຣະອົງຈຶ່ງທົງຕໍ່ວ່າ ເຣື່ອງນີ້ໄປຍັງ ມ.ປາວີ ອັຄຣາຊທູດຝຣັ່ງ ເມື່ອປີ ຄ.ສ. ໑໘໙໔ ຕໍ່ມາໃນເດືອນ ໑໒ ປີນັ້ນ ເຈົ້າມຫາອຸປຣາດພ້ອມດ້ວຍທ້າວພຣະຍາເມືອງຫລວງພຣະບາງ ແລະທະຫານຈຳນວນນຶ່ງໄດ້ຂີ່ເຮືອລ່ອງໄປຂຶ້ນບ້ານດອນເມນ ໄປໄລ່ເຈົ້າໜ້າທີ່ປົກຄອງຂອງສຍາມໜີຈາກເມືອງປາກລາຍ ທາດແດງ ເມືອງໄຊຍະບູຣີ ເມືອງຫົງສາ ເມືອງຊຽງເງິນ ຊຽງຮ່ອນ, ຊຽງລົມ, ບໍ່ຊາວ ແລະເມືອງຄອບ. ພ້ອມທັງຫົງຕັ້ງ ທ້າວພຣະຍາເມືອງຫລວງພຣະບາງ ໃຫ້ຢູ່ກຳກັບ ຕາມຫົວເມືອງດັ່ງ

ກ່າວນີ້ໄວ້ແຕ່ປີນັ້ນ ເປັນຕົ້ນມາ.

ກໍເປັນອັນວ່າ ແຂວງຝັ່ງຂວາກົງຂ້າມຫລວງພຣະບາງ ຄືແຂວງໄຊຍະບູຣີ ໃນປັດຈຸບັນນີ້ ໄດ້ເຂົ້າມາໂຮມກັບອານາຈັກຫລວງພຣະບາງ ແຕ່ປີດັ່ງກ່າວ ເຊິ່ງໝາຍຄວາມວ່າ ແຂວງດັ່ງກ່າວນີ້ ໄດ້ເຂົ້າມາຮ່ວມກັບອານາຈັກຫລວງພຣະບາງ ກ່ອນທີ່ປະເທດສຍາມ ຈະລົງລາຍເຊັນໃນໜັງສືສັນຍາມອບດິນຝັ່ງຂວາແມ່ນ້ຳຂອງ ຕອນທີ່ເປັນແຂວງໄຊຍະບູຣີ ນີ້ກັບແຂວງຈຳປາສັກ ແລະແຂວງເຊໂດນ ຝັ່ງຂວາ ໃຫ້ຝຣັ່ງເຖິງ ໖ ປີ ເພາະໜັງສືສັນຍາກ່ຽວເຖິງແຂວງທັງ ໓ ນີ້ ສຍາມລົງສາຍເຊັນເມື່ອ ວັນທີ ໓ ຕຸລາ ໑໙໐໓.

ໆ.ສ. ໑໘໗໕ ພຣະເຈົ້າມະຫິນ ພຣະເຈົ້າແຜ່ນດິນ ຈາງວາງສຕັດສູຣະຄົດ ສີຣິພຣະຈຸັນພັນສາ ກຸ໖ ປີ ຢູ່ໃນຣາຊສົມບັດ ໔໐ ປີ.

<u>ສັນຍາຣະຫວ່າງອັງກິດ ແລະ ຝຣັ່ງກ່ຽວກັບປະເທດສຍາມ</u>

ຈຸນຫລັງຈາກຝຣັ່ງໄດ້ຫົວເມືອງລາວ ຝັ່ງຊ້າຍແມ່ນ້ຳຂອງ ຈາກປະເທດສຍາມແລ້ວ. ຝຣັ່ງກໍຍັງບໍ່ເລີກລົ້ມຄວາມຕັ້ງໃຈ ແລະຄວາມພຍາມພຍາຍາມ ໃນການທີ່ຈະ ຂຍາຍເຂດແດນ ຫົວເມືອງຂັ້ນອອກໄປອີກ.ເຊິ່ງຄວາມຕ້ອງການນີ້ ທາງຝ່າຍປະເທດອັງກິດ ອັນເປັນປະເທດຄູ່ແຂ່ງຂັນຂອງຝຣັ່ງ ຍ່ອມຈະຊາບດີ.

ອັງກິດ ຢ້ານວ່າ ຝຣັ່ງ ຈະຂຍາຍແຜ່ອານາເຂດ ເຂົ້າໄປຮອດລຸ່ມນ້ຳເຈົ້າພຣະຍາ ຜ່ານໄທ ເຂົ້າໄປຫາພະມ້າ ເຂົ້າໄປໃກ້ອິນເດັຽ ອານານິຄົມຂອງອັງກິດ ຄວາມຕ້ອງການຂອງຝຣັ່ງອັນນີ້ ອັງກິດຖືວ່າ ເປັນພັຍ



ສົມເດັດເຈົ້າມະຫາອຸປຣາຊ ບຸນຄົງ ທີ່ຕໍ່ສູ້ເອົາແຂວງໄຊຍະບູຣີ ໃນປັດຈຸບັນນີ້ ເຂົ້າມາຮ່ວມກັບອານາຈັກ
ຫລວງພຣະບາງ ກ່ອນທີ່ສຍາມ ແລະ ຝຣັ່ງ ຈະເຊັນສັນຍາກັນ ກ່ຽວກັບແຂວງຝັ່ງຂວາແມ່ນ້ຳຂອງ
ເຖິງ ໑ ປີ.

ຕໍ່ດິນແດນ ແລະຜົນປໂຍດຂອງຕົນ ໃນອານານິຄົມ ຕະວັນອອກນຳ ອັງກິດ ຈຶ່ງໄດ້ພຍາຍາມຕໍ່ຕ້ານ ຂັດຂວາງ ຝຣັ່ງໄວ້ຕລອດມາ.

ແຕ່ໃນຖານະ ທີ່ປະເທດຝຣັ່ງ ເປັນປະເທດມະຫາອຳນາດ ເພື່ອນບ້ານໃກ້ຄຽງກັບອັງກິດ. ທຳນອງດຽວກັບລາວ ແລະຂເມນ ຫລື ລາວ ແລະໄທ ອັງກິດຈຶ່ງໄດ້ເອົາການເຈຣະຈາ ຣະຫວ່າງ ມ.ເດີແວລສ ກັບ ລອຣດ ດັຟເຟີຣິນ( LORD DUFFERIN ) ອັຄຣາຊທູດອັງກິດປະຈຳປາຣີ ໂດຍ ມ.ເດີແວລສ ກ່າວວ່າ ຢາກຈະໃຫ້ມີດິນແດນຂັ້ນກາງຣະຫວ່າງ ດິນແດນ ທີ່ເປັນຂອງອັງກິດ ກັບຂອງຝຣັ່ງ ໃນອາຊີ ຜົນທີ່ສຸດອັງກິດ ແລະຝຣັ່ງ ໄດ້ຕົກລົງທຳໜັງສືສັນຍາກັນ ເມື່ອວັນທີ ໑໕ ມົກຣາ ຄ.ສ. ໑໘໙໖ ນະທີ່ ນະຄອນລອນດອນ ໃນປຶ້ມປົກເຫລືອງ ໂຣມ ໔ ຂໍ້ໃຫຍ່ ເປັນສັນຍາປະກາດຮັບຮອງຄວາມເປັນເອກຣາຊ ຂອງສຍາມ ຫລືຮຽກວ່າ ສັນຍາຣະຫວ່າງຊາດ ທັງສອງ. ດັ່ງຄວາມລະອຽດຕໍ່ໄປນີ້.

<u>ມາດຣາ</u> ໑ - ຣັຖບານຝຣັ່ງ ແລະ ສຫະຣາຊອານາຈັກ (ບຣິເຕນໃຫຍ່) ສັນຍາຕໍ່ກັນວ່າ ບໍ່ວ່າຈະເປັນກໍຣະນີ ຫລືດ້ວຍເຫດຜົນໃດກໍດີ ຫາກຍັງບໍ່ທັນມີການຕົກລົງນຳກັນ ທັງສອງຝ່າຍກ່ອນແລ້ວ.ກໍຈະບໍ່ເຄື່ອນກຳລັງກອງທັບຂອງຕົນເຂົ້າໄປໃນດິນແດນ. ບໍຣິເວນລຸ່ມແມ່ນ້ຳເພັຊບຸຣີ,ແມ່ນ້ຳຂອງ,ແມ່ເຈົ້າພຣະຍາ, ແມ່ນ້ຳບາງປະກົງ ແລະ ສາຂາຕ່າງໆ ທີ່ໄຫລລົງໄປສູ່ແມ່ນ້ຳດັ່ງກ່າວ ໂຣມທັງດິນແດນ ຕັ້ງແຕ່ບາງຕະພານ ໄປຈົນເຖິງເມືອງເພັຊບຸຣີ ລຸ່ມແມ່ນ້ຳ ທັງຫລາຍ ອັນເປັນສະຖານທີ່ຕັ້ງຢູ່ຂອງສອງເມືອງ ແລະລຸ່ມແມ່ນ້ຳອື່ນໆ ເຊິ່ງປາກຂອງແມ່ນ້ຳ ຕົກໄປຢູ່ໃນສ່ວນຂອງທະເລຕອນນີ້ ແລະ

ດັ່ງນັ້ນກໍດີໂຮມທັງດິນແດນ ທີ່ຢູ່ໃນຣະຫວ່າງ ເສັ້ນເຂດແດນອັງກິດ-ສຍາມ ແມ່ນ້ຳຂອງ ແລະເຂດຕາເວັນອອກຂອງແມ່ນ້ຳຂອງ ຣັຖບານທັງສອງສັນຍາຕໍ່ກັນ ອີກວ່າ ບໍຣິເວນນີ້ຈະບໍ່ຊອກຫາສິດ ຫລືຜົນປໂຍດອັນໃດເລີຍ.ທີ່ບໍ່ມີສິດ ຫລືຜົນປໂຍດຮ່ວມກັນ ສຳລັບຝຣັ່ງແລະ ບຣິເຕນໃຫ່ຍ (ສຫະຣາຊອານາຈັກ) ສຳລັບຄົນຊາດທັງສອງ ຫລື ສຳລັບຄົນທີ່ອື່ນກັບຊາດທັງສອງ ຫລືວ່າ ອັນທີ່ຈະເປັນສິດ ຫລືຜົນປໂຍດອັນທັງສອງຝ່າຍ ຈະບໍ່ໄດ້ຮັບຢ່າງທໍ່ທຽມກັນ.

ແຕ່ຂໍ້ຄວາມທາງເທິງນີ້ ບໍ່ໄດ້ເຂົ້າໃຈຜິດໄປວ່າ ເປັນຂໍ້ຫລົບຫລີກ ບົດບັນຍັດຕ່າງຫາກ ຂອງສັນຍາສບັບລົງວັນທີ ໙ ຕຸລາ ໑໙໔໙ ຣະຫວ່າງ ປະເທດຝຣັ່ງ ແລະປະເທດສຍາມ ເຊິ່ງກ່ຽວກັບດິນແດນ ໘໕ ຫລັກກິໂລ - ແມດ ເທິງຝັ່ງຂວາແມ່ນ້ຳຂອງ ແລະການເດີນເຮືອໃນລຳແມ່ນ້ຳນີ້.

<u>ມາດຣາ</u> ໘ - ບົດບັນຍັດຂ້າງເທິງນີ້ ຈະຕ້ອງບໍ່ເປັນອຸປສັກອັນໃດເລີຍ ຕໍ່ການກະທຳ ຂອງສ່ວນທາອຳນາດ ຈະຕົກລົງກັນ ເຫັນວ່າຈຳເປັນຕ້ອງກະທຳເພື່ອຮັກສາ ເອກຣາຊອານາຈັກສຍາມໄວ້ ແຕ່ນທາອຳນາດທັງສອງຝ່າຍ ສັນຍາຕໍ່ກັນໄວ້ວ່າ ຕ່າງຝ່າຍ ຕ່າງຈະບໍ່ນຳຄົນເອງເຂົ້າໄປໃນຂໍ້ຜູກພັນໃດໆ ທີ່ຈະທຳໃຫ້ເປັນການເປີດໂອກາດ ໃຫ້ແກ່ນທາອຳນາດອື່ນໄດ້ກະທຳໃນສິ່ງທີ່ຄົນທັງສອງ ຕົກລົງຫ້າມກັນໄວ້ແລ້ວ ໂດຍສັນຍາປັດຈຸບັນນີ້.

<u>ມາດຣາ</u> ໙- ຕັ້ງແຕ່ປາກນ້ຳຮວກ ຂຶ້ນໄປທາງເໜືອ ຈົນເຖິງເສັ້ນເຂດແດນຈີນນັ້ນ ຮ່ອງນ້ຳເລິກຂອງແມ່ນ້ຳຂອງ ຈະເປັນເສັ້ນແບ່ງເຂດເມືອງ

ອັນ. ຫລືອິດທິພົນຂອງປະເທດຝຣັ່ງ ແລະ ບຣິເຕນໃຫຍ່ ໄດ້ຕົກລົງກັນ ແລ້ວວ່າ ດິນຈາດ ແລະ ດິນທີ່ອັນກັບຈາດຕົນ ຈະບໍ່ໃຊ້ອຳນາດສາລ ຫລື ອຳນາດອື່ນໃດ ໃນດິນແດນເມືອງອັນ ຫລືເຂດອິດທິພົນຂອງຝ່າຍກົງກັນ ຂ້າມ. ໃນສ່ວນຂອງແມ່ນ້ຳດັ່ງກ່າວນີ້ ການຕຳຣວດ ກວດກາ ເຫິງເກາະ ເຊິ່ງບໍ່ຕິດກັບຝັ່ງອັງກິດນັ້ນ ເປັນຂອງເຈົ້າໜ້າທີ່ຝຣັ່ງ ຍາມໃດເກາະເລົ່າ ນັ້ນຍັງມີສະພາບບໍ່ຕິດກັບຝັ່ງອັງກິດ ແຕ່ການຈັບປານັ້ນ ຣາສດອນທັງສອງ ຝັ່ງ ແມ່ນຳນັ້ນຍັງມີສິດທ່ກັນ.

<u>ມ າ ຕ ຣ າ</u> ໔ -ຣັຖບານທັງສອງ ໄດ້ຕົກລົງກັນວ່າ ຜົນປໂຍດແລະ ສິດໃນການພານິດ ຫລືຢ່າງອື່ນໆ ເຊິ່ງປະເທດຝຣັ່ງ ຫລື ບຣິເຕນໃຫຍ ໄດ້ຮັບ ໃນສອງແຂວງຂອງຈີນ ຄື ຍູນານ ແລະເສສວນ ຕາມອະນຸສັນຍາ ຂອງສອງປະເທດ ສບັບລົງວັນທີ ໑ ມີນາ ໑໘໙໔ ແລະວັນທີ ໒໐ ມິຖຸນາ ໑໘໙໔ ແລະຜົນປໂຍດ ໃນການພານິດທັງໝົດ ທີ່ສອງປະເທດອາດຈະ ໄດ້ຮັບ ຕໍ່ໄປຂ້າງໜ້າ ໃນສອງແຂວງ ດັ່ງກ່າວນີ້ ຫາກເປັນສິ່ງທີ່ອັນກັບ ຕົນແລ້ວ ຜົນປໂຍດແລະ ສິດເລົ່ານີ້ ກໍຈະຕ້ອງຖືກຂຍາຍ ໃຫ້ເປັນຜົນຮ່ວມ ກັນ ສຳລັບສອງມຫາອຳນາດ ແລະ ສຳລັບດິນຈາດ ແລະ ດິນທີ່ອັນກັບ ຈາດຕົນ

ທັງສອງຝ່າຍສເນີກັນ ແລະສອງ

ມຫາອຳນາດສັນຍາກັນວ່າ ເພື່ອການນີ້ ຈະໃຊ້ອິດທິພົນຂອງຕົນແລະຈະ ຈັດການຕິດຕໍ່ກັບຣັຖບານຈີນ ທຸກວິຖີທາງ.

ທຳທີ່ ນະຄອນລອນດອນ ເມື່ອວັນທີ ໑໕ ມົກຣາ

ຄ.ສ. ໑໘໙໖.

ລົງນາມ ເດີ ຄຣວາແຊລ

ລົງນາມ ສາລີສເບີຣີ

ຍ້ອນສັນຍາສບັບ ນີ້ແລ້ວ ທີ່ທຳໃຫ້ແຜນການຂຍາຍຫົວເມືອງຂຶ້ນຂອງ ຝຣັ່ງໃນຂັ້ນຕໍ່ໄປ ບໍ່ສຳເຣັດ ແລະຍ້ອນສັນຍາຣະຫວ່າງ ມຫາອຳນາດທັງ ສອງນີ້ເອງ ທີ່ທຳໃຫ້ປະເທດສຍາມ ເປັນປະເທດເອກຣາຊ ຢູ່ໄດ້ຕລອດ ຍຸກຂອງນັກລ່າ ອານານິຄົມ ໃນຂນະທີ່ປະເທດເພື່ອນບ້ານ ຂອງສຍາມແລະ ປະເທດອາຊີອື່ນໆ ສ່ວນຫລາຍ. ຕ່າງກໍຕົກເປັນຫົວເມືອງຂຶ້ນຂອງຊາດຕ່າງ ຕ່າງ ທາງທະວີປຢຸໂຣບ.

ແຕ່ເຖິງວ່າ ຝຣັ່ງ ແລະອັງກິດ ຈະໄດ້ທຳສັນຍາຕໍ່ກັນໄວ້ດັ່ງນີ້ແລ້ວ ກໍຕາມ ຕໍ່ມາອີກບໍ່ທໍ່ໃດປີ ຝຣັ່ງກໍໄດ້ແຂວງຝັ່ງຂວາແມ່ນ້ຳຂອງ ຄື ແຂວງ ໄຊຍະບູຣີ ແຂວງຈຳປາສັກ ແລະເຊໂດນ ຈາກສຍາມອີກ ໃນປີ ຄ.ສ. ໑໙໐໔.

ຝຣັ່ງ ຈັດການປົກຄອງ ຫົວເມືອງລາວ

ກ່າວເຖິງການປົກຄອງ ລາວສ່ວນທີ່ຕົກມາເປັນຫົວເມືອງຂຶ້ນຂອງ ປະເທດຝຣັ່ງ, ຝຣັ່ງໄດ້ເອົາຫົວເມືອງລາວ ທີ່ຝຣັ່ງໄດ້ຈາກສຍາມນີ້ໄປ ໂຮມເຂົ້າກັບແກວ ແລະ ຂແມນ ຕັ້ງເປັນປະເທດອິນໂດຈີນຝຣັ່ງ ສຳລັບລາວນັ້ນ ເປັນແຕ່ແຄວ້ນນຶ່ງ ຂອງປະເທດອິນໂດຈີນຝຣັ່ງ ຊຶ່ງຝຣັ່ງຮຽກວ່າ ແຄວ້ນລາວ

ໂດຍມີຜູ້ສຳເຣັດຣາຊການ "ແຄ້ວນລາວ" ຂຶ້ນຕໍ່ຜູ້ສຳເຣັດຣາຊການອິນໂດຈີນ" ທີ່ເມືອງຮາໂນຍ ອີກຕໍ່ນຶ່ງ.

ການປົກຄອງແຄ້ວນລາວ ຝຣັ່ງຈັດອອກເປັນ ໒ ພາກ ຄື ສຳລັບອານາຈັກ ຫລວງພຣະບາງ ຝຣັ່ງປົກຄອງ ແບບຫົວເມືອງຂຶ້ນ ໃນຄວາມອາຣັກຂາ.

ສ່ວນພວກກາງ ແຕ່ແຂວງວຽງຈັນ ລົງໄປຕລອດຮອດພາກໃຕ້ຝຣັ່ງປົກຄອງເປັນຫົວເມືອງຂຶ້ນໂດຍກົງ.

ການປົກຄອງແຄ້ວນລາວ ໃນຕົ້ນປີ ຄ.ສ. ໑໘໙໕ ນັ້ນຝຣັ່ງໄດ້ແຕ່ງຕັ້ງເຈົ້າໜ້າທີ່ຝ່າຍປົກຄອງໃຫຍ່ຂຶ້ນ ໒ ຕຳແໜ່ງ ຮຽກວ່າ ຄອມມັງດັງ ສູເປຣີເບີ(COMMANDANT SUPERIEUR) ປະຈຳຢູ່ທີ່ນະຄອນຫລວງພຣະບາງຜູ້ນຶ່ງ ພາກໃຕ້ແຕ່ແຂວງວຽງຈັນລົງໄປ ຈົນເຖິງເຂດແດນເມືອງຊຽງແຕງ (ເມືອງຊຽງແຕງ ຕໍ່ມາຝຣັ່ງໄດ້ຕັດເອົາໄປຂຶ້ນຕໍ່ຫົວເມືອງ - ຂະເມນ ເຊິ່ງເວລານັ້ນ ສະດວກໃນການປົກຄອງ) ກອມມັງດັງສູເປຣີເອີ ປະຈຳຢູ່ທີ່ເມືອງໂຂງ.

ຕໍ່ມາ ໃນ ຄ.ສ. ໑໘໙໙ ຝຣັ່ງໄດ້ໂຮມລາວທັງ ໒ ພາກເຂົ້າກັນໃຫ້ຢູ່ພາຍໃຕ້ການປົກຄອງຂອງ ຜູ້ສຳເຣັດຣາຊການຫົວເມືອງລາວ ເຣີຊີດັງ ສູເປຣີເອີ(RESIDANT SUPERIEUR) ໂດຍຕັ້ງທີ່ທຳການຢູ່ທີ່ ເມືອງສວັນນະເຂດ ຕໍ່ມາໄດ້ຍ້າຍທີ່ທຳການ ມາຢູ່ທີ່ນະຄອນວຽງຈັນ ເພາະສັງເກດເຫັນວ່າ ວຽງຈັນເປັນສູນກາງຂອງລາວ ໃນທາງພູມີສາດ ສະດວກໃນການສັ່ງການປົກຄອງ ຕ່າງໆທັງລາວເໜືອ ແລະລາວໃຕ້.

ຣະບຽບການປົກຄອງນັ້ນ ຝຣັ່ງແບ່ງລາວອອກເປັນແຂວງ ໂດຍມີຜູ້ວ່າຣາຊການແຂວງ ເປັນຄົນຊາດຝຣັ່ງ ຮຽກວ່າ ກອມມີສແຊ (COMMISSAIRE DU GOUVERNEMENT ) ໃນແຂວງຕ່າງໆແບ່ງເປັນເມືອງ, ເປັນກອງ, ເປັນຕາແສງ, ບ້ານ, ເຈົ້າເມືອງ, ຕາແສງ, ນາຍບ້ານ ນັ້ນຝຣັ່ງໃຫ້ລາວປົກຄອງກັນເອງ ແຕ່ກໍມີຫົວໜ້າເປັນຄົນຊາດຝຣັ່ງ ກຳກັບຮຽກວ່າ ເດ ເລ ເກ ຣະບຽບນີ້ໃຊ້ປົກຄອງທົ່ວໆໄປ ຍົກເວັ້ນແຕ່ແຂວງຫລວງພຣະບາງ.

ໃນແຂວງອື່ນໆ ນອກຈາກຫລວງພຣະບາງ ອຳນາດທາງກົດໝາຍ ຫລື ທາງສານນັ້ນ ຝຣັ່ງແບ່ງອອກເປັນ ໔ ປະເພດຫລື ໔ ສານຄື ສານສຳລັບປະຊາຊົນພົລເມືອງລາວ ແລະ ສານສຳລັບພົລເມືອງຊາດຝຣັ່ງ.

ສານລາວນັ້ນ ມີຢູ່ ນີ ຂັ້ນ ຄື ສານຂັ້ນຕົ້ນ, ມີຢູ່ຕາມເມືອງຕ່າງໆທຸກເມືອງ ມີຜູ້ພິພາກສາ ຕຸລາການ ໄອຍະການ ກັບຈ່າສານ ຢູ່ຕາມແຂວງຫົວໜ້າສານ ເປັນຄົນຊາດຝຣັ່ງ ໄອຍະການ ແລະ ຈ່າສານ ເປັນຄົນລາວ.

ສ່ວນສານພິເສດ ຫລືສານສູງສຸດ ມີໄອຍະການ ໔ ຄົນ ເປັນຄົນລາວຜູ້ນຶ່ງ ອີກຜູ້ນຶ່ງ ເປັນຄົນຊາດຝຣັ່ງ ສ່ວນຈ່າສານນັ້ນ ກໍແມ່ນຄົນຊາດຝຣັ່ງ.

ໃນສມັຍນັ້ນ ຝຣັ່ງແບ່ງລາວ ອອກເປັນ ໑໐ ແຂວງ ຄື :

໑-/ ແຂວງວຽງຈັນ ມີທີ່ທຳການແຂວງຢູ່ນະຄອນວຽງຈັນ ມີເມືອງສຳຄັນ ຄື ເມືອງປາກຊັນ, ເມືອງບໍລິຄັນ, ເມືອງທຸຣະຄົມ, ເມືອງວັງວຽງ ແລະ ເມືອງຊະນະຄາມ.

໒-/ ແຂວງຫລວງພຣະບາງ ທີ່ທຳການແຂວງ ຕັ້ງຢູ່ທີ່ນະຄອນ
ຫລວງພຣະບາງ ມີເມືອງສຳຄັນ ໃນແຂວງຄື ເມືອງກາສີ,
ເມືອງງອຍ, ເມືອງໄຊ, ເມືອງປາກທາ, ເມືອງຊຽງເງິນ,
ເມືອງປາກລາຍ.

໓-/ ແຂວງເມືອງພວນ ທີ່ທຳການແຂວງຕັ້ງຢູ່ເມືອງຊຽງຂວາງ
ເມືອງສຳຄັນໃນແຂວງມີ ເມືອງແປກ, ເມືອງຄຳ, ເມືອງ
ຫມອກ, ເມືອງບ້ານບານ ຫລື ເມືອງຄຳ.

໔-/ ແຂວງຫົວພັນ ທີ່ທຳການຕັ້ງຟູ່ເມືອງຊຳເຫນືອ ເມືອງສຳ
ຄັນໃນແຂວງມີ ເມືອງຊຳໃຕ້, ເມືອງຊ່ອນ, ເມືອງໂສຍ,
ເມືອງຊຽງຄໍ້, ເມືອງແຣດ ຫລື ຫົວເມືອງ.

໕-/ ແຂວງຫົວຂອງ ທີ່ທຳການແຂວງ ຕັ້ງຢູ່ທີ່ເມືອງ ຫ້ວຍຊາຍ
ເມືອງສຳຄັນໃນແຂວງມີເມືອງບໍ່ແຕນ, ເມືອງສິງ, ເມືອງ
ຫລວງນ້ຳທາ, ເມືອງເມິງ ແລະເມືອງວຽງພູຄາ.

໖ -/ ແຂວງຟອງສາລີ ເປັນທີ່ຕັ້ງ ທີ່ທຳການເຂດທະຫານ,
ເມືອງສຳຄັນໃນເຂດທະຫານ ຟອງສາລີ ມີ ເມືອງຂວາ
ເມືອງອູເຫນືອ ເມືອງອູໃຕ້ ເມືອງບຸນເຫນືອ ເມືອງບຸນ
ໃຕ້.

໗-/ ແຂວງຄຳມ່ວນ ທີ່ທຳການແຂວງ ຕັ້ງຢູ່ທີ່ເມືອງທ່າແຂກ
ເມືອງສຳຄັນໃນແຂວງມີ ເມືອງປາກຫີນບຸນ ເມືອງບໍ່ແນ່ງ
ເມືອງໂພນຕິ້ວ ເມືອງຄຳເກີດ ເມືອງມະຫາໄຊ.

໘-/ ແຂວງສວັນນະເຂດ ທີ່ທຳການແຂວງ ຕັ້ງຢູ່ທີ່ເມືອງສວັນນະເຂດ ເມືອງສຳຄັນໃນແຂວງນີ້ ເມືອງແກ້ງກອກ, ເມືອງດົງເຫັນ, ເມືອງເຊໂປນ, ເມືອງສອງຄອນ, ເມືອງພີນ, ເມືອງນອງ, ແລະເມືອງຈອມພອນ.

໙-/ ແຂວງສາຣະວັນ ທີ່ທຳການແຂວງ ຕັ້ງຢູ່ທີ່ເມືອງ ສາຣະວັນ ເມືອງສຳຄັນໃນແຂວງນີ້ ເມືອງທ່າແຕງ ເມືອງເລົ່າງາມ. ເມືອງຄົງເຊໂດນ, ເມືອງຄຳທອງໃຫຍ, ເມືອງພາເຊັຽ.

໑໐-/ ແຂວງຈຳປາສັກ ທີ່ທຳການແຂວງຕັ້ງຢູ່ທີ່ເມືອງປາກເຊ ເມືອງສຳຄັນໃນແຂວງນີ້ ເມືອງຄອນ ເມືອງໂຂງ ເມືອງຈຳປາສັກ ເມືອງປາກຊ່ອງ ເມືອງອັຕະປື ເມືອງເພັຽໄຟ.

ການ ບໍ ຣິ ຫານ ສ່ວນ ກາງ

ການບໍຣິຫານສ່ວນກາງນັ້ນ ຝຣັ່ງແບ່ງເປັນ ໖ ພແນກ ຍາຍອອກໄປເປັນສາຂາຕາມແຂວງ ຫືວໜ້າພແນກຕ່າງໆ ເປັນຄົນຊາດຝຣັ່ງ ເຊິ່ງເຣຊີດັງ ສູປຣີເອີ ເປັນຜູ້ແຕ່ງຕັ້ງ ພແນກທັງ ໖ ຄື.

໑- ພແນກການຄັງ

໒- ພແນກການສຶກສາທິການ

໓- ພແນກ ໂຍທາທິການ

໔- ພແນກ ກະເສດປ່າໄມ້ ແລະນ້ຳ

໕- ພແນກ ສຸານ

໖- ພແນກ ສວຍສາອາກອນ.

ສ່ວນອານາຈັກຫລວງພຣະບາງນັ້ນ ຝຣັ່ງອະນຸຍາດໃຫ້ປົກຄອງກັນເອງ ແຕ່ກໍ່ຢູ່ໃນການຄວບຄຸມຂອງ ຄອມມີສແຊ ຝຣັ່ງອີກຕໍ່ນຶ່ງ ອານາຈັກຫລວງພຣະບາງ ຈັດການປົກຄອງແບບໃຫ້ມີຄນະກັມການ ໕ ນາຍຮຽກວ່າ "ຫໍສນາມຫລວງ" ປະທານຫໍສຍາມຫລວງ ຮຽກວ່າ ນາຍົກຣັຖມົນຕຣີ ມີຣັຖມົນຕຣີວ່າການມະຫາດໄທ ແລະ ປ້ອງກັນປະເທດ ຣາຊອານາຈັກ, ຣັຖມົນຕຣີວ່າການຍຸຕິທັມ, ຣັຖມົນຕຣີວ່າການຄັງ ສຶກສາ, ຣັຖມົນຕຣີວ່າການໂຍທາທິການ ແລະເສຖກິດ ແຕ່ອານາເຂດປົກຄອງແຄບ ມີແຕ່ແຂວງຫລວງພຣະບາງເທົ່ານັ້ນ ກົດຫມາຍເກົ່າຂອງລາວ ທີ່ພຣະເຈົ້າແຜ່ນດິນແລະນັກປາຊ ລາວ ທັງບັນຍັດແຕ່ງແປງໄວ້ຖືເປັນຈາຣີດປະເພນີ ໃຊ້ກັນມາແຕ່ສມັຍໂບຮານນັ້ນ ໃຊ້ໄດ້ເປັນສ່ວນ ແຕ່ຈຳເພາະແຂວງຫລວງພຣະບາງເທົ່ານັ້ນ.

ຄ.ສ. ໑໙໐໔ ສິ້ນເດັດພຣະເຈົ້າສັກຣິນ ສະວັນນະຄົດ ສີຣິພຣະຊົນພັນສາ ໖໕ ປີ ຄອງຣາຊສົມບັດ ໑໔ ປີ.

ຫລັງຈາກທີ່ປະເທດສຍາມ ໄດ້ເສັຽທົ່ວເມືອງລາວຝັ່ງຂວາແມ່ນ້ຳຂອງ ໃຫ້ແກ່ຝຣັ່ງ ຕາມສັນຍາລົງວັນທີ ໑໓ ກຸມພາ ໑໙໐໓ ອັງກິດ ແລະຝຣັ່ງ ກໍ່ໄດ້ຕົກລົງກັນທຳປະກາດອີກສບັບນຶ່ງ ເມື່ອວັນທີ ໘ ເມສາ ໑໙໐໔ ປັ້ງປືນອະນຸສັນຍາຣະຫວ່າງ ອັງກິດ-ຝຣັ່ງ ສບັບກ່ອນ ທີ່ໄດ້ລົງນາມທຳສັນຍາກັນ ເມື່ອວັນທີ ໑໕ ມົກຣາ ໑໘໙໖ ມີໃຈຄວາມດັ່ງນີ້.

ຝຣັ່ງຈະຕ້ອງຮັບຮອງອິດທິພົນຂອງອັງກິດ ໃນດິນແດນສຍາມຝັ່ງຕາເວັນຕົກ ຂອງລຸ່ມແມ່ນ້ຳເຈົ້າພຣະຍາ ແລະອັງກິດຈະຕ້ອງຮັບຮອງອິດ

ທີ່ພົນຂອງຝຣັ່ງໃນດິນແດນ ສຍາມທາງຕາເວັນອອກ. ແລະຕາເວັນອອກກ້ ໄຕ້ທັງເໜືອ ຂອງແມ່ນ້ຳເຈົ້າພຣະຍາ. ພ້ອມທັງໝູ່ເກາະໃກ້ຄຽງ ຕ້ອງ ຕົກຢູ່ພາຍໃຕ້ອິດທິພົນ ຂອງຝຣັ່ງ ຕັ້ງແຕ່ບັດນີ້ເປັນຕົ້ນໄປ. ໃນທຳນອງດຽວ ກັນດິນແດນຂອງສຍາມ ທາງຕາເວັນຕົກຂອງແມ່ນ້ຳເຈົ້າພຣະຍາ ແລະທາງ ຕາເວັນຕົກຂອງອ່າວສຍາມ (ອ່າວໄທ) ທັງເໜືອ ໂຣມທັງແຫລມມະລາຍູ ແລະໝູ່ເກາະໃກ້ຄຽງ ຕ້ອງຕົກຢູ່ພາຍໃຕ້ອິດທິພົນຂອງອັງກິດ. ແລະວ່າຈະ ປ້ອງກັນຮັກສາໄວ້ເຊິ່ງເອກຣາຊ ຂອງອານາຈັກສຍາມນຳ ທັງອັງກິດແລະ ຝຣັ່ງ ຜູ້ທຳສັນຍາ ທັງສອງຝ່າຍ ຈະຕ້ອງບໍ່ເອົາ ດິນແດນສຍາມຕອນນຶ່ງ ຕອນໃດ ເຂົ້າເພີ່ມຕື່ມ ດິນແດນຂອງຕົນ. ຕາມຂໍ້ຄວາມຕົກລົງອັນນີ້ ຝຣັ່ງ ຈະບໍ່ຖືເອົາປໂຍດເພີ່ມຕື່ມຍິ່ງກວ່າທີ່ໄດ້ຮັບຢູ່ແລ້ວ ແຕ່ອະນຸສັນຍາກ່ຽວກັບ ສຍາມ ຈັກຕ້ອງໄດ້ຮັບພິຈາຣະນາ ກ່ຽວກັບຂໍ້ຕົກລົງຣະຫວ່າງອັງກິດ -ຝຣັ່ງ ທີ່ໄດ້ມີຕໍ່ກັນມາແຕ່ຄັ້ງກ່ອນໆ.

ຄ.ສ. ໑໙໐໔ ຝຣັ່ງຈັ່ງຍົກ ເຈົ້າສີສະວາງວົງ ພຣະຣາຊໂອຣົສ ສົມເດັດພຣະເຈົ້າສັກຣິນ ຂຶ້ນຄອງຣາຊສົມບັດ ຖວາຍພຣະນາມວ່າ ສົມເດັດ ພຣະເຈົ້າ ລ້ານຊ້າງຮົ່ມຂາວ ສີສະວ່າງວົງ ທີ ໑ ພຣະອົງທົງມີພຣະຣາຊ ໂອຣົສ ແລະທິດາ ນຳສົມເດັດພຣະອັຄມະເຫສີ ເຈົ້າຍິງ ຄຳອ່ອນ ໕ ອົງ ຄື ເຈົ້າສະວ່າງວັທນະນາ (ທົງເປັນພຣະເຈົ້າມະຫາຊີວິດ ໃນປັດຈຸບັນນີ້) ເຈົ້າສູຣະສັກ, ເຈົ້າສຸພັນທະຣັງສີ, ເຈົ້າຍິງຄຳແພງ, ເຈົ້າຍິງສົມມາທີ,

ໃນປີ ທີ່ພຣະອົງທົງຂຶ້ນສເວີຍຣາຊສົມບັດນີ້ ທາງປະເທດສຍາມ ແລະຝຣັ່ງໄດ້ຕົກລົງແບ່ງ ປັນເຂດແດນ ແຂວງໄຊຍະບູຣີ,

ການຕົກລົງເທື່ອນີ້ ອານາຈັກຫລວງພຣະບາງໄດ້ເຂດແດນເມືອງດ່ານຊ້າຍ ( ໑ ) ເມືອງແກ່ນທ້າວ ເມືອງບໍ່ແຕນ ຄືນ. ມາໂຮມກັບອານາຈັກຫລວງພຣະບາງ.

<u>ຫ ມ າ ຍ ເ ຫ ດ(໑)</u> ຕໍ່ມາສຍາມໄດ້ທຳຫນັງສືສັນຍາ ກັບຝຣັ່ງລົງວັນທີ ໒໓ ມີນາ ໑໙໐໗ ສຍາມຍອມຍົກເຂດເມືອງ ບັດຕັມບອງ ເມືອງສຽມຣຽບ ເມືອງສີໂສພົນ ໂຮມທັງເຂດແດນເມືອງພົມອັນ ຫລື ຈິງກັນເຊິ່ງ ເວລານັ້ນ ຂຶ້ນຕໍ່ເມືອງສັງຂະ (ອຳເພີສັງຂະ ຈັງຫວັດສູຣິນ) ໃຫ້ແກ່ຝຣັ່ງ ແລະ ຝຣັ່ງໄດ້ເອົາ ເມືອງດ່ານຊ້າຍຂອງລາວ ໄປໃຫ້ແກ່ສຍາມເປັນການແລກປ່ຽນ.

ຄ.ສ. ໑໙໒໗ ສະພາສູງຝ່າຍອານານິຄົມ ຂອງປະເທດຝຣັ່ງ ໄດ້ລົງມະຕິວ່າ ອານາເຂດປະເທດລາວ ເປັນອານານິຄົມຂອງປະເທດຝຣັ່ງທັງໝົດ ເຖິງວ່າອານາຈັກຫລວງພຣະບາງ ກໍບໍ່ໄດ້ຍົກເວັ້ນ (ອານາຈັກຫລວງພຣະບາງ. ເປັນຫົວເມືອງຂຶ້ນ ໃນຄວາມອາຣັກຂາ ບໍ່ແມ່ນຫົວເມືອງຂຶ້ນໂດຍກົງ) ເຈົ້າຣາຊພາຄີໄນ (ເຈົ້າເພັຊຣາຊ) ຊຶ່ງເວລານັ້ນ ມີຕຳແໜ່ງ - ເປັນ ສາຣະວັດຣາຊການພື້ນເມືອງປະເທດລາວ ແລະທີ່ປຶກສາ ຂອງຜູ້ສຳເຣັດຣາຊການ ຫົວເມືອງລາວ ໄດ້ຕໍ່ສູ້ຄັດຄ້ານ ໃນເຣື່ອງນີ້ຢ່າງເຕັມກຳລັງ ຈຶ່ງທຳໃຫ້ມະຕິສະພາສູງ ຝ່າຍອານານິຄົມ ຂອງປະເທດຝຣັ່ງ ໃນເຣື່ອງນີ້ ບໍ່ເປັນຜົນ.

ຄ.ສ. ໑໙໓໙ ເກີດເສິກໂລກເທື່ອທີ ໒ ຢູ່ທີ່ທະວີປຢູໂຣບ ຝຣັ່ງເປັນຫ່ວງຕໍ່ດິນແດນ ຫົວເມືອງຂຶ້ນ ໃນອິນໂດຈີນ ຈຶ່ງຕິດຕໍ່ທາບທາມ ທຳໜັງສືສັນຍາ ບໍ່ຮຸກຮານກັນກັບໄທ. ຝ່າຍໄທ ຂັດໃຫ້ຝຣັ່ງປັບປຸງເຂດແດນ ຣະຫວ່າງຫົວເມືອງຂຶ້ນ ຂອງຝຣັ່ງ ທີ່ມີເຂດແດນຕໍ່ກັນກັບພຣະຣາຊອານາເຂດປະເທດໄທ ເສັຽກ່ອນ.

ຕໍ່ມາ ວັນທີ ໒໓ ມິຖຸນາ ໑໙໔໐ ໄທ ແລະ ຝຣັ່ງ ໄດ້ລົງນາມ ໃນໜັງສືສັນຍາ ບໍ່ຮຸກຮານ ຕໍ່ກັນ ແຕ່ກໍຍັງບໍ່ທັນແລກປ່ຽນສັດຕະຍາບັນ.ຕົກມາເດືອນກັນຍາ ປີດຽວກັນນີ້ ໄທຮຽກຮ້ອງດິນແດນ.ຫົວເມືອງຂຶ້ນທີ່ໄທເສັຽໃຫ້ຝຣັ່ງຄືນ. ແລະສເນີເງື່ອນໄຂ ໃນການທຳສັນຍາບໍ່ຮຸກຮານຕໍ່ກັນ ກັບປະເທດອິນໂດຈີນ ຝຣັ່ງ ໃນສ່ວນທີ່ກ່ຽວກັບລາວ ໄທໄດ້ຮຽກຮ້ອງເອົາແຂວງໄຊຍະບູຣີ ແຂວງຈຳປາສັກ ແລະ ແຂວງເຊໂດນ ໃນປັດຈຸບັນນີ້ ຄືນຈາກ

ຝຣັ່ງ ແລະໃຫ້ຝຣັ່ງຮັບຮອງວ່າ ຈະຄືນຫົວເມືອງລາວ
ໃຫ້ແກ່ໄທ ໃນເມື່ອຝຣັ່ງຫມົດອຳນາດໄປຈາກອິນໂດຈີນ.

ແຕ່ຝຣັ່ງ ໄດ້ປະຕິເສດ ຂໍ້ສເນີຂອງຣັຖບານໄທ ໃນທ້າຍເດືອນ ນັ້ນ ແລະ ທັງສອງຝ່າຍຕ່າງກໍມີການເຄື່ອນໄຫວ ທາງດ້ານກຳລັງທະຫານ ແລ້ວ ຝຣັ່ງໄດ້ຍົນເອົາທະຫານແກວ ເຂົ້າມາຫົວເມືອງລາວ ເພື່ອຕໍ່ຕ້ານ ກັບທະຫານຂອງໄທ. ແລະເອົາແກວມາເປັນນາຍລອງຄໍ ຈາກຝຣັ່ງຫຼາຍ ຜແນກ ສ່ວນໄທໄດ້ເຄື່ອນກຳລັງທະຫານເຂົ້າຕິດຊາຍແດນ.

ໃນຕົ້ນເດືອນ ພຶສຈິກາ ໑໙໔໐ ການປະທະກັນຣະຫວ່າງທະຫານ ທັງສອງຝ່າຍເຣີ່ມແລ້ວ ແຕ່ຍັງບໍ່ທັນຮ້າຍແຮງ ການຣົບໃຫຍ່ ແລະຮຸນແຮງ ໄດ້ມີຂຶ້ນເມື່ອເດືອນ ມົກຣາ ໑໙໔໑ ກອງທັບສຍາມ ໄດ້ບຸກເຂົ້າໂຈມຕີ ຍຶດເອົາພົນທີ່ ຫົວເມືອງລາວ ແລະຫົວເມືອງຂເມນ ສ່ວນທີ່ຝ່າຍສຍາມ ຮຽກຮ້ອງເອົາຄືນຈາກຝຣັ່ງໄວ້ໄດ້ ພາຍໃນບໍ່ເຖິງເດືອນນຶ່ງ ແລະກ່ອນທີ່ ກອງທັບໄທ ຈຶ່ງກຳລັງເປັນຝ່າຍໄດ້ປຽບ ກອງທັບຝ່າຍປະເທດອິນໂດ ຈີນຢູ່ເວລານັ້ນ ຈະບຸກເຂົ້າຍຶດເອົາແຄວນລາວ ແລະຫົວເມືອງຂເມນໄວ້ ໄດ້. ປະເທດຍີ່ປຸ່ນ ອັນເປັນປະເທດມຫາອຳນາດ ປະເທດນຶ່ງໃນເວລາ ນັ້ນ ກໍໄດ້ເຂົ້າໄກ່ເກັ່ຽ ໃຫ້ທັງສອງກ້ຳສອງຝ່າຍຍຸຕິ ການຣົບລວກັນ. ແລະໄທກໍໄດ້ແຂວງຝັ່ງຂວາຂອງລາວ ຄືນໄປ ຄືແຂວງໄຊຍະບູຣີ, ແຂວງ ຈຳປາສັກ,

ແລະ ແຂວງເຊໂດນ ຝັ່ງຂວາ ດັ່ງໄດ້ກ່າວໄວ້ແຕ່ບັ້ນກ່ອນແລ້ວນັ້ນ. ເສິກນີ້ ລາວທີ່ຢູ່ໃນຄວາມປົກຄອງຂອງຝຣັ່ງ ຮຽກວ່າ <u>ເສິກໄທ</u> ສ່ວນລາວທີ່ຍັງຕົກຄ້າງຢູ່ທຳໄນ ຮຽກວ່າ <u>ເສິກຝຣັ່ງ</u>

ລຸນຫລັງຈາກເກີດເສິກຣະຫວ່າງ ຝຣັ່ງ ແລະໄທແລ້ວ ປະເທດລາວ - ແກວ ແລະຂເມນ ກໍໄດ້ຖືກກອງທັບຍີ່ປຸ່ນຄອບຄຸມ ໂດຍຍີ່ປຸ່ນໄດ້ຂັບໄລ່ຝຣັ່ງໜີໄປ. ຕໍ່ມາຍີ່ປຸ່ນໄດ້ສນັບສນູນ ໃຫ້ລາວ ແກວ ຂເມນ ປະກາດເອກຣາຊ. ຄນະລາວອິສຣະ ພາຍໃຕ້ການນຳພາ ຂອງສົມເດັດເຈົ້າມະຫາອຸປຣາດເພັດຊຣາຊ ໄດ້ປະກາດອິສຣະພາບ ເປັນປະເທດເອກຣາຊ ປົກຄອງຕົນເອງ ໃນຣະບອບປະຊາທິປະໄຕ ທ້ອນໂຮມລາວ ສ່ວນທີ່ຕົກມາເປັນຫົວເມືອງຂຶ້ນ ຂອງຝຣັ່ງນັ້ນ ເຂົ້າເປັນອັນນຶ່ງ ອັນດຽວກັນ. ຮຽກວ່າ ພຣະຣາຊອານາຈັກລາວ ເມື່ອວັນທີ ໑໔ ຕຸລາ ໑໙໔໕ ຣັຖບານຂອງຄນະລາວອິສຣະປົກຄອງປະເທດ ພະຍາຄຳມ້າວວິໄລ ເປັນນາຍົກຣັຖມົນຕຣີ.

ແຕ່ຣັຖບານ ລາວອິສຣະ ມີໂອກາດປົກຄອງປະເທດ ແຕ່ພຽງ ໗ ເດືອນ. ກໍຕ້ອງອົພຍົບໄປຕັ້ງຣັຖບານພັດຖິ່ນ ຢູ່ທີ່ປະເທດໄທ. ໃນເດືອນພຶສພາ ໑໙໔໖ ເພາະຝຣັ່ງນຳເອົາກອງທັບ ຂຶ້ນມາຈາກແກວໃຕ້ ຍຶດເອົາເມືອງລາວໄປເປັນອານານິຄົມຝຣັ່ງຄືນອີກ. ອັນນີ້ກໍເພາະຍັງມີລາວບາງສ່ວນ ເຊິ່ງເປັນຄົນສ່ວນນ້ອຍ ຍັງສນັບສນູນຝຣັ່ງຢູ່. ເພາະລາວກຸ່ມນີ້ບໍ່ເຊື່ອວ່າລາວທີ່ເປັນຊາດນ້ອຍ ຈະຕໍ່ສູ້ເອົາເອກຣາດ ໄດ້ສຳເຣັດ ຈຶ່ງໄດ້ສນັບສນູນຝຣັ່ງເພື່ອບໍ່ຢາກໃຫ້ລາວອັນເປັນຊາດນ້ອຍນັ້ນ ຕ້ອງເຖິງກັບພິນາດລົ້ມຈົມ ຍ້ອນການຕໍ່ສູ້ ກັບກອງທັບຝຣັ່ງທີ່ມີອາວຸດອັນທັນສມັຍກ່ອນ.



ສະເດັດເຈົ້າມະຫາອຸປຣາຊ ເພັຊຣາຊ ຜູ້ທົງນຳພາປະຊາຊົນລາວ ສ່ວນທີ່ຕົກມາເປັນຫົວເມືອງຂຶ້ນ ຂອງຝຣັ່ງ ຕໍ່ສູ້ເອົາເອກຣາຊ

ພາຍລຸນມາ ເນື່ອງຈາກການກົດດັນຈາກພາຍນອກ ພາຍໃນ
ແລະການປ່ຽນແປງຂອງໂລກ. ລາວສ່ວນທີ່ບໍ່ໄດ້ອົພຍົບຕິດຕາມຣັຖບານ
ລາວອິສຣະ ໄປຢູ່ປະເທດໄທ ຈຶ່ງຈັດຕັ້ງຣັຖບານຂຶ້ນ ແລ້ວທຳການເຈຣະ
ຈາກັບຣັຖບານຝຣັ່ງ ເພື່ອໃຫ້ລາວມີເອກຣາຊ ປົກຄອງຕົນເອງ.

ເມື່ອຝຣັ່ງຍຶດ ເອົາຫົວເມືອງລາວ ທີ່ປະກາດເປັນປະເທດ
ເອກຣາຊ ໂດຍໃຊ້ກຳລັງທັບຂັບໄລ່ ຣັຖບານກູ້ຊາດຂອງລາວ
ຄືຣັຖບານ ລາວອິສຣະ ໂດຍຈຳເພາະແລ້ວ ແມ່ນຫົວເມືອງສຳຄັນຕ່າງໆ
ຕົກຄືນໄປຢູ່ໃນການຄອບຄຸມຂອງຝຣັ່ງ ຈົນໝົດ ໜ່ວຍຕໍ່ຕ້ານຂອງຣັຖ
ບານລາວອິສຣະ ນັ້ນມີຢູ່ໃນເຂດນອກເປັນບາງເຂດ ສົມເດັດພຣະເຈົ້າ
ມະຫາຊີວິດ ສີສວາງວົງ ຂອງລາວຈຶ່ງທຳການເຈຣະຈາກັບຝຣັ່ງ ການ
ເຈຣະຈາກິນເວລາເຖິງ ໓ ເດືອນ ຈຶ່ງໄດ້ຕົກລົງກັນໃນຫລັກການໃຫຍ່ໆ
ທີ່ຈະໃຫ້ພຣະຣາຊອານາຈັກລາວ ປົກຄອງຕົນເອງຕໍ່ໄປ.

ທີ່ສຸດ ໄດ້ມີການລົງນາມ ໃນສັນຍາຊົ່ວຄາວ ຂຶ້ນທີ່ນະຄອນ
ວຽງຈັນ ເມື່ອວັນທີ ໒໗ ສິງຫາ ໑໙໔໖ ໃຈຄວາມສຳຄັນຂອງສັນຍາ -
ສະບັບນີ້ມີວ່າໄດ້ມີການຕົກລົງ ໃຫ້ລາວເປັນຣັຖເອກຣາຊ ຢູ່ໃນເຄືອສຫະ
ພັນຝຣັ່ງ ໃຫ້ລາວມີຣັຖທັມມະນູນ ມີສະພາ ມີຣັຖບານປົກຄອງຕົນເອງ ແຕ່
ຍັງຢູ່ໃນຄວາມດູແລ ຂອງຝຣັ່ງ ຕາມຕົກລົງນີ້ ຝຣັ່ງຍັງຮັກສາອຳນາດທາງ
ທະຫານ ແລະເສຖກິດໄວ້ຢູ່.

ລາວສ່ວນທີ່ຕົກມາເປັນຫົວເມືອງຂຶ້ນ ຂອງຝຣັ່ງນີ້ ໄດ້ຮັບ

ເອກຣາຊຢ່າງສົມບູນ ຈາກຣັຖບານຝຣັ່ງ ເມື່ອປີ ຄ.ສ. ໑໙໕໔ ຫລັງຈາກ
ທີ່ຕົກເປັນຫົວເມືອງຂຶ້ນ ຂອງຝຣັ່ງຢູ່ເຖິງ ໖໑ ປີ.

## ຊື່ວັດ ແລະ ສະຖານທີ່ຕັ້ງວັດ ແຕ່ສມັຍໂບຮານ ຢູ່ພາຍໃນ ເຂດກຳແພງ ຊັ້ນໃນສຸດ ຂອງນະຄອນວຽງຈັນ

-----------

ກຳແພງນະຄອນວຽງຈັນ ມີຫລາຍຊັ້ນ ກຳແພງຊັ້ນໃນທີ່ສຸດ ຂອງນະຄອນວຽງຈັນ ກໍຄືຖນົນຊຸມບໍຣົມ ໃນປັດຈຸບັນນັ້ນເອງ ຢູ່ເທິງສູ ກຳແພງນີ້ ມີປ້ອມ ເຊິ່ງເຂົ້າໃຈວ່າ ຈະເປັນປ້ອມທະຫານ ສມັຍໂບຮານຕາມ ທີ່ຜູ້ເຖົ້າ ຜູ້ແກ່ ເລົ່າໃຫ້ຟັງນັ້ນ ເພິ່ນວ່າ ມີປ້ອມກໍ່ດ້ວຍດິນຈີ່ ຢູ່ເປັນໄລຍະ ນັບແຕ່ຫລັກນຶ່ງ ໄປຈົນຮອດຂົວຂາວ.

ຂ້າພະເຈົ້າເຫັນວ່າ ຈະເປັນປໂຍດ ຕໍ່ການຄົ້ນຄວ້າ ໃນທາງ ໂບຮານວັດຖຸ ໂບຮານສຖານ ໃນນະຄອນວຽງຈັນ ຂອງທ່ານທີ່ສົນໃຈຈຶ່ງ ນຳມາລົງພິມໄວ້.

ລາຍຊື່ວັດ ແລະບ່ອນຕັ້ງວັດນີ້ ໄດ້ມາຈາກ ເຈົ້າຄຳຫມັ້ນ ວົງ ກົດຣັຕນະ ເຈົ້າເມືອງ ບຳເຫນັດ ເຊິ່ງຖ້າຫາກຈະເປັນຄຸນງາມຄວາມ ດີ ຫລື ຜົນບຸນກຸສົນໃດໆ ຜູ້ຮຽບຮຽງ ຄິດວ່າ ສົມຄວນຈະເປັນຂອງທ່ານ ຜູ້ນັ້ນ ເພາະເພິ່ນເປັນຜູ້ຄົ້ນຄວ້າໄວ້ ແຕ່ຄາວທີ່ຊາກວັດຮ້າງນີ້ ຍັງບໍ່ທັນຖືກ ທຳລາຍຈົນຫມົດຮ່ອງຮອຍ.

ຊື່ວັດນັ້ນ ນັບແຕ່ຂົວຂາວ ຂຶ້ນມາທາງຫ້ວຍປາກປາສັກ ເຊິ່ງ ມີວັດເຖິງ ໓໖ ວັດ ດັ່ງມີຣາຍຊື່ ຕໍ່ລົງໄປນີ້.

໑-/ ວັດສະຕື ( ບາງທ່ານວ່າ ວັດຣາຊຄຶຫະ) ຢູ່ບ່ອນວັດບົງຂະຍອງ ປັດຈຸບັນນີ້ ແຕ່ທີ່ເຫັນຢູ່ໃນເວລານີ້ ແມ່ນວັດສ້າງຂຶ້ນໃໝ່.

໒-/ ວັດຂາມລ່ຽມ ຢູ່ເໜືອຂົວຂາວ ຂຶ້ນມາຕາມແຄມຂອງ ຄືຢູ່ທາງເໜືອສຳນັກນາຍົກ ໃນປັດຈຸບັນ ຍັງພໍເຫັນຊາກວັດຢູ່.

໓-/ ວັດສະຂວ່າງ ຢູ່ບ່ອນກອກນ້ຳເກົ່າ ຖືກທຳລາຍ ຈົນບໍ່ເຫລືອຊາກ ແຕ່ປີ ຄ.ສ. ໑໙໑໐

໔-/ ວັດຫາດແດງ ຢູ່ຕິດວັດສວ່າງ ລົງໄປທາງໃຕ້ ເວລານີ້ບໍ່ເຫັນຊາກວັດແລ້ວ

໕-/ ວັດທາດຂາວ ຢູ່ຕູ້ມທາດຂາວ ຊາວບ້ານ ຊາວເມືອງໄດ້ປະຕິສັງຂອນຂຶ້ນໃໝ່ ແຕ່ປີ ຄ.ສ. ໑໙໑໙

໖-/ ວັດພິດານສານ ຢູ່ບ່ອນໂຮງຮຽນ ທາດຂາວ ເວລານີ້ບໍ່ເຫັນຊາກວັດແລ້ວ

໗-/ ວັດທາດນ້ອຍ ຢູ່ໃກ້ກັບວັດ ພິດານສານ ດຽວນີ້ບໍ່ເຫັນຊາກວັດແລ້ວ

໘-/ ວັດສີພູມ ເປັນວັດຮ້າງແຕ່ພ້ອມນະຄອນວຽງຈັນ ຢູ່ທາງໃຕ້ຕລາດສີເມືອງ ເພິ່ນຂຸດມ້າງຊາກວັດອອກ ເພື່ອພັທນາ ແຕ່ປາງຝຣັ່ງເມື່ອປີ ຄ.ສ. ໑໙໔໐ ດິນລາວຈຶ່ງບໍ່ມີໂອກາດໄດ້ເຫັນ ຫລືສຶກສາ

໙-/ ວັດເພັຽວັດ ເປັນວັດຮ້າງ ແຕ່ພ້ອມນະຄອນວຽງຈັນ ທີ່ເຫັນໃນປັດຈຸບັນ ເປັນວັດສ້າງຂຶ້ນໃໝ່.

໑໐-/ ວັດເກີນ ຢູ່ເໜືອວັດພິດານສານ ຂຶ້ນມາທາງເໜືອ ແຕ່ຢູ່ໃຕ້ວັດເພັຽວັດ ເວລານີ້ບໍ່ເຫັນຊາກວັດ

໑໑-/ ວັດທາດສີ ຢູ່ຊື່ວັດເກົ້າຍອດ ລົງໄປທາງທ່າ ເວລານີ້ບໍ່ເຫັນຊາກ
ວັດແລ້ວ

໑໒-/ ວັດສີສຸມັງ ຢູ່ຂ້າງພຣະຣາຊວັງກ້າໄຕ້ ເວລານີ້ບໍ່ເຫັນຊາກວັດແລ້ວ

໑໓-/ ວັດພຣະແກ້ວ ພຣະເຈົ້າໄຊຍະເສດຖາ ມະຫາຣາຊ ທົງສ້າງ ເມື່ອ
ພຣະອົງ ສເດັດລົງມາສ້າງນະຄອນວຽງຈັນ ເປັນເມືອງຫລວງຂອງ
ລາວ ວັດນີ້ເປັນບ່ອນປະດິດສະຖາ ພຣະແກ້ວມໍຣະກົດ ເມື່ອນະຄອນ
ວຽງຈັນຮ້າງ ເຊືອກະສັດນະຄອນວຽງຈັນ ດັບສູນແລ້ວ ວັດພຣະ
ແກ້ວ ກໍໂປດເປ້ເພພັງ ເພາະບໍ່ມີຜູ້ຮັກສາ ທີ່ເຫັນຢູ່ໃນປັດຈຸບັນນີ້
ແມ່ນສົມເດັດພຣະເຈົ້າມຫາອຸປຣາດເພັຊຣາຊ ທົງປະຕິສັງຂອນ
ຂຶ້ນໄວ້ ແຕ່ປີ ຄ.ສ. ໑໙໔໒ ທົງທຳບຸນສະຫລອງ ເມື່ອເດືອນ ໕
ປີນັ້ນ ປັດຈຸບັນນີ້ ເປັນພິພິດທະພັນ ສິລປະທາງສາສນາ

໑໔-/ ວັດພຣະໄຊຍະເສດຖາທິຣາຊ ຢູ່ຖຸ້ມບິງຂະຍອງ ຂຶ້ນມາທາງເຫນືອ
ທີ່ເຫັນຢູ່ໃນປັດຈຸບັນ ແມ່ນເພີ່ນປະຕິສັງຂອນຂຶ້ນໃຫມ່

໑໕-/ ວັດສີເມືອງ ເປັນວັດ ສີນະຄອນວຽງຈັນ ແຕ່ສມັຍໂບຮານ ແຕ່ກ່ອນ
ເປັນວັດຮ້າງ ພ້ອມກັບນະຄອນວຽງຈັນ ທີ່ເຫັນໃນປັດຈຸບັນ ແມ່ນ
ເພີ່ນປະຕິສັງຂອນຂຶ້ນໃຫມ່

໑໖-/ ວັດນາງໂຮມ ຢູ່ຕີນລະຟາກທາງ ກັບວັດເກົ້າຍອດ ຈ້າຍສວຍວັດ
ເກົ້າຍອດ ໄປທາງຕາເວັນອອກ ເວລານີ້ບໍ່ເຫັນຊາກວັດແລ້ວ.

໑໗-/ ວັດເກົ້າຍອດ ຢູ່ທາງທິດໃຕ້ໂຮງຫມໍມະໂຫສົດ ເປັນວັດຮ້າງແຕ່
ພ້ອມນະຄອນວຽງຈັນ ທີ່ເຫັນຢູ່ໃນປັດຈຸບັນນີ້ເປັນວັດສ້າງຂຶ້ນໃຫມ່

( ແຕ່ຮຽກຊື່ເກົ່າ )

໑໘-/ ວັດທຳໄຕຣຄຳ ຢູ່ບ່ອນສານຍຸຕິທັມ ຂ້າງໂຮງໄຟຟ້າວັດສີສະເກດ ດຽວນີ້ບໍ່ເຫລືອໃຫ້ເຫັນຊາກ

໑໙-/ ວັດຮວງເຜີ້ງ ຢູ່ໃກ້ກະຊວງໄປສນີ ນະຄອນວຽງຈັນ ເວລານີ້ບໍ່ເຫັນຊາກແລ້ວ.

໔໐-/ ວັດໂພນະຣາມ (ບາງທ່ານວ່າ ອາດຈະເປັນໂພທາຣາມ) ຄືບ່ອນທາດດຳ ຫລື ກະຊວງທັມມະການ ເວລານີ້ ຊາກວັດນັ້ນຖືກທຳລາຍຈົນບໍ່ເຫລືອແລ້ວ ເວລານີ້ ສ່ວນທາດດຳນັ້ນ ແມ່ນປະຕິສັງຂອນຂຶ້ນໃໝ່

໔໑-/ ວັດສວນຫລວງ ຢູ່ເທິງວັດໂພນາຣາມ ຝ່າຍທິ່ງ ເວລານີ້ບໍ່ເຫັນຊາກວັດແລ້ວ.

໔໒-/ ວັດສີສະເກດ ຫລືວັດແສນ ແຕ່ສມັຍທີ່ນະຄອນວຽງຈັນ ຍັງມີພຣະເຈົ້າມະຫາຊີວິດ ວັດນີ້ເປັນວັດ ທີ່ເຈົ້າຣາຊາມະຄະ ຢູ່.

໔໓-/ ວັດກາງ ຢູ່ບ່ອນເພີ້ນປູກໂຮງແຮມລ້ານຊ້າງ ໃສ່ເວລານີ້ເປັນວັດທີ່ສົມເດັດພຣະສັງຄະຣາຊ ທົງປະທັບຢູ່.

໔໔-/ ວັດຊຽງຍືນ ຢູ່ທາງເໜືອວັດກາງ ເປັນວັດຮ້າງ ແຕ່ພ້ອມນະຄອນວຽງຈັນຮ້າງ ທີ່ປາກົດເຫັນຢູ່ໃນປັດຈຸບັນນີ້ ແມ່ນພໍ່ຫລວງໂຄດຊຸມບ້ານຊຽງຍືນ ໄດ້ສ້າງຂຶ້ນໃໝ່ ແຕ່ປີ ຄ.ສ. ໑໙໑໙ ວັດຊຽງຍືນນີ້ ຊື່ວັດໄປຄືກັນກັບ ຊື່ວັດຊຽງຍືນ ໃນນະຄອນຊຽງໃໝ່ເມືອງທີ່ສົມເດັດພຣະເຈົ້າໄຊຍະເສຖາ ມະຫາຣາຊ ທົງເຄີຍເປັນພຣະເຈົ້າ

ແຜ່ນດິນ ດັ່ງນັ້ນ ວັດນີ້ ອາດຈະສ້າງພ້ອມກັນກັບ ການສ້າງນະ
ຄອນວຽງຈັນ ກໍອາດເປັນໄດ້.

໘໕-/ ວັດສີບຸນຍືນ ຢູ່ບ່ອນໃກ້ປາກຮ່ອມ ຊຽງຍືນ ດຽວນີ້ບໍ່ເຫັນຊາກວັດ

໘໖-/ ວັດຜ້າຂາວ (ຫລືວັດພຣະຂາວ) ຢູ່ບ່ອນສະມາຄົມ ລາວອະເມຣິ
ກາ ເປັນວັດຮ້າງແຕ່ພ້ອມນະຄອນວຽງຈັນ ເວລານີ້ບໍ່ເຫັນຊາກ
ວັດແລ້ວ

໘໗-/ ວັດມີໄຊ ເປັນວັດຮ້າງ ແຕ່ພ້ອມນະຄອນວຽງຈັນ ທີ່ເຫັນໃນປັດຈຸ
ບັນ ແມ່ນເພິ່ນສ້າງຂຶ້ນໃຫມ່ ຄື ເຈົ້າເມືອງ ຄຳຜາ ລູກພຣະຍາ
ສຸວັນນະວົງ ເປັນຜູ້ສ້າງ ແຕ່ຍັງຊອກຫາຫລັກຖານບໍ່ໄດ້ວ່າ ສ້າງ
ແຕ່ປີໃດ ?

໘໘-/ ວັດອົງຕື້ ສົມເດັດພຣະເຈົ້າໄຊຍະເສດຖາມະຫາຣາຊ ທົງສ້າງວ່າ
ນ້ຳໜັກ ພຣະພຸທຮູບ ໜັກຕື້ນຶ່ງ (໑໐ ລ້ານເປັນໂກດ ໑໐ ໂກດ
ເປັນຕື້) ເປັນວັດຮ້າງພ້ອມກັບນະຄອນວຽງຈັນ ທີ່ເຫັນໃນປັດຈຸບັນ
ແມ່ນເພິ່ນສ້າງຂຶ້ນໃຫມ່.

໘໙-/ ວັດຈັນ ເປັນວັດຮ້າງ ແຕ່ພ້ອມນະຄອນວຽງຈັນ ທີ່ເຫັນໃນປັດຈຸບັນ
ຊາວບ້ານ ຊາວເມືອງ ໄດ້ສ້າງຂຶ້ນໃຫມ່ ເມື່ອປີ ຄ.ສ. ໑໙໐໙
ແຕ່ສມັຍໂບຮານນັ້ນວັດນີ້ ເປັນວັດນຶ່ງເມືອງ ວຽງຈັນ.

໙໐-/ ວັດອິນແປງ ເປັນວັດຮ້າງ ແຕ່ພ້ອມນະຄອນວຽງຈັນ ທີ່ເຫັນໃນ
ປັດຈຸບັນ ເປັນວັດສ້າງຂຶ້ນໃຫມ່ ແຕ່ປີ ຄ.ສ. ໑໙໘໔

໙໑-/ ວັດພຣະບາງ ເປັນວັດເກົ່າແກ່ແຕ່ພ້ອມນະຄອນວຽງຈັນ ຢູ່ຖົນລະ

ຝາກທາງຖນົນເສດຖາທິຣາຊ ກົງກັນຂ້າມກັບວັດອິນແປງ ເວລານີ້ ບໍ່ເປັນຊາກວັດແລ້ວ.

໓໒-/ ວັດສີວັນນະພູມ ຢູ່ຖັດວັດອົງຕື້ ເບື້ອງເໜືອ ເວລານີ້ບໍ່ເຫັນຊາກ ວັດແລ້ວ ຄົງຈະເປັນເພາະຕາດິນຣາຄາແພງ ຂາຍກໍໄດ້ເງິນ ຫລາຍ.

໓໓-/ ວັດທາຍໂສກ ເປັນວັດເກົ່າແກ່ ແຕ່ພ້ອມນະຄອນວຽງຈັນ ຢູ່ຄົນ ລະຝາກທາງຖນົນ ກັບວັດອົງຕື້ ແຕ່ທີ່ເຫັນໃນປັດຈຸບັນນີ້ ແມ່ນ ສ້າງຂຶ້ນໃໝ່ ໃສ່ຊາກວັດເກົ່າ.

໓໔-/ ວັດປູ່ຍ່ອນ ຢູ່ໃກ້ເດີ່ນກິລາແຫ່ງຊາດ ເປັນວັດຮາງແຕ່ພ້ອມນະ ຄອນວຽງຈັນ ເວລານີ້ບໍ່ເຫັນຊາກວັດແລ້ວ

໓໕-/ ວັດສີຄູນເມືອງ (ບາງທ່ານວ່າສີມຸງຄູນ) ຢູ່ຂ້າງນ້ຳພຸ ແປະສະ ມາຄົມລາວອະເມຣິກາ ເກົ່າດຽວນີ້ບໍ່ເຫັນຊາກວັດແລ້ວ ເພາະ ຖືກທຳລາຍ ຊາກວັດຈົນບໍ່ເຫລືອ ແຕ່ປີ ຄ.ສ. ໑໙໑໐.

໓໖-/ ວັດສີບຸນເຮືອງ ຢູ່ຂ້າງກະຊວງມະຫາດໄທ ກ້ຳທົ່ງ ເວລານີ້ບໍ່ ເຫລືອຊາກວັດແລ້ວ.